# ພາກ ຄ:

# ທັກສະຊີວິດທີ່ສາມາດ ຊ່ວຍຕົນເອງໄດ້



# 13 ບົດທີ 12: ທັກສະໃນການສື່ສານ

**ຈຸດປະສົງ: ໃຫ້ຜູ້ເຂົ້າຮ່ວມເຂົ້າໃຈເຖິງການສື່ສານແບບມີເຫດຜົນ, ການສື່ສານແບບແຂງກະດ້າງ ແລະ ການສື່ສານແບບຍິນຍອມ ແລະ ຜູ້ເຂົ້າຮ່ວມຍັງຈະໄດ້ຮຽນຮູ້ເຖິງທັກສະໃນການສື່ສານທີ່ມີເຫດຜົນ, ດັ່ງນັ້ນພວກເຂົາບໍ່ຈຳເປັນຕ້ອງປະຕິເສດສິດທິຂອງຕົນເອງ.**

## ເວລາ:

75 ນາທີ

### ການກະກຽມ

ຕັດຂໍ້ຄວາມການສື່ສານອອກເປັນຕອນແລ້ວເອົາໃສ່ຖົງ. ທາງເລືອກອີກທາງໜຶ່ງ: ຕັດຂໍ້ຄວາມແລ້ວຕິດໃສ່ປ້າຍແຕ່ລະອັນ, ດັ່ງນັ້ນຜູ້ເຂົ້າຮ່ວມສາມາດເອົາອອກຂອງໃຜລາວ.

**ອຸປະກອນ**

- ສຳເນົາ13ກ: ເນື້ອໃນຂອງການສື່ສານ
- ສະກັອດຕິດ
- ຖົງໜຶ່ງອັນ
- ເຂົ້າໜົມໜຶ່ງຫໍ່
- ເຈ້ຍແຜ່ນໃຫຍ່

## ການແນະນຳບົດຮຽນ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກນຳພາໃນການໃຊ້ເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ບໍ່ມີ

### ການແນະນຳທັກສະຊີວິດ

ອະທິບາຍໃຫ້ຜູ້ເຂົ້າຮ່ວມຮູ້ວ່າ: ບົດຮຽນຕອນຕໍ່ໄປແມ່ນເວົ້າເຖິງທັກສະຊີວິດທີ່ສາມາດຊ່ວຍໃຫ້ຄົນເຮົາສາມາດເອົາຕົວລອດຈາກການຖືກຄ້າມະນຸດໄດ້. ບົດຮຽນທຳອິດຈະເລີ່ມຕົ້ນດ້ວຍການຄິດກ່ຽວກັບທັກສະໃນການສື່ສານ.

## ສົນທະນາບົດຮຽນ

ບົດຮຽນດັ່ງກ່າວຈະເວົ້າກ່ຽວກັບ:



ໃນປະເທດຂອງເຮົາ ຜູ້ໃຫຍ່ຕ້ອງການໃຫ້ເດັກນ້ອຍເວົ້າອອກມາໃນທາງທີ່ຖືກຕ້ອງ. ຖາມຜູ້ເຂົ້າຮ່ວມ:

- ຄູເຄີຍຖາມຄຳຖາມກ່ຽວກັບຄຳເຫັນຂອງເຈົ້າບໍ? (ບໍ່ຈຳເປັນຈະແມ່ນຄຳຕອບທີ່ຖືກຕ້ອງ, ແຕ່ພວກເຂົາຖາມກ່ຽວກັບຄຳເຫັນຂອງເຈົ້າ)
- ພໍ່ແມ່ຂອງເຈົ້າຖາມເຈົ້າເພື່ອອອກຄຳເຫັນກ່ຽວກັບບັນຫາຕ່າງໆ ເຊິ່ງກະທົບຕໍ່ຄອບຄົວບໍ?
- ໃຜສາມາດຍົກຕົວຢ່າງວ່າຜູ້ໃຫຍ່ຄາດຫວັງຢາກໃຫ້ເດັກນ້ອຍເວົ້າຫຍັງກັບພວກເຂົາ?
- ເຈົ້າໄດ້ໂອ້ລົມເລື່ອງນີ້ກັບພໍ່ແມ່ຂອງເຈົ້າແນວໃດ?
- ເຈົ້າລົມກັບເພື່ອນຂອງເຈົ້າແນວໃດ? ມີສິ່ງທີ່ເຈົ້າບໍ່ສາມາດເວົ້າກັບຜູ້ໃຫຍ່ບໍ ແຕ່ເຈົ້າສາມາດເວົ້າກັບໝູ່ໄດ້?
- ມີຫົວຂໍ້ທີ່ເດັກນ້ອຍບໍ່ສາມາດເວົ້າອອກມາບໍ? ຖ້າມີຫົວຂໍ້ດັ່ງກ່າວແມ່ນເລື່ອງຫຍັງ?

ສະໜັບສະໜູນໃຫ້ຜູ້ເຂົ້າຮ່ວມໂອ້ລົມກ່ຽວກັບຄຳຖາມດັ່ງກ່າວ ແລະ ເພື່ອຊອກຫາແນວຄວາມຄິດທີ່ແຕກຕ່າງກັນ, ເມື່ອພວກເຂົາລົມກັນສຳເລັດແລ້ວກໍ່ໃຫ້ເບິ່ງວ່າກຸ່ມໃດທີ່ສາມາດນຳໃຊ້ຕົວຢ່າງທີ່ຍົກເຫດຜົນກັບຄຳອະທິບາຍກ່ຽວກັບເດັກນ້ອຍຢູ່ໃນບ້ານນີ້ ວ່າພວກເຂົາມີຄວາມຄາດຫວັງແນວໃດເພື່ອທີ່ຈະນຳອອກມາເວົ້າ.

ຄູມືທີ່ນຳໃຊ້ເຂົ້າໃນການເຄື່ອນຍ້າຍແຮງງານທີ່ປອດໄພ ພວກເຂົາກໍ່ຈະນຳເອົາໄປປະຕິບັດໃນການຮຽນເວົ້າ. ການເວົ້າອອກມາເປັນການສະແດງຄຳຄິດຄຳເຫັນ, ການຕອບຄຳຖາມຕ່າງໆ ແລະ ການໂອ້ລົມກ່ຽວກັບເລື່ອງທີ່ສຳຄັນ.

ຢູ່ໃນວັດທະນະທຳນີ້ມັນກໍ່ບໍ່ສະເໝີໄປທີ່ເດັກນ້ອຍຈະມີຄວາມສາມາດເວົ້າອອກມາ (ໃນບັນດາປະເທດທີ່ແຕກຕ່າງກັນຢູ່ໃນຂົງເຂດຕ່າງໆ, ເດັກນ້ອຍກໍ່ມີທັດສະນະໃນການເວົ້າອອກມາທີ່ແຕກຕ່າງກັນ, ເປັນໂອກາດທີ່ດີແລ້ວສຳລັບບັນດາຄູຝຶກທີ່ໂອ້ລົມກ່ຽວກັບຄວາມຄາດຫວັງຂອງເດັກນ້ອຍຢູ່ໃນປະເທດຂອງເຈົ້າ). ໃນຍຸກໃໝ່ນີ້ ເປັນເລື່ອງທີ່ສຳຄັນທີ່ຈະສະແດງຄຳຄິດຄຳເຫັນເພື່ອເປັນການປົກປ້ອງຕົວຂອງເຈົ້າເອງຈາກການຄ້າມະນຸດ ແລະ ໄພອັນຕະລາຍອື່ນໆ ແລະ ກໍ່ເພື່ອໃຫ້ພວກເຂົາໄດ້ຮັບຮູ້ວ່າຊີວິດຂອງເຈົ້າຕ້ອງການຫຍັງ.

## ມີການສື່ສານທີ່ແຕກຕ່າງກັນ

ຈົ່ງແຕ້ມເສັ້ນຍາວໆໃສ່ເຈ້ຍແຜ່ນໃຫຍ່ໃນຕົ້ນແຖວຂອງເສັ້ນດັ່ງກ່າວໃຫ້ຂຽນຄຳວ່າ: **ການສື່ສານທີ່ແຂງກະດ້າງ,** ໃນຕອນກາງຂອງແຖວໃຫ້ຂຽນຄຳວ່າ: **ການສື່ສານທີ່ສະແດງເຖິງສິດທິ**ຂອງຕົນເອງ, ໃນຕອນທ້າຍໃຫ້ຂຽນຄຳວ່າ**ການສື່ສານທີ່ສະແດງເຖິງການຍິນຍອມ** ຫຼື ຍອມແພ້.

### • ການສື່ສານທີ່ເປັນການອ້າງສິດຂອງຕົນເອງ ຫຼື ມີເຫດຜົນ

ໃຫ້ຖາມບັນດາກຸ່ມວ່າ ພວກເຂົາຄິດວ່າການສື່ສານທີ່ເປັນການອ້າງອີງເຖິງສິດທິຂອງຕົນເອງແມ່ນໝາຍຄວາມວ່າແນວໃດ?.

ການສື່ສານທີ່ເປັນການອ້າງອີງເຖິງສິດທິຂອງຕົນເອງແມ່ນ ເມື່ອຄົນໃດໜຶ່ງເວົ້າອອກມາໃນວິທີທາງທີ່ເປັນການນາບຂູ່ຄົນອື່ນແຕ່ເວົ້າດ້ວຍຄວາມເຄົາລົບ ແລະ ໃນເວລາດຽວກັນເຂົາກໍ່ໄດ້ໃຊ້ສິດທິຂອງພວກເຂົາໃນການເວົ້າອອກມາເຊັ່ນນັ້ນ.

ການສື່ສານທີ່ເປັນການອ້າງອີງເຖິງສິດທິຂອງຕົນເອງມີຄວາມໝາຍກັບທ່ານວ່າ:

**ມຸ້ງເນັ້ນຢ່າງສຸພາບ ແລະ ກໍ່ນັບຖືຢ່າງມີຄວາມຍຸດຕິທຳ** (ຍົກຕົວຢ່າງ ການອະທິບາຍເຖິງຄຳສຸພາບໝາຍຄວາມວ່າບັນດາເດັກຍິງກໍ່ມີສິດທິທີ່ຈະໄດ້ຮັບການສຶກສາເທົ່າທຽມກັບເດັກນ້ອຍຜູ້ຊາຍ)

**ການເວົ້າຢ່າງຕົງປະເດັນ.** (ຍົກຕົວຢ່າງ ຖ້າຄົນແປກໜ້າຄົນໜຶ່ງທີ່ຢູ່ລົດເມມາສະເໜີເງິນໃຫ້ກັບເຈົ້າ ແລະ ເຈົ້າກໍ່ເວົ້າຕອບກັບໄປວ່າ "ບໍ່ຂ້ອຍບໍ່ຮູ້ຈັກກັບເຈົ້າ ຂ້ອຍບໍ່ສາມາດຍອມຮັບເງິນຈາກຄົນແປກໜ້າ".

**ເວົ້າສະເພາະໃນເລື່ອງໃດເລື່ອງໜຶ່ງ** (ຍົກຕົວຢ່າງ ຖ້ານາຍຈ້າງຄົນໜຶ່ງເວົ້າກັບເຈົ້າວ່າ: ເຈົ້າຈະໄດ້ຮັບເງິນເດືອນດີເຈົ້າກໍ່ຈະຖາມດ້ວຍຄວາມສຸພາບວ່າເງິນເດືອນດີນັ້ນແມ່ນເທົ່າໃດ? ເມື່ອເງິນເດືອນທີ່ຈະນຳເອົາມາຈ່າຍນັ້ນຈະເປັນການຈ່າຍເງິນເດືອນໃນຮູບລັກສະນະໃດ).

**ຈ່ອງເບິ່ງຄົນຜູ້ທີ່ເຈົ້າກຳລັງເວົ້ານຳ.** (ໃນບາງວັດທະນະທຳມັນກໍ່ຈະບໍ່ເໝາະສົມທີ່ເດັກນ້ອຍຈະຈ້ອງຕາເບິ່ງຜູ້ໃຫຍ່. ເຖິງຢ່າງໃດກໍ່ຕາມຖ້າເຈົ້າຮູ້ສຶກວ່າເຈົ້າໃຫຍ່ແລ້ວ ທີ່ຈະເດີນທາງ ແລະ ໄປເຮັດວຽກຄົນດຽວໄດ້ ເຈົ້າກໍ່ໃຫຍ່ພຽງພໍທີ່ຈະເບິ່ງຄົນທີ່ເຈົ້າກຳລັງໂອ້ລົມນຳ. ຍົກຕົວຢ່າງ ຖ້າມີຄົນໜຶ່ງທີ່ຢູ່ສະຖານີລົດເມເຂົາກຳລັງພະຍາຍາມຊັກຊວນເຈົ້າໃຫ້ໄປກັບເຂົາ ພວກເຂົາກໍ່ຈະໜີຈາກເຈົ້າຖ້າວ່າເຈົ້າຈ້ອງໄປທີ່ຕາຂອງເຂົາ ແລະ ເວົ້າວ່າ: ບໍ່).

**ບໍ່ຕ້ອງຖືນີໃສ່ສ່ວນຕົວ** (ຍົກຕົວຢ່າງ: ຖ້ານາຍຂອງເຈົ້າພະຍາຍາມພັກດັນໃຫ້ເຈົ້າເຮັດໃນສິ່ງທີ່ຜິດກົດໝາຍຕະຫຼອດ ບໍ່ຕ້ອງເອີ້ນຊື່ລາວດ້ວຍຄຳເວົ້າທີ່ບໍ່ສຸພາບ ພຽງແຕ່ໃຫ້ເຈົ້າເວົ້າດ້ວຍນ້ຳສຽງອ່ອນໂຍນເຊິ່ງກົດໝາຍໄດ້ກ່າວວ່າ ເຮົາບໍ່ຄວນເຮັດວຽກເກີນເວລາ).

## • ການສື່ສານແບບແຂງກະດ້າງ

ການສື່ສານທີ່ແຂງກະດ້າງແມ່ນໃນເມື່ອເຮົາເວົ້າອອກມາໃນທາງທີ່ບໍ່ເປັນການເຄົາລົບ ແລະ ເປັນລັກສະນະທີ່ບໍ່ສຸພາບ ຫຼື ໃຈຮ້າຍ.

ຍົກຕົວຢ່າງ: ການສື່ສານທີ່ແຂງກະດ້າງ ຖ້າບຸກຄົນໜຶ່ງມາຂໍຢືມບົກດ້ວຍຄຳເວົ້າທີ່ສຸພາບແຕ່ເຈົ້າພັດຮ້ອງໃສ່ເຂົາໂລດ.

## • ການສື່ສານທີ່ເປັນການຍິນຍອມ

ແມ່ນບຸກຄົນໜຶ່ງເວົ້າອອກມາດ້ວຍຈາກໃຈແຕ່ວ່າໃນທາງທີ່ສຸພາບ ແລະ ອ່ອນໂຍນເຊິ່ງພວກເຂົາປະຕິເສດສິດທິຂອງພວກເຂົາເອງ. ໃນການສື່ສານທີ່ຍອມແພ້ນີ້ ຄົນເຮົາເປັນຫ່ວງກ່ຽວກັບສິດຂອງຄົນອື່ນຫຼາຍກ່ວາສິດຂອງຕົນເອງ.

ຕົວຢ່າງ: ການສື່ສານທີ່ຍິນຍອມແມ່ນ: ຖ້າມີຜູ້ໜຶ່ງຢູ່ໃນຫ້ອງຮຽນຂອງເຈົ້າຂໍກ່າຍວຽກບ້ານຂອງເຈົ້າ ແລະ ເຈົ້າກໍ່ເວົ້າວ່າ "ໄດ້ຕົກລົງທັງໆທີ່ເຈົ້າກໍ່ບໍ່ຕ້ອງການໃຫ້ລາວກ່າຍ".

## ເກມທີ່ໃຊ້ໃນການສື່ສານ

ບອກໃຫ້ແຕ່ລະກຸ່ມຕົບມື ແລະ ຍື່ນຖົງຂໍ້ຄວາມທີ່ໃຊ້ໃນການສື່ສານ, ຍືນອ້ອມເປັນວົງ. ໃນເມື່ອພວກເຂົາຍົກມືຂຶ້ນກໍ່ໃຫ້ກຸ່ມຢຸດຕົບມືຖ້າຜູ້ໃດຫາກຖືຖົງກໍ່ໃຫ້ຫຼັບຕາ ແລະ ຈົກເອົາຂໍ້ຄວາມສື່ສານອອກມາຈາກຖົງ ຫຼັງຈາກ



ນັ້ນໃຫ້ອ່ານຂໍ້ຄວາມດັ່ງໆ ຜູ້ນັ້ນຕ້ອງຕັດສິນໃຈວ່າຂໍ້ຄວາມນັ້ນເປັນການສື່ສານແບບໃດ: ການສື່ສານແບບຍິນຍອມ? ອ້າງສິດ? ຫຼື ແຂງກະດ້າງ?.

ໃນການຫຼິ້ນເກມອີກວິທີໜຶ່ງໃຫ້ພັບເຈ້ຍຂໍ້ຄວາມ ແລະ ຕິດຂໍ້ຄວາມດັ່ງກ່າວໃສ່ໝາກບານ ແລະ ໂຍນໝາກບານດັ່ງກ່າວນັ້ນອ້ອມໄປມາພ້ອມທັງເປີດເພງ, ເມື່ອໃດເພງຢຸດແລ້ວຖ້າຜູ້ໃດຖືຂໍ້ຄວາມດັ່ງກ່າວ ໃຫ້ແກະ ແລະ ອ່ານຂໍ້ຄວາມ (ບັນດາຄູຝຶກສາມາດຕັດສິນໃຈວ່າເກມໃດທີ່ເໝາະສົມໃນການຫຼິ້ນ).

ເມື່ອຂໍ້ຄວາມດັ່ງກ່າວ ໄດ້ຖືກອ່ານແລ້ວໃຫ້ຜູ້ເຂົ້າຮ່ວມເອົາໄປຕິດໃສ່ໃນບ່ອນທີ່ວ່າຂໍ້ຄວາມໃດໝາຍເຖິງການສື່ສານຕ່າງໆ. (ຍົກຕົວຢ່າງ ຂໍ້ຄວາມທີ່ແຂງກະດ້າງທີ່ສຸດໃຫ້ຕິດຢູ່ເບື້ອງຂວາມືສຸດ, ຂໍ້ຄວາມທີ່ມີຄວາມແຂງກະດ້າງໜ້ອຍໜຶ່ງກໍ່ໃຫ້ເອົາໄປຕິດຢູ່ລະຫວ່າງກາງ, ຂໍ້ຄວາມທີ່ອ້າງອີງເຖິງສິດ ແລະ ຂໍ້ຄວາມແຂງກະດ້າງທີ່ສຸດ.

## ເກມທີ່ໃຊ້ເຂົ້າໜົມ

ຕໍ່ໄປນີ້ແມ່ນໃຫ້ຜູ້ເຂົ້າຮ່ວມແບ່ງເປັນ 2 ກຸ່ມຢາຍເຂົ້າໜົມໃຫ້ທຸກໆຄົນພ້ອມທັງບອກພວກເຂົາບໍ່ຟ້າວກິນຈົນກວ່າເກມຈະຈົບລົງ ແລະ ກໍ່ແບ່ງກຸ່ມໜຶ່ງແຍກອອກຈາກຫ້ອງ ແລະ ບອກພວກເຂົາໃຫ້ລືມຄຳແນະນຳຕ່າງໆໃນເບື້ອງຕົ້ນ,ໃຫ້ກັບເຂົ້າມາຫ້ອງພ້ອມທັງກິນເຂົ້າໜົມໃຫ້ໝົດ. ໃຫ້ພວກເຂົາໄປຫາກຸ່ມອື່ນອີກ ແລະ ກໍ່ໄປບອກໃຫ້ກຸ່ມນັ້ນກິນເຂົ້າໜົມ.

ຫຼັງຈາກ 2-3 ນາທີ ຜ່ານໄປແລ້ວໃຫ້ອະທິບາຍໃຫ້ຜູ້ເຂົ້າຮ່ວມທັງໝົດວ່າມີຫຍັງໄດ້ເກີດຂຶ້ນຜ່ານໄປແລ້ວນັ້ນ, ຂໍອະໄພສຳລັບການຫຼິ້ນແບບຂີ້ຕົວະ.

ອະທິບາຍໃນກິດຈະກຳທີ່ຈົບລົງໄປແລ້ວນັ້ນ, ໃຫ້ພວກທ່ານຄິດເຖິງກ່ຽວກັບຄຳຊັກຊວນຂອງໝູ່ເພື່ອນ.ການຊັກຊວນຂອງໝູ່ເພື່ອນ ແມ່ນເມື່ອຄົນເຮົາຫາກເຮັດໃນສິ່ງຕ່າງໆນັ້ນກໍ່ເພາະວ່າພວກເຂົາໄດ້ມີຄວາມຄຸ້ນເຄີຍໃນການເຮັດສິ່ງນັ້ນ ແລະ ພວກເຂົາຕ້ອງການຢາກໃຫ້ສິ່ງດັ່ງກ່າວຖືກຕ້ອງ ແລະ ເໝາະສົມກັບພວກເຂົາ.

## ສົນທະນາກັນໃນກຸ່ມ:

- ເຈົ້າໄດ້ບອກວ່າບໍ່ຟ້າວກິນເຂົ້າໜົມ. ເຈົ້າມີຄວາມຮູ້ສຶກແນວໃດຫາກເດັກນ້ອຍຄົນອື່ນພະຍາຍາມຊັກຊວນໃຫ້ເຈົ້າກິນເຂົ້າໜົມດັ່ງກ່າວນັ້ນ.
- ມີໃຜແດ່ຮູ້ສຶກຫິວຂຶ້ນມາ?
- ເຈົ້າຮູ້ສຶກຢາກຮ້າຍ ຫຼື ສັບສົນ?
- ເຈົ້າຮູ້ສຶກວ່າເປັນສິ່ງລໍ້ໃຈບໍ?
- ໃຫ້ທຸກໆຄົນຄິດເບິ່ງວ່າມີຄັ້ງໜຶ່ງໃນຊີວິດເມື່ອເຈົ້າຖືກກົດດັນຈາກຄົນອື່ນໃຫ້ເຮັດໃນສິ່ງທີ່ຕົນເອງບໍ່ຕ້ອງການຢາກເຮັດ?.

**ອ່ານບົດເລື່ອງດັ່ງກ່າວໃຫ້ໝູ່ຟັງ:**

ນ. ເອັດ ກຳລັງກິນເຝີຢູ່ຂ້າງຖະໜົນໃນໃຈກາງເມືອງແຫ່ງໜຶ່ງ ແລະ ກໍ່ມີຜູ້ຊາຍຄົນໜຶ່ງນັ່ງຢູ່ໃກ້ກັບລາວ ແລະ ໂອ້ລົມກັບລາວວ່າ. ນ ເອັດໄດ້ໃຊ້ຄຳສຸພາບອອກມາລົມກັບຜູ້ໃຫຍ່, ລາວກໍ່ໄດ້ຖາມຄຳຖາມຊາຍຄົນ

ນັ້ນຄືນຫຼາຍຄຳຖາມ, ລາວບໍ່ຮູ້ວ່າມັນເປັນສິ່ງທີ່ປອດໄພສຳລັບແຮງງານເຄື່ອນຍ້າຍ ເຊັ່ນລາວທີ່ໄດ້ໂອ້ລົມກັບຄົນແປກໜ້າ. ຄວາມຈິງແລ້ວຊາຍຄົນນັ້ນແມ່ນຜູ້ຄ້າມະນຸດ ແລະ ລາວກໍ່ໄດ້ຖາມ ນາງ ເອັດວ່າ:

- ເຈົ້າເຮັດວຽກຢູ່ທີ່ນີ້ບໍ?
- ເຈົ້າອາໄສຢູ່ທີ່ນີ້ດົນປານໃດແລ້ວ?
- ເຈົ້າມີເພື່ອນຢູ່ໃນເມືອງນີ້ບໍ?
- ຄອບຄົວຂອງເຈົ້າມີເພື່ອນຢູ່ໃນເມືອງນີ້ບໍ?
- ເຈົ້າຕ້ອງການຢາກໃຫ້ຂ້ອຍຊອກຫາວຽກໃຫ້ເຈົ້າບໍ ? ເຊິ່ງວ່າມີເງິນເດືອນດີໃດ ?
- ຂ້ອຍຂໍເບິ່ງເອກະສານເດີນທາງຂອງເຈົ້າແດ່?

ໃຫ້ກຸ່ມສົນທະນາກ່ຽວກັບຄຳຖາມເຫຼົ່ານີ້ ແລະ ກໍ່ໃຫ້ມີການສົນທະນາສືບຕໍ່ດົນປານໃດກໍ່ໄດ້:

- ມີຄຳຕອບທີ່ເປັນການອ້າງອີງເຖິງສິດທິຈັກອັນທີ່ ນ. ເອັດໄດ້ຕອບຜູ້ຊາຍຄົນນັ້ນແລ້ວເຮັດໃຫ້ຊາຍຄົນນັ້ນໜີຈາກ ນ. ເອັດ?
- ມີວິທີການແນວໃດແດ່ທີ່ເວົ້າໃຫ້ປະສົບຜົນສຳເລັດ?
- ມັນຍາກບໍທີ່ຈະຫຼີກລ້ຽງກັບຄຳຖາມກົດດັນດັ່ງກ່າວ? ເປັນຫຍັງ?
- ມັນເປັນສິ່ງທີ່ບໍ່ດີບໍ ທີ່ໃຊ້ຄຳເວົ້າທີ່ແຂງກະດ້າງກັບຄົນແປກໜ້າ ຫຼື ໃຊ້ກັບຜູ້ຄ້າມະນຸດ?
- ເຈົ້າຄິດບໍວ່າເພື່ອນແທ້ໆຂອງເຮົາຈະຖາມຫຼາຍຄຳຖາມທັງໆທີ່ຫາກໍ່ຮູ້ຈັກກັນ?

ບໍ່ມີການບັນທຶກລາຍວັນ ຫຼື ການສະແດງບົດບາດສົມມຸດໃນຕອນທ້າຍຂອງບົດຮຽນນີ້.

**ສະຫຼຸດບົດຮຽນ**

- ໃນວັດທະນະທຳຂອງພວກເຮົາບໍ່ໄດ້ຄາດຫວັງໃຫ້ເດັກນ້ອຍມາແລກປ່ຽນຄວາມຄິດເຫັນກັບຜູ້ໃຫຍ່.
- ໃນປະຈຸບັນນີ້ພວກເຮົາຕ້ອງການຢາກໃຫ້ເດັກນ້ອຍໂອ້ລົມກັບຜູ້ໃຫຍເພື່ອທີ່ຈະໃຫ້ພວກເຂົາໄດ້ຮັບການປົກປ້ອງ. ພວກເຮົາສາມາດນຳໃຊ້ການສື່ສານທີ່ເປັນການອ້າງອີງເຖິງສິດທິໃນການໂອ້ລົມເລື່ອງດັ່ງກ່າວ.
- ການສື່ສານທີ່ເປັນການອ້າງອີງເຖິງສິດ: ແມ່ນເມື່ອເຈົ້າເວົ້າອອກມາໂດຍການເຄົາລົບຄົນອື່ນ ແລະ ໃນເວລາດຽວກັນກໍ່ບໍ່ໄດ້ປະຕິເສດສິດຂອງຕົນເອງ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຊຽນ ຫຼື ຖາມ ຫຼື ສອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈນຳທຸກໆຄົນທີ່ມາເຂົ້າຮ່ວມໃນມື້ນີ້ ພົບກັນໃນເທື່ອໜ້າ, ມື້ນີ້ທຸກໆຄົນທີ່ໄດ້ເຂົ້າຮ່ວມແມ່ນໄດ້ຮັບດາວຄົນລະ1 ດວງ.

ບອກໃຫ້ຜູ້ເຂົ້າຮ່ວມນຳໃຊ້ການສື່ສານແບບອ້າງອີງສິດທິຂອງຕົນເອງເຂົ້າໃນຊີວິດປະຈຳວັນຕະຫຼອດໄປ.



# ເອກະສານ 13 ກ: ຂໍ້ຄວາມໃນການສື່ສານ

13

**ເຈົ້າຕ້ອງອອກຈາກໂຮງຮຽນເພື່ອໄປເຮັດວຽກທີ່ໂຮງງານດີນຈີ່.**

ຄວາມຈິງແລ້ວຂ້ອຍມັກຮຽນໜັງສື ແລະ ຂ້ອຍຕ້ອງການຮຽນໜັງສືໃຫ້ຈົບກ່ອນ

.......................................................................................................................................................

**ໂອ່ຍ ໂຮງຮຽນເປັນສິ່ງທີ່ໜ້າເບື່ອ, ເຈົ້າຕ້ອງຫາເຮັດວຽກຄືກັນກັບຂ້ອຍນີ້.**

ເຈົ້າເວົ້າຖືກແລ້ວ.

.......................................................................................................................................................

**ເຈົ້າຊ່ວຍຂ້ອຍຖືຖົງນີ້ໄດ້ບໍ່?**

ບໍ່, ລືມມັນສະ, ບໍ່ມີທາງ

.......................................................................................................................................................

**ຂ້ອຍບໍ່ເຄີຍໄດ້ເຮັດວຽກທີ່ດີກ່ວາວຽກທີ່ຂ້ອຍເຮັດຢູ່ໃນທົ່ງນານີ້ເລີຍ.**

ນັ້ນກໍ່ເພາະວ່າເຈົ້າເປັນຄົນທີ່ບໍ່ສະຫຼາດ

.......................................................................................................................................................

**(ຈາກຜູ້ຍິງເຖົ້າຄົນໜຶ່ງຢູ່ເທິງລົດເມ)**

**ເຈົ້າບໍ່ມີຄວາມປອດໄພເຕີຢູ່ໃນເມືອງນີ້, ເຈົ້າຈິ່ງມາພັກນຳຂ້ອຍ.**

ຂໍໂທດ, ຂ້ອຍບໍ່ສາມາດໄປຢູ່ນຳເຈົ້າເພາະຂ້ອຍຫາກໍ່ຮູ້ຈັກເຈົ້າ.

.......................................................................................................................................................

**ເຈົ້າຕ້ອງການເບຍເພີ່ມບໍ?**

ບໍ່, ຂອບໃຈຂ້ອຍມີແລ້ວ.

.......................................................................................................................................................

**ຂຶ້ນລົດຂ້ອຍຈະພາເຈົ້າໄປຂີ່ເລາະເມືອງ.**

ບໍ່, ຂອບໃຈຂ້ອຍມັກຍ່າງ.

.......................................................................................................................................................

**ໄປກັບຂ້ອຍ, ຍ້າຍເຂົ້າໄປຢູ່ໃນເມືອງ ອາໄສຢູ່ທີ່ນີ້ມັນບໍ່ດີດອກ.**

ຂໍໂທດຂ້ອຍບໍ່ສາມາດໄປ, ຂ້ອຍຕ້ອງການຮຽນຈົບກ່ອນ.

........................................................................................................................................

**(ຈາກເພື່ອນຄົນໜຶ່ງຜູ້ທີ່ໄດ້ດື່ມເຫຼົ້າຫຼາຍ).**

**ຖ້າເຈົ້າເປັນເພື່ອແທ້ກັບຂ້ອຍ, ເຈົ້າຕ້ອງຂີ່ລົດເມືອເຮືອນກັບຂ້ອຍ.**

ຂ້ອຍກໍ່ເປັນເພື່ອນກັບເຈົ້າຢູ່ ແຕ່ຂ້ອຍຮູ້ສຶກບໍ່ສະບາຍໃຈເລີຍ ທີ່ຈະຂີ່ລົດຈັກກັບເຈົ້າໃນເມື່ອທີ່ເຈົ້າກຳລັງເມົາເຫຼົ້າຢູ່.

........................................................................................................................................

**ເຈົ້າຕ້ອງການໄປຍ່າງເລາະເບິ່ງແມ່ນ້ຳກັບຂ້ອຍບໍ່.**

ບໍ່, ຂອບໃຈຂ້ອຍຕ້ອງການຢູ່ກັບເພື່ອນຂອງຂ້ອຍ.

........................................................................................................................................

**ມັນເປັນການສິ້ນເປືອງເງິນທີ່ຈະສົ່ງເຈົ້າໄປຮຽນໜັງສື ເພາະວ່າເຈົ້າເປັນຜູ້ຍິງ.**

ຂ້ອຍເສຍໃຈຫຼາຍ

........................................................................................................................................

**ເຈົ້າບໍ່ຄວນຂີ່ລົດເມເຂົ້າເມືອງກຸງເພື່ອໄປຊອກວຽກເຮັດງານທຳໂດຍບໍ່ມີການວາງແຜນມາກ່ອນ.**

ຂ້ອຍບໍ່ສົນ, ເຈົ້າມີແຕ່ຄັດຄ້ານຂ້ອຍຕະຫຼອດ ຂ້ອຍຈະເຮັດໃນສິ່ງທີ່ຂ້ອຍຕ້ອງການເທົ່ານັ້ນ.

........................................................................................................................................

**ຈົ່ງກິນຢາເມັດນີ້ມັນຈະເຮັດໃຫ້ເຈົ້າຮູ້ສຶກດີເມື່ອເວລາທີ່ເຈົ້າເຮັດວຽກ.**

ຕົກລົງ

........................................................................................................................................

**ເດັກຊາຍຄົນນັ້ນເປັນຄົນທຸກຍາກ. ພວກເຮົາບໍ່ຄວນຈະຫຼິ້ນນຳລາວອີກ**

ຕົກລົງ, ຂ້ອຍຈະບໍ່ເວົ້ານຳລາວ

........................................................................................................................................

**ເຈົ້າຈະຫາເງິນໄດ້ຫຼາຍຖ້າຫາກວ່າເຈົ້າໄດ້ໄປເຮັດວຽກຢູ່ໃນເມືອງ.**

ຂ້ອຍບໍ່ຮູ້ກ່ຽວກັບຕົວເມືອງນັ້ນ ແລະ ຂ້ອຍກໍ່ຢ້ານວ່າຂ້ອຍຈະບໍ່ປອດໄພ. ຂ້ອຍຕ້ອງການຢາກຮຽນໜັງສືໃຫ້ຫຼາຍໆ ແລະ ກໍ່ຈະໄປເຮັດວຽກຢູ່ໃນເມືອງຕອນທີ່ຂ້ອຍໃຫຍ່ແລ້ວ.

........................................................................................................................................



# ເອກະສານ 14 ກ: ທັກສະໃນການຟັງ (ທັກສະໃນການສື່ສານ)

14

**ຈຸດປະສົງ:** **ເພື່ອໃຫ້ຜູ້ເຂົ້າຮ່ວມທັງໝົດຈະໄດ້ຮຽນຮູ້ກ່ຽວກັບທັກສະໃນການຟັງທີ່ດີ. ດັ່ງນັ້ນພວກເຂົາສາມາດປ້ອງກັນຕົວຂອງພວກເຂົາຈາກຄວາມບໍ່ເຂົ້າໃຈ ແລະ ໂອກາດທີ່ຈະຖືກຄ້າມະນຸດໄດ້.**

**ເວລາ:**

75 ນາທີ

**ອຸປະກອນ**

- ສຳເນົາ14ກ: ທັກສະໃນການຟັງທີ່ດີ
- ເຈ້ຍແຜ່ນໃຫຍ່.

## ການແນະນຳຕົວ:

**ຍິນດີຕ້ອນຮັບຜູ້ເຂົ້າຮ່ວມ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ, ຍື່ນໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ

**ອົບອຸ່ນຮ່າງກາຍ:**

ຄູຝຶກເດັກຕ້ອງເລືອກເອົາເກມຈາກລາຍການ.

**ທວນຄືນບົດຮຽນ:**

ໃຫ້ຖາມຜູ້ເຂົ້າຮ່ວມວ່າມີໃຜແດ່ໄດ້ໃຊ້ການສື່ສານແບບອ້າງສິດໃນບົດຮຽນຜ່ານມາ? ຖ້າພວກເຂົາຫາກໄດ້ນຳໃຊ້ ພວກເຂົາມີຄວາມຮູ້ສຶກແນວໃດ?

ຄົນອື່ນໆເດມີປະຕິກິລິຍາໂຕ້ຕອບແນວໃດ ?

## ທັກສະໃນການຟັງທີ່ດີ

ການແນະນຳບົດຮຽນກ່ຽວກັບທັກສະໃນການຟັງທີ່ດີ

ໃນບົດຮຽນທີ່ຜ່ານມາໄດ້ເເວົ້າເຖິງທັກສະຂອງການສື່ສານທີ່ອ້າງອີງເຖິງສິດ. ທັກສະໃນການເວົ້າແມ່ນເປັນພາກສ່ວນທີ່ສຳຄັນຂອງສາຍພົວພັນຕ່າງໆ ແຕ່ວ່າທັກສະໃນການຟັງທີ່ດີແມ່ນສຳຄັນກວ່າ, ເວົ້າຫຼໍ່າຄືນເລື່ອງດັ່ງກ່າວໃຫ້ຜູ້ເຂົ້າຮ່ວມຟັງຄືນ ຜູ້ທີ່ຍັງບໍ່ທັນໄດ້ມີໂອກາດເວົ້າ, ຖ້າຫາກວ່າຄົນແປກໜ້າຫາກເວົ້າກັບເຂົາ ພວກເຂົາກໍ່ສາມາດໃຊ້ວິທີແບບນັ່ງເສີຍໆຢູ່ ແຕ່ວ່າຖ້າພວກເຂົາຫາກເວົ້າກັບຄົນແປກໜ້າ ຫຼື ນາຍຈ້າງ ກໍ່ໃຫ້ພວກເຂົານຳໃຊ້ທັກສະໃນການຟັງທີ່ດີ.

**ການຟັງທີ່ບໍ່ດີ.**

ເມື່ອຄົນເຮົາຫາກບໍ່ມີການຟັງທີ່ດີພວກເຂົາກໍ່ຈະ:

- ຄິດກ່ຽວກັບສິ່ງທີ່ພວກເຂົາຕ້ອງການຢາກຈະເວົ້າໃນຕອນຕໍ່ໄປ ແທນທີ່ຈະຕັ້ງໃຈຟັງຄົນອື່ນທີ່ກຳລັງເວົ້າ.
- ລືມເລື່ອງທີ່ສຳຄັນສິ່ງທີ່ຕົນເອງໄດ້ຍິນ.
- ໝາຍຄວາມວ່າຈື່ແຕ່ເລື່ອງທີ່ບໍ່ຈຳເປັນ.
- ຖ້າວ່າເລື່ອງດັ່ງກ່າວຫາກສັບສົນພວກເຂົາກໍ່ຈະສ້າງເລື່ອງອື່ນຂື້ນມາໃສ່ຫົວ ແລະ ເພື່ອທີ່ຈະເຮັດໃຫ້ເລື່ອງນັ້ນຈະແຈ້ງຂື້ນມາ ແລະ ສິ່ງເຫຼົ່ານັ້ນກໍ່ບໍ່ຢູ່ໃນປະເດັນດັ່ງກ່າວ.
- ລົບກວນຄົນອື່ນໆ ໃນເລື່ອງເກົ່າ.

**ການຟັງທີ່ດີ.**

ຄົນທີ່ມີການຟັງທີ່ດີພວກເຂົາມັກຈະເປັນ:

- ຄິດກ່ຽວກັບຜູ້ທີ່ກຳລັງເວົ້າຢູ່.
- ຖາມຄຳຖາມໃນສິ່ງທີ່ຕົນບໍ່ເຂົ້າໃຈ.
- ຖາມຄືນໃນສິ່ງທີ່ຫາກໍ່ເວົ້າອອກໄປ.
- ຄິດກ່ຽວກັບສິ່ງທີ່ຕົນເອງຢາກຈະຮູ້ ແລະ ຕ້ອງການເພີ່ມຕື່ມ ຫຼື ກໍ່ຕັ້ງຄຳຖາມເລີຍ.

## ເກມທີ່ໃຊ້ໃນການຟັງທີ່ດີ

ຢາຍສຳເນົາເອກະສານແຫຼ່ງຂໍ້ມູນ 14 ກ: ທັກສະໃນການຟັງທີ່ດີ ໃຫ້ຜູ້ເຂົ້າຮ່ວມຊອກຫາໝູ່ຄົນໜຶ່ງໃນການໂອ້ລົມ, ໃຫ້ປ່ຽນກັນອ່ານເລື່ອງດັ່ງກ່າວ ຖ້າພວກເຂົາບໍ່ຮູ້ວ່າຈະໂອ້ລົມແນວໃດກໍ່ໃຫ້ພວກເຂົາເລົ່າເລື່ອງສິ່ງທີ່ພວກເຂົາເຫັນຈາກໂທລະພາບກໍ່ໄດ້ ຫຼື ສິ່ງທີ່ເກີດຂື້ນຢູ່ໃນໂຮງຮຽນກໍ່ໄດ້ ຫຼື ເລື່ອງທີ່ພວກເຂົາໄດ້ເຮັດໃນບົດຮຽນທີ່ຜ່ານມາກໍ່ໄດ້.

ຖ້າຜູ້ໃດເປັນຜູ້ເລົ່າເລື່ອງເປັນຄົນທຳອິດ, ຄົນອື່ນກໍ່ໃຫ້ປະຕິບັດຕາມໃນການເປັນນັກຟັງທີ່ດີ, ໃຫ້ເບິ່ງຕາມເອກະສານທີ່ສຳເນົາໄວ້ໃນເອກະສານແຫຼ່ງຂໍ້ມູນ 14 ກ : ທັກສະໃນການຟັງທີ່ດີ ເພື່ອໃຫ້ພວກເຂົາໝັ້ນໃຈວ່າພວກເຂົາໄດ້ປະຕິບັດໝົດທຸກໆທັກສະໃນການຟັງທີ່ດີນັ້ນ.

## ການຟັງທີ່ດີສາມາດຊ່ວຍເຈົ້າໃນການປ້ອງກັນຕົວຂອງເຈົ້າໄດ້

ທັກສະໃນການຟັງທີ່ດີສາມາດຊ່ວຍໃຫ້ເຈົ້າປ້ອງກັນຕົວເຈົ້າເອງໄດ້ ຈາກໄພອັນຕະລາຍຕ່າງໆ. ຈົ່ງບອກໃຫ້ແຕ່ລະກຸ່ມປະຕິບັດຕາມເລື່ອງດັ່ງຕໍ່ໄປນີ້ (ໃຫ້ອ່ານເລື່ອງດັ່ງກ່າວດັງໆ).



ນ. ເຄ ໄດ້ເດີນທາງໄປດ້ວຍລົດເມຄັນໜຶ່ງເພື່ອເຂົ້າໄປໃນເມືອງ ແລະ ເພື່ອຊອກຫາວຽກເຮັດງານທຳ, ຄົນທີ່ນັ່ງຢູ່ໃກ້ກັບລາວໄດ້ເລີ່ມໂອ້ລົມກັບລາວວ່າ: ນີ້ແມ່ນຄຳເວົ້າທີ່ພວກເຂົາລົມກັນໃນລົດເມ.

ຄົນແປກໜ້າເວົ້າວ່າ:"ເບິ່ງເຈົ້າຄືຈະເປັນເດັກຍິງທີ່ສະຫຼາດນໍ, ທັງງາມ ແລະ ໜ້າເຄົາລົບ. ຂ້ອຍມີພີ່ນ້ອງຜູ້ທີ່ເຂົາກຳລັງຊອກຫາຄົນດີມາເຮັດວຽກນຳເຂົາ, ເປັນຄົນງານທີ່ໜ້າເຄົາລົບ ແລະ ນັບຖື. ລາວມີໂຮງງານຕັດຫຍິບທີ່ເປັນຂອງຕົນເອງຢູ່ນອກເມືອງ ຄຳປົດ" (ຄູຝຶກສາມາດຍົກຕົວຢ່າງບ້ານກໍ່ໄດ້).

ນ. ເຄ ໄດ້ເວົ້າວ່າ "ຂ້ອຍຫຍິບຈັກບໍ່ເປັນ, ຂ້ອຍບໍ່ສາມາດເຮັດວຽກຢູ່ທີ່ນັ້ນ".

ຄົນແປກໜ້າ "ໂອ້ ເຈົ້າບໍ່ຈຳເປັນມີຄວາມຮູ້ຫຼາຍປານໃດກໍ່ໄດ້ ພວກເຂົາຈະສອນໃຫ້ເຈົ້າເອງດອກ, ເຈົ້າຍັງຈະໄດ້ຮັບເງິນເດືອນທີ່ສູງ".

ນ.ເຄ "ຂ້ອຍຕ້ອງການລົມກັບພໍ່ແມ່ຂອງຂ້ອຍກ່ອນ ເພື່ອທີ່ຈະປຶກສາກັບພວກເພິ່ນໃນການເຮັດວຽກ"

ເມື່ອໄດ້ຍິນເຊັ່ນນັ້ນຄົນແປກໜ້າກໍ່ງຽບໄປຊົ່ວຂະນະໜຶ່ງ ຫຼັງຈາກ 10 ນາທີ ຜ່ານໄປຄົນແປກໜ້າກໍ່ໄດ້ເລີ່ມເວົ້າອອກມາອີກວ່າ:

ຄົນແປກໜ້າ: "ມັນເປັນວຽກງານທີ່ດີໃດ, ໄດ້ຮັບເງິນຫຼາຍກວ່າໂຮງງານທຳມະດາ ແຕ່ວ່າເຂົາຕ້ອງການຄົນງານດຽວນີ້ ແລະ ຕ້ອງການຄົນງານເປັນຈຳນວນຫຼວງຫຼາຍ ເພາະວ່າພວກເຂົາໄດ້ຮັບການສັ່ງຊື້ເຄື່ອງຈາກຕ່າງປະເທດ. ດັ່ງນັ້ນ ເພິ່ນຈຶ່ງໄດ້ມີການຈ່າຍເງິນເດືອນໃຫ້ພະນັກງານສູງ. ມີລົດເມມາຮັບແລ້ວຈະພາເຈົ້າໄປທີ່ເມືອງ ກັນໂດ ແລະ ລົດເມກໍ່ຈະອອກຈາກສະຖານີດຽວນີ້ ບໍ່ມີເວລາແລ້ວໃດທີ່ຈະໂທຫາຄົນອື່ນ".

ນ.ເຄ ກໍ່ໄດ້ໃຊ້ທັກສະໃນການຟັງທີ່ດີຂອງລາວເພື່ອຄິດກ່ຽວກັບຄຳເວົ້າຂອງຍິງຄົນນັ້ນ ລາວກໍ່ຮູ້ສຶກວ່າລາວບໍ່ເຂົ້າໃຈ:

ຈົ່ງຖາມຜູ້ເຂົ້າຮ່ວມຄິດກ່ຽວກັບພາກສ່ວນວຽກງານທີ່ຄົນແປກໜ້າວ່າຈະສະໜອງໃຫ້ເບິ່ງຄືວ່າກົງກັນຂ້າມ. ຖ້າເລື່ອງດັ່ງຕໍ່ໄປນີ້ບໍ່ໄດກ່າວຂື້ນມາ, ໃຫ້ຮັບປະກັນວ່າເລື່ອງດັ່ງກ່າວຕ້ອງໃຫ້ໄດ້ເວົ້າ:

- ເປັນຫຍັງຍິງຄົນນັ້ນຈຶ່ງກ່າວເຖິງໂຮງງານຢູ່ທີ່ເມືອງຄຳປົດ, ແຕ່ວ່າລາວພັດເວົ້າອີກລາວຕ້ອງການຢາກໄປນຳລົດເມທີ່ເມືອງ ກັນໂດ ເປັນບ່ອນທີ່ບໍ່ໄດ້ໃກ້ກັນເລີຍກັບເມືອງຄຳປົດ.
- ເປັນຫຍັງນາຍຈ້າງຈຶ່ງຈ່າຍເງິນເດືອນສູງໃຫ້ກັບຜູ້ທີ່ບໍ່ມີຄວາມຮູ້.
- ສາຍເຫດໃດນາຍຈ້າງຈຶ່ງມີເວລາຝຶກການເຮັດວຽກໃຫ້ກັບຂ້ອຍເພື່ອຮັບຂ້ອຍເປັນພະນັກງານ ທັງໆທີ່ເຂົາສັ່ງຊື້ເຄື່ອງເປັນຈຳນວນຫຼວງຫຼາຍຢູ່ແລ້ວ.
- ເປັນຫຍັງລາວຈຶ່ງຕ້ອງຕັດສິນໃຈພາຍໃນມື້ນີ້ມື້ດຽວ.
- ອີກຢ່າງໜຶ່ງລາວກໍ່ບໍ່ເຄີຍໄດ້ຍິນວ່າ: ບໍ່ມີໃຜທີ່ຈະຖືກຈ້າງຢູ່ໃນໂຮງງານຕັດຫຍິບແຫ່ງນັ້ນ.
- ສັບສົນ, ລາວຄິດໂດຍທີ່ບໍ່ໄດ້ມີການສອບເສັງເອົາ.

ນ.ເຄ ລາວໄດ້ຄິດກ່ຽວກັບຄຳເວົ້າທີ່ຜູ້ຍິງຄົນນັ້ນແມ່ນໄດ້ເວົ້າຫຍັງແດ່? ນ. ເຄ ກໍ່ໄດ້ຖາມຜູ້ຍິງຄົນນັ້ນເພື່ອໄຂຄວາມກະຈ່າງແຈ້ງກ່ຽວກັບສິ່ງທີ່ລາວບໍ່ເຂົ້າໃຈ ແລະ ຄຳຕອບຈາກຜູ້ຍິງຄົນນັ້ນກາຍມາເປັນສິ່ງທີ່ກົງກັນຂ້າມ.

ຄົນເຮົາເມື່ອມີແນວຄິດມັກຕົວະຄົນອື່ນແມ່ນຈະເວົ້າໃນສິ່ງທີ່ກົງກັນຂ້າມ, ເພາະພວກເຂົາລືມວ່າພວກເຂົາໄດ້ເຄີຍເວົ້າຫຍັງໃນເມື່ອກ່ອນ.

ນ.ເຄ ກໍ່ໄດ້ເວົ້າຫຼໍ່າຄືນກັບສິ່ງທີ່ລາວຮູ້ຈາກຜູ້ຍິງຄົນນັ້ນໄດ້ເວົ້າໃນເມື່ອກ່ອນ, ເຊິ່ງວ່າມັນບໍ່ກົງກັບສິ່ງທີ່ລາວໄດ້ເວົ້າອອກມານຳຫຼັງນັ້ນ. ຍິງຄົນນັ້ນແມ່ນຜູ້ຄ້າມະນຸດ ແລະ ລາວກໍ່ຍັງເປັນຄົນທີ່ເວົ້າຂີ້ຕົວະ ແລະ ພະຍາຍາມຫລອກ ນ. ເຄ. ຄຳຖາມຂອງນ.ເຄ ກໍ່ເປັນສາຍເຫດໃຫ້ຍິງຄົນນັ້ນເກີດຄວາມວ່າລາວຈະຕົວະ ນ.ເຄ ໄດ້ ແຕ່ແລ້ວຍິງຄົນນັ້ນກໍ່ບໍ່ສາມາດຫຼອກ ນ. ເຄ ໄດ້ ສຸດທ້າຍຜູ້ຍິງຄົນນັ້ນກໍ່ໄດ້ລົງລົດເມໄປໃນເວລາ ທີ່ລົດຈອດໃນປ້າຍລົດເມ.

## ການສະແດງບົດບາດສົມມຸດ

ໃຫ້ອາສາສະໝັກ 2 ຄົນສະແດງບົດບາດສົມມຸດ ໃຫ້ຜູ້ໜຶ່ງຫຼິ້ນບົດບາດເປັນນາຍຈ້າງ ແລະ ອີກຜູ້ໜຶ່ງຫຼິ້ນບົດບາດເປັນແຮງງານເຄື່ອນຍ້າຍ ໂອ້ລົມວຽກງານໃນສິ່ງທີ່ເປັນໄປໄດ້. ຜູ້ເຂົ້າຮ່ວມຄົນອື່ນກໍ່ທຳໜ້າທີ່ເປັນຜູ້ຟັງ.

ຄັ້ງທຳອິດ ໃຫ້ອາສາສະໝັກສະແດງເປັນເລື່ອງນາຍຈ້າງ ທີ່ໃຊ້ການສື່ສານແບບແຂງກະດ້າງ ແລະ ແຮງງານເຄື່ອນຍ້າຍ ແມ່ນໃຫ້ໃຊ້ການສື່ສານແບບການຟັງທີ່ບໍ່ດີ.

ອະນຸຍາດໃຫ້ກຸ່ມສົນທະນາເຖິງລາຍລະອຽດ ພວກເຂົາຄິດພຽງແຕ່ວ່າໃຫ້ມັນເກີດຢູ່ໃນບົດບາດສົມມຸດໃນ 2-3 ນາທີເທົ່ານັ້ນ ແລະ ແລ້ວ ກໍ່ບອກພວກເຂົາໃຫ້ສະແດງເລີຍ.

ເມື່ອພວກເຂົາສະແດງຈົບແລ້ວກໍ່ໃຫ້ກຸ່ມໜຶ່ງທີ່ບໍ່ທັນສະແດງ ອອກຄຳຄິດຄຳເຫັນກ່ຽວກັບການສື່ສານທີ່ແຂງກະດ້າງ ແລະ ບໍ່ແຂງກະດ້າງ ແລະ ການຟັງທີ່ບໍ່ດີ ໄດ້ເຮັດໃຫ້ສະຖານະການຮ້າຍແຮງຂຶ້ນຕື່ມ.

ແລະ ກໍ່ໃຫ້ອາສາສະໝັກຜູ້ໃໝ່ສະແດງບົດບາດສົມມຸດຄືນກັບນາຍຈ້າງໂດຍການນຳໃຊ້ການສື່ສານທີ່ອ້າງສິດຂອງຕົນເອງ ແລະ ແຮງງານເຄື່ອນຍ້າຍກໍ່ໃຊ້ການສື່ສານທີ່ຖືສິດຂອງຕົນເອງ ແລະ ທັກສະໃນການຟັງທີ່ດີ.

ອີກຢ່າງໜຶ່ງກໍ່ໃຫ້ພວກເຂົາສະແດງຄຳເຫັນກ່ຽວກັບການສື່ສານທີ່ເປັນການອ້າງອີງເຖິງສິດ ແລະ ການຟັງທີ່ດີໄດ້ສ້າງໃຫ້ສະຖານະການດີຂຶ້ນ.



### ສະຫຼຸບບົດຮຽນ

ເມື່ອຄົນເຮົາຫາກມີການຟັງທີ່ດີພວກເຂົາກໍ່ຈະ:

- ຄິດກ່ຽວກັບບຸກຄົນນັ້ນວ່າກຳລັງເວົ້າຫຍັງ.
- ຖາມຄຳຖາມເພື່ອຄວາມກະຈ່າງແຈ້ງເມື່ອຕົນເອງຫາກບໍ່ເຂົ້າໃຈ.
- ເວົ້າຫຼໍ່າຄືນໃນສິ່ງທີ່ພວກເຂົາເວົ້າລົງໄປ.
- ຄິດກ່ຽວກັບສິ່ງທີ່ຕ້ອງການຢາກຮູ້ເພີ່ມຕື່ມ ແລະ ກໍ່ຖາມຄຳຖາມເລີຍ.

ທັກສະໃນການຟັງທີ່ດີສາມາດປ້ອງກັນຕົວຂອງເຈົ້າຈາກໄພອັນຕະລາຍຕ່າງໆລວມທັງໃນລະຫວ່າງມີການເຄື່ອນຍ້າຍແຮງງານ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈສຳລັບຜູ້ເຂົ້າຮ່ວມ ພົບກັນໃໝ່ໃນອາທິດຕໍ່ໄປ, ບອກຜູ້ເຂົ້າຮ່ວມວ່າທຸກໆຄົນໄດ້ຮັບດາວຄົນລະ 1 ດວງ.

ໃຫ້ຕັ້ງຄຳຖາມສະມາຊິກແຕ່ລະຄົນໃນກຸ່ມເບິ່ງຄືນ ກ່ຽວກັບຄົນທີ່ຢູ່ໃນຊຸມຊົນຂອງພວກເຂົາ ແລະ ຄຳຕອບຈາກບັນດາຄຳຖາມຕ່າງໆຕໍ່ໄປນີ້:

- ເຈົ້າໄດ້ລອງໃຊ້ການສື່ສານທີ່ເປັນການອ້າງອີງເຖິງສິດທິໃນຊີວິດປະຈຳວັນຂອງເຈົ້າບໍ?
- ເຈົ້າໄດ້ໃຊ້ທັກສະໃນການຟັງທີ່ດີເຂົ້າໃນຊີວິດປະຈຳວັນຂອງເຈົ້າບໍ?

ບັນດາຄູຝຶກສາມາດຖາມຜູ້ເຂົ້າຮ່ວມໃຫ້ຂຽນຄຳຖາມເຫຼົ່ານີ້ໃສ່ເຈ້ຍແຜ່ນໃຫຍ່ ແລ້ວໃຫ້ຖືເມື່ອເຮືອນເພື່ອເຕືອນຄວາມຈຳຂອງພວກເຂົາ.

# ເອກະສານອ້າງອີງ 14 : ທັກສະໃນການຟັງທີ່ດີ



ຄົນຜູ້ທີ່ມີການຟັງທີ່ດີ: (1) ຄິດກ່ຽວກັບວ່າຄົນນັ້ນກຳລັງເວົ້າຫຍັງ.





ຄົນຜູ້ທີ່ມີການຟັງທີ່ດີ: (2) ຖາມຄຳຖາມໃນສິ່ງທີ່ຍັງບໍ່ເຂົ້າໃຈ.



ຄົນຜູ້ທີ່ມີການຟັງທີ່ດີ: (3) ເວົ້າລື້ມຄືນຄຳເກົ່າ.





ຄົນຜູ້ທີ່ມີການຟັງທີ່ດີ: (4) ຄິດກ່ຽວກັບສິ່ງທີ່ພວກເຂົາຕ້ອງການຢາກຮູ້ເພີ່ມຕື່ມ ແລະ ຖາມຄຳຖາມຕໍ່ໄປ

# 15 ບົດທີ 15: ອາລົມຈິດ ແລະ ແນວຄິດ (ທັກສະໃນການບໍລິຫານອາລົມ)

**ຈຸດປະສົງ:** ຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ວິທີການທີ່ຈະບໍລິຫານອາລົມຂອງຕົນເອງ ແລະ ມີຄວາມສາມາດໃນການຈຳແນກຮູບແບບຂອງຄວາມຄິດໃນທາງລົບເຊິ່ງເປັນສາເຫດທີ່ພາໃຫ້ພຶດຕິກຳຕົກຢູ່ໃນຄວາມສ່ຽງ.

**ເວລາ:**

75 ນາທີ

**ອຸປະກອນ**

❖ ສຳເນົາ 15 ກ: ກໍລະນີສຶກສາການຄິດໃນທາງລົບ ແລະ 15 ຂ: ການສະແດງບົດບາດສົມມຸດກ່ຽວກັບການຄິດໃນທາງລົບ ສຳເນົາຕາມຈຳນວນຄົນໃນກຸ່ມ

## ການແນະນຳບົດຮຽນ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກນຳພາໃນການອົບອຸ່ນຮ່າງກາຍໂດຍການນຳໃຊ້ເກມຈາກລາຍການ.

**ທວນຄືນບົດຮຽນ:**

ການຕັ້ງຄຳຖາມ

ມີບຸກຄົນໃດບໍ່ທີ່ມີການນຳໃຊ້ທັກສະກ່ຽວກັບການສື່ສານແບບອ້າງອີງ ເຖິງສິດໃນອາທິດຜ່ານມາມັນມີປະໂຫຍດບໍ? ມັນຍາກບໍ? ໃນການນຳໃຊ້ການສື່ສານດັ່ງກ່າວ.

ມີໃຜໄດ້ນຳໃຊ້ທັກສະກ່ຽວກັບການຟັງທີ່ດີໃນອາທິດທີ່ຜ່ານມາ? ມັນມີປະໂຫຍດບໍ? ມັນຍາກບໍ ?

## ການສົນທະນາ

ມື້ນີ້ພວກເຮົາຈະໄດ້ຮຽນຮູ້ກ່ຽວກັບການບໍລິຫານອາລົມ, ທຸກໆຄົນໃນໂລກນີ້ ມີຫຼາຍໆຢ່າງທີ່ພວກເຂົາມີຄວາມຮູ້ສຶກກັບອາລົມທີ່ຫຍຸ້ງຍາກ: ບໍ່ມີໃຜສາມາດປ່ຽນແປງຊີວິດຂອງພວກເຂົາເພື່ອຫລີກລ້ຽງກັບບັນຫາຕ່າງໆ ແຕ່ຄົນເຮົາກໍ່ມີຄວາມສາມາດໃນການປ່ຽນແປງ ແລະ ໂຕ້ຕອບກັບບັນຫາດັ່ງກ່າວນີ້ໄດ້.



ບອກໃຫ້ແຕ່ລະກຸ່ມຍົກຕົວຢ່າງບັນດາອາລົມທີ່ມີຄວາມຫຍຸ້ງຍາກ ບາງເທື່ອອາດຄ້າຍຄືກັນກັບລາຍການດັ່ງຕໍ່ໄປນີ້:

- ຄວາມໂສກເສົ້າ
- ບ້າຄັ້ງ
- ອາລົມໂມໂຫ
- ເສຍຄວາມຮູ້ສຶກ
- ໃຈຮ້າຍປຶ່ງປັ່ງ
- ອາລົມກົດດັນ
- ຂາດຄວາມຫວັງ
- ຂາດຄວາມຮັກ

ທຸກໆຄົນຈະປະເຊີນກັບບັນຫາຫຼາຍຢ່າງໃນຊີວິດຂອງຕົນ ມັນກໍ່ບໍ່ສະເໝີໄປທີ່ວ່າເປັນໄປບໍ່ໄດ້ໃນການປ່ຽນແປງສະພາບແວດລ້ອມໃນຊີວິດເພື່ອແກ້ໄຂບັນຫາ. ແຕ່ກໍ່ມີຄວາມເປັນໄປໄດ້ໃນການປ່ຽນແປງສິ່ງທີ່ພວກເຂົາໂຕ້ຕອບກັບບັນຫາດັ່ງກ່າວ. ສິ່ງທີ່ຄົນເຮົາຄິດກ່ຽວກັບບັນຫາດັ່ງກ່າວນັ້ນແມ່ນພະລັງອັນໜຶ່ງທີ່ກະທົບໃສ່.

ບອກໃຫ້ຜູ້ເຂົ້າຮ່ວມຜູ້ທີ່ຍັງບໍ່ທັນໄດ້ອ່ານ 4 ຮູບແບບຂອງການຄິດໃນທາງລົບເຊິ່ງສິ່ງເຫຼົ່ານັ້ນສາມາດເຮັດໃຫ້ບັນຫາດັ່ງກ່າວໃຫຍ່ຂຶ້ນ. ໃຫ້ຜູ້ເຂົ້າຮ່ວມຫຼັບຕາໃນຂະນະທີ່ອ່ານຂໍ້ຄວາມດັ່ງກ່າວພ້ອມກັນນັ້ນກໍ່ໃຫ້ຍົກຕົວຢ່າງແຕ່ລະອັນ ແລະ ໃຫ້ຜູ້ເຂົ້າຮ່ວມຄິດຫາຕົວຢ່າງອັນໜຶ່ງຈາກຊີວິດຂອງຕົນເອງ.

**ການຄິດເກີນຄວາມຈິງ.**

- ເມື່ອຫາກຄົນໃດຄົນໜຶ່ງຈະເລີ່ມຄິດເກີນຄວາມຈິງ

- ຕົວຢ່າງ: ມີນັກຮຽນຄົນໜຶ່ງ, ລົດຖີບຂອງລາວໄດ້ເພຢູ່ໃນຫວ່າງທາງໄປໂຮງຮຽນລາວເວົ້າວ່າ "ມື້ນີ້ທຸກສິ່ງທຸກຢ່າງກໍ່ຜິດໄປໝົດ" ເມື່ອສິ່ງໜຶ່ງບໍ່ດີເກີດຂຶ້ນ ຫຼື ນັກຮຽນຜູ້ທີ່ໄດ້ຮັບສິ່ງທີ່ບໍ່ດີ ແລະ ເວົ້າວ່າສິ່ງນີ້ເປັນສິ່ງທີ່ໂຫດຮ້າຍທີ່ສຸດທີ່ໄດ້ເກີດຂຶ້ນກັບຂ້ອຍ".

**ການຄິດທີ່ເປັນການຕຳນິຕົນເອງ.**

- ບາງຄັ້ງຄົນເຮົາກໍ່ຕຳນິຕົນເອງກັບສິ່ງທີ່ພວກເຂົາບໍ່ສາມາດຄວບຄຸມໄດ້.
- ຕົວຢ່າງ: ມີເດັກຍິງຄົນໜຶ່ງຜູ້ທີ່ລາວຄິດວ່າມັນເປັນຄວາມຜິດຂອງລາວທີ່ຄອບຄົວຂອງລາວທຸກຍາກ.

**ການເບິ່ງໃນແງ່ທີ່ບໍ່ດີ.**

- ບາງເທື່ອຄົນເຮົາອາດສຸມໃສ່ແຕ່ສິ່ງທີ່ບໍ່ດີຂອງບັນຫາພຽງຢ່າງດຽວ

- ຕົວຢ່າງ: ເດັກຊາຍຄົນໜຶ່ງຜູ້ທີ່ມັກເດັກຍິງຄົນໜຶ່ງ, ເດັກຊາຍຄົນນັ້ນພຽງແຕ່ສັງເກດເຫັນວ່າຍິງຄົນນັ້ນບໍ່ສົນໃຈລາວ ແລະ ລືມເມື່ອເວລາທີ່ລາວຍີ້ມໃສ່ຊາຍຄົນນັ້ນ.

**ການຄາດຄະເນສິ່ງທີ່ບໍ່ດີໃນຕໍ່ໜ້າ.**

• ບາງຄັ້ງຄົນເຮົາພົບກັບບັນຫາໃດໜຶ່ງ ແລະ ພວກເຂົາກໍ່ນຶກພາບວ່າມັນກະທົບກັບອານາຄົດພວກເຂົາທັງໝົດ ໂດຍປັດສະຈາກຄວາມຈິງ ແລະ ບໍ່ເບິ່ງຫຼັກຖານ.

• ຍົກຕົວຢ່າງ ເດັກຍິງຄົນໜຶ່ງຜູ້ທີ່ລາວຄິດວ່າຕະຫຼອດຊີວິດຂອງລາວຈະມີແຕ່ຄວາມຫຼົ້ມຈົມເພາະວ່າລາວບໍ່ຜ່ານການສອບເສັງພຽງແຕ່ໜຶ່ງຄັ້ງເທົ່ານັ້ນ.

**ຈັບຄູ່ກໍລະນີສຶກສາໃຫ້ເຂົ້າກັນ**

ໃຫ້ຜູ້ເຂົ້າຮ່ວມມືນຕາພວກເຂົາ ຫຼັງຈາກນັ້ນແບ່ງເປັນຄູ່, ຢາຍເຈ້ຍແບບກໍລະນີສຶກສາການຄິດແບບທາງລົບໃຫ້ແຕ່ລະຄູ່ ແລະ ໃຫ້ພວກເຂົາອ່ານກໍລະນີສຶກສາດັ່ງກ່າວ, ໝາຍສິ່ງເຫຼົ່ານັ້ນໃຫ້ເຂົ້າກັນກັບຮູບແບບຂອງການຄິດໃນທາງລົບທີ່ພວກເຂົາໄດ້ກ່າວເຖິງ. (ແຖວທີ່ຖືກກັນຈະໄຂ່ວຂ້າມໜ້າເຈ້ຍ ຄຳຕອບເຫຼົ່ານັ້ນມີຄື 1 ຄ , 2 ຂ, 3 ກ, 4 ງ) .

**ການຄິດໃນທາງບວກ**

**ການຄິດໃນທາງບວກ**ເປັນວິທີການໜຶ່ງທີ່ຈັດການກັບບັນຫາຕ່າງໆ ຄືການນຳເອົາໄປແທນທີ່ຮູບແບບການຄິດໃນທາງລົບ. ບາງບັນຫາໃຫຍ່ແທ້ໆ ຕົວຢ່າງ ຮັກຈົນວັນຕາຍອາດຈະບໍ່ໝົດດອກທີ່ຈະແກ້ໄຂບັນຫາເຫຼົ່ານີ້ ແຕ່ເມື່ອມັນກາຍມາເປັນບັນຫານ້ອຍໆການຄິດໃນທາງບວກກໍ່ສາມາດຊ່ວຍໄດ້.

ຈົ່ງອ່ານຄວາມຄິດໃນທາງບວກດັ່ງຕໍ່ໄປນີ້ດັ່ງໆ:

**ການຄິດເກີນຄວາມຈິງ ແລະ ການທີ່ແນມເຫັນແຕ່ສິ່ງທີ່ບໍ່ດີ.**

- ຈົ່ງນຶກເຖິງທັກສະສ່ວນຕົວຂອງເຈົ້າ ຫຼື ສິ່ງທີ່ເຈົ້າເຮັດໄດ້ດີໃນຊີວິດຂອງເຈົ້າ ແລະ ແລ້ວກໍ່ສຸມໃສ່ສິ່ງເຫຼົ່ານັ້ນເລີຍ.

- ພະຍາຍາມບໍ່ໃຫ້ໃຊ້ຄຳດັ່ງຕໍ່ໄປນີ້ເຊັ່ນວ່າ "ທຸກສິ່ງທຸກຢ່າງ, ສະໝໍ່າສະເໝີ, ບໍ່ເຄີຍ" ເມື່ອກ່າວເຖິງບັນຫາຕ່າງໆ ຈົ່ງຈຳໄວ້ວ່າບັນຫາຂອງມື້ນີ້ອາດສາມາດແກ້ໄຂໃນມື້ໜ້າ.

- ພະຍາຍາມບໍ່ໃຫ້ຄິດວ່າສິ່ງດັ່ງກ່າວທີ່ຂຽນໄວ້ນັ້ນເປັນສິ່ງທີ່ຜິດ. ເມື່ອຄົນເຮົາເລີ່ມຂຽນບັນຫາຕ່າງໆອອກມາ, ພວກເຂົາກໍ່ຄິດວ່າບັນຫານັ້ນໃຫຍ່ຂຶ້ນເຊັ່ນວ່າ:ເປັນຮູບແບບຂອງສິ່ງຕໍ່ໄປນີ້.

**ການຕຳນິຕົນເອງ.**

- ການຕຳນິຕົນເອງມັນເປັນສິ່ງທີ່ຍາກທີ່ຈະຊ່ວຍໃຫ້ເຈົ້າໃນການແກ້ໄຂບັນຫາ.
- ຈົ່ງຈຳໄວ້ວ່າທຸກໆບັນຫາແມ່ນເກີດຂຶ້ນກັບໝົດທຸກຄົນບໍ່ສະເພາະແຕ່ຄົນໜຶ່ງຄົນດຽວ.
- ພະຍາຍາມສຸມໃສ່ແຕ່ການແກ້ໄຂບັນຫາດີກ່ວາທີ່ຈະສຸມໃສ່ແຕ່ການຕຳນິຕົນເອງ.

**ການຄາດຄະເນສິ່ງທີ່ບໍ່ດີໃນອານາຄົດ.**

- ຈົ່ງຈຳໄວ້ວ່າບໍ່ມີໃຜສາມາດຄາດຄະເນອານາຄົດໄດ້. ຫາຍໃຈເຂົ້າເລິກໆ ແລະ ຈື່ໄວ້ວ່າມື້ອື່ນກໍ່ຄືມື້ທົ່ວໆໄປ ແລະ ເຈົ້າອາດຈະຕື່ນຂຶ້ນມາໄດ້ຍິນຂ່າວດີຈາກມື້ອື່ນກໍ່ໄດ້.



ການຄິດໃນແງ່ລົບ ແລະ ພຶດຕິກຳທີ່ມີຄວາມສ່ຽງ (10 ນາທີ)

ຮູບແບບການຄິດໃນທາງລົບນີ້ສາມາດເພີ້ມຄວາມສ່ຽງໃຫ້ແກ່ການປະພຶດ. ຈົ່ງອ່ານຕົວຢ່າງຕໍ່ໄປນີ້ດັ່ງໆ

1.ທ. ບີ ໄດ້ຄິດເກີນຄວາມເປັນຈິງຢູ່ສະເໝີ ເມື່ອລາວໄດ້ອອກໂຮງຮຽນປະມານ 2 ເດືອນເພື່ອກ່ຽວເຂົ້າ ລາວຄິດວ່າຕະຫຼອດຊີວິດຂອງລາວຈະພົບແຕ່ຄວາມຫຼົ້ມເຫລວ, ລາວຄິດວ່າບໍ່ມີຫຍັງດີເລີຍທີ່ຈະກັບເຂົ້າໄປໂຮງຮຽນອີກ ລາວພຽງແຕ່ຄິດວ່າມີແຕ່ໄປຊອກຫາວຽກເຮັດງານທຳໂດຍການເຄື່ອນຍ້າຍແຮງງານເທົ່ານັ້ນ.

ແຕ່ກໍ່ຍັງໂຊກດີເອື້ອຍຂອງລາວໄດ້ຊ່ວຍລາວໃຫ້ພົບກັບສິ່ງທີ່ເປັນທາງບວກ. ເອື້ອຍຂອງລາວໄດ້ບອກກັບລາວວ່າ ມີເດັກນ້ອຍຫຼາຍຄົນທີ່ເຄີຍອອກໂຮງຮຽນເປັນເວລາຫຼາຍເດືອນ ແລະ ພວກເຂົາກໍ່ຍັງກັບເຂົ້າໄປຮຽນຄືນໃໝ່ກໍ່ໄດ້. ເອື້ອຍຂອງລາວໄດ້ຊ່ວຍລາວໃນການຝຶກອ່ານດັ່ງນັ້ນລາວຈຶ່ງມີຄວາມຮູ້ສຶກວ່າລາວໄດ້ຕຽມຕົວທີ່ຈະກັບເຂົ້າໄປຮຽນຕໍ່ໄດ້.

2.ນ.ພີ ໄດ້ຕຳນິຕົນເອງຢູ່ສະເໝີກ່ຽວກັບບັນຫາຕ່າງໆຂອງຄອບຄົວ. ເມື່ອເອື້ອຍຂອງລາວເຮັດລົດຈັກລາວລົ້ມ ແລະ ເອື້ອຍຂອງລາວກໍ່ນອນໂຮງໝໍ ນ.ພີ ກໍ່ມີຄວາມຮູ້ສຶກຢາກຮັບຜິດຊອບທີ່ວ່າລາວບໍ່ໄດ້ເຕືອນເອື້ອຍຂອງລາວ. ນ.ພີ ກໍ່ເຊື່ອວ່າປ້າຂອງລາວສະເໜີໃຫ້ ພີ ໄປເຮັດວຽກຢູ່ທີ່ຮ້ານຂາຍບໍລິການເພື່ອເປັນຄ່າຢາຂອງເອື້ອຍ.

ແຕ່ກໍ່ຍັງໂຊກດີເອື້ອຍຂອງ ນ. ພີ ໄດ້ຍິນກ່ຽວກັບແຜນການດັ່ງກ່າວ ແລະ ລາວກໍ່ໄດ້ບອກກັບພີວ່າບໍ່ຕ້ອງຮັບຜິດຊອບດອກຖ້າ ພີ ຕັດສິນໃຈເຊັ່ນນັ້ນແມ່ນເປັນການຄິດທີ່ຜິດພາດທີ່ສຸດທີ່ຈະໄປເຮັດວຽກທີ່ຮ້ານຂາຍບໍລິການ.

**ການສະແດງບົດບາດສົມມຸດເປັນຜູ້ຊັກຊວນ**

ຕໍ່ໄປນີ້ໃຫ້ຜູ້ເຂົ້າຮ່ວມອ່ານເລື່ອງຕ່າງໆຈາກເອກະສານແຫຼ່ງຂໍ້ມູນ 15 ຂ : ການຫຼິ້ນບົດບາດສົມມຸດໂດຍການຄິດໃນທາງລົບ ໃຫ້ພວກເຂົາແບ່ງເປັນຄູ່ ແລະ ໃຫ້ຄົນໜຶ່ງຫຼິ້ນໃນເລື່ອງຂອງ ທ. ເອມ ແລະ ຄົນອື່ນໆກໍ່ໃຫ້ຫຼິ້ນເປັນອ້າຍຂອງ ເອມ ໃຫ້ອ້າຍຂອງລາວຊັກຊວນໃນທາງບວກເພື່ອເບິ່ງໄປທີ່ບັນຫາ ແລະ ໃຫ້ອ້າຍຂອງລາວພະຍາຍາມຊັກຊວນໃຫ້ຫຼິ້ນບົດບາດສົມມຸດກັບ ທ.ເອມ ເມື່ອພວກເຂົາຫຼິ້ນບົດບາດສົມມຸດພໍປະມານ 10 ນາທີ ແລ້ວໃຫ້ຜູ້ເຂົ້າຮ່ວມທັງໝົດຍົກຕົວຢ່າງໃນທາງບວກໃນການເບິ່ງບັນຫາ.

## ການບັນທຶກປະຈຳວັນ

ໃຫ້ກຸ່ມນັ້ນຂຽນ ຫຼື ແຕ້ມໃສ່ເພື່ອບັນທຶກປະຈຳວັນຂອງຕົນເອງປະມານ 10 ນາທີແລ້ວໃຫ້ພວກເຂົາລອງຄິດເຖິງເວລາທີ່ພວກເຂົາມີຄວາມຮູ້ສຶກບໍ່ດີ ແລະ ໃຫ້ພວກເຂົາຂຽນກ່ຽວກັບພວກເຂົາໄດ້ຈັດການໃຫ້ມັນດີຂຶ້ນ. ໃຫ້ພວກເຂົາຄິດກ່ຽວກັບການກະທຳສະເພາະທີ່ພວກເຂົາໄດ້ນຳໃຊ້ ຫຼື ຂຽນເຖິງບຸກຄົນໃດໜຶ່ງທີ່ໄດ້ຊ່ວຍພວກເຂົາໃນການແກ້ໄຂບັນຫາດັ່ງກ່າວ, ໃຫ້ພວກເຂົາພິຈາລະນາວ່າພວກເຂົາອາດໄດ້ນຳໃຊ້ແນວຄວາມຄິດໃນທາງລົບທີ່ຜ່ານມາ ຫຼື ບໍ່ ແລະ ພວກເຂົາໄດ້ໃຊ້ຮູບແບບໃນທາງບວກໃນອະນາຄົດ.

**ສະຫຼຸບບົດຮຽນ**

- ການຄິດໃນທາງລົບມັນສາມາດເຮັດໃຫ້ບັນຫານັ້ນຮ້າຍແຮງຂຶ້ນ
- ສິ່ງເຫຼົ່ານີ້ແມ່ນຮູບແບບຂອງການຄິດໃນທາງລົບ:
- ຄິດເກີນຄວາມຈິງ
- ການຕຳນິຕົນເອງ
- ການມອງເຫັນແຕ່ສິ່ງທີ່ບໍ່ດີ
- ການຄາດຄະເນອະນາຄົດທີ່ບໍ່ດີ
- ການຄິດໃນທາງບວກສາມາດຊ່ວຍທ່ານຈັດການກັບບັນຫາຕ່າງໆໄດ້.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈນຳທຸກໆຄົນທີ່ເຂົ້າຮ່ວມ ພົບກັນໃໝ່ໃນອາທິດໜ້າ, ທຸກໆຄົນແມ່ນໄດ້ດາວຄົນລະ1ດວງ.

ໃຫ້ສະມາຊິກໃນກຸ່ມເຮັດໃນສິ່ງຕໍ່ໄປນີ້:

- ຈົ່ງມີສະຕິກ່ຽວກັບຮູບແບບຂອງການຄິດໃນທາງລົບຂອງອາທິດນີ້, ພະຍາຍາມໃຊ້ຮູບແບບຂອງການຄິດໃນທາງບວກ ແລະ ກັບມາອາທິດໜ້າມາບອກໃຫ້ພວກເຮົາຮູ້ວ່າມັນມີປະໂຫຍດແນວໃດ.

ຄູຝຶກບອກໃຫ້ບັນດາຜູ້ເຂົ້າຮ່ວມຂຽນຄຳຖາມໃສ່ເຈ້ຍແຜ່ນໃຫຍ່ ແລ້ວຖືເມືອເຮືອນເພື່ອທົບທວນຄວາມຊົງຈຳ.



# 15 ເອກະສານອ້າງອີງ 15 ກ: ກໍລະນີສຶກສາ ການຄິດໃນທາງລົບ

ຈົ່ງຈັບຄູ່ເລື່ອງດັ່ງກ່າວໃສ່ກັບຮູບແບບແນວຄວາມຄິດໃນແງ່ລົບ. ການຂີດເສັ້ນຂອງເຈົ້ານັ້ນອາດຈະຂີດຂຶ້ນເທິງ ຫຼື ລົງລຸ່ມກໍ່ໄດ້

| | |
|---|---|
| 1.ມີບາງຄົນໄດ້ລັງກຽດ ທ. ເອມ ຢູ່ທີ່ໂຮງຮຽນ. ປະຈຸບັນລາວຄິດວ່າທຸກຄົນນັ້ນຊັງລາວໝົດ. | **ກ. ການຄາດຄະເນຕໍ່ກັບອານາຄົດທີ່ບໍ່ດີ.** |
| 2.ນ. ອາ ພຽງແຕ່ເຂົ້າໃຈວ່າເມື່ອນາຍຄູຕຳນິລາວ, ລາວບໍ່ຮູ້ເລີຍວ່ານາຍຄູນັ້ນຍົກຍ້ອງລາວ. | **ຂ. ການເບິ່ງໃນແງ່ມູມທີ່ບໍ່ດີຢ່າງດຽວ.** |
| 3.ທ.ແອວ ເຊື່ອວ່າລາວມີແຕ່ພົບອະນາຄົດທີ່ບໍ່ດີ. | **ຄ. ການຄິດເກີນຂອບເຂດ, ການຄິດໃນສິ່ງທີ່ຮ້າຍແຮງຂຶ້ນກ່ວາເກົ່າ.** |
| 4.ນ. ບີ ຄິດວ່າເຫດຜົນທີ່ພໍ່ຂອງລາວເຈັບປ່ວຍແລ້ວກໍ່ຍ້ອນວ່າລາວເປັນລູກທີ່ບໍ່ດີ. | **ງ. ການຕຳນິຕົນເອງໃນສິ່ງທີ່ຕົນເອງບໍ່ສາມາດຄວບຄຸມໄດ້.** |

# ເອກະສານ 15 ຂ: ການສະແດງບົດບາດສົມມຸດ ກ່ຽວກັບການຄິດໃນທາງລົບ 15

ທ. ເອັມ ໄດ້ຍ້າຍເຂົ້າໄປຢູ່ໃນເມືອງໃຫຍ່ແຫ່ງໜຶ່ງ ແລະ ລາວກໍ່ໄດ້ເຮັດວຽກຢູ່ໃນໂຮງງານໃຫຍ່ແຫ່ງໜຶ່ງ ລາວເຮັດວຽກມື້ໜຶ່ງ 18 ຊົ່ວໂມງ ແລະ ລາວກໍ່ນອນຢູ່ໃນໂຮງງານນັ້ນເລີຍ. ລາວໄດ້ເຮັດວຽກຢູ່ທີ່ນັ້ນເປັນເວລາ 3 ເດືອນ ແລະ ລາວກໍ່ບໍ່ໄດ້ຮັບເງິນເດືອນຈັກກີບ. ນາຍຈ້າງບອກກັບລາວວ່າ,ລາວຕິດໜີ້ຄ່າທີ່ພັກອາໄສ ແລະ ລາວຈະບໍ່ໄດ້ຮັບເງິນເດືອນໜຶ່ງປີ ທ. ເອັມ ໄດ້ໂທຫາອ້າຍຂອງລາວຢູ່ທີ່ບ້ານ ແລະ ໄດ້ເວົ້າຫຼາຍຢ່າງດັ່ງຕໍ່ໄປນີ້:

"ມັນແມ່ນຄວາມຜິດຂອງຂ້ອຍເພາະວ່າຂ້ອຍເປັນກຳມະກອນທີ່ບໍ່ມີປະສົບການ, ນີ້ເປັນພຽງວຽກທີ່ຂ້ອຍຫາກໍ່ໄດ້ເຮັດແຕ່ກໍ່ບໍ່ມີໃຜເລີຍທີ່ເຄີຍຈ້າງຂ້ອຍມາກ່ອນແບບນີ້..."

ເພື່ອນຂອງຂ້ອຍຄົນໜຶ່ງທີ່ຢູ່ໂຮງຮຽນລາວກໍ່ເຮັດວຽກຢູ່ໂຮງງານບ່ອນອື່ນ, ລາວໄດ້ລົມກັບຂ້ອຍວ່າເຂົາກໍ່ຈ້າງລາວເຮັດວຽກ ແລະ ລາວກໍ່ໄດ້ຮັບເງິນເດືອນປະຈຳ. ລາວບອກວ່າໂຮງງານທີ່ລາວເຮັດວຽກຢູ່ນັ້ນແມ່ນໄດ້ຂຶ້ນທະບຽນກັບພາກລັດທີ່ຖືກຕ້ອງຕາມກົດໝາຍ, ແຕ່ວ່າເຂົາບໍ່ເຄີຍຈ້າງໃຜຄືກັນກັບຂ້ອຍນີ້ວ່າ...

"ຂ້ອຍບໍ່ສາມາດທີ່ຈະໄປຊອກຫາວຽກໃໝ່ໄດ້, ຄົນຢູ່ທີ່ນີ້ເຂົາຮູ້ດີວ່າຂ້ອຍເຮັດວຽກຢູ່ທີ່ນີ້ ແລະ ເຂົາກໍ່ຈະດູຖູກໝິ່ນປະມາດຂ້ອຍ..."



# 16 ບົດທີ 16: ທັກສະໃນການບໍລິຫານອາລົມຈິດ

**ຈຸດປະສົງ:** **ຜູ້ເຂົ້າຮ່ວມຈະໄດ້ເຂົ້າໃຈເຖິງການກະທຳແບບໃດທີ່ນຳເອົາໄປຕອບໂຕ້ກັບອາລົມທີ່ຫຍຸ້ງຍາກສັບສົນສ້າງທັກສະໃນການບໍລິຫານອາລົມເພື່ອຕອບໂຕ້ກັບອາລົມທີ່ສັບສົນ, ຫຍຸ້ງຍາກ. ດັ່ງນັ້ນອາລົມດັ່ງກ່າວກໍ່ຈະບໍ່ກະທົບໃສ່ຕົວເຂົາ ແລະ ຄົນອື່ນ.**

## ເວລາ:

75 ນາທີ

**ອຸປະກອນ**

- ✤ ເຈ້ຍແຜ່ນໃຫຍ່,
- ✤ ບິກແດງ ແລະ ບິກຟ້າ.
- ✤ ເອກະສານ 16 ກ: ຕົວຢ່າງຂອງອາລົມຕ່າງໆສໍາລັບກິດຈະກໍາ

## ການແນະນໍາ:

**ຍິນດີຕ້ອນຮັບ:**

ດ້ວຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນເຈ້ຍລົງທະບຽນເພື່ອເຊັນ.

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກນຳພາໃນການອົບອຸ່ນຮ່າງກາຍ, ຈາກຄູ່ມືທີ່ມີໃນເບື້ອງຕົ້ນນັ້ນ.

**ທວນຄືນບົດຮຽນ:**

ການຕັ້ງຄຳຖາມ

ມີໃຜໄດ້ສັງເກດແນ່ບໍ່ວ່າ ຮູບແບບການຄິດໃນທາງລົບທີ່ເກີດຂຶ້ນກັບຊີວິດປະຈຳວັນຂອງຕົນເອງນັ້ນເປັນແນວໃດ?

ມີໃຜແດ່ໄດ້ລອງໃຊ້ກ່ຽວກັບການຄິດໃນແງ່ບວກ? ມັນໄດ້ຊ່ວຍຫຍັງແດ່?

## ການສົນທະນາ

ໃນບົດຮຽນທີ່ຜ່ານມາພວກເຮົາໄດ້ຮຽນຮູ້ກ່ຽວກັບທຸກໆຄົນກໍ່ໄດ້ປະເຊີນກັບບັນຫາຫຼາຍຢ່າງໃນຊີວິດ ແລະ ບັນຫາດັ່ງກ່າວນີ້ກໍ່ສາມາດເຮັດໃຫ້ຄົນເຮົາມີຄວາມຮູ້ສຶກກັບອາລົມທີ່ສັບສົນຫຍຸ້ງຍາກ. ມັນເປັນສິ່ງທີ່ຍາກຫຼາຍທີ່ເຮົາຈະປ່ຽນແປງຊີວິດຂອງເຮົາເອງເພື່ອລີກລ້ຽງກັບບັນຫາທີ່ຫຍຸ້ງຍາກເຫຼົ່ານັ້ນ, ແຕ່ວ່າມັນກໍ່ມີຄວາມເປັນໄປໄດ້ທີ່ຄົນເຮົາຈະປ່ຽນແປງເຊັ່ນວ່າ: ພວກເຮົາຈະມີການໂຕ້ຕອບກັບບັນຫາດັ່ງກ່າວນັ້ນແນວໃດ.

ເຕືອນໃຫ້ຜູ້ເຂົ້າຮ່ວມທັງໝົດກ່ຽວກັບອາລົມໃນແງ່ລົບທີ່ບັນດາເດັກນ້ອຍນັ້ນມີຄວາມຮູ້ສຶກ. ຈົ່ງຂຽນລາຍການອາລົມດັ່ງກ່າວໃສ່ຂ້າງໜຶ່ງຂອງເຈ້ຍແຜ່ນໃຫຍ່. ອາລົມເລົ່ານັ້ນປະກອບມີຄວາມຮູ້ສຶກ:

- ຄວາມຮູ້ສຶກໂສກເສົ້າ
- ຄວາມຮູ້ສຶກບ້າປ່ວງ

- ຄວາມຮູ້ສຶກໂກດຮ້າຍ
- ຄວາມຮູ້ສຶກຖືກທັກຫຼັງ ແລະ ຖືກຫລອກຫລວງ
- ຄວາມຮູ້ສຶກໃນໄຫ ແລະ ໂກດເຄືອງ
- ຄວາມຮູ້ສຶກກົດດັນ
- ຄວາມຮູ້ສຶກຂາດຄວາມຫວັງ
- ຄວາມຮູ້ສຶກຂາດຄວາມຮັກ

ບັດນີ້ ການປະພຶດໂຕໃນແງ່ລົບຂອງໄວໜຸ່ມນັ້ນ, ບາງຄັ້ງກໍ່ເກີດຂຶ້ນເມື່ອພວກເຂົາມີຄວາມຮູ້ສຶກດັ່ງຕໍ່ໄປນີ້ ຖ້າຕົວຢ່າງດັ່ງກ່າວຫາກຍັງບໍ່ທັນໄດ້ສະເໜີຂຶ້ນມາກໍ່ຈົ່ງຂຽນຕື່ມໃສ່ຕາມລາຍການດັ່ງລຸ່ມນີ້:

- ຕີກັນ
- ການຕັດສິນໃຈໃນທາງທີ່ບໍ່ດີ
- ຕີຄົນໃດຄົນໜຶ່ງ
- ຂັງຕົນເອງໃນຫ້ອງໝົດມື້
- ຮ້ອງໄຫ້ ແລະ ບໍ່ຕ້ອງການຢາກໂອ້ລົມກັບໃຜ
- ເອົາມີດມາປາດຕົນເອງ
- ອົດອາຫານ
- ຕໍານິຄົນອື່ນ
- ຄິດຂ້າຕົວຕາຍ
- ນາບຊູ່
- ໜີອອກຈາກເຮືອນເພື່ອຫຼີກລ້ຽງກັບບັນຫາ
- ດື່ມເຫຼົ້າຫຼາຍ
- ເສບຢາ
- ມັກເຮັດໃນສິ່ງທີ່ມີຄວາມສ່ຽງ.

ຈົ່ງຂຽນສິ່ງເຫຼົ່ານີ້ໃສ່ເຈ້ຍແຜ່ນໃຫຍ່ເພື່ອໃຫ້ທຸກໆຄົນສາມາດເບິ່ງເຫັນໄດ້.

ເອົາບົກສອງກ້ານໃຫ້ຜູ້ເຂົ້າຮ່ວມທັງໝົດ ແລະ ໃຫ້ພວກເຂົາຂີດກ້ອງໃສ່ການກະທໍາດັ່ງກ່າວ ຕອນທີ່ເວລາພວກເຂົາໂອ້ລົມ ແລະ ສະແດງຄວາມຄິດເຫັນວ່າສິ່ງໃດທີ່ທໍາຮ້າຍແກ່ບຸກຄົນແມ່ນໃຫ້ຂີດກ້ອງເປັນສີແດງ, ການກະທໍາອັນໃດທີ່ເປັນການທໍາລາຍສິ່ງອື່ນໆແມ່ນໃຫ້ຂີດກ້ອງດ້ວຍບົກສີຟ້າ, ມີບາງຂໍ້ຄວາມ ຫຼື ການກະທໍາຈໍານວນໜຶ່ງອາດສາມາດຂີດກ້ອງໄດ້ທັງສອງສີເລີຍ.

ຍົກຕົວຢ່າງ: ເມື່ອສໍາເລັດແລ້ວມັນຈະມີລັກສະນະບົ່ງບອກອອກມາແນວໃດ. ໃຫ້ໄປເບິ່ງທີ່ເອກະສານແຫຼ່ງຂໍ້ມູນ 16 ກ, ຍົກຕົວຢ່າງ ອາລົມຕ່າງໆຢູ່ໃນຄູ່ມືສະບັບນີ້.



ໃຫ້ກຸ່ມໄປເບິ່ງຄືນຢູ່ໃນລາຍການທີ່ມີແລ້ວນັ້ນ. "ໃຫ້ຖາມພວກເຂົາວ່າມີການກະທໍາອັນໃດອັນໜຶ່ງບໍທີ່ຢູ່ໃນລາຍການນັ້ນອາດເຮັດໃຫ້ເດັກນ້ອຍຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ." ໃຫ້ຜູ້ເຂົ້າຮ່ວມທັງໝົດຫາຄໍາຕອບດ້ວຍຕົນເອງແຕ່ຖ້າພວກເຂົາຫາກມີເວລາຫຍຸ້ງຍາກໃນການຍົກຕົວຢ່າງ, ໃຫ້ຖາມພວກເຂົາວ່າ: ຖ້າມີການແລ່ນໜີອອກຈາກເຮືອນ, ມີການດື່ມເຫຼົ້າຫຼາຍ, ມີການຕັດສິນໃຈເຮັດໃນສິ່ງທີ່ບໍ່ດີ, ຫຼື ເສບຢາເສບຕິດຕ່າງໆ ສິ່ງເຫຼົ່ານີ້ເຮັດໃຫ້ຄົນເຮົາຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ.

## ບາດກ້າວຕ່າງໆສໍາລັບການຮັບມືກ່ຽວກັບອາລົມທີ່ຫຍຸ້ງຍາກ

ໃນບົດຮຽນດັ່ງຕໍ່ໄປນີ້ ແມ່ນຈະໄດ້ເວົ້າເຖິງບົດຮຽນກ່ຽວກັບການກະທໍາອັນໃດອັນໜຶ່ງທີ່ເຮັດໃຫ້ອາລົມຂອງຄົນເຮົາຜັນແປໄປໃນທາງລົບ. ການກະທໍາເຫຼົ່ານີ້ມີຫຼາຍທາງເລືອກທີ່ບໍ່ເປັນອັນຕະລາຍໃຫ້ແກ່ຄົນ ແລະ ບໍ່ທໍາຮ້າຍຄົນອື່ນໆອີກ. ບັນດາອາລົມທີ່ຜັນແປໃນແງ່ລົບນັ້ນແມ່ນສິ່ງທີ່ຫຍຸ້ງຍາກສັບສົນຫຼາຍ, ດັ່ງນັ້ນມັນຈຶ່ງມີຄວາມຫຍຸ້ງຍາກໃນການພັນລະນາບາງສິ່ງບາງຢ່າງ ທີ່ເຮັດໃຫ້ຄົນໃດຄົນໜຶ່ງມີຄວາມຮູ້ສຶກດີຕະຫຼອດເວລາ. ນີ້ແມ່ນລາຍການອັນໜຶ່ງທີ່ນໍາມາສະເໜີເພື່ອຊ່ວຍໃຫ້ພວກເຮົາເຮັດໃນສິ່ງຕໍ່ໄປນີ້.

### ບາດກ້າວທີ່ 1 ການຈໍາແນກຄວາມຮູ້ສຶກວ່າເປັນແນວໃດ.

ເມື່ອຄົນເຮົາມີຄວາມຮູ້ສຶກໂສກເສົ້າ ຫຼື ມີຄວາມຮູ້ສຶກບ້າຄັ້ງ, ພວກເຂົາອາດມີຄວາມຮູ້ສຶກທີ່ຜິດ ຫຼື ມີຄວາມຮູ້ສຶກອັນບໍ່ດີແມ່ນຄວາມຮູ້ສຶກແບບນີ້, ດັ່ງນັ້ນພວກເຂົາຕ້ອງແກ້ງທໍາໃຈວ່າພວກເຂົາບໍ່ມີຄວາມຮູ້ສຶກອັນໃດເລີຍ. ການກະທໍາແບບນີ້ມັນບໍ່ໄດ້ຊ່ວຍໃຫ້ຄົນເຮົາຮັບມືກັບອາລົມນັ້ນເລີຍ.

"ອ່ານດັງໆ: ຈົ່ງນຶກເຖິງເພື່ອນຄົນໜຶ່ງທີ່ຢູ່ໃນໂຮງຮຽນຂອງເຈົ້າຜູ້ທີ່ລາວເຮັດວຽກບ້ານບໍ່ແລ້ວ ແລະ ລາວມາຂໍກ່າຍວຽກບ້ານນໍາເຈົ້າ, ເຈົ້າບໍ່ໄດ້ຕ້ອງການໃຫ້ລາວກ່າຍແຕ່ວ່າເຈົ້າພັດເອົາວຽກບ້ານໃຫ້ລາວ. ມັນໄດ້ເຮັດໃຫ້ເຈົ້າມີຄວາມຮູ້ສຶກຢາກຮ້າຍແຕ່ວ່າເຈົ້າບໍ່ຕ້ອງການຍອມຮັບກັບມັນ, ມື້ຕໍ່ມາເຈົ້າໄດ້ໂອລົມກັບເພື່ອນຄົນອື່ນໆຂອງເຈົ້າ ແລະ ເຈົ້າກໍ່ໄດ້ບອກກັບພວກເຂົາວ່າເພື່ອນຂອງເຈົ້າໝົດທຸກຄົນນັ້ນລ້ວນແລ້ວແຕ່ເປັນຄົນຂີ້ໂກງ, ບັດນີ້ເພື່ອນຂອງເຈົ້າຮູ້ຈັກ ແລະ ຄິດໃນໄຫກັບເຈົ້າ ແລະ ເຈົ້າກໍ່ມີບັນຫາເລື່ອງສາຍສໍາພັນກັບເຂົາ, ເຈົ້າກໍ່ໄດ້ເຮັດບັນຫານີ້ໃຫ້ໃຫຍ່ຂຶ້ນໂດຍການເອົາຫຼາຍໆຄົນມາກ່ຽວນໍາ. ຖ້າເຈົ້າພຽງແຕ່ໄຈ້ແຍກຄວາມຮູ້ສຶກໂກດຮ້າຍໃນເບື້ອງຕົ້ນ, ເຈົ້າກໍ່ຈະບໍ່ໄດ້ພົບກັບບັນຫາໃຫຍ່ແບບນີ້ດອກ"

ໃຫ້ຖາມຄົນໃດຄົນໜຶ່ງຖ້າຫາກວ່າພວກເຂົາຫາກນຶກເຫັນເຫດການເຊັ່ນດຽວກັນນີ້ ກໍ່ໃຫ້ພະຍາຍາມປະຕິເສດຄວາມຮູ້ສຶກທີ່ຈະເປັນຕົ້ນເຫດກໍ່ໃຫ້ເກີດບັນຫາອັນຍິ່ງໃຫຍ່ໃນຄັ້ງຕໍ່ໄປໄດ້

ການໄຈ້ແຍກຄວາມຮູ້ສຶກຂອງເຈົ້າແມ່ນເປັນບາດກ້າວທໍາອິດຕໍ່ກັບການຮັບມືກັບອາລົມທີ່ຫຍຸ້ງຍາກ.

### ບາດກ້າວທີ 2 . ຈົ່ງເຂົ້າໃຈວ່າເປັນຫຍັງເຈົ້າຈຶ່ງມີຄວາມຮູ້ສຶກແບບນີ້.

ບາງຄັ້ງຄົນເຮົາກໍ່ມີຄວາມຮູ້ສຶກໃນອາລົມອີກແບບໜຶ່ງ ແລະ ພວກເຂົາກໍ່ບໍ່ຮູ້ວ່າເປັນຫຍັງພວກເຂົາຈຶ່ງມີຄວາມຮູ້ສຶກແບບນີ້.

ຍົກຕົວຢ່າງ:ນ. ເອັດ ມີຄວາມຮູ້ສຶກກົດດັນທີ່ລາວຄິດຈະອອກໂຮງຮຽນເພື່ອໄປເຮັດວຽກຢູ່ນາ. ນີ້ກໍ່ເພາະວ່າລາວເປັນຄົນທຸກຍາກ ແລະ ກໍ່ມີໝູ່ຫຼາຍຄົນທີ່ເວົ້າຢອກໃສ່ລາວຫຼາຍຢ່າງ.

ໃຫ້ຜູ້ເຂົ້າຮ່ວມທຸກຄົນຄິດຫາສາຍເຫດອັນໃດທີ່ເຮັດໃຫ້ຄົນເຮົາມີຄວາມຮູ້ສຶກຫຍຸ້ງຍາກສັບສົນ. ໃຫ້ຖາມພວກເຂົາວ່າຍ້ອນສາຍເຫດອັນໃດ ແລະ ໃຫ້ພວກເຂົາຈື່ໄວ້ເມື່ອຕອນທີ່ພວກເຂົາເຄີຍປະເຊີນກັບອາລົມ

ແບບນີ້ໃນຄັ້ງທຳອິດ ຫຼື ໃນຄັ້ງທຳອິດທີ່ພວກເຂົາສະແດງອາລົມອອກມາໃນເລື່ອງທີ່ຫຍຸ້ງຍາກ (ຍົກຕົວຢ່າງ ການຕີກັນ) ຫຼື ອາລົມທີ່ສະແດງອອກໃນການປ່ຽນແປງຊີວິດຂອງພວກເຂົາ. ການເຂົ້າເຖິງຄວາມຮູ້ສຶກຂອງຕົນເອງແມ່ນບາດກ້າວທີ 2 ທີ່ຈະຮັບມືກັບອາລົມທີ່ຫຍຸ້ງຍາກນັ້ນໄດ້.

**ບາດກ້າວທີ 3. ຈົ່ງເລືອກສາຍເຫດຂອງການກະທຳອັນໃດອັນໜຶ່ງທີ່ເຮັດໃຫ້ເຈົ້າມີຄວາມຮູ້ສຶກດີ ແລະ ບໍ່ເປັນການທຳຮ້າຍແກ່ຄົນອື່ນ.**

ໃຫ້ຖາມບັນດາຜູ້ເຂົ້າຮ່ວມວ່າ ຖ້າພວກເຂົາສາມາດຄິດໄດ້ຫຼາຍວິທີທາງ ແລະບັນດາເດັກນ້ອຍກໍ່ສາມາດເຮັດໃນສິ່ງນີ້ໄດ້. ຈົ່ງຂຽນຂໍ້ສະເໜີດັ່ງກ່າວນີ້ ແລະ ຖ້າພວກເຂົາມີຄວາມຄິດເຫັນອັນອື່ນນອກເໜືອຈາກລາຍການດັ່ງລຸ່ມນີ້ກໍ່ໃຫ້ຕື່ມເພີ່ມໃສ່ເລີຍ:

- ຄິດກ່ຽວກັບເລື່ອງນັ້ນສະເພາະເລີຍ
- ໃຊ້ເວລາເພື່ອໄປຍ່າງເລາະຫຼິ້ນທາງອື່ນ
- ໄປຫາຫຼິ້ນກິລາ
- ໄປອອກກຳລັງກາຍຊະນິດໃດໜຶ່ງກໍ່ໄດ້
- ຂຽນບັນທຶກລາຍວັນ
- ຊອກຫາເວລາລົມກັບໝູ່ເພື່ອນ
- ໃຊ້ເວລາຢຸດຄິດຕໍ່ກັບບັນຫານັ້ນໃນຊົ່ວຂະນະໜຶ່ງ
- ໄປຊ່ວຍແກ້ໄຂບັນຫາໃຫ້ກັບຄົນອື່ນ
- ພະຍາຍາມແກ້ໄຂສະຖານນະການໃຫ້ເຢັນລົງ.

## ສົນທະນາບົດຮຽນ

ໃຫ້ຖາມບັນດາຜູ້ເຂົ້າຮ່ວມວ່າ: "ເຈົ້າມີຄວາມຮູ້ສຶກແນວໃດກ່ຽວກັບບາດກ້າວຕ່າງໆເພື່ອນຳເອົາໄປຮັບມືກັບບັນດາອາລົມທີ່ຫຍຸ້ງຍາກເລົ່ານັ້ນ?".

- ເຈົ້າຄິດວ່າມັນສອດຄ່ອງກັບການນຳໃຊ້ຕໍ່ສິ່ງເຫຼົ່ານັ້ນບໍ? ເປັນຫຍັງຈຶ່ງສອດຄ່ອງ? ເປັນຫຍັງຈຶ່ງບໍ່ສອດຄ່ອງ?.
- ເຈົ້າສາມາດນຳເອົາສິ່ງດັ່ງກ່າວນີ້ໄປນຳໃຊ້ໃນຊີວິດຂອງເຈົ້າໄດ້ບໍ? ຍ້ອນຫຍັງຈຶ່ງໃຊ້ໄດ້ ແລະ ຍ້ອນຫຍັງຈຶ່ງໃຊ້ບໍ່ໄດ້?
- ເມື່ອໃດທີ່ຄວນນຳເອົາສິ່ງດັ່ງກ່າວນີ້ໄປນຳໃຊ້ໃຫ້ເກີດປະໂຫຍດໄດ້ ?.

## ອາລົມທີ່ຫຍຸ້ງຍາກ ແລະ ຄວາມສ່ຽງຕໍ່ກັບການຄ້າມະນຸດ

ອາລົມທີ່ຫຍຸ້ງຍາກສັບສົນຕ່າງໆສາມາດເປັນສາຍເຫດເຮັດໃຫ້ຄົນເຮົາບໍ່ສາມາດຕັດສິນໃຈເຊິ່ງເຮັດໃຫ້ຄົນເຮົາມີພຶດຕິກຳໃນຄວາມສ່ຽງໄພອັນຕະລາຍ.

**ຈົ່ງອ່ານດັ່ງງ:**



"ນ. ເອັກ ມີຄວາມຮູ້ສຶກກົດດັນຫຼາຍເພາະວ່າລາວໄດ້ຖືກໝູ່ເພື່ອນຢອກລໍ້ວ່າລາວນັ້ນມາຈາກຄອບຄົວທີ່ທຸກຍາກ ແຕ່ວ່າການອອກໂຮງຮຽນຂອງລາວແມ່ນໝາຍຄວາມວ່າລາວບໍ່ສາມາດທີ່ຈະມີວຽກທີ່ດີໃນອະນາຄົດໄດ້ ມັນໝາຍຄວາມວ່າລາວກໍ່ຈະມີຄວາມທຸກຍາກໃນຊີວິດຂອງລາວ ແລະ ມັນກໍ່ມີຄວາມສ່ຽງຫຼາຍທີ່ຄົນເຮົາຈະຊອກຫາວຽກໃຫ້ຄົນທີ່ບໍ່ມີຄວາມຮູ້ຄືລາວເຮັດໄດ້ ເຂົາມີແຕ່ທີ່ຈະຕົວະຍົວະຫລອກລວງຂາຍລາວເທົ່ານັ້ນ.

ບັນດາຕົວຢ່າງເຫຼົ່ານີ້ເປັນອາລົມທີ່ຫຍຸ້ງຍາກສັບສົນຫຼາຍ ແລະ ເປັນສາຍເຫດທີ່ເຮັດໃຫ້ຄົນເຮົາຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ:

ທ. ເອັດ ລາວມີຄວາມຮູ້ສຶກໝົດຫວັງເພາະວ່າລາວໄດ້ເຮັດວຽກກໍ່ສ້າງເຊິ່ງເປັນວຽກທີ່ລາວບໍ່ມັກເລີຍ. ຫົວໜ້າຂອງລາວໄດ້ເອົາຢາເສບຕິດມາໃຫ້ລາວກິນ ແລະ ບອກກັບລາວວ່າເຈົ້າຈະມີຄວາມຮູ້ສຶກດີຖ້າຫາກວ່າເຈົ້າກິນຢາດັ່ງກ່າວນີ້.

ການກິນຢາດັ່ງກ່າວເປັນສາຍເຫດທີ່ໃຫ້ ທ.ເອັດ ຕົກຢູ່ໃນຄວາມສ່ຽງຕໍ່ກັບການຄ້າມະນຸດແນວໃດທີ່ຈະເກີດຂື້ນໃນອານາຄົດ?

ນ. ແອວ ລາວມີຄວາມຮູ້ສຶກຢາກຮ້າຍແຮງເພາະວ່າ ພໍ່ແມ່ຂອງລາວບໍ່ໃຫ້ລາວໄປຫາແຟນໃໝ່. ແຟນໃໝ່ຂອງລາວໄດ້ສະເໜີວຽກໃໝ່ໃຫ້ກັບ ນ.ແອວ ຢູ່ທີ່ຕ່າງເມືອງ ດັ່ງນັ້ນລາວຈຶ່ງປະຕິບັດຕາມຄຳສະເໜີທີ່ແຟນໃໝ່ຂອງລາວຫາໃຫ້ດັ່ງກ່າວ. ໃນການເຄື່ອນຍ້າຍໄປຫາວຽກໃໝ່ຂອງ ນ.ແອວ ນັ້ນຈະພາໃຫ້ລາວຕົກຢູ່ໃນຄວາມສ່ຽງຂອງການຖືກຄ້າມະນຸດແນວໃດ?.

ຈົ່ງຈຳໄວ້ວ່າບາງຄັ້ງຄົນເຮົາກໍ່ມີຄວາມຮູ້ສຶກທີ່ຫຍຸ້ງຍາກສັບສົນ. ພວກເຮົາບໍ່ຄວນຕັດສິນວ່າ ເອັດ , ເອັກ ແລະ ແອວ ສຳລັບຄວາມຮູ້ສຶກທີ່ໂກດຮ້າຍ, ໝົດຫວັງ ຫຼື ຄວາມກົດດັນ, ສິ່ງສຳຄັນແມ່ນການຮັບມືກັບອາລົມທີ່ຫຍຸ້ງຍາກດັ່ງກ່າວ ແລະ ຕ້ອງຄິດໃນທາງບວກສະເໜີທີ່ບໍ່ເປັນການທຳຮ້າຍແກ່ຄົນອື່ນ".

## ການສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມຄິດຫາເລື່ອງໃດເລື່ອງໜຶ່ງ ແລະ ສະແດງອອກມາເປັນບົດບາດສົມມຸດ. ພວກເຂົາອາດຈະສະແດງເລື່ອງນີ້ 2 ເທື່ອກໍ່ໄດ້. ຄັ້ງທຳອິດແມ່ນໃຫ້ສະແດງເປັນເລື່ອງທີ່ເລີ່ມຈາກການຄິດທີ່ບໍ່ດີ ໃຫ້ສະແດງເປັນເລື່ອງທີ່ຮ້າຍແຮງກວ່າເກົ່າ, ຄັ້ງທີ 2 ສະແດງໃຫ້ທຸກສິ່ງທຸກຢ່າງດີຂື້ນ. ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບເລື່ອງໃດເລື່ອງໜຶ່ງອີກໃນການສະແດງໃນບົດບາດອາລົມໃນທາງລົບ ທີ່ເຮັດໃຫ້ເດັກນ້ອຍຄົນໜຶ່ງຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ. ຈົ່ງໂອ້ລົມເລື່ອງດັ່ງກ່າວໃນກຸ່ມປະມານ 2-3 ນາທີ ແລະ ກໍ່ໃຫ້ກຸ່ມໂອ້ລົມກັນເອງກ່ຽວກັບຕົວລະຄອນທີ່ເລືອກໄວ້ ແລະ ແລ້ວກໍ່ໃຫ້ຜູ້ທີ່ອາສາສະໝັກນັ້ນມາສະແດງບົດບາດສົມມຸດເລີຍ. ***(ການສະແດງບົດບາດສົມມຸດໃນເລື່ອງນີ້ມີຫຼາຍຕົວລະຄອນ)*** .

ຕໍ່ໄປນີ້ໃຫ້ພວກເຂົາຄິດກ່ຽວກັບສິ່ງທີ່ເດັກໜຸ່ມຄົນໜຶ່ງ ທີ່ເຮັດໃຫ້ສະຖານະການຂອງລາວນັ້ນຍິ່ງຮ້າຍແຮງຂື້ນຕື່ມ. ເຈົ້າອາດອີງໃສ່ລາຍການທີ່ເຈົ້າໄດ້ຂຽນໄວ້ໃນເບື້ອງຕົ້ນນັ້ນ.

ພາຍຫຼັງ 1 ນາທີ ຜ່ານໄປ ຫຼື ອາດຫຼາຍກວ່ານັ້ນໃຫ້ເອົາອາສາສະໝັກຄົນໜຶ່ງເຂົ້າມາຫຼິ້ນໃນເລື່ອງດັ່ງກ່າວ ແລະ ເປັນຕົວກະຕຸ້ນໃຫ້ສະຖານະການເລື່ອງນັ້ນຮ້າຍແຮງຂື້ນຕື່ມ. ຫຼັງຈາກ 1 ນາທີຜ່ານໄປກໍ່ໃຫ້ນຳເອົາຕົວລະຄອນໜຶ່ງອີກເຂົ້າມາເພີ່ມ ແລະ ເຮັດໃຫ້ສະຖານນະການແຮງຂື້ຮ້າຍຂື້ນຕື່ມ.

ຢຸດການຫຼິ້ນບົດບາດສົມມຸດ ແລະ ຖາມບັນດາຜູ້ເຂົ້າຮ່ວມວ່າ ການກະທຳຕ່າງໆໃນບົດບາດສົມມຸດນັ້ນລ້ວນແຕ່ເປັນການກະທຳໃນແງ່ລົບບໍ?.

ບັດນີ້ໃຫ້ຫຼຳຄືນໃນການສະແດງບົດບາດສົມມຸດ ແຕ່ວ່າຄັ້ງນີ້ໃຫ້ບັນດາອາສາສະມັກນຳໃຊ້ 3 ບາດກ້າວທີ່ໄດ້ຮຽນມາເພື່ອຮັບມືກັບບັນດາອາລົມທີ່ຫຍຸ້ງຍາກສັບສົນ ແລະ ກໍ່ເພື່ອໃຫ້ສະຖານະການນັ້ນດີຂຶ້ນ.

### ສະຫຼຸບບົດຮຽນ

- ທຸກໆຄົນລ້ວນແຕ່ມີຄວາມຮູ້ສຶກຕໍ່ກັບອາລົມທີ່ຫຍຸ້ງຍາກສັບສົນໃນຊີວິດຫຼາຍໆຢ່າງ.
- ມີຫຼາຍວິທີທາງທີ່ນຳໃຊ້ຫຼາຍບາດກ້າວໃນທາງບວກເພື່ອຮັບມືກັບອາລົມທີ່ຫຍຸ້ງຍາກສັບສົນດັ່ງກ່າວ.
- ບັນດາຂັ້ນຕອນເຫຼົ່ານັ້ນປະກອບມີ:
  - ບາດກ້າວທີ 1 . ການຈຳແນກຄວາມຮູ້ສຶກເປັນແນວໃດ.
  - ບາດກ້າວທີ 2 . ຈົ່ງເຂົ້າໃຈວ່າເປັນຫຍັງເຈົ້າຈຶ່ງມີຄວາມຮູ້ສຶກແບບນີ້.
  - ບາດກ້າວທີ 3. ຈົ່ງເລືອກຫາສາຍເຫດຂອງການກະທຳອັນໃດອັນໜຶ່ງທີ່ເຮັດໃຫ້ເຈົ້າມີຄວາມຮູ້ສຶກດີ ແລະ ບໍ່ເປັນການທຳຮ້າຍໃຫ້ແກ່ຄົນອື່ນ.
- ຈົ່ງນຳໃຊ້ການກະທຳໃນແບບທາງບວກເພື່ອຮັບມືກັບອາລົມທີ່ຫຍຸ້ງຍາກສັບສົນ ແລະ ອາດເຮັດໃຫ້ທ່ານສາມາດເອົາຕົວລອດຈາກການຄ້າມະນຸດໄດ້.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຊຽນ ຫຼື ຖາມ ຫຼື ສອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ເຂົ້າຮ່ວມໃນມື້ນີ້ ພົບກັນໃໝ່ໃນອາທິດໜ້າ, ທຸກໆຄົນທີ່ໄດ້ມາຮ່ວມໃນມື້ນີ້ແມ່ນໄດ້ຮັບດາວຄົນລະ 1 ດວງຕື່ມອີກ. ໃຫ້ສະມາຊິກໃນກຸ່ມເຮັດໃນສິ່ງຕໍ່ໄປນີ້: ຈົ່ງພະຍາຍາມນຳໃຊ້ 3 ບາດກ້າວດັ່ງກ່າວນັ້ນເພື່ອນຳໃຊ້ເຂົ້າໃນການຮັບມືກັບອາລົມທີ່ຫຍຸ້ງຍາກສັບສົນໃນຊີວິດປະຈຳວັນຂອງທ່ານ ກ່ອນທີ່ຈະເລີ່ມບົດຮຽນໃໝ່.



# ເອກະສານ 16 ກ: ຕົວຢ່າງຂອງຮູບແບບຂອງອາລົມຈິດຕ່າງ 16

**ຄວາມຮູ້ສຶກທີ່ບໍ່ດີສາຍເຫດມາຈາກ**

- ເບິ່ງການກໍ່ຄວາມຮຸນແຮງກັບເພື່ອນ
- ພໍ່ແມ່ຕີກັນ
- ຄອບຄົວທີ່ບໍ່ມີເງິນພຽງພໍ
- ມີວຽກຫຼາຍ
- ຖືກບັງຄັບໃຫ້ເຮັດວຽກ
- ຖືກດ່າ + ຖືກຕຳນິ
- ບໍ່ສາມາດເຮັດໃນສິ່ງທີ່ພວກເຂົາຕ້ອງການ
- ການຢອກລໍ້ຄົນອື່ນ
- ຄວາມຮຸນແຮງໃນຄອບຄົວ
- ອຶກຫັກ

**ສ້າງການຕັດສິນໃຈທີ່ບໍ່ດີຮ້ອງໃຫ້**

- ຢູ່ໃນຫ້ອງຄົນດຽວ
- ງຽບໆຄົນດຽວ
- ຕີປະຕູ
- ໜີຈາກເຮືອນ
- ຂຽນບັນທຶກລາຍວັນ
- ຍິງຄົນອື່ນ
- ຕີກັນ
- ກິນຢາເສບຕິດ ຫຼື ດື່ມເຫຼົ້າ
- ບໍ່ເຮັດວຽກບ້ານ
- ນອນຫຼາຍ
- ຂ້າຕົວຕາຍ
- ທຳຮ້າຍຕົນເອງ
- ກິນຫຼາຍໂພດ / ບໍ່ເຮັດຫຍັງ.

# 17 ບົດທີ 17: ການຈຳແນກເພື່ອນແທ້ ແລະ ຜູ້ຄ້າມະນຸດ

**ຈຸດປະສົງ:** ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມໄດ້ເຂົ້າໃຈເຖິງຜູ້ຄ້າມະນຸດທີ່ທຳທ່ານາສ້າງຄວາມສະໜິດສະໜົມເປັນເພື່ອນຂອງເຮົາເພື່ອຫລອກລວງເຮົາ ແລະ ຄົນອື່ນ. ຜູ້ເຂົ້າຮ່ວມທັງໝົດກໍ່ຈະໄດ້ຮຽນຮູ້ວ່າການທົດສອບມິດຕະພາບນັ້ນແມ່ນເຮັດແນວໃດ ແລະ ກໍ່ຍັງຈະໄດ້ຮຽນຮູ້ໃນການວາງຕົວທີ່ປອດໄພເໜືອກວ່າມິດຕະພາບຕື່ມອີກ.

**ເວລາ:**

75 ນາທີ

**ອຸປະກອນ**

- ບິກສີ ແລະເຈ້ຍແຜ່ນໃຫຍ່,
- ສຳເນົາເອກະສານ 17 ກ, ເພື່ອນແທ້ ຫຼື ຜູ້ຄ້າມະນຸດ? (ພວກເຂົາຈະນຳໃຊ້ເອກະສານນີ້ໃນກຸ່ມ 10 -14 ຄົນ)

## ການແນະນຳ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ຄູຝຶກຕ້ອງນຳໃຊ້ເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ມີໃຜແນ່ຈື່ວ່າ ບາດກ້າວທີ່ໃຊ້ໃນການຮັບມືກັບອາລົມທີ່ຫຍຸ້ງຍາກສັບສົນວ່າ 3 ບາດກ້າວນັ້ນມີຫັຍງແດ່?

ມີໃຜແດ່ໄດ້ນຳໃຊ້ 3 ບາດກ້າວດັ່ງກ່າວເຂົ້າໃນຊີວິດປະຈຳວັນ?

ມັນໄດ້ຊ່ວຍພວກທ່ານຫຍັງແດ່

## ການລະບຸຕົວຜູ້ຄ້າມະນຸດ

ບົດຮຽນຂອງມື້ນີ້ແມ່ນພວກເຮົາຈະໄດ້ເວົ້າກ່ຽວກັບມິດຕະພາບ ແລະ ວິທີການຈຳແນກເພື່ອນແທ້ແມ່ນເຮັດວິທີໃດ.

ຜູ້ເຄື່ອນຍ້າຍແຮງງານມັກຈະປະເຊີນກັບບັນຫາເຊັ່ນນີ້ເລື້ອຍໆ.

ບັນດາຜູ້ເຄື່ອນຍ້າຍແຮງງານມັກຈະເດີນທາງໄປຕາມສະຖານທີ່ຕ່າງໆທີ່ພວກເຂົາບໍ່ຮູ້. ພວກເຂົາຕ້ອງການທີ່ຈະມີເພື່ອນ ດັ່ງນັ້ນພວກເຂົາສາມາດມີໝູ່ໃນການໂອ້ລົມນຳ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາທີ່ດຳລົງຊີວິດຢູ່ຮ່ວມກັນ.

ແຕ່ວ່າບັນດາຜູ້ຄ້າມະນຸດຕ່າງໆພັດພະຍາຍາມທີ່ຈະຫລອກຫລວງແຮງງານເຄື່ອນຍ້າຍ ໂດຍການມາຕີສະນິດ ແກ້ງທຳທ່າເປັນເພື່ອນຂອງພວກເຂົາ, ສະນັ້ນ: ຜູ້ເຄື່ອນຍ້າຍແຮງງານສາມາດບອກໄດ້ບໍ່ວ່າ ລະຫ່ວາງ



ເພື່ອນແທ້ ແລະ ຜູ້ຄ້າມະນຸດແມ່ນແຕກຕ່າງກັນແນວໃດ?

ສິ່ງສຳຄັນທີ່ຄວນຈະເວົ້າເຊິ່ງວ່າບໍ່ມີຄຳຕອບໃດທີ່ສົມບູນຕໍ່ກັບການຕອບຄຳຖາມດັ່ງກ່າວນີ້ ແລະ ມັນກໍ່ບໍ່ແມ່ນສິ່ງທີ່ງ່າຍໆ ຫຼື ວິທີທາງທີ່ສາມາດເວົ້າໄດ້ວ່າ ນີ້ແມ່ນເພື່ອນແທ້, ນີ້ແມ່ນຜູ້ຄ້າມະນຸດ:

ສິ່ງເຫຼົ່ານີ້ໝາຍຄວາມວ່າ "ເມື່ອໃດກໍ່ຕາມຖ້າຫາກເພື່ອນຄົນໜຶ່ງມາຖາມເຈົ້າ ແລະ ຊວນເຈົ້າໃຫ້ໄປຢູ່ບ່ອນໃຫ່ມ ຫຼື ພາເຈົ້າໄປຫາວຽກໃໝ່. ເຈົ້າກໍ່ຄວນຄິດສະເໝີວ່າ: ສິ່ງດັ່ງກ່າວນັ້ນຈະເປັນອັນຕະລາຍກັບຂ້ອຍບໍ່?". ເຖິງແມ່ນວ່າບໍ່ມີຄຳຕອບໃດທີ່ສົມບູນກໍ່ຕາມ ເພື່ອທີ່ຈະໃຫ້ພວກເຮົາຮູ້ວ່າອັນນີ້ແມ່ນຜູ້ຄ້າມະນຸດ, ສິ່ງເຫຼົ່ານີ້ກໍ່ແມ່ນເປັນສັນຍານເຕືອນອັນໜຶ່ງທີ່ຈະຊ່ວຍໃຫ້ແຮງງານເຄື່ອນຍ້າຍສົງໃສໄວ້ກ່ອນ ແລະ ເປັນວິທີທາງທີ່ພວກເຮົາຈະໄດ້ທົດສອບວ່າເປັນເພື່ອນເຮົາແທ້ ຫຼື ບໍ່?.

## ການແຕ້ມຮູບພາບ

ຢາຍເຈ້ຍ, ສໍ ແລະ ບິກ ໃຫ້ຜູ້ເຂົ້າຮ່ວມ.

ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບເພື່ອນແທ້ຂອງເຮົາຄົນໜຶ່ງ, ພວກເຂົາອາດຈະເປັນເພື່ອນທີ່ດີທີ່ສຸດຂອງເຮົາ, ເພື່ອນທີ່ເຕີບໂຕດ້ວຍກັນໃນຊຸມຊົນ ຫຼື ເພື່ອນຄົນໜຶ່ງທີ່ມີໃນປະຈຸບັນ,ເຂົາອາດຈະບໍ່ແມ່ນເພື່ອນທີ່ຫາກໍ່ພົບແຕ່ວ່າເຂົາເປັນຄົນທີ່ເຮົາຮູ້ຈັກກັນມາເປັນເວລາດົນນານແລ້ວ ແລະ ເຮົາກໍ່ເຊື່ອໝັ້ນກັນໄດ້ຕະຫຼອດ.

ໃຫ້ຜູ້ເຂົ້າຮ່ວມແຕ້ມຮູບພາບເພື່ອນຂອງເຂົາ ແລະ ສະແດງເປັນຄຳເວົ້າອອກມາ ຫຼື ພາບປະກອບວ່າເປັນຫັຍງພວກເຂົາຈຶ່ງມັກເພື່ອນຄົນນີ້ ແລະ ລັກສະນະອັນໃດທີ່ເຮັດໃຫ້ພວກເຂົາເປັນເພື່ອນທີ່ດີຕໍ່ກັນ.

ໃຫ້ຜູ້ເຂົ້າຮ່ວມຄິດວ່າ ພວກເຂົາໄດ້ຮູ້ຈັກກັນມາດົນນານປານໃດແລ້ວ. ພວກເຮົາຈະມາເບິ່ງຮູບພາບດັ່ງກ່າວອີກເທື່ອໜຶ່ງໃນຕອນທ້າຍຂອງບົດຮຽນ.

## ບັນດາຜູ້ຄ້າມະນຸດຕ່າງໆແກ້ງທຳທ່າມາເປັນເພື່ອນກັບເຮົາ

ມັນເປັນສິ່ງທີ່ຍາກຫຼາຍທີ່ຈະຈຳແນກໄດ້ລະຫວ່າງຄວາມແຕກຕ່າງເພື່ອນແທ້ ແລະ ຜູ້ຄ້າມະນຸດ ອີງຕາມຫຼາຍໆເລື່ອງຂອງບັນດາແຮງງານເຄື່ອນຍ້າຍນີ້ແມ່ນສັນຍານເຕືອນບາງຢ່າງທີ່ວ່າເພື່ອນອາດແມ່ນຜູ້ຄ້າມະນຸດ.

**ສັນຍານເຕືອນຕ່າງໆ:**

**ເວລາ:** ບັນດາຜູ້ຄ້າມະນຸດນີ້ອາດມາຕີສະໜິດກັບເຮົາເພື່ອຢາກເປັນເພື່ອນກັບເຮົາໃນເວລາຈໍ້ໆ.

ຈົ່ງບອກໃຫ້ຜູ້ເຂົ້າຮ່ວມຟັງວ່າ ບັນດາຜູ້ຄ້າມະນຸດທັງຫຼາຍອາດມາຕີສະໜິດເພື່ອທີ່ຈະມາເປັນເພື່ອນຂອງເຮົາໃນເວລາອັນສັ້ນໆ ຕົວຢ່າງ: ພວກເຂົາອາດຈະພົບຄົນໜຶ່ງ, ຜູ້ເຊິ່ງເປັນຜູ້ຄ້າມະນຸດແທ້ໆ. ສຳລັບເວລາທຳອິດທີ່ພວກເຂົາພົບກັນຢູ່ທີ່ລົດໄຟໃນຕອນທ້າຍຂອງການຂີ່ລົດໄຟນີ້,ບຸກຄົນນັ້ນອາດເຮັດໃຫ້ພວກເຂົາເຊື່ອໂດຍຕິດຕາມພວກເຂົາໄປຫາວຽກ.

ບັນດາຜູ້ຄ້າມະນຸດຕ່າງໆອາດຕ້ອງການໃຫ້ແຮງງານເຄື່ອນຍ້າຍຕັດສິນໃຈຢ່າງໄວວາເພາະວ່າ, ຜູ້ຄ້າມະນຸດບໍ່ຕ້ອງການຢາກໃຫ້ແຮງງານເຄື່ອນຍ້າຍໃຊ້ເວລາໃນການຄິດ, ກ່ຽວກັບວ່າພວກເຂົາໄດ້ລົມຫັຍງກັນ ຫຼື ໂອ້ລົມສິ່ງອື່ນໆກ່ຽວກັບມັນ.

ບອກໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບເພື່ອນແທ້ຂອງເຈົ້າ: ເຈົ້າຈະໄປນຳເພື່ອນແທ້ຂອງເຈົ້າບໍ່ບ່ອນທີ່ເຈົ້າບໍ່ເຄີຍໄປມາກ່ອນພໍປະມານຈັກ 2-3 ຊົ່ວໂມງ. ທັງໆພວກເຈົ້າຫາກໍ່ຮູ້ຈັກກັນກັນໃນຄັ້ງທຳອິດ?

**ຄຳຖາມຕ່າງໆ:** ຜູ້ຄ້າມະນຸດຖາມຫຼາຍຄຳຖາມກ່ຽວກັບເລື່ອງສ່ວນຕົວຂອງເຮົາ

ຈົ່ງບອກກັບຜູ້ເຂົ້າຮ່ວມວ່າ ບັນດາຜູ້ຄ້າມະນຸດອາດຕ້ອງການຢາກຈະຮູ້ວ່າວິທີການຫຼອກລວງຜູ້ໃດຜູ້ໜຶ່ງນັ້ນໄດ້ງ່າຍເທົ່າໃດ ແລະ ຖ້າຫາກພວກເຂົາມີຄອບຄົວຜູ້ທີ່ກຳລັງຊອກຫາພວກເຂົາຢູ່ໃນເວລາທີ່ພວກເຂົາຈາກໄປ. ໃນການຮຽນຮູ້ກ່ຽວກັບເລື່ອງນີ້ພວກເຂົາອາດຈະໃຊ້ຫຼາຍຄຳຖາມກ່ຽວກັບພວກເຂົາພັກຢູ່ໃສ, ມີໃຜແດ່ຮູ້ບ່ອນທີ່ເຂົາອາໃສຢູ່.

ຖ້າເປັນເຊັ່ນນີ້ບັນດາຜູ້ຄ້າມະນຸດກໍ່ຕ້ອງການຮຽນຮູ້ຜູ້ທີ່ສູນຫາຍເຊັ່ນດຽວກັນ ດັ່ງນັ້ນພວກເຂົາຈຶ່ງສາມາດແກ້ງທຳທ່າທີວ່າເປັນພີ່ນ້ອງຂອງຜູ້ນັ້ນ. ພວກເຂົາອາດຈະເວົ້າວ່າພວກເຂົາກໍ່ທຸກຍາກເຊັ່ນກັນ ແລະ ກໍ່ຍັງມາຈາກແຂວງດຽວກັນເພື່ອທີ່ຈະເຮັດໃຫ້ແຮງງານເຄື່ອນຍ້າຍເຊື່ອວ່າ ພວກຄ້າມະນຸດນັ້ນມາຈາກບ້ານດຽວກັນ.

ຈົ່ງບອກໃຫ້ຜູ້ເຂົ້າຮ່ວມຄິດເພື່ອນແທ້ຂອງພວກເຂົາ: ພວກເຂົາໄດ້ຖາມເຈົ້າບໍ່ກ່ຽວກັບຂໍ້ມູນສ່ວນຕົວຫຼາຍຢ່າງເມື່ອເວລາຫາກໍ່ພົບກັນຄັ້ງທຳອິດ?

**ການຕົວະ:** ບັນດາຜູ້ຄ້າມະນຸດມັກຕົວະ.

ຈົ່ງບອກກັບຜູ້ເຂົ້າຮ່ວມວ່າ ຜູ້ຄ້າມະນຸດນັ້ນພວກເຂົາຈະບໍ່ເວົ້າຄວາມຈິງ ຫຼື ຄົນໃດຄົນໜຶ່ງຈະບໍ່ໄດ້ເຮັດວຽກງ່າຍດອກ. ດັ່ງນັ້ນພວກເຂົາຈຶ່ງຕົວະ, ມັນເປັນສິ່ງທີ່ສຳຄັນຫຼາຍທີ່ພວກເຮົາຈະຕ້ອງໄດ້ຟັງຢ່າງລະມັດລະວັງວ່າຜູ້ຄ້າມະນຸດນັ້ນເວົ້າຫຍັງແດ່ ແລະ ບາງເທື່ອເຮົາອາດຈະໄດ້ຍິນສິ່ງທີ່ກົງກັນຂ້າມຈາກຄຳເວົ້າຂອງພວກເຂົາ.

ບອກໃຫ້ຜູ້ເຂົ້າຮ່ວມຄິດວ່າ: ຄຳເວົ້າທີ່ພວກເຂົາເວົ້າອອກມານັ້ນມັນກົງກັນຂ້າມກັນກັບຄຳເວົ້າທີ່ເຂົາເວົ້າອອກມາໃນເມື່ອກ່ອນບໍ? ເບິ່ງຄ້າຍຄືວ່າມັນເປັນຄວາມຈິງບໍ? ມັນຄ້າຍຄືກັນກັບວຽກງານທຳມະດາບໍ? ເພື່ອນຂອງຂ້ອຍມັກຈະໃຫ້ຂ້ອຍເຮັດໃນສິ່ງທີ່ເປັນອັນຕະລາຍບໍ?

**ການໃຫ້ຄຳໝັ້ນສັນຍາ:** ຜູ້ຄ້າມະນຸດມັກຈະໃຫ້ຄຳໝັ້ນສັນຍາທີ່ດີເກີນຄວາມເປັນຈິງຫຼາຍໂພດ.

ບັນດາຜູ້ຄ້າມະນຸດມັກທີ່ຈະຫລອກໃຫ້ຄົນເຮົາຫຼົງເຊື່ອໄປກັບເຂົາກ່ອນ ດັ່ງນັ້ນພວກເຂົາຈຶ່ງສະເໜີສິ່ງໃດສິ່ງໜຶ່ງອອກມາໃຫ້ເກີນຄວາມຈິງຫຼາຍໂພດ. ເຊັ່ນວ່າ: ເຮັດວຽກແມ່ນຈະໄດ້ເງິນເດືອນຫຼາຍ. ໃນກໍລະນີໜຶ່ງບໍ່ດົນມານີ້ມີເດັກຍິງ 2 ຄົນໄດ້ຖືກຂາຍໂດຍຜູ້ຍິງຄົນໜຶ່ງຜູ້ເຊິ່ງຈ່າຍເງິນເປັນຄ່າເດີນທາງໃຫ້ລາວເພື່ອຂ້າມຊາຍແດນ.

ໃຫ້ຜູ້ເຂົ້າຮ່ວມຄິດຫາສາຍເຫດ ແລະ ເປັນຫັຍງຄົນຜູ້ນີ້ຈຶ່ງມາສະເໜີສິ່ງນີ້ໃຫ້ກັບຂ້ອຍ? ເປັນຫຍັງວຽກ ງານດັ່ງກ່າວຈຶ່ງເປີດເຜີຍວ່າໄດ້ຮັບເງິນເດືອນສູງ (ໂດຍສະເພາະແມ່ນຂ້ອຍບໍ່ໄດ້ມີຄວາມຮູ້ຫຍັງເລີຍ) ? ເປັນຫຍັງຄົນແປກໜ້າຈຶ່ງຈ່າຍຄ່າເດີນທາງໃຫ້ຂ້ອຍຂ້າມຊາຍແດນ.

**ການເດີນທາງ:** ບັນດາຜູ້ຄ້າມະນຸດມີຄວາມຕ້ອງການໃຫ້ເຈົ້າເດີນທາງໄປພ້ອມກັບພວກເຂົາ.

ຈົ່ງບອກກັບຜູ້ເຂົ້າຮ່ວມວ່າ ບັນດາຜູ້ຄ້າມະນຸດອາດຕ້ອງການໃຫ້ເຈົ້າໄປສະຖານທີ່ໃດທີ່ໜຶ່ງກັບເຂົາ ໃຫ້ຜູ້ເຂົ້າຮ່ວມຈົ່ງຄິດວ່າ: ຖ້າວຽກງານນີ້ຫາກເປັນວຽກງານທີ່ແທ້ຈິງ ຂ້ອຍກໍ່ສາມາດເດີນທາງໄປທີ່ນັ້ນດ້ວຍຕົວຂອງຂ້ອຍເອງ. ຖ້າວຽກງານນີ້ເປັນວຽກງານທີ່ແທ້ຈິງ, ຂ້ອຍຄວນຈະໄປເລາະເບິ່ງກັບໝູ່ເສຍກ່ອນ.

## ການສົນທະນາ

ໃຫ້ກຸ່ມຄິດຄືນບົດຮຽນທີ່ກ່າວເຖິງ: ການສື່ສານທີ່ເປັນການອ້າງສິດ ແລະ ໃຫ້ຜູ້ເຂົ້າຮ່ວມອະທິບາຍວ່າມັນມີ



ຄວາມໝາຍແນວໃດ.

ການສື່ສານທີ່ເປັນການອ້າງສິດແມ່ນເມື່ອຄົນໃດໜຶ່ງເວົ້າອອກມາໂດຍການເຄົາລົບຖືຄົນອື່ນ ແລະ ໃນເວລາດຽວກັນກໍ່ບໍ່ໄດ້ລົບສິດຂອງຕົນເອງ.

ໃຫ້ຜູ້ເຂົ້າຮ່ວມຄິດເຖິງຄຳເວົ້າທີ່ພວກເຂົາສາມາດສ້າງຂຶ້ນມາດ້ວຍຕົນເອງ ຖ້າເມື່ອພວກເຂົາປະເຊີນກັບຄົນປະເພດດັ່ງກ່າວ.

ຕົວຢ່າງລວມມີ:

- "ຂ້ອຍຮູ້ສຶກບໍ່ສະບາຍໃນການຕອບຄຳຖາມສ່ວນຕົວເຫຼົ່ານີ້"
- "ບໍ່, ຂ້ອຍບໍ່ຮູ້ຈັກກັບເຈົ້າ. ຂ້ອຍບໍ່ສາມາດຕົກລົງຮັບວຽກຈາກຄົນແປກໜ້າ"
- "ເງິນເດືອນເທົ່າໃດ? ເມື່ອໃດຈະຈ່າຍເງິນເດືອນ? ແລະ ຈ່າຍວິທີໃດ?"

## ປົດສະໜາໃນການທົດສອບເພື່ອນ

ມີຫຼາຍວິທີທາງທີ່ຈະປົກປ້ອງຕົວເຮົາເອງໂດຍການທົດສອບ "ເພື່ອນໃໝ່". ເພື່ອທົດສອບກັບເພື່ອນແທ້ ການທົດສອບດັ່ງກ່າວຈະບໍ່ເປັນບັນຫາຫຍັງ ເພາະວ່າພວກເຂົາຈະຄິດວ່າເຂົາກໍ່ເປັນພາກສ່ວນໜຶ່ງຂອງເພື່ອນແທ້. ເຖິງຢ່າງໃດກໍ່ຕາມ, ຖ້າເພື່ອນເຮົາຫາກແມ່ນຜູ້ຄ້າມະນຸດ ແລະ ແລ້ວການທົດສອບນີ້ຈະຊ່ວຍໃຫ້ຄົນເຮົາຈະນຶກໄດ້ວ່າມີບາງສິ່ງບາງຢ່າງທີ່ຜິດປົກກະຕິກັບເພື່ອນຄົນນີ້.

**ການທ່ອງເວລາ:**

ຖ້າເພື່ອນຄົນໜຶ່ງຫາກສະເໜີວຽກງານທີ່ໄດ້ຮັບເງິນເດືອນສູງໆໃຫ້ແກ່ເຮົາ. ພວກເຂົາກໍ່ຈພະຍາຍາມທ່ອງເວລາ, ພວກເຂົາກໍ່ສາມາດຖາມເອົາເບີໂທຈາກຄົນຜູ້ນັ້ນ ແລະ ຮຽນຮູ້ວຽກງານດັ່ງກ່າວໃຫ້ຈະແຈ້ງຂຶ້ນຕື່ມ. ນີ້ກໍ່ຈະເປັນການໃຫ້ເວລາໃນການຮຽນຮູ້ກ່ຽວກັບວຽກທີ່ຢູ່ສະຖານທີ່ບ່ອນໃໝ່, ບໍລິສັດ ແລະ ໃຊ້ເວລາໂທຫາພໍ່ແມ່ເພື່ອບອກພວກເຂົາວ່າເຮົາຈະໄປເຮັດວຽກຢູ່ທີ່ນັ້ນ. ຖ້າວ່າເພື່ອນຫາກບໍ່ສາມາດລໍໄດ້ ສິ່ງນີ້ລະເປັນສັນຍານເຕືອນວ່າເພື່ອນຂອງເຮົາອາດເປັນຜູ້ຄ້າມະນຸດ.

**ຕັ້ງຄຳຖາມໃຫ້ກັບຕົນເອງ**

ເປັນສິ່ງສຳຄັນທີ່ສຸດທີ່ຈະຕ້ອງຕັ້ງຄຳຖາມຕ່າງໆພວກເຮົາອາດຈະຖາມຄຳຖາມຫຼາຍຢ່າງກ່ຽວກັບນາຍຈ້າງ, ສັນຍາແຮງງານ ແລະ ເມືອງບ່ອນທີ່ເຮົາຈະໄປເຮັດວຽກນັ້ນ. ຖ້າເພື່ອນແທ້ອະທິບາຍໜ້າວຽກທີ່ແທ້ຈິ່ງຈະບໍ່ເປັນການຢ້ານທີ່ຈະບອກສິ່ງທີ່ພວກເຂົາຮູ້.

ໃຫ້ຕັ້ງຄຳຖາມຫຼາຍໆຢ່າງກ່ຽວກັບຊີວິດຂອງເພື່ອນ, ຕັ້ງຄຳຖາມຫຼາຍຢ່າງກ່ຽວກັບຊີວິດຂອງພວກເຂົາ. ເຊັ່ນວ່າ: ຊື່ໂຮງຮຽນຂອງພວກເຂົາ, ນາມສະກຸນຂອງພວກເຂົາ. ສິ່ງສຳຄັນແມ່ນໃຫ້ຈື່ຄຳຕອບຕ່າງໆທີ່ເຂົາຕອບເຮົາ. ເມື່ອພົບກັນໃນເທື່ອໜ້າກໍ່ໃຫ້ຖາມຄຳຖາມເຊັ່ນດຽວກັນອີກຄືເກົ່າ. ຖ້າເພື່ອນແທ້ເຂົາກໍ່ຈະຈື່ສິ່ງທີ່ພວກເຂົາໄດ້ເວົ້າລົງໄປໃນຄັ້ງກ່ອນ, ຖ້າຜູ້ຄ້າມະນຸດພວກເຂົາກໍ່ຈະບໍ່ຈື່ໃນສິ່ງທີ່ພວກເຂົາໄດ້ເວົ້າອອກມາໃນເບື້ອງຕົ້ນ.

ຖ້າວ່າເພື່ອນຂອງເຮົາຄົນນັ້ນຫາກເວົ້າກົງກັນຂ້າມກັບເລື່ອງທີ່ລາວໄດ້ເວົ້າເມື່ອກ່ອນ ຫຼື ພວກເຂົາຮ້ອງໃສ່ໃນເມື່ອພວກເຮົາຫາກຖາມຫຼາຍຄຳຖາມສິ່ງນີ້ລະເປັນສັນຍານບອກວ່າເພື່ອນຄົນນີ້ເປັນຜູ້ຄ້າມະນຸດ.

**ການເດີນທາງໄປຊອກຫາວຽກໂດຍການນຳໃຊ້ລົດປະຈຳທາງ.**

ມັນເປັນສິ່ງທີ່ດີທີ່ເດີນທາງໄປຊອກຫາວຽກໂດຍການຂຶ້ນລົດປະຈຳທາງ, ເພາະວ່າມັນມີຄວາມປອດໄພກ່ວາທີ່ຈະໄປຂຶ້ນລົດສ່ວນຕົວຂອງຄົນອື່ນ ຫຼື ລົດຂອງເພື່ອນຄົນອື່ນໆ. ຖ້າວ່າພວກເຮົາຫາກເດີນທາງໄປກັບລົດຂອງເພື່ອນຄົນໃດໜຶ່ງແລ້ວ, ຖ້າວ່າເຂົາພາເຮົາໄປສະຖານທີ່ໃດທີ່ໜຶ່ງມັນກໍ່ເປັນການຍາກທີ່ເຮົາຈະອອກຈາກລົດດັ່ງກ່າວ ແລະ ບໍ່ສາມາດກັບບ້ານໄດ້, ຖ້າວ່າເຮົາເລືອກເຮັດວຽກທີ່ບໍ່ດີ. ຖ້າພວກເຮົາເດີນທາງໄປກັບລົດປະຈຳທາງພວກເຮົາກໍ່ຈະຮູ້ກັບຜູ້ຄົນທີ່ຈະເດີນທາງໄປນຳກັນ, ຖ້າວ່າສະຖານທີ່ດັ່ງກ່າວເປັນບ່ອນປ່ຽວເບິ່ງຄືມີຄວາມອັນຕະລາຍ, ເມື່ອໄປເຖິງສະຖານທີ່ແຫ່ງນັ້ນກໍ່ບໍ່ຄວນລົງຈາກລົດບັດ.

**ໃຫ້ສຶກສາເພື່ອນຂອງເຮົາຢ່າງຖີ່ຖ້ວນກ່ອນທີ່ຈະໄປໃສມາໃສກັບພວກເຂົາ.**

ມັນຕ້ອງໄດ້ໃຊ້ເວລາໃນການຮຽນຮູ້ກ່ຽວກັບເພື່ອນແທ້ຂອງເຮົາ. ເມື່ອບັນດາຜູ້ເຄື່ອນຍ້າຍແຮງງານຫາກພົບຜູ້ໃດຜູ້ໜຶ່ງ ພວກເຂົາກໍ່ຕ້ອງໃຊ້ເວລາສຶກສາກ່ອນທີ່ຈະເຊື່ອຜູ້ນັ້ນ. ຜູ້ເຂົ້າຮ່ວມທັງໝົດຄວນລອງໃຊ້ວິທີການດັ່ງນີ້:

- ສຶກສາກ່ຽວກັບຄອບຄົວຂອງເພື່ອນຜູ້ນັ້ນ. ຜູ້ຄ້າມະນຸດອາດຈະບໍ່ເວົ້າເຖິງຄອບຄົວຂອງຕົນເອງ ຫຼື ພວກເຂົາອາດຈະເວົ້າກົງກັນຂ້າມກັບສິ່ງທີ່ພວກເຂົາໄດ້ບອກກັບເຮົາໃນຄັ້ງກ່ອນ.
- ໃຫ້ແນະນຳເພື່ອນເກົ່າຂອງເຮົາ (ຫຼື ຄອບຄົວທີ່ພວກເຂົາດຳລົງຊີວິດຢູ່ໃກ້ຄຽງກັບເຮົາ). ຖ້າເພື່ອນຄົນນີ້ບໍ່ຕ້ອງການໄປພົບກັບເພື່ອນຂອງເຮົາຄົນອື່ນໆ ສິ່ງນີ້ລະເປັນສັນຍານເຕືອນອັນໜຶ່ງ ເພາະວ່າຜູ້ຄ້າມະນຸດເຂົາຈະບໍ່ຕ້ອງການທີ່ຈະໄປພົບກັບຫຼາຍໆຄົນ.
- ຈົ່ງບອກກັບພວກເຂົາວ່າເຮົານັ້ນໄດ້ຕິດຕໍ່ກັບຄອບຄົວເປັນປະຈຳ ແລະ ບອກເຂົາກ່ຽວກັບການດຳລົງຊີວິດຂອງເຮົາ ແລະເຮົາກໍ່ຕ້ອງໄດ້ບອກລາຍລະອຽດເພື່ອນໃໝ່ຂອງເຮົາໃຫ້ແກ່ຄອບຄົວຟັງ. ຖ້າວ່າເປັນເພື່ອນໃໝ່ຂອງເຮົາແທ້ເຂົາກໍ່ຈະດີໃຈທີ່ເຮົາໄດ້ເອີ່ຍຊື່ຂອງເຂົາຕໍ່ຄອບຄົວຂອງເຮົາ, ຖ້າແມ່ນຜູ້ຄ້າມະນຸດພວກເຂົາອາດມີຄວາມຮູ້ສຶກຖຸກຄາມກັງວົນ ແລະ ບໍ່ສະບາຍໃຈທີ່ເຮົາກ່າວເຖິງເຂົາໃຫ້ກັບຄອບຄົວຂອງເຮົາ.
- ສົນທະນາເພື່ອນໃໝ່ຂອງເຮົາກັບຄົນອື່ນໆ ໃຫ້ຖາມຄົນອື່ນວ່າພວກເຂົາໄດ້ເຄີຍເຫັນເພື່ອນໃໝ່ຂອງເຮົາຄົນນີ້ບໍ ຫຼື ຮູ້ຫຍັງແດ່ກ່ຽວກັບພວກເຂົາ, ຖ້າບໍ່ມີໃຜຮູ້ກ່ຽວກັບເພື່ອນຄົນນີ້ ຫຼື ບໍ່ເຄີຍໄດ້ຍິນສິ່ງໃດສິ່ງໜຶ່ງທີ່ເປັນເລື່ອງດີໆຈາກເພື່ອນຄົນນີ້ ຫຼື ສິ່ງນີ້ລະເປັນສັນຍານອັນໜຶ່ງ,ເພື່ອນແທ້ອາດຮູ້ຈັກຄົນທີ່ຢູ່ໃນຊຸມຊົນດຽວກັນ ແຕ່ຖ້າແມ່ນຜູ້ຄ້າມະນຸດພວກເຂົາຈະບໍ່ຮູ້ລາຍລະອຽດປານໃດ.

**ການໄປພົບຄົນໃດຄົນໜຶ່ງໃນສະຖານທີ່ສາທາລະນະບ່ອນທີ່ມີຫຼາຍຄົນ.**

ຈົ່ງບອກກັບຜູ້ເຂົ້າຮ່ວມວ່າ ຖ້າພວກເຂົາຫາກພົບເພື່ອນຄົນໃດຄົນໜຶ່ງຢູ່ໃນທ່າມກາງລັກຊະນະແບບນີ້, ກໍ່ໃຫ້ໄປພົບບ່ອນທີ່ຄົນກຳລັງເຮັດວຽກຢູ່, ໃນສະຖານທີ່ສາທາລະນະ, ຖ້າມີສິ່ງໃດຫາກຜິດປົກກະຕິຄົນຢູ່ອ້ອມຂ້າງກໍ່ຈະສາມາດຊ່ວຍເຮົາໄດ້. ຖ້າວ່າເຮົາຫາກມີຄວາມຮູ້ສຶກຢ້ານຫຼືຖືກຄຸກຄາມກໍ່ໃຫ້ຮ້ອງຂໍຄວາມຊ່ວຍເຫຼືອດັງໆຈາກກຸ່ມຄົນໃນທີ່ນັ້ນ. ຖ້າເພື່ອນແທ້ເຂົາກໍ່ຈະດີໃຈທີ່ເຮົາໄດ້ພົບກັນຢູ່ທີ່ສະຖານທີ່ສາທາລະນະ, ແຕ່ວ່າຜູ້ຄ້າມະນຸດພວກເຂົາກໍ່ຈະບໍ່ຕ້ອງການພົບກັນກັບເຮົາຢູ່ໃນສະຖານທີ່ດັ່ງກ່າວ.

ໃນສະໄໝໃໝ່ນີ້ພວກເຂົາບໍ່ມັກຈະເຊື່ອໝູ່ຫຼາຍ. ຖ້າວ່າໝູ່ຂອງເຮົາຫາກນັດພົບເຮົາເພື່ອເດີນທາງໄປເຮັດວຽກ ສິ່ງສຳຄັນເຮົາຄວນສົງໃສ ແລະ ຕັ້ງຄຳຖາມກ່ອນ,
"ເລື່ອງດັ່ງກ່າວຈະເປັນອັນຕະລາຍໃຫ້ເຮົາຊໍ່າໃດ?"



**ບົດສະໜາເພື່ອທົດສອບເພື່ອນແທ້ຂອງເຮົາ.**

ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມກຸ່ມລະ 10 - 14 ຄົນ.

ໃຫ້ອາສາສະໝັກ 2 ຄົນ ຕາງໜ້າແຕ່ລະກຸ່ມ ເພື່ອມາເປັນຕົວລະຄອນໃນການສະແດງ.

ເອົາເລື່ອງໜຶ່ງໃຫ້ຕົວລະຄອນຜູ້ທີໜຶ່ງ, ແລະ ເອົາເລື່ອງທີ 2 ໃຫ້ຕົວລະຄອນໜຶ່ງອີກ (ຈາກເອກະສານຂໍ້ມູນ 17 ກ: (ເພື່ອນແທ້ ຫຼື ຜູ້ຄ້າມະນຸດ) ບໍ່ຄວນໃຫ້ສະມາຊິກກຸ່ມອື່ນຮູ້ກ່ຽວກັບເລື່ອງດັ່ງກ່າວ:

ບາດນີ້ເຮົາບອກໃຫ້ສະມາຊິກໃນກຸ່ມນັ່ງອ້ອມເປັນວົງມົນ. ໃຫ້ສະມາຊິກໃນກຸ່ມອ່ານເລື່ອງດ້ວຍຄວາມລະມັດລະວັງ ແລະ ໃຫ້ຕອບຄຳຖາມຖ້າວ່າພວກເຂົາຫາກເປັນຄົນທີ່ຢູ່ໃນເລື່ອງນັ້ນ.

ອະທິບາຍໃຫ້ສະມາຊິກໃນກຸ່ມວ່າໜຶ່ງໃນຈຳນວນພວກເຂົານັ້ນແມ່ນສະແດງເປັນຜູ້ຄ້າມະນຸດ, ສ່ວນຄົນອື່ນໆໃຫ້ສະແດງເປັນເພື່ອນແທ້, ພວກເຂົາຈະໄດ້ພົບກັນຢູ່ທີ່ສວນສາທາລະນະ ແລະ ພວກເຂົາຕ້ອງສັນນິຖານວ່າຜູ້ໃດທີ່ເປັນເພື່ອນແທ້ ແລະ ຜູ້ໃດທີ່ເປັນຜູ້ຄ້າມະນຸດ.

ສະມາຊິກແຕ່ລະກຸ່ມສາມາດຖາມຄຳຖາມກັບ 2 ຕົວລະຄອນຄົນລະໜຶ່ງຄຳຖາມ. ຕົວລະຄອນນັ້ນຕ້ອງຕອບຄຳຖາມອີງໃສ່ບົດລະຄອນ. ຢ່າງອ້ອມວົງມົນຈົນກະທັ້ງສາມະຊິກໃນກຸ່ມທຸກຄົນໄດ້ຖາມຄຳຖາມຂອງພວກເຂົາໝົດແລ້ວ, (ຖ້າພວກເຂົາຍັງບໍ່ເຂົ້າໃຈຜູ້ໃດເປັນຜູ້ຄ້າມະນຸດ, ຜູ້ໃດເປັນເພື່ອນແທ້, ເຈົ້າກໍ່ສາມາດໃຫ້ເຂົາຖາມຄຳຖາມຫຼາຍໆເທື່ອຈົນກະທັ່ງພວກເຂົາສາມາດຈຳແນກໄດ້).

ໃນຕອນທ້າຍຂອງບົດຮຽນ, ໃຫ້ສະມາຊິກໃນແຕ່ລະກຸ່ມລອງທວາຍເບິ່ງວ່າຜູ້ໃດເປັນຜູ້ຄ້າມະນຸດຫຼືຜູ້ໃດເປັນເພື່ອນແທ້.

## ການສົນທະນາ

ໃຫ້ຜູ້ເຂົ້າຮ່ວມມາລວມກັນອີກເທື່ອໜຶ່ງ, ໃຫ້ພວກເຂົາຄິດກັບຄຳຖາມ .

ເຈົ້າສາມາດບອກຄວາມແຕກຕ່າງລະຫ່ວາງເພື່ອນແທ້ ແລະ ຜູ້ຄ້າມະນຸດໄດ້ແນວໃດ?

ບັດນີ້ໃຫ້ຜູ້ເຂົ້າຮ່ວມເອົາຮູບເພື່ອນແທ້ອອກມາບ່ອນທີ່ພວກເຂົາໄດ້ແຕ້ມໄວ້ໃນເບື້ອງຕົ້ນຂອງບົດຮຽນ ແລະຖາມພວກເຂົາວ່າ:

- ເຈົ້າໄດ້ຮູ້ຈັກກັບຄົນທີ່ຢູ່ໃນພາບນີ້ດົນປານໃດແລ້ວ?
- ເຈົ້າຮູ້ບໍ່ວ່າເພື່ອນຂອງເຈົ້າອາໄສຢູ່ທີ່ໃດ? ຄອບຄົວຂອງເຂົາຢູ່ໃສ? ຕອນກາງເວັນພວກເຂົາເຮັດວຽກຫຍັງ?
- ເຈົ້າຮູ້ຈັກໄດ້ຮູ້ຈັກກັບຄົນ ຜູ້ເຊິ່ງຮູ້ຈັກກັບໝູ່ຂອງເຈົ້າ ເຊັ່ນວ່າ: ເພື່ອນທີ່ຢູ່ໃນໂຮງຮຽນ ຫຼື ຄົນທີ່ຢູ່ໃນຊຸມຊົນດຽວກັນ.
- ຕອນພົບກັນທຳອິດເພື່ອນໃໝ່ຂອງເຈົ້າໄດ້ຖາມເຈົ້າຫຼາຍຄຳຖາມບໍ?
- ໃນຄັ້ງທຳອິດເພື່ອນຂອງເຈົ້າໄດ້ເອົາເງິນໃຫ້ເຈົ້າຢືມບໍ?

ແລະ ແລ້ວ, ໃຫ້ຖາມກຸ່ມ ແລະ ຍົກຕົວຢ່າງ ລະຫ່ວາງເພື່ອນແທ້ ກັບ ຜູ້ຄ້າມະນຸດ ຜູ້ທີ່ມາຕີຊະນິດເປັນເພື່ອນຂອງເຮົາ.

**ຄຳເຕືອນ**

ອະທິບາຍໃຫ້ຜູ້ເຂົ້າຮ່ວມທັງໝົດຟັງວ່າ ມີຫຼາຍລັກສະນະທີ່ຜູ້ຄ້າມະນຸດໄດ້ນຳເອົາມາຫຼອກລວງຄົນ, ບາງ

ລັກຊະນະກໍ່ເປັນການທົດສອບເພື່ອນແທ້ທີ່ໄດ້ການສົນທະນາຈົບລົງໄປແລ້ວນັ້ນ. ແຕ່ສິ່ງສຳຄັນເມື່ອເຮົາໄດ້ໃຊ້ບົດທົດສອບນີ້ກັບຄົນໃດຄົນໜຶ່ງ ແລະ ຄົນເຫຼົ່ານັ້ນກໍ່ໄດ້ຜ່ານບົດທົດສອບດັ່ງກ່າວແຕ່ເຂົາກໍ່ຍັງເປັນຜູ້ຄ້າມະນຸດຢູ່.

ຍົກຕົວຢ່າງ: ມີຄົນກຸ່ມໜຶ່ງໄດ້ຖືກຂາຍໂດຍສະມາຊິກຄອບຄົວພວກເຂົາເອງ ແລະ ເພື່ອນບ້ານທີ່ພວກເຂົາຮູ້ຈັກກັນດີເປັນເວລາຫຼາຍປີ. ຜູ້ຄ້າມະນຸດບາງຄົນອາດແກ້ງທຳມາເປັນເພື່ອນຂອງເຮົາແມ້ແຕ່ແຟນເຮົາເອງບໍ່ວ່າຍິງ ຫຼື ຊາຍທີ່ຮູ້ຈັກກັນມາດົນແລ້ວ ກ່ອນທີ່ພວກເຂົາຈະໂອ້ລົມກ່ຽວກັບວຽກງານ. ກ່ອນທີ່ເຈົ້າຈະຍອມຮັບຄຳສະເໜີອັນໃດອັນໜຶ່ງ ຫຼື ຈະເດີນທາງໄປສະຖານທີ່ແຫ່ງໃດແຫ່ງໜຶ່ງເຈົ້າຈົ່ງຄິດໃຫ້ຖີ່ຖ້ວນວ່າ: "ເລື່ອງນີ້ມັນຈະເປັນອັນຕະລາຍກັບເຮົາບໍ?" .

## ຂຽນບັນທຶກປະຈຳວັນ

- ບອກໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ແຕ້ມໃສ່ປຶ້ມບັນທຶກປະຈຳວັນຂອງພວກເຂົາປະມານ 10 ນາທີ ຫົວຂໍ້ໃດກໍ່ໄດ້ຕາມພວກເຂົາຢາກຈະຂຽນ.

### ສະຫຼຸບບົດຮຽນ

- ບໍ່ມີສິ່ງໃດທີ່ຈະບອກໄດ້ວ່າເພື່ອນແທ້ ແລະ ຜູ້ຄ້າມະນຸດແຕກຕ່າງກັນໂດຍສົມບູນ. ເຮົາຄວນພິຈາລະນາສະເໝີວ່າ ການທີ່ຈະຍອມຮັບຄຳສະເໜີຂອງບຸກຄົນໃດບຸກຄົນໜຶ່ງເພື່ອທີ່ຈະພາເຮົາໄປຫາຊອກຫາວຽກເຮັດອາດພາໃຫ້ເຮົາຕົກຢູ່ໃນໄພອັນຕະລາຍ.
- ຈົ່ງຈຳໄວ້ວ່າບັນດາຜູ້ຄ້າມະນຸດອາດແມ່ນເພື່ອນຂອງເຮົາ,ຄົນໃນຄອບຄົວເຮົາ ຫຼື ເພື່ອນບ້ານຂອງເຮົາ.
- ມີສັນຍານເຕືອນໄພຫຼາຍໆຢ່າງທີ່ເຮັດໃຫ້ເຮົາສົງໃສກັບເພື່ອນຄົນໜຶ່ງ:
  - ຜູ້ຄ້າມະນຸດສາມາດມາເປັນເພື່ອນກັບເຮົາໄດ້ໄວ.
  - ຜູ້ຄ້າມະນຸດມັກຈະຖາມຫຼາຍຄຳຖາມກ່ຽວກັບຕົວເຮົາ
  - ຜູ້ຄ້າມະນຸດມີແຕ່ຫລອກຫລວງທັງນັ້ນ.
  - ບັນດາຜູ້ຄ້າມະນຸດມັກຈະຮັບປາກໃຫ້ຄຳໝັ້ນສັນຍາເກີນຄວາມເປັນຈິງ.
  - ຜູ້ຄ້າມະນຸດພວກເຂົາອາດຕ້ອງການໃຫ້ເຮົາເດີນທາງໄປກັບເຂົາ.
- ເຈົ້າສາມາດທົດສອບເພື່ອນແທ້ຂອງເຈົ້າໄດ້ດ້ວຍວິທີການດັ່ງຕໍ່ໄປນີ້:
  - ຕ້ອງທ່ວງເວລາໄວ້ກ່ອນ.
  - ຖາມເພື່ອນຂອງເຈົ້າຫຼາຍໆຄຳຖາມ.
  - ຈົ່ງເດີນທາງໄປຫາວຽກເຮັດງານທຳໂດຍລົດເມປະຈຳທາງ.
  - ສຶກສາເພື່ອນຂອງເຈົ້າໃຫ້ດີສາກ່ອນ ກ່ອນທີ່ຈະໄປໃສມາໃສກັບພວກເຂົາ.
  - ຈົ່ງພົບກັນໃນບ່ອນທີ່ມີຄົນຫຼາຍໆ.
- ພະຍາຍາມເຮັດໃຫ້ເຮົາຢູ່ໃນຄວາມປອດໄພໄວ້ກ່ອນທີ່ຈະສ້າງເພື່ອນ. ຖ້າເພື່ອນຂອງເຮົາຫາກສະເໜີໃຫ້ໄປພົບ, ເດີນທາງໄປນຳ ຫຼື ພາເຮົາໄປເບິ່ງວຽກໃໝ່. ຈົ່ງເຕືອນຕົນເອງຢູ່ສະເໝີວ່າ "ເລື່ອງດັ່ງ ກ່າວມັນຈະສ້າງຄວາມອັນຕະລາຍໃຫ້ເຮົາແນວໃດແດ່".



# ບົດທີ 17: ເພື່ອນແທ້ ຫຼື ຜູ້ຄ້າມະນຸດ?

17

## ເລື່ອງທີ 1

ເຈົ້າແມ່ນຜູ້ຄ້າມະນຸດ.

ເຈົ້າທຳທ່າວ່າເຈົ້າມາຈາກແຂວງດຽວກັນກັບຜູ້ທີ່ຕັ້ງຄຳຖາມໃສ່ກັບເຈົ້າກ່ຽວກັບເຈົ້າມາຈາກໃສ.

ເຈົ້າຈະແກ້ງທຳວ່າມີເອື້ອຍ 1ຄົນ ແລະ ອ້າຍ 2ຄົນ.

ເຈົ້າອາໃສຢູ່ໃນກາງເມືອງໃຫຍ່ແຫ່ງໜຶ່ງ. ເຊິ່ງເຈົ້າຢາກຈະມາຕິສະນິດກັບຜູ້ເຄື່ອນຍ້າຍແຮງງານໜຸ່ມນ້ອຍຢູ່ທີ່ສວນສາທາລະນະ, ເຈົ້າພາພວກເຂົາໄປທີ່ລົດເມເພື່ອໄປໂຮງງານຢູ່ນອກເມືອງ.

ໂຮງງານໄດ້ຈ່າຍເງິນໃຫ້ເຈົ້າເພື່ອເຮັດວຽກດັ່ງກ່າວ.

ເຈົ້າບໍ່ຮູ້ວ່າບັນດາຄົນງານທີ່ຢູ່ໃນໂຮງງານແຫ່ງນັ້ນ ວ່າພວກເຂົາເຮັດວຽກຫັຍງ, ເຈົ້າພຽງແຕ່ຄິດວ່າມັນເປັນວຽກງານໜຶ່ງທີ່ກ່ຽວກັບປາກະປ໋ອງ, ເຈົ້າບໍ່ເຄີຍເຂົ້າໄປໃນໂຮງງານນັ້ນເລີຍ.

ເຈົ້າຮູ້ວ່າມັນແມ່ນວຽກງານທີ່ບໍ່ດີອັນໜຶ່ງ ແລະ ຄົນງານຢູ່ໃນທີ່ນັ້ນກໍ່ບໍ່ສາມາດອອກມາຂ້າງນອກໄດ້.

ເຈົ້າບອກກັບແຮງງານເຄື່ອນຍ້າຍຄົນອື່ນໆວ່າ ນ້ອງສາວຂອງເຈົ້າກໍ່ເຮັດວຽກຢູ່ທີ່ໂຮງງານນັ້ນ.

ເຈົ້າບໍ່ຕ້ອງການທີ່ຈະພົບເພື່ອນຄົນໃດຄົນໜຶ່ງຂອງຜູ້ເຄື່ອນຍ້າຍແຮງງານ ເພາະວ່າເຈົ້າບໍ່ຕ້ອງການໃຫ້ເຂົາຈື່ເຈົ້າໄດ້.

ເຈົ້າຕ້ອງການທີ່ຈະພົບຢູ່ບ່ອນສະຖານທີ່ງຽບໆ ເພາະວ່າເຈົ້າບໍ່ຢາກໃຫ້ຫຼາຍຄົນເຫັນເຈົ້າ.

ເຈົ້າກໍ່ຮູ້ນ້ຳເບີໂທລະສັບຂອງໂຮງງານແຫ່ງນີ້.

ເຈົ້າບໍ່ຕ້ອງການບອກໃຜກ່ຽວກັບຊື່ ແລະ ສະຖານທີ່ຕັ້ງຂອງໂຮງງານ.

ເຈົ້າຕ້ອງການຈະເອົາແຮງງານເຄື່ອນຍ້າຍຢູ່ທີ່ນັ້ນຂຶ້ນລົດເມສ່ວນຕົວເພື່ອທີ່ຈະບໍ່ໃຫ້ເຂົາແລ່ນໜີໄດ້ເລີຍ.

.......................................................................................................

## ເລື່ອງທີ 2

ເຈົ້າແມ່ນເພື່ອນແທ້

ເພື່ອນຄົນໜຶ່ງຂອງເຈົ້າກໍ່ເປັນຜູ້ມາໃໝ່ຢູ່ໃນເມືອງແຫ່ງນີ້ ແລະ ເພື່ອຊອກຫາໝູ່ຕື່ມອີກ 2-3 ຄົນ.

ເຈົ້າກໍ່ບໍ່ມີເງິນຫຼາຍ.

ເຈົ້າກໍ່ເຄີຍໄດ້ຍິນວ່າຢູ່ທີ່ນີ້ມີໜອງໃຫຍ່ອັນໜຶ່ງທີ່ຢູ່ໃກ້ກັບບ່ອນທີ່ຈະເໝາະສົມໄປຍ່າງຫຼິ້ນ ແລະໂອ້ລົມກັນ.

ເຈົ້າເຮັດວຽກຢູ່ໃນໂຮງງານຕັດຫຍິບ,ເຈົ້າກໍ່ມີຄວາມສຸກຫຼາຍທີ່ໄດ້ເຮັດວຽກຢູ່ກັບເພື່ອນໆຂອງເຈົ້າຢູ່ທີ່ນັ້ນ.

ເຈົ້າກໍ່ມີຄວາມສຸກທີ່ໄດ້ເອົາເບີໂທໃຫ້ແກ່ຄົນອື່ນຜູ້ທີ່ຊ່ວຍເຈົ້າເຮັດວຽກຢູ່ໃນໂຮງງານແຫ່ງນັ້ນ.

ເຈົ້າກໍ່ພໍໃຈໃນການແນະນຳເພື່ອນໃໝ່ຂອງເຈົ້າໃຫ້ກັບຄົນອື່ນທີ່ເຈົ້າຮູ້ໄດ້ຮູ້ຈັກ.

# 18 ບົດທີ 18: ຄວາມປອດໄພໃນການໃຊ້ອິນເຕີເນັດ

*ຂໍ້ສັງເກດໃຫ້ຄູຝຶກ: ບົດຮຽນດັ່ງກ່າວອາດຈະບໍ່ໄດ້ສອນໃຫ້ກັບບັນດາຜູ້ເຂົ້າຮ່ວມທີ່ບໍ່ສາມາດເຂົ້າເຖິງອິນເຕີເນັດ*

**ຈຸດປະສົງ: ບັນດາຜູ້ເຂົ້າຮ່ວມຈະໄດ້ຮັບຮູ້ເຖິງໄພອັນຕະລາຍຕ່າງໆໃນການນຳໃຊ້ອິນເຕີເນັດ ແລະ ຈະໄດ້ຮຽນຮູ້ຂໍ້ຄວນລະວັງຫຼາຍຢ່າງເພື່ອຫຼີກລ້ຽງໄພອັນຕະລາຍເລົ່ານີ້.**

.

## ເວລາ:

75 ນາທີ

## ອຸປະກອນ

❖ ຂໍ້ຄວາມທີ່ເປັນອັນຕະລາຍຈາກອິນເຕີເນັດໄດ້ສ້າງຂຶ້ນ ແລະ ຕັດເປັນຕອນໆອອກມາຈາກເອກະສານ 18 ກ: ຂໍ້ຄວາມອັນຕະລາຍຈາກອິນເຕີເນັດ, ມີຢູ່ 6 ຕອນ. ຢູ່ຂ້າງໜຶ່ງຂອງຂໍ້ຄວາມແມ່ນກ່າວເຖິງຄວາມອັນຕະລາຍ ແລະ ຢູ່ຂ້າງໜຶ່ງແມ່ນຂໍ້ຄວາມທີ່ໃຊ້ໃນການປົກປ້ອງຕົເອງ.

❖ ຖົງໜຶ່ງອັນ.

❖ ສຳເນົາເອກະສານ 18ຂ: ເລື່ອງນາງ ໝົງ

❖ ເຈ້ຍແຜ່ນໃຫຍ່

## ການແນະນຳ:

**ຍິນດີຕ້ອນຮັບ:**

ຍິນດີຕອນຮັບຜູ້ເຂົ້າຮ່ວມໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ

**ອົບອຸ່ນຮ່າງກາຍ:**

ໂດຍການນຳໃຊ້ເກມຈາກລາຍການທີ່ມີຢູ່.

**ທວນຄືນບົດຮຽນ:**

ມີໃຜສາມາດໃຫ້ນິຍາມໄດ້ບໍວ່າການຄ້າມະນຸດແມ່ນຫຍັງ (ໃຫ້ບັນດາຜູ້ເຂົ້າຮ່ວມເບິ່ງໃນປຶ້ມຄູ່ມືຂອງພວກເຂົາຖ້າພວກເຂົາຍັງສັບສົນຢູ່.

## ການສົນທະນາ

ການນຳໃຊ້ອິນເຕີເນັດກໍ່ເປັນສິ່ງທີ່ດີອັນໜຶ່ງ, ມັນສາມາດຊ່ວຍໃຫ້ພວກເຮົາຕິດຕໍ່ສື່ສານກັນເປັນປະຈຳ, ເຮັດໃຫ້ພວກເຮົາໄດ້ຮຽນຮູ້ກ່ຽວກັບໂລກຫຼາຍຂຶ້ນ ແລະ ກໍ່ເຮັດໃຫ້ພວກເຮົາສາມາດຕິດຕໍ່ສື່ສານກັບໝູ່ເພື່ອນຂອງພວກເຮົາ. ໃນລະຫວ່າງການນຳໃຊ້ເຄື່ອງມືນີ້ພວກເຮົາສາມາດນຳໃຊ້ມັນໃນການວິໃຈກ່ຽວກັບການສະກັດກັ້ນການຄ້າມະນຸດ ແລະ ຊ່ວຍໃຫ້ພວກເຮົາໃນການຈັດການກັບເຫດການຕ່າງໆໃນຊຸມຊົນ. ເຖິງຢ່າງໃດກໍ່ຕາມ, ອິນເຕີເນັດກໍ່ຍັງເປັນຜົນຮ້າຍຕໍ່ຜູ້ນຳໃຊ້ ແລະ ມື້ນີ້ພວກເຮົາກໍ່ຈະມາເວົ້າກ່ຽວກັບການປົກປ້ອງຕົນເອງຈາກໄພອັນຕະລາຍຂອງການນຳໃຊ້ອິນເຕີເນັດ.



ເອົາຖົງທີ່ມີຂໍ້ຄວາມໄພອັນຕະລາຍຂອງອິນເຕີເນັດອອກມາ. ໃຫ້ກຸ່ມຍື່ນຖົງຕໍ່ໆໄປພ້ອມທັງຕົບມືເມື່ອເຮົາບອກວ່າຢຸດຖົງກໍ່ຕ້ອງຢຸດຄືກັນ ແລະ ໃຫ້ຜູ້ຖືຖົງນັ້ນຈົກຂໍ້ຄວາມອອກມາພ້ອມທັງອ່ານດັງໆທັງສອງດ້ານເລີຍເຊັ່ນ: ດ້ານອັນຕະລາຍ ແລະ ດ້ານປົກປ້ອງຕົນເອງ.

ເມື່ອຂໍ້ຄວາມດັ່ງກ່າວໄດ້ຖືກອ່ານໝົດແລ້ວ ກໍ່ອະທິບາຍໃຫ້ທຸກຄົນເຂົ້າໃຈພ້ອມທັງອະທິບາຍເພີ້ມຕື່ມຖ້າຈຳເປັນ.

## ການແນະນຳຂໍ່ຄວນລະມັດລະວັງ

ເມື່ອຂໍ້ຄວາມທັງໝົດໄດ້ຖືກອ່ານໝົດແລ້ວຈິ່ງນຳເອົາຂໍ້ຄວນລະມັດລະວັງດັ່ງຕໍ່ໄປນີ້ ສາມາດເອົາໄປນຳໃຊ້ໃນການປົກປ້ອງຄົນໜຸ່ມນ້ອຍໄດ້ (ຈົ່ງຂຽນຂໍ້ຄວາມດັ່ງກ່າວນີ້ໃສ່ເຈ້ຍແຜ່ນໃຫຍ່)

- ບໍ່ຕ້ອງແບ່ງປັນຂໍ້ມູນສ່ວນຕົວຢູ່ໃນໂລກອອນລາຍ
- ເຊັ່ນວ່າ: ເຄືອຂ່າຍຢາຮູ ຫຼື ທະວິດສເຕີ ຫາກຖາມເຖິງຂໍ້ມູນສ່ວນຕົວຂອງເຈົ້າກໍ່ໃຫ້ເຈົ້າສ້າງຂໍ້ມູນໂດຍລວມເທົ່າທີ່ຈະສ້າງໄດ້. ຈົ່ງຂຽນຊື່ເມືອງທີ່ເຈົ້າອາໄສຢູ່ແຕ່ບໍ່ໃຫ້ບອກຊື່ຖະໜົນ, ບໍ່ໃຫ້ບອກທີ່ຢູ່, ບໍ່ໃຫ້ບອກເບີໂທ, ບໍ່ໃຫ້ບອກໂຮງຮຽນເກົ່າ ແລະ ໃໝ່ຂອງເຈົ້າ, ບໍ່ຕ້ອງເອົາທີ່ຢູ່ທາງອີແມວໃສ່ໃນຟາຍຂອງເຮົາ, ຈົ່ງລຶບຈີໂອແທັກຈາກເຟດບຸກ ແລະ ທະວິສເຕີເພາະວ່າສິ່ງດັ່ງກ່າວນີ້ມັນຈະເຮັດໃຫ້ຄົນອື່ນເຫັນວ່າເຮົາຢູ່ໃສ.
- ຈົ່ງຄວບຄຸມການຕິດຕັ້ງຂໍ້ມູນສ່ວນຕົວ. ເຄືອຄ່າຍຕ່າງໆເຊັ່ນວ່າ: ເຟດບຸກທີ່ມີການຕິດຕັ້ງຂໍ້ມູນສ່ວນຕົວ. ຈົ່ງເປີດເຄືອຄ່າຍດັ່ງກ່າວນີ້ ແລະ ເລືອກສະເພາະເພື່ອນຜູ້ທີ່ເຈົ້າຮູ້ເພື່ອຕິດຕໍ່ກັນ. ບໍ່ຕ້ອງອະນຸຍາດໃຫ້ຄົນທົ່ວໄປຕິດຕໍ່ກັບເຈົ້າ.
- ບໍ່ຕ້ອງບອກລະຫັດຜ່ານ. ບໍ່ຕ້ອງບອກລະຫັດຜ່ານແມ້ແຕ່ເພື່ອນຂອງເຈົ້າ ແລະ ແຟນຂອງເຈົ້າ. ເພື່ອນໃນມື້ນີ້ອາດເປັນສັດຕູໃນມື້ໜ້າຖ້າເຂົາຮູ້ເຂົາອາດຈະນຳໃຊ້ລະຫັດຜ່ານເຂົ້າເຟດບຸກຂອງເຮົາ ແລະ ທຳທ່າເປັນຕົວເຮົາເອງ, ອາດຂຽນສິ່ງຕ່າງໆທີ່ເປັນອັນຕະລາຍຫຼືເຮັດໃຫ້ເຮົາເສຍຊື່ສຽງ.
- ຄວນລະມັດລະວັງໃນການນຳໃຊ້ຫ້ອງແຊດແບບສ່ວນຕົວ. ຖ້າຫາກເຈົ້າເຂົ້າໄປໃນຫ້ອງແຊດກໍ່ບໍ່ຄວນໃຫ້ນຳໃຊ້ຂໍ້ມູນສ່ວນຕົວ. ຈົ່ງຈຳໄວ້ວ່າຄົນທີ່ຢູ່ໃນຫ້ອງແຊດອາດເປັນຄົນແປກໜ້າ ແລະ ເປັນຜູ້ທີ່ຕິດຕາມ ຫຼື ເປັນຄົນຂີ້ລັກ.
- ໃຫ້ລະວັງຖ້າມີຜູ້ມາສະເໜີວຽກທາງອິນເຕີເນັດ. ຄົນເຫຼົ່ານັ້ນສາມາດຕົວະ ແລະ ຫລອກພວກເຮົາໃຫ້ເຮັດວຽກໃນສິ່ງທີ່ເປັນອັນຕະລາຍ.
- ຖ້າເຈົ້າຄິດວ່າເຈົ້າອາດຕົກຢູ່ໃນອັນຕະລາຍໃນການນຳໃຊ້ອິນເຕີເນັດ ກໍ່ໃຫ້ປິດຄອມພິວເຕີກໍ່ໃຫ້ບອກພໍ່ແມ່ໃນທັນທີທັນໃດ ແລະ ໃຫ້ບອກຄູຝຶກຢູ່ໃນສະໂມສອນເດັກ. ຖ້າເຈົ້າມີການຕິດຕໍ່ພົວພັນທາງອິນເຕີເນັດທີ່ເຮັດໃຫ້ເຈົ້າມີຄວາມສ່ຽງ ຫຼື ເຮັດໃຫ້ເຈົ້າບໍ່ສະບາຍໃຈ ຫຼື ຖ້າມີຄົນທີ່ເຈົ້າຮູ້ທາງອິນເຕີເນັດນັດເຈົ້າໄປພົບເປັນການສ່ວນຕົວກໍ່ໃຫ້ບອກພໍ່ແມ່ ແລະ ຄູຝຶກຢູ່ໃນສະໂມສອນເດັກ.

## ການເຮັດວຽກເປັນກຸ່ມ

ຢາຍເອກະສານຂໍ້ມູນເລື່ອງຂອງນ.ໝົງ.

ໃຫ້ບັນດາຜູ້ເຂົ້າຮ່ວມທັງໝົດແບ່ງເປັນກຸ່ມ 4-8 ຄົນ, ອ່ານເລື່ອງດັ່ງກ່າວ ແລະ ກໍ່ຂຽນສິ່ງທີ່ ນ. ໝົງສາມາດນຳໄປປົກປ້ອງຕົນເອງ.

ເມື່ອພວກເຂົາຂຽນສຳເລັດແລ້ວກໍ່ໃຫ້ພວກເຂົາແບ່ງປັນຄຳຕອບຕ່າງໆຖ້າຍັງມີເວລາຢູ່.

## ການຕັ້ງຄຳຖາມກັບຄູ່ສົນທະນາ

ໃນຕອນທ້າຍນີ້,ໃຫ້ບັນດາຜູ້ເຂົ້າຮ່ວມທັງໝົດແຍກເປັນກຸ່ມລະ 2 ຄົນ, ໃຫ້ບັນດາກຸ່ມເຫຼົ່ານັ້ນຕັ້ງຄຳຖາມເຊິ່ງກັນ ແລະ ກັນຖ້າວ່າພວກເຂົາຍັງສາມາດຈື່ຂໍ້ຄວນລະມັດລະວັງໃນການປົກປ້ອງຕົນເອງຈາກສື່ອອນລາຍ.

### ສະຫຼຸບບົດຮຽນ

- ບໍ່ໃຫ້ແບ່ງປັນຂໍ້ມູນສ່ວນຕົວ (ສະຖານທີ່, ໂຮງຮຽນ, ເບີໂທ, ວັນເດືອນປີເກີດຂອງເຈົ້າ) ໃສ່ສື່ອອນລາຍ.
- ບໍ່ຕ້ອງຍອມຮັບເອົາຄົນທີ່ເຈົ້າບໍ່ຮູ້ຈັກມາເປັນເພື່ອນຂອງເຈົ້າໃນສັງຄົມອອນລາຍເຊັ່ນ: ເຟດບຸກ ຫຼື ທະວິດສເຕີ້.
- ຈົ່ງຄວບຄຸມການຕັ້ງຂໍ້ມູນທາງອິນເຕີເນັດ "ພຽງແຕ່ເພື່ອນເທົ່ານັ້ນທີ່ເອົາເຂົ້າມາຕິດຕໍ່ທາງເຟດບຸກ".
- ບໍ່ຕ້ອງເປີດຟາຍເອກກະສານທີ່ຕິດຄັດມາຖ້າເຈົ້າບໍ່ຮູ້ວ່າມັນແມ່ນຫຍັງ.
- ຫ້າມບໍ່ໃຫ້ນັດພົບກັບຄົນທີ່ເຈົ້າຫາກໍ່ຮູ້ທາງອິນເຕີເນັດເປັນຄັ້ງທຳອິດ.
- ຖ້າຫາກເຈົ້າຕ້ອງການໄປພົບເຂົາແທ້ໆກໍ່ໃຫ້ໄປກັບເພື່ອນຫຼາຍຄົນ ແລະ ກໍ່ໃຫ້ໄປພົບໃນສະຖານທີ່ສາທາລະນະໃນເວລາກາງເວັນ.
- ຫ້າມບໍ່ໃຫ້ບອກໃຜກ່ຽວກັບລະຫັດຜ່ານຂອງເຈົ້າເດັດຂາດ.
- ບໍ່ໃຫ້ແບ່ງປັນຂໍ້ມູນສ່ວນຕົວຂອງເຈົ້າຢູ່ໃນຫ້ອງແຊັດ
- ບໍ່ໃຫ້ເອົາຮູບຂອງຕົນເອງລົງໃນສື່ອອນລາຍ.
- ຈົ່ງຈຳໄວ້ວ່າຂໍ້ມູນທາງສື່ອອນລາຍມັນຍາກທີ່ຈະລຶບຖິ້ມ

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາຮ່ວມໃນມື້ນີ້, ທຸກຄົນໄດ້ຮັບດາວຄົນລະ 1 ດວງພົບກັນໃນຄັ້ງໜ້າ.



### ກ. ໄພຂົ່ມຂູ່

ໄພອັນຕະລາຍຈາກການຂົ່ມຂູ່. ການຂົ່ມຂູ່ຕ່າງໆສາມາດໃຊ້ທາງອິນເຕີເນັດ ເພື່ອເຮັດໃຫ້ຄົນອື່ນເສຍຫາຍ.ພວກເຂົາສາມາດເວົ້າສິ່ງທີ່ເສຍຫາຍຕໍ່ກັບຄົນອື່ນ ຕໍ່ສາທາລະນະຊົນເຊັ່ນ: ເຟດບຸກຫຼືພວກເຂົາສາມາດສະແດງຮູບຕັດຕໍ່ທີ່ຕົກແຕ່ງດ້ວຍຄອມພິວເຕີ ເບິ່ງຄ້າຍຄືຮູບຈິງ ແລ້ວເອົາລົງອິນເຕີເນັດ, ຮູບພາບດັ່ງກ່າວອາດເຮັດໃຫ້ຄົນເຮົາເສຍໜ້າ ແລະ ກະທົບຕໍ່ຈິດໃຈ

### ຂ: ການປົກປ້ອງຕົວເຈົ້າເອງ

ບໍ່ໃຫ້ແບ່ງປັນລະຫັດຜ່ານ ແມ້ແຕ່ເພື່ອນແທ້ຂອງເຈົ້າເພື່ອນຍິງ ຫຼື ເພື່ອນໃນມື້ນີ້ອາດເລີກກັນໃນມື້ໜ້າເຂົາເຫຼົ່ານັ້ນກໍ່ຈະເອົາລະຫັດຜ່ານເຂົ້າໄປເຟດບຸກ ເພື່ອທຳທ່າເປັນເຈົ້າເອງ ແລະ ຂຽນສິ່ງທີ່ເຮັດໃຫ້ເຮົາເສຍໜ້າ.

ຈົ່ງຈຳໄວ້ວ່າ ຮູບພາບຕ່າງໆທີ່ເຈົ້າເອົາລົງທາງອິນເຕີເນັດມັນກໍ່ຈະຢູ່ໃນນັ້ນຕະຫຼອດບໍ່ສາມາດລຶບໄດ້.ດັ່ງນັ້ນບໍ່ໃຫ້ເອົາຮູບພາບຂອງເຈົ້າເອງລົງອິນເຕີເນັດ ໃຫ້ກັບຄົນອື່ນ.

### ກ: ຜູ້ຈັບຕາມອງ

ຄົນເຮົາສາມາດນຳໃຊ້ອິນເຕີເນັດເພື່ອນັດພົບກັນ,ກໍ່ຫວັງວ່າມື້ໃດມື້ໜຶ່ງກໍ່ນັດພົບເປັນການສ່ວນຕົວ. ໃນການນັດພົບນີ້ພວກເຂົາສາມາດທຳຮ້າຍ ເຮົາ.ຄົນເຮົາສາມາດໃຊ້ອິນເຕີເນັດ ເພື່ອໃຫ້ຜູ້ນຳໃຊ້ຄົນອື່ນໆແບ່ງປັນຮູບພາບຂອງພວກເຂົາເອງ ເຊິ່ງວ່າຜູ້ທີ່ຕິດຕາມເຮົາເຫຼົ່ານັ້ນພັດໃຊ້ ແລະ ສິ່ງເປັນຮູບພາບທີ່ໂປ້.

ຄົນເຮົາສາມາດໃຊ້ອິນເຕີເນັດເພື່ອສະເໜີວຽກທີ່ບໍ່ແມ່ນຄວາມຈິງໃນການຫລອກຫລວງເຈົ້າໄປພົບກັບເຂົາ ຫຼື ເຮັດໃຫ້ເຮົາຕົກຢູ່ໃນສະຖານະການທີ່ອັນຕະລາຍ

### ຂ: ການປົກປ້ອງຕົວເຈົ້າເອງ

ບໍ່ຕ້ອງຮັບຄົນທີ່ສະເໜີມາເປັນເພື່ອນທາງອິນເຕີເນັດ.

ຄວນເລືອກເອົາການຕັ້ງຂໍ້ມູນສ່ວນຕົວໃນລະດັບສູງສຸດທາງເຄືອຄ່າຍຂອງເຟດບຸກ(ຍົກຕົວຢ່າງ:ການຕັ້ງເຟດບຸກ ຄວນໃຫ້ເລືອກເອົາເພື່ອນພຽງແຕ່ເພື່ອນຂອງເຮົາເທົ່ານັ້ນທີ່ຮູ້ຈັກຕຳແໜ່ງ, ຊີວິດ ແລະ ຮູບພາບຂອງເຮົາເທົ່ານັ້ນ.

ຫ້າມບໍ່ໃຫ້ໄປພົບກັບຄົນທີ່ຮູ້ຈັກທາງອິນເຕີເນັດ ເປັນການສ່ວນຕົວ. ຖ້າເຈົ້າຕັດສິນໃຈທີ່ຈະໄປພົບກໍ່ໃຫ້ເອົາເພື່ອນໄປນຳ ແລະໄປພົບກັນກາງເວັນບ່ອນທີ່ມີຄົນຫຼາຍ.

### ກ: ຄົນຂີ້ລັກ

ຄົນເຫຼົ່ານັ້ນສາມາດຕິດຕໍ່ເຈົ້າຜ່ານທາງອິນເຕີເນັດ. ເພື່ອພະຍາຍາມຊອກຫາເຈົ້າ ແລະ ເຮັດໃຫ້ເຈົ້າສົ່ງເງິນໃຫ້ເຂົາ ຫຼື ພວກເຂົາສາມາດເອົາຂໍ້ມູນສ່ວນຕົວຂອງເຈົ້າເພື່ອຊອກຫາບັນຊີທະນາຄານທາງອິນເຕີເນັດ.

ຄຳຫລອກລວງທົ່ວໄປມັກຈະເວົ້າວ່າ ເຈົ້າເປັນຜູ້ທີ່ໂຊກດີທີ່ເຈົ້າເປັນຜູ້ທີ່ໄດ້ຮັບລາງວັນ ຫຼື ອາດຈະເປັນຜູ້ຍິງ ຫຼື ຜູ້ຊາຍທີ່ເປັນເພື່ອນຂອງເຈົ້າວ່າຕົນເອງນັ້ນມີບັນຫາ.

### ຂ: ການປົກປ້ອງຕົວເຈົ້າເອງ

ບໍ່ຕ້ອງຕອບອີແມວ ຫຼື ຂໍ້ຄວາມທີ່ໄດ້ຮັບຈາກຄົນແປກໜ້າ. ຫ້າມບໍ່ໃຫ້ສົ່ງເງິນຫາຄົນແປກໜ້າຜູ້ທີ່ຕິດຕໍ່ເຈົ້າທາງອິນເຕີເນັດ. ຈົ່ງລະແວງກັບຄົນທີ່ສະເໜີວຽກໃຫ້ເຮັດທາງອິນເຕີເນັດ. ມັນເປັນສິ່ງທີ່ງ່າຍດາຍໃນການຫລອກລວງທາງອິນເຕີເນັດ.

## ກ. ໄພຂົ່ມຂູ່

ຄົນເຮົາບາງຄັ້ງໃຊ້ອິນເຕີເນັດໃນການຫຼິ້ນເກມທາງຄອມພິວເຕີ.

ຖ້າເຈົ້າເລືອກທີ່ຈະເຮັດແບບນີ້ດ້ວຍຕົວຂອງເຈົ້າເອງ ສິ່ງທີ່ສຳຄັນເຈົ້າຄວນຮູ້ວ່າ ເກມໃດເປັນເກມທີ່ອັນຕະລາຍ ບັນດາຄົນແປກໜ້າທັງຫຼາຍ ສາມາດນຳໃຊ້ເກມເພື່ອຕິດຕໍ່ກັບບັນດາໄວໜຸ່ມເພື່ອລໍ້ລວງໃຫ້ພວກເຂົາຕົກຢູ່ໃນສະຖານະການທີ່ອັນຕະລາຍ.

ມີຫຼາຍຄົນຢູ່ໃນສັງຄົມ ທີ່ກາຍມາເປັນຄົນທີ່ຕິດເກມຊີວິດຂອງພວກເຂົາ, ມິດຕະພາບຂອງພວກເຂົາ ແລະ ວຽກງານຕ່າງໆກໍ່ມີຄວາມຫຍຸ້ງຍາກດັ່ງທີ່ຮູ້ກັນຜ່ານມາ. ເນື້ອຫາຂອງເກມຄອມພິວເຕີກໍ່ສະແດງເຖິງຄວາມຮຸນແຮງ ຫຼື ສິ່ງຕ່າງໆທີ່ເຮັດໃຫ້ບຸກຄະລິກຂອງເຮົາເຊື່ອມສະພາບລົງ.

## ຂ: ການປົກປ້ອງຕົວເຈົ້າເອງ

ຖ້າຫາກເຈົ້າຫຼິ້ນເກມຄອມພິວເຕີທາງອິນເຕີເນັດຫ້າມບໍ່ໃຫ້ແຊັດກັບຄົນທີ່ເຈົ້າບໍ່ຮູ້.

ບໍ່ຍອມຮັບຄຳສະເໜີທີ່ຄົນແປກໜ້າແຊັດເຂົ້າມາທີ່ເຂົາໃຊ້ຕິດຕໍ່ເຈົ້າຜ່ານທາງໄປເກມ.

ບໍ່ຕ້ອງເປີດເຜີຍຂໍ້ມູນສ່ວນຕົວ ໃຫ້ກັບຄົນທີ່ເຈົ້າບໍ່ຮູ້ຈັກ ເຊັ່ນວ່າ: ເຈົ້າພັກຢູ່ໃສ, ເຈົ້າເຂົ້າໂຮງຮຽນຢູ່ໃສ,ເຮັດວຽກຢູ່ໃສ ຫຼື ແມ້ແຕ່ເຈົ້າອາຍຸຈັກປີ.

ຈົ່ງຈຳກັດເວລາໃນການຫຼິ້ນເກມ

## ກະ ຜູ້ຈັບຕາມອງ

ການເຊື່ອມຕໍ່: ການເຊື່ອມຕໍ່ສະຖານທີ່ທາງອິນເຕີເນັດເລີ່ມຈາກ www. ຖ້າເຈົ້າຫາກກົດເຂົ້າໃສການເຊື່ອມຕໍ່ມັນຈະພາໃຫ້ເຈົ້າເຂົ້າເຖິງສະຖານທີ່ນັ້ນທາງອິນເຕີເນັດ.

ເອກະສານຊ້ອນທ້າຍແມ່ນເປັນຟາຍອັນໜຶ່ງທີ່ເຈົ້າສາມາດດາວໂຫຼດໃສ່ຄອມພິວເຕີຂອງເຈົ້າ. ຢູ່ໃນຢາຮູເອກະສານຊ້ອນທາຍໄດສະແດງເປັນເຫຼັກຄັດເຈຍທີ່ຕິດກັບອີແມວ ແລະ ເອກະສານຕິດຄັດມັກຈະລົງທ້າຍຕົວອັກສອນ "DOC or DOCX ການເຊື່ອມຕໍ່ ແລະ ເອກະສານຕ່າງໆສາມາດໃຊ້ໄດ້ຕະຫຼອດເວລາ ແລະ ເປັນວິທີທີ່ຄຸ້ນເຄີຍເພື່ອຊ່ວຍໃຫ້ຄົນເຮົາສົ່ງຂໍ້ມູນຂ່າວສານ ຫຼື ຊອກຫາສິ່ງຕ່າງໆທາງອິນເຕີເນັດ. ແຕ່ວ່າການເຊື່ອມຕໍ່ ແລະ ເອກະສານຊ້ອນທາຍຕ່າງໆກໍ່ຍັງສາມາດເປັນສິ່ງອັນຕະລາຍເພາະວ່າພວກເຂົາອາດເປັນໄວລັດສ.

ໄວລັດສ: ແມ່ນໂປຣແກມຄອມພິວເຕີອັນໜຶ່ງທີ່ໄດ້ຖືກອອກແບບມາເພື່ອເປັນຕົວທຳລາຍໂດຍສະເພາະ.ບາງຄັ້ງໄວລັດສເຫຼົ່ານັ້ນກໍ່ທຳຮາຍໂປແກມຢູ່ໃນຄອມພິວເຕີຂອງເຈົ້າ ຫຼື ບາງຄັ້ງໄວ

## ຂ: ການປົກປ້ອງຕົວເຈົ້າເອງ

ຖ້າເຈົ້າໄດ້ຮັບອີແມວຈາກເພື່ອນຄົນໜຶ່ງ ແລະ ມັນກໍ່ມີພຽງແຕ່ເອກະສານຊ້ອນທ້າຍ ຫຼື ລິ້ງໃນການເຊື່ອມຕໍ່ເທົ່ານັ້ນ (ມັນບໍ່ໄດ້ມີຂໍ້ຄວາມທີ່ກ່າວເຖິງການສະບາຍດີ ຫຼື ຄຳ ອະທິບາຍຈາກເພື່ອນ) ມັນອາດແມ່ນ

ໄວລັດສບໍ່ຄວນເປີດມັນ

.

## ກະ ຄົນຂີ້ລັກ

ຢູທູບ ແລະ ກູໂກສາມາດນຳໄປສູ່ວີດີໂອ ຫຼື ບ່ອນທີ່ມີຮູບໂປ້ ຫຼື ບຸກຄົນຜູ້ທີ່ຖືກເຮັດໃຫ້ເສຍຫາຍທາງອິນເຕີເນັດ. ເບີໂທລະສັບສາມາດໃຊ້ສົ່ງວີດີໂອ ຫຼື ຂໍ້ຄວາມທີ່ສະແດງເຖິງຂໍ້ຄວາມທາງເພດ ວີດີໂອເຫຼົ່ານີ້ ສາມາດສະແດງພາບຂອງຄົນຜູ້ທີ່ຖືກເສຍຫາຍ ຫຼື ເຮັດໃຫ້ເຊື່ອມເສຍ. ຄົນທີ່ຢູ່ໃນຮູບພາບດັ່ງກ່າວ ອາດຖືກບັງຄັບໂດຍຄົນອື່ນທີ່ຄວບຄຸມຕົວພວກເຂົາ ຫຼື ເປັນຄົນຜູ້ທີ່ທຸກຍາກທີ່ສຸດ ຫຼື ພວກເຂົາໄດ້ຖືກລັກຖ່າຍຮູບໂດຍບໍ່ໄດ້ຍິນຍອມ. ຖ້າເບິ່ງຮູບພາບລາມົກເຈົ້າກໍ່ແມ່ນຜູ້ໜຶ່ງທີ່ສົ່ງເສີມແລະເຮັດໃຫ້ຄົນອື່ນເສຍຫາຍ.

## ຂ: ການປົກປ້ອງຕົວເຈົ້າເອງ

ບໍ່ໃຫ້ເບິ່ງຮູບພາບລາມົກທາງອິນເຕີເນັດ, ບໍ່ໃຫ້ແບ່ງປັນຂໍ້ຄວາມທີ່ມີການຍົ້ວຍວນທາງເພດ ໂດຍການໃຊ້ໂທລະສັບ, ຄອມພິວເຕີຂອງເຈົ້າ, ຜ່ານທາງສື່ອອນລາຍ.

ຈົ່ງຄິດໃຫ້ຖີ່ຖ້ວນກ່ອນຈະໃຫ້ຄົນອື່ນເອົາຮູບຂອງເຈົ້າໄປ.

ບໍ່ໃຫ້ສົ່ງຮູບພາບລູກຂອງເຈົ້າເພື່ອແຊ່ງຂັນທາງອິນເຕີເນັດ.

ບໍ່ອະນຸຍາດໃຫ້ຄົນອື່ນຖ່າຍຮູບຂອງເຈົ້າ, ເຈົ້າບໍ່ຮູ້ດອກວ່າພວກເຂົາຈະເອົາໄປໃສ.



# 18 ເອກະສານອ້າງອີງ 18 ກະ ເລື່ອງຂອງ ນາງໝິງ

ນ. ໝິງ ລາວມີທີ່ຢູ່ທາງເຟດບຸກໜຶ່ງອັນ. ລາວໄດ້ເປີດລະບົບປົກປ້ອງຄວາມປອດໄພຂອງລາວຕະຫຼອດເວລາ. ມີຜູ້ຄ້າມະນຸດຄົນໜຶ່ງທີ່ເຮັດວຽກຢູ່ໃນເມືອງຂອງລາວໄດ້ນຳໃຊ້ເຟດບຸກເພື່ອຫລອກລວງຍິງສາວ. ນີ້ແມ່ນວິທີທີ່ຜູ້ຄ້າມະນຸດໄດ້ນຳໃຊ້ໃນການຫລອກລວງຍິງສາວ ກ່ອນອື່ນໝົດຜູ້ຄ້າມະນຸດໄດ້ຖາມທີ່ຈະເປັນເພື່ອນກັບນ. ໝິງທາງເຟດບຸກ.ນ. ໝິງລາວກໍ່ໄດ້ຮັບເອົາທຸກໆຄົນທີ່ມາຂໍເປັນພື່ອນກັບລາວ,ລາວກໍ່ຮັບເອົາຕະຫຼອດ ແລະ ແລ້ວຊາຍຄົນນັ້ນກໍ່ເລີ່ມຕົ້ນສົນທະນາລາວທາງເຟດບຸກ,ຈາກເຟດບຸກລາວໄດ້ພົບຂໍ້ມູນວ່າ:

- ສະຖານທີ່ຢູ່ຂອງນ.ໝິງ.
- ເຊັ່ນວ່າ ນ. ໝິງລາວກໍ່ໄດ້ມັກນັກຮ້ອງຊື່ວ່າ ເທລເລີ ສະວິບ.
- ວັນເດືອນປີເກີດຂອງລາວ.
- ສະຖານທີ່ໂຮງຮຽນຂອງລາວ
- ອາຍຸຂອງລາວ
- ນ. ໝິງກໍ່ເປັນຜູ້ຍິງທີ່ງາມຫຼາຍ.
- ຈາກຮູບພາບຂອງນາງລາວກໍ່ໄດ້ພົບວ່າ ລາວເຄີຍມີໝານ້ອຍສີຂາວ ແລະ ລາວກໍ່ມັກໄປຫຼິ້ນທີ່ສວນສາທາລະນະເປັນປະຈຳ.

ໃນການສົນທະນາຄັ້ງນີ້ສະແດງເຖິງຂໍ້ມູນຫຼອກລວງ ນ.ໝິງ, ໂດຍການສົ່ງຂໍ້ຄວາມດັ່ງກ່າວຫາເຟດບຸກຂອງ ນ.ໝິງ.

ຜູ້ຄ້າມະນຸດ : "ສະບາຍດີ ໝິງຂ້ອຍບໍ່ຮູ້ວ່າເຈົ້າຍັງຈື່ຂ້ອຍໄດ້ບໍ່,ຂ້ອຍເຄີຍເຂົ້າໂຮງຮຽນປະຖົມໂຮງຮຽນດຽວກັບເຈົ້າແຕ່ວ່າຂ້ອຍເປັນຄົນຂີ້ອາຍທີ່ຈະເວົ້າ: ວ່າສະບາຍດີ. ຊື່ຂອງຂ້ອຍແມ່ນ ຈັນ".

*ນ. ໝິງ:* ....."ໂອສະບາຍດີຂ້ອຍບໍ່ຈື່ເຈົ້າຂໍໂທດຫຼາຍເດີ."

*ຜູ້ຄ້າມະນຸດ:* "ໂອບໍ່ເປັນຫຍັງ , ຂ້ອຍຈື່ໄດ້ວ່າເຈົ້າມັກນັກຮ້ອງເທລເລີ ສະວິບ ເຈົ້າມັກເພງໃໝ່ຂອງລາວບໍ?"

*ນ. ໝິງ:* " ຂ້ອຍມັກເພງນັ້ນ. ໂອພວກເຮົາມັກຄ້າຍຄືກັນບໍ "

*ຜູ້ຄ້າມະນຸດ:* " ໂອເຈົ້າເປັນຜູ້ງາມຫຼາຍ ແລະ ສຽງຂອງເຈົ້າກໍ່ຄ້າຍຄືສຽງຂອງລາວ."

*ນ. ໝິງ :* " ໂອເຈົ້າສາມາດສົ່ງຮູບຂອງເຈົ້າໃຫ້ຂ້ອຍໄດ້ບໍ ".

ລາວກໍ່ໄດ້ສົ່ງຮູບພາບຂອງຊາຍໜຸ່ມງາມໃຫ້.

*ຜູ້ຄ້າມະນຸດ :* "ສະບາຍດີ ໝິງມັນແມ່ນວັນເກີດຂອງເຈົ້າຂໍໃຫ້ເຈົ້າມີຄວາມສຸກເດີ, ລາວກໍ່ໄດ້ສົ່ງຮູບພາ

ນ້ອຍທີ່ຖ້າຍຄືກັນກັບໝາຂອງລາວ, ເຈົ້າບໍ່ມັກໝາໃໝ່ຂອງຂ້ອຍບໍ ”

*ນ. ໝີງ:* “ ມັນໜ້າຮັກຫຼາຍ, ຂ້ອຍຕ້ອງການຢາກພົບກັບໝາຂອງເຈົ້າເດ.”

ການສົນທະນາດັ່ງກ່າວໄດ້ດຳເນີນໄປຫຼາຍອາທິດລາວກໍ່ໄດ້ສັງເກດເບິ່ງວ່າໝີງໄດ້ຢູ່ຈຸດໃດ ແລະ ພ້ອມທັງບັນດາຮູບພາບທີ່ ນ.ໝີງໄດ້ເອົາລົງອິນເຕີເນັດ ຊາຍຄົນນັ້ນກໍ່ໄດ້ຮຽນຮູ້ວ່າ ໝີງອາໄສຢູ່ຫໍພັກແຫ່ງໜຶ່ງເຊິ່ງວ່າ ນ. ໝີງກໍ່ບໍ່ມີເພື່ອນທີ່ຢູ່ຫໍພັກດັ່ງກ່າວນັ້ນ ແລະ ຄອບຄົວຂອງລາວກໍ່ດຳລົງຊີວິດຢູ່ຫ່າງໄກ. ລາວກໍ່ຍັງໄດ້ຮຽນຮູ້ວ່າ ນ. ໝີງບໍ່ໄດ້ມີກວຽກຂອງລາວ, ລາວກໍ່ຍັງໄດ້ຮຽນຮູ້ວ່ານ.ໝີງບໍ່ໄດ້ມີເບີໂທລະສັບເພື່ອຂໍຄວາມຊ່ວຍເຫຼືອ, ໝີງ ກໍຄິດວ່າຊາຍຄົນນັ້ນເປັນເພື່ອນຂອງລາວ ແລະ ລາວຄິດມັກຊາຍຄົນນັ້ນ (ຈົ່ງຈຳໄວ້ວ່າຮູບພາບທີ່ລາວສົ່ງຫານາງນັ້ນອາດບໍ່ແມ່ນຄວາມຈິງ.)

*ຜູ້ຄ້າມະນຸດ :*“ ສະບາຍດີ ໝີງ ເດົາເບິ່ງແມພີ່ນ້ອງຂອງຂ້ອຍໄດ້ເປີດຮ້ານອາຫານໃໝ່ຢູ່ທີ່ເມືອງໃກ້ກັນນີ້ແລ້ວພວກເຂົາຕ້ອງການຜູ້ເສີບອາຫານຫຼາຍຄົນ ແລະ ເງິນເດືອນກໍ່ດີ, ຂ້ອຍຄິດວ່າເຈົ້າຄວນ ໄປສະໝັກໃດ.”

*ນ. ໝີງ:* “ ແທ້ບໍ ແຕ່ຂ້ອຍບໍ່ຮູ້ວ່າຈະເຮັດແນວໃດ”

*ຜູ້ຄ້າມະນຸດ:* “ບໍ່ຕ້ອງຫ່ວງດອກຂ້ອຍກໍ່ເຮັດວຽກຢູ່ທີ່ນັ້ນເຊັ່ນກັນ. ຂ້ອຍສາມາດຊ່ວຍບອກໃຫ້ເຈົ້າວ່າເຮັດແນວໃດ ແລະ ພີ່ນ້ອງຂອງຂ້ອຍກໍ່ເປັນຄົນດີຫຼາຍ. ຂ້ອຍຈະພາເຈົ້າໄປພົບກັບເຂົາເມື່ອເຈົ້າພັກວຽກຖ້າເຈົ້າຕ້ອງການ” .

ພວກເຂົາກໍ່ໄດ້ນັດພົບກັນຢູ່ທີ່ສວນສາທາລະນະຕອນມື້ທີ່ນ. ໝີງລາພັກ. ເມື່ອ ນ. ໝີງໄປຮອດສະຖານທີ່ແຫ່ງນັ້ນ ແລະ ຜູ້ຄ້າມະນຸດກໍ່ໄດ້ຢູ່ທີ່ນັ້ນແລ້ວ ລາວເວົ້າວ່າເພື່ອນຂອງເຈົ້າທີ່ຊື່ຈັນນັ້ນລາວບໍ່ສະບາຍແຕ່ວ່າລາວໃຫ້ຂ້ອຍພາເຈົ້າໄປສຳພາດວຽກແທນ. ນ. ໝີງກໍ່ໄດ້ໄປກັບຊາຍເຖົ້າຜູ້ນັ້ນ ແລະ ເມື່ອລາວໄປເຖິງຈຸດໝາຍປາຍທາງລາວກໍ່ໄດ້ຖືກຫລອກ.

ໃນກຸ່ມຂອງເຈົ້າຈົ່ງຄິດຫາວິທີທາງເພື່ອເຮັດໃຫ້ ໝີງ ສາມາດມີຄວາມປອດໄພ.



# ບັນທຶກ

ຈົ່ງບັນທຶກໃສ່ໜ້າດັ່ງກ່າວນີ້ມັນອາດຊ່ວຍໃຫ້ເຈົ້າຈຳໄດ້ເມື່ອເຈົ້າກັບຊຸມຊົນຂອງເຈົ້າ

# ພາກ ໑:

# ການວາງແຜນໃນການ ເຄື່ອນຍ້າຍແຮງງານ ທີ່ປອດໄພ



# 19 ບົດທີ 19: ທັກສະໃນການຕັດສິນໃຈ

**ຈຸດປະສົງ:** ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ພິຈາລະນາເຖິງວ່າພວກເຂົາມີການຕັດສິນໃຈແນວໃດ ແລະ ໄດ້ຮຽນຮູ້ຂໍ້ມູນອັນໃດ ແລະ ພ້ອມທັງປະເມີນເພື່ອເຮັດໃຫ້ມີການຕັດສິນໃຈທີ່ດີໃນອະນາຄົດ.

**ເວລາ:**

75 ນາທີ

**ອຸປະກອນ**

- ❖ ເຈ້ຍແຜ່ນໃຫຍ່
- ❖ ສຳເນົາ 19 ກ: ຮູບແບບໃນການຕັດສິນໃຈໃສ່ເຈ້ຍແຜ່ນໃຫຍ່ແລ້ວເອົາໄປວາງໄວ້ບ່ອນທີ່ທຸກຄົນສາມາດແນມເຫັນໄດ້.
- ❖ ສຳເນົາ 19 ຂ ປະມານ 4-6 ສະບັບ, ຮູບແບບໃນການຕັດສິນໃຈ ແລະ ສຳເນົາເອກະສານ 19 ຄ ກໍລະນີສຶກສາກ່ຽວກັບການຕັດສິນໃຈ. (ຜູ້ເຂົ້າຮ່ວມຈະໄດ້ແບ່ງອອກເປັນກຸ່ມກຸ່ມລະ 4-6 ຄົນ, ແຕ່ລະກຸ່ມໃຫ້ມີສຳເນົາ).
- ❖ ປື້ມນ້ອຍຜູ້ນຳທີ່ສະຫຼາດ

## ການແນະນຳ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ ແລະ ຍື່ນເຈ້ຍລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ຄູຝຶກຕ້ອງນຳໃຊ້ເກມໃນລາຍການທີ່ມີຢູ່.

**ທວນຄືນບົດຮຽນ:**

ມີບາດກ້າວອັນໃດແດ່ທີ່ຈະຮັບມືກັບອາລົມທີ່ຫຍຸ້ງຍາກສັບສົນ? ມີໃຜແດ່ໄດ້ນຳໃຊ້ບາດກ້າວດັ່ງກ່າວເຂົ້າໃນຊີວິດປະຈຳວັນ ? ມັນມີປະໂຫຍດແນວໃດ ? ຍ້ອນຫຍັງຈຶ່ງມີ ແລະ ຍ້ອນຫຍັງຈຶ່ງບໍ່ມີ ?

## ການແນະນຳແບບຢ່າງການຕັດສິນໃຈ

ໃນການດຳລົງຊີວິດແມ່ນຕ້ອງໄດ້ມີການຕັດສິນໃຈ ແລະ ຍັງມີການຕັດສິນໃຈບາງຢ່າງເລັກນ້ອຍທີ່ພວກເຮົາຈະໄດ້ຕັດສິນໃຈກ່ຽວກັບຜູ້ທີ່ເຮົາຈະປຶກສານຳ,ເຮົາຈະກິນຫຍັງ, ເຮົາຈະນຸ່ງເຄື່ອງແບບໃດ ແລະ ກໍ່ຍັງມີການຕັດສິນໃຈກັບສິ່ງທີ່ຍິ່ງໃຫຍ່ເຊັ່ນວ່າ: ເຮົາຈະຮຽນຢູ່ໃສ,ເຮົາຈະເຮັດວຽກຢູ່ໃສ ແລະ ເຮົາຈະແຕ່ງງານກັບໃຜ.

ໃຫ້ຖາມຜູ້ເຂົ້າຮ່ວມ ແລະ ໃຫ້ເຂົາຍົກຕົວຢ່າງຂຶ້ນມາວ່າ:ໃນການຕັດສິນໃຈຄັ້ງຍິ່ງໃຫຍ່ໃນຊີວິດຂອງພວກເຂົານັ້ນ ແລະ ໃຫ້ຂຽນການຕັດສິນໃຈດັ່ງກ່າວນັ້ນອອກມາ.

ບັດນີ້ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບອາດີດໃນກາລະຄັ້ງໜຶ່ງທີ່ຜ່ານມາພວກເຂົາໄດ້ມີການຕັດສິນໃຈຄັ້ງຍິ່ງໃຫຍ່ ແລະ ຕັ້ງຄຳຖາມກັບພວກເຂົາ:



- ເຈົ້າຈື່ບໍ່ວ່າເຈົ້າໄດ້ຕັດສິນໃຈແນວໃດ?
- ເຈົ້າໄດ້ປຶກສາກັບຄົນອື່ນບໍກ່ຽວກັບການຕັດສິນໃຈ?
- ເຈົ້າໄດ້ປຶກສາກັບເພື່ອນ ແລະ ຄອບຄົວຢູ່ບໍ?
- ເຈົ້າໄດ້ຕັດສິນໃຈດ້ວຍຕົນເອງບໍ ຫຼື ຄົນອື່ນຊ່ວຍເຈົ້າໃນການຕັດສິນໃຈ?.

ການຕັດສິນໃຈຫຼາຍສິ່ງຫຼາຍຢ່າງນັ້ນແມ່ນພາກສ່ວນໜຶ່ງຂອງຊີວິດຂອງຄົນເຮົາ. ຕາມປົກກະຕິແລ້ວຄົນເຮົາຈະບໍ່ຄິດກ່ຽວກັບຂະບວນການໃນການຕັດສິນໃຈ, ມີແຕ່ພວກເຂົາຕັດສິນໃຈໂລດ ແລະ ທາງເລືອກຕ່າງໆທີ່ຄົນເຮົາໄດ້ຕັດສິນໃຈນັ້ນມັນເປັນຕົວກຳນົດເຖິງສາຍເຫດຊີວິດຂອງຄົນເຮົາ. ການຕັດສິນໃຈແມ່ນເປັນລັກສະນະສ່ວນຕົວຢ່າງເລິກເຊິ່ງ,ພວກມັນມີອິດທິພົນຕໍ່ຄອບຄົວ,ໂຊກຊາຕາ ແລະ ເລື່ອງສ່ວນຕົວຕ່າງໆ.ດັ່ງນັ້ນມັນກໍ່ເປັນໄປໄດ້ຍາກທີ່ຈະບັນລະຍາຍເຖິງລະບົບການຕັດສິນໃຈທີ່ສົມບູນ ເພື່ອເຮັດໃຫ້ການຕັດສິນໃຈດັ່ງກ່າວນັ້ນດີເລີດ. ໃນບົດຮຽນຕອນນີ້ຈະໄດ້ສົນທະນາບາງຂັ້ນຕອນເພື່ອປະຕິບັດເມື່ອພວກເຮົາປະເຊີນກັບການຕັດສິນໃຈຄັ້ງຍິ່ງໃຫຍ່ເພື່ອທີ່ຈະຊ່ວຍໃນຂະບວນການດັ່ງກ່າວ.

ມີຫຼາຍຮູບແບບໃນການຕັດສິນໃຈທີ່ແຕກຕ່າງກັນທີ່ໃຫ້ຄົນເຮົາເອົາມານຳໃຊ້ໃນການຕັດສິນໃຈຕ່າງໆ. ມີຮູບແບບໃນການຕັດສິນໃຈອັນໃດແດ່ ທີ່ຄົນເຮົາເອົາມານຳໃຊ້ຢ່າງແຜ່ຫຼາຍເຊິ່ງຊ່ວຍໃຫ້ຄົນເຮົາໃນການຄິດຢ່າງລະມັດລະວັງກ່ອນທີ່ຈະຕັດສິນໃຈ ແລະ ເຮັດໃຫ້ຄົນເຮົາຄາດຄະເນລ່ວງໜ້າຜົນທີ່ຈະຕາມມາວ່າການຕັດສິນໃຈແບບໃດອາດຈະເປັນຜົນດີ.

ບອກໃຫ້ຜູ້ເຂົ້າຮ່ວມວ່າມີຮູບແບບໃນການຕັດສິນໃຈ ອາດຊ່ວຍໃຫ້ພວກດຂົາຄິດກ່ຽວກັບການຕັດສິນໃຈຕ່າງໆ. ຈົ່ງຊີ້ໃສ່ຮູບແບບຂອງຕົວຢ່າງໃນການຕັດສິນໃຈໃສ່ເຈ້ຍແຜ່ນໃຫຍ່. ຢາຍປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພ.

ໃຫ້ຜູ້ເຂົ້າຮ່ວມເປີດເບິ່ງໜ້າແບບຢ່າງທີ່ໃຊ້ໃນການຕັດສິນໃຈ, ໃນຄະນະທີ່ເຈົ້າອະທິບາຍແຕ່ລະຂັ້ນຕອນ.

- ບາດກ້າທີ 1: ຄຳຖາມເພື່ອຕັດສິນໃຈ
- ຈຸດປະສົງແມ່ນເຈົ້າສ້າງເປັນຄຳຖາມອັນໜຶ່ງ.
- ບາດກ້າວທີ 2: ຮຽນຮູ້ເພີ່ມຕື່ມ
- ຮຽນຮູ້ເພີ່ມຕື່ມກ່ຽວກັບທາງເລືອກຕ່າງໆຂອງເຈົ້າ, ຈົ່ງຖາມຄົນໃດຄົນໜຶ່ງຢູ່ໃນຊຸມຊົນຂອງເຈົ້າຜູ້ທີ່ເຂົາຮູ້ກ່ຽວກັບເລື່ອງດັ່ງກ່າວ. ຈົ່ງສົນທະນາການຕັດສິນໃຈຂອງເຈົ້າກັບຄົນອື່ນໆ. ຜູ້ທີ່ເຂົາມີປະສົບການ ແລະ ເປັນຄົນທີ່ເຈົ້າເຊື່ອໝັ້ນ. ຈົ່ງຖາມເພື່ອນຂອງເຈົ້ານຳ, ຖາມບັນດານາຍຄູ.
- ບາດກ້າວທີ່ 3: ຈົ່ງຂຽນທາງເລືອກຕ່າງໆລົງມາ.
- ຈົ່ງຂຽນທາງເລືອກໃນການຕັດສິນໃຈຢ່າງໜ້ອຍໃຫ້ມີ 3 ທາງເລືອກ. ທາງເລືອກຕ່າງໆອາດມີຄຳຕອບທີ່ແຕກຕ່າງກັນກັບຄຳຖາມທີ່ເຈົ້າໄດ້ຖາມໃນເບື້ອງຕົ້ນ.
- ເມື່ອເຈົ້າພິຈາລະນາເຖິງທາງເລືອກຕ່າງໆນັ້ນແລ້ວ, ຈົ່ງຈຳໄວ້ວ່າການທ່ວງເວລາໃນການຕັດສິນໃຈແມ່ນທາງເລືອກອັນໜຶ່ງທີ່ພວກເຮົາຄວນນຳເອົາໄປປະຕິບັດຢູ່ສະເໝີ.
- ເມື່ອເຈົ້າພິຈາລະນາເຖິງທາງເລືອກເຫຼົ່ານັ້ນ, ກໍ່ໃຫ້ຄິດເຖິງທາງເລືອກທີ່ມີຄວາມສ່ຽງໜ້ອຍທີ່ສຸດ.
- ບາດກ້າທີ 4: ການປະເມີນຄວາມສ່ຽງ ແລະ ຜົນໄດ້ຮັບ.
- ຈົ່ງຄິດເຖິງຜົນທີ່ຈະຕາມມາຂອງແຕ່ລະທາງເລືອກຕ່າງໆ. ສຳລັບແຕ່ລະທາງເລືອກທີ່ເຈົ້າຄິດວ່າມີຄວາມສ່ຽງ ແລະ ຜົນໄດ້ຮັບນັ້ນ. ຈົ່ງຂຽນສິ່ງດັ່ງກ່າວນີ້ໃສໃນວົງມົນ.

- ບາດກ້າວທີ 5: ຕັດສິນໃຈ.

ຈົ່ງໃຫ້ຕົວຢ່າງວ່າຮູບແບບໃນການຕັດສິນໃຈສາມາດນຳໃຊ້ໄດ້ແນວໃດ, ຈົ່ງນຳໃຊ້ຮູບແບບການຕັດສິນໃຈທີ່ຢູ່ໃນເຈ້ຍແຜ່ນໃຫຍ່ນັ້ນ.

**ບາດກ້າວທີ 1. ຄຳຖາມທີ່ໃຊ້ໃນການຕັດສິນໃຈ.**

ທ. ແອວ ກຳລັງຄິດວ່າ ລາວຈະໄປຊອກເຮັດວຽກຢູ່ໃນເມືອງ ຫຼື ບໍ່ ຈົ່ງຂຽນຄຳຖາມດັ່ງກ່າວນີ້:

"ຂ້ອຍຄວນໄປຊອກຫາວຽກຢູ່ເມືອງຫຼວງ ຫຼື ບໍ່?".

**ບາດກ້າວທີ 2: ການຮຽນຮູ້ເພີ່ມເຕີມ.**

ຈົ່ງຖາມຜູ້ເຂົ້າຮ່ວມ "ແມ່ນໃຜແດ່ທີ່ຮູ້ດີກ່ຽວກັບການໄປເຮັດວຽກທີ່ເມືອງຫຼວງ? ເຈົ້າສາມາດຖາມຄົນຜູ້ທີ່ເຂົາເຄີຍເປັນແຮງງານເຄື່ອນຍ້າຍມາກ່ອນ. ເຈົ້າສາມາດຖາມນາຍຄູຂອງເຈົ້າກໍ່ໄດ້.ເຈົ້າສາມາດຮຽນຮູ້ກ່ຽວກັບເມືອງຫຼວງດັ່ງກ່າວ ແລະ ເຮົາຈະໃຊ້ເງິນຫຼາຍປານໃດໃນການດຳລົງຊີວິດຢູ່ທີ່ນັ້ນ ແລະ ມີວຽກງານອັນໃດແດ່ທີ່ຄົນເຮົາເຮັດຢູ່ທີ່ນັ້ນ".

ຄູຝຶກຕ້ອງຂຽນຄຳຕອບທີ່ເປັນໄປໄດ້ໃສ່ໃນຮູບພາບນັ້ນ ຍົກຕົວຢ່າງ "ວຽກງານຕ່າງໆທີ່ຢູ່ໃນເມືອງແມ່ນໄດ້ເງິນເດືອນ 100 ໂດລາ / ເດືອນ, ຄ່າຫ້ອງນອນ 30 ໂດລາ / ເດືອນ, ທີ່ໄດ້ອອກກັນ ແລະ ຄ່າອາຫານ 40ໂດລາ/ ເດືອນ. ທ. ແອວ ມີເພື່ອນຄົນໜຶ່ງຜູ້ທີ່ລາວຮູ້ສະຖານທີ່, ທີ່ລາວສາມາດອາໃສຢູ່ນຳ, ຂ້ອຍສາມາດໂທຫາລາວ ແລະ ຖາມລາວວ່າລາວໄດ້ຊອກວຽກຂອງລາວໄດ້ແນວໃດແລະລວມທັງເລື່ອງອື່ນໆ..."

**ບາດກ້າວທີ 3: ລາຍການທາງເລືອກອື່ນໆ.**

ຕໍ່ໄປຄູຝຶກຄວນຂຽນທາງເລືອກຕ່າງໆທີ່ມີຄວາມສ່ຽງໜ້ອຍ ຍົກຕົວຢ່າງ :

"ທາງເລືອກທີ 1. ການເດີນທາງໄປເມືອງຫຼວງເລີຍ ໂດຍປັດສະຈາກການອອມເງິນ ແລະ ການໄປຊອກຫາວຽກ.

ທາງເລືອກທີ 2. ລໍຖ້າຈົນກ່ວາຂ້ອຍມີເງິນເກັບໄວ້ຈຳນວນໜຶ່ງ ແລະ ຈົນກະທັ້ງວ່າຂ້ອຍໄດ້ມີວຽກແລ້ວຈຶ່ງໄປ.

ທາງເລືອກທີ 3. ລໍຖ້າຈົນກ່ວາຂ້ອຍຮຽນຈົບມັດທະຍົມກ່ອນແລ້ວຈຶ່ງເຂົ້າໄປເມືອງຫຼວງ"

**ບາດກ້າວທີ 4: ການປະເມີນຄວາມສ່ຽງ ແລະ ຜົນໄດ້ຮັບ.**

ຕໍ່ໄປຄູຝຶກຄວນປະເມີນຄວາມສ່ຽງ ແລະ ຜົນໄດ້ຮັບ ທັງໃນໄລຍະສັ້ນແລະໃນໄລຍະຍາວພ້ອມກັບແຕ່ລະກຸ່ມ. ຈົ່ງອ່ານຕົວຢ່າງດັ່ງຕໍ່ໄປນີ້ໃຫ້ດັງໆ ແລະ ກໍ່ໃຫ້ຕື່ມໃສ່ແບບຢ່າງນັ້ນເລີຍ.

**ທາງເລືອກທີ 1. ເດີນທາງໄປເມືອງກຸງເທບ ໂດຍປັດສະຈາກການອອມເງິນ ຫຼື ການຊອກວຽກກ່ອນ.**

ຄວາມສ່ຽງ: ຂ້ອຍບໍ່ຮູ້ໃຜຈັກຄົນເລີຍຢູ່ເມືອງຫຼວງ, ຂ້ອຍບໍ່ຮູ້ວ່າຂ້ອຍຈະໄປພັກຢູ່ໃສຖ້າຂ້ອຍບໍ່ໄດ້ວຽກ, ຂ້ອຍກໍ່ບໍ່ຮູ້ວ່າຂ້ອຍຈະໄປຫາເງິນຢູ່ໃສ. ຂ້ອຍຈະຕົກຢູ່ໃນຄວາມສ່ຽງຖືກຫລອກໄປຂາຍ, ຖ້າເຮົາຫາກຕັດສິນໃຈໄວໂພດເຮັດໃຫ້ເຮົາມີຄວາມສ່ຽງສູງ ແລະ ຖ້າອອກຈາກໂຮງຮຽນນີ້ກໍ່ໝາຍຄວາມວ່າ ຄວາມສ່ຽງໃນໄລຍະຍາວຂອງຂ້ອຍກໍ່ສູງເຊັ່ນກັນ.

ຜົນໄດ້ຮັບ: ຖ້າວ່າຂ້ອຍໄດ້ເຮັດວຽກເລີຍຂ້ອຍກໍ່ຈະຫາເງິນໄດ້ທັນທີທັນໃດໂລດ, ຂ້ອຍກໍ່ຈະມີເງິນໃນເວລາອັນສັ້ນໆນີ້.

ທາງເລືອກທີ2: ລໍຖ້າຈົນກະທັ້ງຂ້ອຍໂຮມເງິນພຽງພໍ ແລະ ຈົນກະທັ້ງຂ້ອຍຈັດການກັບວຽກງານໄດ້ຮຽບຮ້ອຍແລ້ວ.



ຄວາມສ່ຽງ: ຂ້ອຍກໍ່ຈະມີຄວາມປອດໄພເມື່ອຂ້ອຍໄປເຖິງທີ່ນັ້ນ. ຂ້ອຍຍັງມີຄວາມສ່ຽງໃນອານາຄົດຂອງຂ້ອຍທີ່ວ່າຂ້ອຍບໍ່ໄດ້ຈົບລະດັບມັດທະຍົມ.

ຜົນໄດ້ຮັບ: ຂ້ອຍຈະພາດໂອກາດທີ່ຈະໄດ້ເງິນໃນເວລາຈໍ້ໆ ແຕ່ວ່າຂ້ອຍຈະໄດ້ຮັບຜົນໃນໄລຍະຍາວເພາະວ່າຂ້ອຍໄດ້ເຮັດວຽກທີ່ດີຖ້າຫາກວ່າຂ້ອຍມີການວາງແຜນ.

**ທາງເລືອກທີ 3: ລໍຖ້າຈົນກະທັ້ງຮຽນຈົບມັດທະຍົມແລ້ວຈຶ່ງເຂົ້າໄປຫາວຽກເຮັດຢູ່ເມືອງຫຼວງ.**

ຄວາມສ່ຽງ: ມັນກໍ່ຈະມີຄວາມຫຍຸ້ງຍາກໃຫ້ກັບຄອບຄົວຂອງຂ້ອຍໃນການດຳລົງຊີວິດຖ້າຫາກວ່າຂ້ອຍລໍຖ້າຈົນກະທັ້ງຂ້ອຍຮຽນຈົບ.

ຜົນໄດ້ຮັບ: ມັນຈະມີຄວາມປອດໄພໃນການເຄື່ອນຍ້າຍແຮງງານຖ້າຫາກວ່າຂ້ອຍມີການວາງແຜນ, ຂ້ອຍກໍ່ຈະໄດ້ເງິນເດືອນດີຖ້າຫາກຂ້ອຍຮຽນຈົບມັດທະຍົມ.

**ບາດກ້າວທີ 5 ເລືອກການຕັດສິນໃຈ.**

ເມື່ອເຈົ້າໄດ້ລວບລວມຂໍ້ມູນຂ່າວສານສຳລັບແບບຢ່າງການຕັດສິນໃຈແລ້ວ, ຈົ່ງອ່ານສິ່ງດັ່ງກ່າວນີ້ອີກເທື່ອໜຶ່ງ, ມັນກໍ່ເປັນແນວຄວາມຄິດທີ່ດີທີ່ເຮົາຈະລໍ້ຖ້າປະມານ 2-3 ມື້ ຫຼື ຫຼາຍອາທິດກ່ອນທີເຮົາຈະຕັດສິນໃຈໃນສິ່ງທີ່ສຳຄັນເພື່ອທີ່ເຮົາຈະເຫັນ, ຖ້າສິ່ງທີ່ເຮົາຄິດຕ່າງໆ ແລະ ຄວາມຮູ້ສຶກຂອງເຮົານັ້ນຫາກປ່ຽນແປງ.

## ກໍລະນີສຶກສາ

ແບ່ງຜູ້ເຂົ້າຮ່ວມເປັນກຸ່ມ 4-6 ຄົນ. ໃຫ້ແຕ່ລະກຸ່ມມີ 2 ກໍນີສຶກສາຈາກເອກະສານແຫຼ່ງຂໍ້ມູນ 19 ຄ : ກໍລະນີສຶກສາຕ່າງໆ ແລະ ສຳເນົາເອກະສານແຫຼ່ງຂໍ້ມູນ 19 ກ: ແບບຢ່າງໃນການຕັດສິນໃຈ.

ໃຫ້ແຕ່ລະກຸ່ມຕື່ມແບບຢ່າງໃສ່ໂດຍອີງໃສ່ກໍລະນີສຶກສາ. ແນະນຳໃຫ້ພວກເຂົາແຕ້ມ ຫຼື ຂຽນໃສ່ກ່ອງ ຫຼັງຈາກ (10 ນາທີ ຜ່ານໄປໃຫ້ແຕ່ລະກຸ່ມເລົ່າຜົນໄດ້ຮັບຂອງພວກເຂົາ.)

## ເມື່ອແບບຢ່າງຍັງບໍ່ພຽງພໍ

ຕໍ່ໄປໃຫ້ຄູຝຶກອະທິບາຍແບບຢ່າງດັ່ງກ່າວໃຫ້ມັນງ່າຍຂຶ້ນໃນການຕັດສິນໃຈ, ແຕ່ຄວາມເປັນຈິງແລ້ວມັນກໍ່ບໍ່ງ່າຍສະເໝີໄປ.

ຈົ່ງອ່ານເລື່ອງດັ່ງຕໍ່ໄປນີ້ດັງໆ:

"ນ. ເອັມ ເປັນຄົນທຸກຍາກທີ່ອາໄສຢູ່ໃນໝູ່ບ້ານຕາມພູເຂົາແຫ່ງໜຶ່ງ. ລາວມີອາຍຸ 15 ປີ ແລະ ລາວມີນ້ອງສາວ 2 ຄົນ ແມ່ຂອງລາວໄດ້ເສຍຊີວິດແລ້ວແລະພໍ່ຂອງລາວກໍ່ເປັນຄົນທີ່ມັກດື່ມເຫຼົ້າຫຼາຍ ບາງຄັ້ງເມື່ອພໍ່ຂອງລາວກັບມາເຮືອນໃນທ້າຍອາທິດ ແລະ ກໍ່ທັບເຄື່ອງເຮືອນພ້ອມທັງຕີ ນ. ເອັມ ແລະ ນ້ອງຂອງລາວ. ນ . ເອັມ ໄດ້ອອກໂຮງຮຽນ ແລະ ໄດ້ເຮັດວຽກຢູ່ໂຮງງານເຕົາດິນຈີ່ເພື່ອຫາເງິນສົ່ງນ້ອງຂອງລາວເຂົ້າໂຮງຮຽນ, ມື້ໜຶ່ງພໍ່ຂອງ ນ. ເອັມ ໄດ້ຕີລາວຢ່າງເຈັບປວດ ແລະ ມີຜູ້ຍິງຄົນໜຶ່ງທີ່ລາວເຮັດວຽກນຳຢູ່ທີ່ໂຮງງານເຕົາດິນຈີ່ຜູ້ທີ່ແຕ່ງງານກັບຕຳຫຼວດ ໄດ້ບອກໃຫ້ ນ. ເອັມ ໄປລາຍງານໃຫ້ເຈົ້າໜ້າທີ່ຮູ້ເລື່ອງທີ່ພໍ່ຂອງລາວຕີນັ້ນ. ຕຳຫຼວດຈະໄດ້ຈັບພໍ່ ນ. ເອັມ."

ມັນກໍ່ເປັນການຍາກສຳລັບ ນ. ເອັມ ທີ່ນຳໃຊ້ແບບຢ່າງໃນການຕັດສິນໃຈຂອງລາວ.ລາວຄວນຈະປະຕິບັດຕາມບາດກ້າວ 1 "ຂ້ອຍຄວນລາຍງານຫາເຈົ້າໜ້າທີ່ບໍ່ກ່ຽວກັບເລື່ອງພໍ່ຂອງຂ້ອຍຕີຂ້ອຍ" ບາດກ້າວທີ 2. ມັນກໍ່ເປັນເລື່ອງທີ່ຫຍຸ້ງຍາກສັບສົນເພາະວ່າມັນມີຫຼາຍເລື່ອງທີ່ຈະຕ້ອງໄດ້ພິຈາລະນາ. ລາວກໍ່ຮູ້ວ່າພໍ່ຂອງລາວຈະຕ້ອງໄດ້ເຂົ້າຄຸກດົນປານໃດ ຫຼື ບໍ່ລາວກໍ່ຈະດຳລົງຊີວິດຢູ່ໃນເຮືອນໂດຍປະສະຈາກພໍ່ຂອງລາວ ຫຼື ບໍ່ລາວກໍ່ຈະອາໄສຍາດພີ່ນ້ອງຜູ້ທີ່ສາມາດເບິ່ງແຍງນ້ອງສາວຂອງລາວໄດ້ ແລະ ບໍ່ດັ່ງນັ້ນລາວກໍ່ຈະສາມາດລ້ຽງ

ດູນ້ອງສາວຂອງລາວໂດຍປະສະຈາກພໍ່. ເຖິງຢ່າງໃດກໍ່ຕາມມັນກໍ່ເປັນອັນຕະລາຍສຳລັບລາວທີ່ຈະຖາມຄຳຖາມເຫຼົ່ານີ້, ໃນກໍລະນີນີ້ຖ້າຫາກວ່າພໍ່ຂອງລາວຮູ້ລາວກໍ່ຈະຖືກລົງໂທດໃນການເອົາຄຳຖາມດັ່ງກ່າວໄປຖາມຄົນອື່ນ.

**ບາດກ້າວທີ 3.**

ຈົ່ງພິຈາລະນາສອງທາງເລືອກດັ່ງກ່າວນີ້.

1. ເອັມ ລາຍງານຕຳຫຼວດກ່ຽວກັບພໍ່ຂອງລາວ.
2. ເອັມ ບໍ່ຕ້ອງລາຍງານຫຍັງ.

**ບາດກ້າວທີ 4.**

ທາງເລືອກດັ່ງກ່າວນີ້ມີຄວາມສ່ຽງສະຫຼັບຊັບຊ້ອນຫຼາຍ, ໜຶ່ງໃນຈຳນວນຂອງທາງເລືອກດັ່ງກ່າວກໍ່ຍາກທີ່ຈະຄາດຄະເນ.

**ທາງເລືອກທີ 1. ນ. ເອັມ ລາຍງານເລື່ອງພໍ່ຂອງລາວໃຫ້ຕຳຫຼວດ.**

ຄວາມສ່ຽງ: ພໍ່ຂອງເອັມກໍ່ຈະໄດ້ຖືກໂທດ, ເມື່ອລາວໄດ້ຖືກປ່ອຍອອກມາລາວກໍ່ຈະໂກດຮ້າຍ ແລະ ລາວຈະຂ້າ ນ. ເອັມ.

ລາວຈະກາຍເປັນນັກໂທດ ເອັມ ແລະ ນ້ອງສາວຂອງລາວກໍ່ຈະຖືກບັງຄັບໃຫ້ໄປຢູ່ນຳພີ່ນ້ອງ, ນ້ອງສາວຂອງລາວກໍ່ຈະໄດ້ອອກໂຮງຮຽນ, ນ.ເອັມ ກໍ່ຈະມີຄວາມກັງວົນກັບນ້ອງສາວຫຼ້າຂອງລາວທີ່ຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດລາວບໍ່ເຊື່ອພີ່ນ້ອງຂອງລາວ.

ບອກໃຫ້ແຕ່ລະກຸ່ມຮູ້ກ່ຽວກັບບັນດາຄວາມສ່ຽງ ແລະ ຜົນໄດ້ຮັບຕ່າງໆ.

**ທາງເລືອກທີ 2: ເອັມບໍ່ລາຍງານເລື່ອງພໍ່ຂອງລາວຕີລາວໃຫ້ຕຳຫຼວດ.**

ຄວາມສ່ຽງ: ພໍ່ຂອງລາວກໍ່ຍັງຈະສືບຕໍ່ຕີ ເອັມ ແລະ ນ້ອງຂອງລາວ,ຈົນກະທັ້ງເມື່ອລາວເຖົ້າ ແລະ ເສຍຊີວິດ.

ນ້ອງສາວຫຼ້າຂອງ ນ.ເອັມ ຈະແລ່ນໜີອອກຈາກເຮືອນໂດຍບໍ່ໄດ້ບອກໃຜ ຫຼັງຈາກທີ່ລາວຖືກຕີ ແລະ ມີຄວາມສ່ຽງຕໍ່ກັບການຄ້າມະນຸດ.

ໃຫ້ແຕ່ລະກຸ່ມຄິດເຖິງຄວາມສ່ຽງ ແລະ ຜົນໄດ້ຮັບ.

**ບາດກ້າວທີ 5**

ຕໍ່ໄປນີ້ໃຫ້ຄູຝຶກອະທິບາຍວ່າ ມັນກໍ່ເປັນການຍາກໃຫ້ ນ.ເອັມ ໃນການຕັດສິນໃຈ.ເປັນຫຍັງເລື່ອງນີ້ມັນຈຶ່ງຍາກ.

- ມີຫຼາຍເລື່ອງທີ່ຈະຕ້ອງຕັດສິນໃຈເກີນກ່ວາອຳນາດຂອງລາວ.
- ລາວຕົກຢູ່ໃນຄວາມອັນຕະລາຍຕະຫຼອດເວລາ.
- ການທີ່ຕົກຢູ່ໃນຄວາມອັນຕະລາຍດັ່ງກ່າວສາມາດເຮັດໃຫ້ລາວມີຄວາມຫຍຸ້ງຍາກໃນການຄິດຢ່າງຈະແຈ້ງໄດ້.
- ມັນກໍ່ບໍ່ເປັນເລື່ອງງ່າຍທີ່ຈະຕອບ.

ຕໍ່ໄປນີ້ຄູຝຶກຄວນອະທິບາຍວ່າມັນອາດຈະເປັນເລື່ອງແປກທີ່ຜູ້ເຂົ້າຮ່ວມທີ່ຈະໄດ້ຖືກຖາມໃນການຕັດສິນໃຈ ແລະແລ້ວກໍ່ສະແດງອອກມາວ່າສິ່ງດັ່ງກ່າວນີ້ບໍ່ໄດ້ຮັບຜົນສະເໝີໄປ. ເຫດຜົນທີ່ໄດ້ຍົກຂຶ້ນມານັ້ນກໍ່ເພື່ອສະແດງໃຫ້ຜູ້ເຂົ້າຮ່ວມເບິ່ງວ່າ, ຊີວິດຂອງຄົນເຮົານັ້ນມັນມີຄວາມສະຫຼັບຊັບຊ້ອນຊໍ່າໃດ. ຂະບວນການຕັດສິນ



ໃຈຊ່ວຍເຕືອນໃຫ້ພວກເຮົາທີ່ຈະໄດ້ມີການຕັດສິນໃຈ, ການຕັດສິນໃຈທັງໝົດ ຫຼື ບັນຫາຕ່າງໆກໍ່ບໍ່ໄດ້ຮັບການແກ້ໄຂສະເໝີໄປ.

## ການສົນທະນາ

ໃຫ້ຜູ້ເຂົ້າຮ່ວມຢຸດ ແລະ ຄິດກ່ຽວກັບຮູບແບບການຕັດສິນໃຈ.

ຖາມຄຳຖາມ:

- ຮູບແບບການຕັດສິນໃຈຈະໄດ້ຮັບຜົນດີໃນບາງກໍລະນີເທົ່ານັ້ນບໍ?
- ເຈົ້າສາມາດຍົກຕົວຢ່າງໄດ້ບໍວ່າການຕັດສິນໃຈອັນໃດທີ່ມັນໄດ້ຊ່ວຍເຈົ້າທີ່ຜ່ານມາ?
- ແລະຍົກຕົວຢ່າງໄດ້ບໍ່ວ່າ ການຕັດສິນໃຈອັນໃດທີ່ມັນບໍ່ໄດ້ຊ່ວຍເຈົ້າ?
- ເຈົ້າໄດ້ນຳເອົາແບບຢ່າງດັ່ງກ່າວໄປນຳໃຊ້ກັບຊີວິດຂອງເຈົ້າບໍ? ເປັນຫຍັງຈຶ່ງໄດ້ນຳໃຊ້? ເປັນຫັຍງຈຶ່ງບໍ່ໄດ້ນຳໃຊ້?.

## ຂຽນບັນທຶກລາຍວັນ

•ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ແຕ້ມໃສ່ປຶ້ມບັນທຶກປະຈຳວັນປະມານ 10 ນາທີ ຫົວຂໍ້ໃດກໍ່ໄດ້ທີ່ພວກເຂົາຕ້ອງການຢາກແຕ້ມ ຫຼື ຂຽນ

### ສະຫຼຸບບົດຮຽນ

- ແບບຢ່າງໃນການຕັດສິນໃຈສາມາດຊ່ວຍໃຫ້ເຮົາຄິດໄດ້ຢ່າງຈະແຈ້ງ ແລະ ລະມັດລະວັງໃນການຕັດສິນໃຈຕ່າງໆ.
- ມີ 5 ບາດກ້າວທີ່ພວກເຮົານຳໃຊ້ໃນການຕັດສິນໃຈຄື:
- ບາດກ້າທີ1 ອະທິບາຍການຕັດສິນໃຈຂອງເຈົ້າເປັນລັກສະນະຄຳຖາມ.
- ບາດກ້າວທີ 2 ການຮຽນຮູ້ເພີ່ມຕື່ມ
- ບາດກ້າວທີ 3 ລາຍການທາງເລືອກຕ່າງ.
- ບາດກ້າວທີ 4 ການປະເມີນຄວາມສ່ຽງ ແລະ ຜົນໄດ້ຮັບ.
- ບາດກ້າວທີ 5 ເລືອກການຕັດສິນໃຈ.
- ຮູບແບບການຕັດສິນໃຈກໍ່ໃຊ້ບໍ່ໄດ້ໝົດທຸກການຕັດສິນໃຈດອກ.
- ມັນກໍ່ເປັນການຍາກທີ່ຈະຕັດສິນໃຈເມື່ອເຮົາບໍ່ໄດ້ຢູ່ໃນເຫດການທີ່ປອດໄພ ຫຼື ເມື່ອເຮົາມີຄວາມຮູ້ສຶກຢ້ານກົວ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈນຳທຸກຄົນທີ່ເຂົ້າຮ່ວມພົບກັນໃນຄັ້ງໜ້າ.ທຸກໆຄົນແມ່ນຈະໄດ້ຮັບດາວຄົນລະ 1 ດວງ.

(ຖ້າວ່າເດັກນ້ອຍໃນກຸ່ມຂອງເຈົ້າຫາກບໍ່ເຂົ້າໃຈກໍ່ຄວນອະທິບາຍໃຫ້ພວກເຂົາຕື່ມໃນບາດກ້າວຕໍ່ໄປ ຫາກອ່ານໜັງສືບໍ່ເປັນກໍ່ບໍ່ຕ້ອງເຮັດບາດກ້າວດັ່ງຕໍ່ໄປນີ້ ໃຫ້ສຳເລັດແຕ່ວ່າພວກເຮົາຕ້ອງຖາມໃຫ້ພວກເຂົາຄິດກ່ຽວກັບຮູບແບບການຕັດສິນໃຈເພື່ອທີ່ຈະເອົາໄປນຳໃຊ້ເຂົ້າໃນການຕັດສິນໃຈຂອງພວກເຂົາ)

ບອກໃຫ້ຜູ້ເຂົ້າຮ່ວມສຳເນົາແບບຢ່າງດັ່ງກ່າວນີ້ໃສ່ເຈ້ຍ ແລະ ບອກໃຫ້ພວກເຂົາຖືເອົາເມືອເຮືອນເພື່ອທີ່ຈະມີໂອກາດໄດ້ນຳໃຊ້ກ່ອນບົດຮຽນໃໝ່ໃນມື້ຕໍ່ໄປ. ຖ້າພວກເຂົາມີເວລາກໍ່ໃຫ້ພວກເຂົາຕື່ມຮູບແບບການຕັດສິນໃຈ ແລະ ຖືມາໃນບົດຮຽນຄັ້ງຕໍ່ໄປ.

## 19 ເອກະສານອ້າງອີງ 19 ກ: ຮູບແບບການຕັດສິນໃຈ








## ເອກະສານອ້າງອີງ 19 ຂ: ແບບຢ່າງທີ່ໃຊ້ໃນການຕັດສິນໃຈສຳລັບການເຄື່ອນຍ້າຍແຮງງານທີ່ປອດໄພ 19



# 19 ເອກະສານອ້າງອີງ 19 ຄ: ກໍລະນີສຶກສາສໍາລັບການຕັດສິນໃຈ

### ເລື່ອງທີ 1

ນ. ເອັນ ມາຈາກຄອບຄົວໃຫຍ່ຄອບຄົວໜຶ່ງລາວອາໃສຢູ່ກັບພໍ່ແມ່, ພໍ່ເຖົ້າແມ່ເຖົ້າຂອງລາວ ແລະ ລາວມີເອື້ອຍອ້າຍນ້ອງຢູ່ 4 ຄົນ, ລາວເຮັດວຽກຢູ່ທີ່ຮ້ານກິນດື່ມແຫ່ງໜຶ່ງຢູ່ໃນເມືອງ. ມື້ໜຶ່ງມີຄົນຜູ້ໜຶ່ງມາແນະນໍາຕົວຂອງເຂົາໃຫ້ລາວ ແລະ ເຂົາບອກວ່າເຂົາເຮັດວຽກຢູ່ໂຮງງານແຫ່ງໜຶ່ງທີ່ຢູ່ຕອນໃຕ້ຂອງປະເທດເຊິ່ງລາວສາມາດຊ່ວຍ ເອັນ ໄປເຮັດວຽກຮັບຈ້າງທໍຜ້າຢູ່ທີ່ນັ້ນ. ລາວເວົ້າວ່າຈະຈ່າຍເງິນເດືອນທີ່ເໝາະສົມ, ແລະແລ້ວ ເອັນ ກໍ່ຈະຕ້ອງຫາທີ່ພັກອາໄສດ້ວຍຕົວເອງ. ຊາຍຄົນນັ້ນໄດ້ເອົາເບີໂທຕິດຕໍ່ຂອງລາວໃຫ້ເອັນ, ເອັນມີພີ່ນ້ອງຄົນໜຶ່ງທີ່ອາໄສຢູ່ໃນເມືອງດຽວກັນເຊິ່ງລາວຫາກໍ່ຮຽນຈົບມັດທະຍົມ ແລະ ຍັງບໍ່ທັນໄດ້ມີວຽກເຮັດ ລາວຕ້ອງການຢາກຊ່ວຍເຫຼືອຕົນເອງ ແລະ ໂຮມເງິນເພື່ອສົ່ງໃຫ້ກັບພໍ່ແມ່ຂອງລາວ. ນ.ເອັນພະຍາຍາມຕັດສິນໃຈວ່າລາວຈະຍອມຮັບຂໍ້ສະເໜີຂອງນາຍໜ້າ ຫຼື ບໍ່.

........................................................................................................................................

### ເລື່ອງທີ 2

ທ. ດີ ມາຈາກຄອບຄົວທີ່ທຸກຍາກລາວເປັນພຽງແຕ່ສະມາຊິກຄົນໜຶ່ງໃນຄອບຄົວຜູ້ທີ່ໄດ້ເຂົ້າໂຮງຮຽນ, ລາວໄດ້ຄະແນນດີ ແລະ ນາຍຄູຂອງລາວກໍ່ຮັກແພງລາວຫຼາຍ ພໍ່ແມ່ຂອງລາວກໍ່ເຮັດວຽກໜັກແຕ່ບໍ່ໄດ້ຮັບເງິນ ຫຼາຍ. ລາວຕ້ອງການຢາກຊ່ວຍຄອບຄົວຂອງລາວແທ້ໆໃນການຫາເງິນ. ທ. ດີ ຍັງເຫຼືອໜຶ່ງປີທີ່ຈະຈົບຮຽນ, ລາວພະຍາຍາມຕັດສິນໃຈວ່າລາວຈະອອກໂຮງຮຽນເພື່ອໄປເຮັດວຽກກໍ່ສ້າງທີ່ບ້ານຕົນເອງ.



# ບົດທີ 20: ການຮຽນຮູ້ເພີ່ມເຕີມ 20

*ບົດຮຽນດັ່ງກ່າວນີ້ຊ່ວຍເຈົ້າໃນການປະຕິບັດບາດກ້າວທີ2: ຮຽນຮູ້ເພີ່ມເຕີມຈາກແບບຢ່າງທີ່ນໍາໃຊ້ໃນການຕັດສິນໃຈ.*

**ຈຸດປະສົງ: ເພື່ອໃຫ້ຜູ້ເຂົ້າຮ່ວມຈະໄດ້ຄົ້ນຄວ້າຫຼາຍວິທີທາງໃນການຮຽນຮູ້ເພີ່ມເຕີມກ່ຽວກັບການເຄື່ອນຍ້າຍແຮງງານ, ໂດຍການຕັ້ງຄໍາຖາມເພື່ອເຕືອນຕົນເອງໃນການຕັດສິນໃຈ.**

**ເວລາ:**

75 ນາທີ

**ອຸປະກອນ**

- ໃຊ້ເຈ້ຍແຜ່ນໃຫຍ່ ແລະ ບິກຈໍານວນໜຶ່ງ
- ສໍາເນົາ 20 ກ: ການຕັ້ງຄໍາຖາມຕ່າງໆ ໃຫ້ສໍາເນົາປະມານເຄິ່ງໜຶ່ງຂອງຜູ້ເຂົ້າຮ່ວມ (ແຕ່ລະກຸ່ມຈະຕ້ອງໄດ້ແບ່ງເປັນຄູ່ເພື່ອນໍາໃຊ້ຄໍາຖາມດັ່ງກ່າວ).
- ປື້ມນ້ອຍຜູ້ນໍາທາງທີ່ສະຫຼາດ

## ການແນະນໍາ:

**ຍິນດີຕ້ອນຮັບ:**

ຄູຝຶກເອີ້ນຊື່ຜູ້ເຂົ້າຮ່ວມ, ແລ້ວຍື່ນເຈ້ຍລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ຄູຝຶກນໍາໃຊ້ເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ມີໃຜແດ່ໄດ້ຕື່ມຂໍ້ຄວາມໃສ່ແບບຢ່າງໃນການຕັດສິນໃຈໃນອາທິດແລ້ວນີ້? ຖ້າມີ ຈົ່ງເວົ້າສູ່ກັນຟັງວ່າພວກເຂົາໄດ້ເຮັດແນວໃດ

## ການຮຽນເພີ່ມຕື່ມ

ຖ້າມີໃຜສາມາດອະທິບາຍ 5 ບາດກ້າວໃນການຕັດສິນໃຈ?

ມີ 5 ບາດກ້າວຄື:

- ບາດກ້າວທີ 1 . ອະທິບາຍການຕັດສິນໃຈຂອງເຈົ້າເປັນຄໍາຖາມ.
- ບາດກ້າວທີ 2 . ການຮຽນຮູ້ເພີ່ມເຕີມ
- ບາດກ້າວທີ 3 . ຊຽນລາຍການຕ່າງໆຂອງທາງເລືອກອອກມາ.
- ບາດກ້າວທີ 4 . ການປະເມີນຄວາມສ່ຽງ ແລະ ຜົນໄດ້ຮັບ.
- ບາດກ້າວທີ 5 . ເລືອກເອົາການຕັດສິນໃຈ.

ໃຫ້ຜູ້ເຂົ້າຮ່ວມເອົາປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພອອກມາ ແລະ ເບິ່ງບັນດາແບບຢ່າງອີກເທື່ອໜຶ່ງ.

ຈຶ່ງອະທິບາຍຕື່ມອີກວ່າບົດຮຽນ 2 ຕອນທີ່ພວກເຮົາຈະໄດ້ຮຽນໃນຕໍ່ໜ້າແມ່ນພວກເຮົາຈະໄດ້ຮຽນຮູ້ວິທີການລວບລວມຂໍ້ມູນ ເພື່ອຊ່ວຍໃຫ້ພວກເຮົາໃນການຕັດສິນໃຈນັ້ນແນວໃດ?.

## ພວກເຮົາຕ້ອງການຮຽນຮູ້ຫຍັງແດ່? ຂຽນຄຳຖາມເຫຼົ່ານັ້ນອອກ

ແບ່ງຜູ້ເຂົ້າຮ່ວມອອກເປັນ 4 ກຸ່ມ. ເອົາເຈ້ຍແຜ່ນໃຫຍ່ ແລະ ບິກໃຫ້ແຕ່ລະກຸ່ມ. ໃຫ້ແຕ່ລະກຸ່ມຄິດເຖິງບັນດາຄຳຖາມຕ່າງໆສິ່ງທີ່ພວກເຂົາຕ້ອງການຮູ້ຄຳຕອບ ເພື່ອທີ່ຈະເອົາໄປນຳໃຊ້ໃນການເຄື່ອນຍ້າຍແຮງງານ, ແຕ່ລະກຸ່ມຈະໄດ້ເນັ້ນໜັກ ແລະ ສຸມໃສ່ຄຳຖາມຕ່າງໆທີ່ພົວພັນເຖິງຄວາມແຕກຕ່າງໃນການເຄື່ອນຍ້າຍແຮງງານແຕ່ລະຂັ້ນຕອນ. ແຕ່ລະກຸ່ມຈະຕ້ອງໄດ້ສຸມໃສ່ຫົວຂໍ້ດັ່ງລຸ່ມນີ້.

- ກຸ່ມທີ 1. ຕັ້ງຄຳຖາມກ່ຽວກັບການຈະດຳລົງຊີວິດຢູ່ປະເທດປາຍທາງແນວໃດ.
- ກຸ່ມທີ 2. ຕັ້ງຄຳຖາມກ່ຽວກັບການເດີນທາງ (ຈະໄປທີ່ປະເທດປາຍທາງແນວໃດ, ຈະກັບມາໄດ້ແນວໃດ, ເມື່ອໄປເຖິງທີ່ໝາຍແລ້ວຈະມີການເຄື່ອນຍ້າຍໄປໃສແດ່).
- ກຸ່ມທີ 3. ຕັ້ງຄຳຖາມກ່ຽວກັບການເຮັດວຽກຕ່າງໆ.
- ກຸ່ມທີ 4. ຕັ້ງຄຳຖາມກ່ຽວກັບການມີເອກະສານທີ່ກ່ຽວຂ້ອງໃນການເດີນທາງ.

ຫຼັງຈາກ 10 ນາທີ ຜ່ານໄປໃຫ້ພວກເຂົາເອົາຄຳຖາມເຫຼົ່ານັ້ນມາສົນທະນາກັນ. ຖ້າຫາກວ່າຜູ້ເຂົ້າຮ່ວມມີຄຳຖາມເພີ່ມເຕີມກໍ່ໃຫ້ພວກເຂົາຂຽນໃສ່ໃນລາຍການນັ້ນເລີຍ.

ຕໍ່ໄປນີ້ແມ່ນໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບຄົນໃດຄົນໜຶ່ງທີ່ຢູ່ໃນຊຸມຊົນຂອງພວກເຂົາ, ຜູ້ທີ່ມີຄວາມສາມາດຕອບຄຳຖາມເລົ່ານັ້ນໄດ້. ບຸກຄົນເຫຼົ່ານັ້ນອາດແມ່ນ:

- ຄົນຜູ້ທີ່ເຄີຍເຄື່ອນຍ້າຍແຮງງານມາກ່ອນ.
- ພະນັກງານທ້ອງຖິ່ນ.
- ນາຍໜ້າຈັດຫາງານ.
- ພະນັກງານໂຄງການ.

ບັນດາກຸ່ມເຫຼົ່ານັ້ນກໍ່ຈະໄດ້ໄປຢ້ຽມຢາມສະມາຊິກຄົນອື່ນໆຢູ່ໃນຊຸມຊົນ, ເພື່ອທີ່ຈະຮຽນຮູ້ເພີ່ມເຕີມກ່ຽວກັບການເຄື່ອນຍ້າຍແຮງງານ, ຖ້າຜູ້ເຂົ້າຮ່ວມຫາກຮູ້ຈັກກັບຄົນໃດຄົນໜຶ່ງທີ່ຢູ່ໃນລາຍການທີ່ໄດ້ຂຽນມາຂ້າງເທິງນັ້ນທີ່ພວກເຂົາເຕັມໃຈຈະມາໂອ້ລົມນຳ, ຖ້າພວກເຂົາຫວ່າງກໍ່ໃຫ້ເຮົາຕິດຕໍ່ກັບຄົນຜູ້ນັ້ນ. ຄູຝຶກຄວນສຶກສາຄົນໃນຊຸມຊົນນັ້ນຜູ້ທີ່ອາດຕ້ອງການຢາກມາແລກປ່ຽນຄວາມຮູ້ ແລະ ປະສົບການກັບບັນດາຜູ້ເຂົ້າຮ່ວມ.

ຂໍໃຫ້ອາສາສະມັກຄົນໜຶ່ງມາຂຽນຄຳຖາມຕ່າງໆໃສ່ເຈ້ຍແຜ່ນໃຫຍ່ ເຊິ່ງພວກເຂົາສາມາດນຳໄປພົບຄົນຜູ້ນັ້ນໄດ້. ບອກໃຫ້ຜູ້ເຂົ້າຮ່ວມຮັກສາເຈ້ຍດັ່ງກ່າວນີ້ໄວ້ ແລະ ສຳເນົາເອົາໄວ້ຖືໄປນຳເມື່ອພວກເຂົາໄປພົບຄົນຜູ້ນັ້ນເພື່ອທີ່ຈະໃຊ້ໄວ້ຖາມໃນບົດຮຽນຕໍ່ໜ້າ.

## ການຝຶກຫັດກ່ຽວກັບການຖາມຄຳຖາມ

ແບ່ງກຸ່ມຜູ້ເຂົ້າຮ່ວມໃຫ້ເປັນຄູ່ເອົາສຳເນົາເອກະສານແຫຼ່ງຂໍ້ມູນ 20 ກ: ຄຳຖາມຕ່າງໆ ໃຫ້ອາສາສະມັກຄົນໜຶ່ງອ່ານແບບຟອມດັ່ງກ່າວນັ້ນດັງໆ.

ໃຫ້ແຕ່ລະຄູ່ຝຶກຫັດໃນການຖາມຄຳຖາມກ່ຽວກັບການເຄື່ອນຍ້າຍແຮງງານ ໂດຍການນຳໃຊ້ຂໍ້ມູນກ່ຽວກັບວ່າຈະຖາມຄຳຖາມດັ່ງກ່າວນັ້ນແນວໃດ.

## ການສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມທັງໝົດແບ່ງເປັນກຸ່ມ 8-12 ຄົນ. ໃຫ້ແຕ່ລະກຸ່ມກະກຽມການສະແດງບົດບາດສົມມຸດເປັນຜູ້ຊັກຊວນ. (ຖ້າມີຫຼາຍກ່ວາ 2 ກຸ່ມພວກເຂົາກໍ່ສາມາດຫຼິ້ນເລື່ອງໜຶ່ງໄດ້ 2 ເທື່ອ).

ກຸ່ມທີ່ 1. ມີເພື່ອນສອງຄົນ, ຜູ້ທີໜຶ່ງໄດ້ເຂົ້າມາຫາອີກຜູ້ໜຶ່ງເພື່ອມາແນະນຳວຽກຢູ່ທີ່ໂຮງງານປາກະປ໋ອງທີ່ປະເທດໄທ, ມີເງິນເດືອນສູງ. ແລະ ລາວຄິດຢາກຈະອອກໂຮງຮຽນ ແລະ ຈະໄປຢືມເງິນ 300 ໂດລາເພື່ອຈ່າຍໃຫ້ນາຍໜ້າທີ່ຈະພາລາວໄປເຮັດວຽກດັ່ງກ່າວ. ເຈົ້າຈະແນະນຳຊາຍຄົນນີ້ແນວໃດ?

ກຸ່ມທີ 2. ມີເພື່ອນ ຢູ່ 2 ຄົນ, ຜູ້ໜຶ່ງໄດ້ເຂົ້າມາຫາອີກຜູ້ໜຶ່ງເພື່ອແນະນຳວຽກ. ຍິງຄົນນັ້ນລາວໄດ້ເຫັນການໂຄສະນາວຽກງານຕັດຫຍິບຢູ່ໃນໜັງສືພິມ, ມີເງິນເດືອນສູງ. ລາວບໍ່ຮູ້ວິທີຕັດຫຍິບແຕ່ວ່າຢູ່ໃນການໂຄສະນານັ້ນບໍ່ໄດ້ຕ້ອງການຜູ້ທີ່ມີປະສົບການ. ການໂຄສະນາດັ່ງກ່າວກໍ່ບໍ່ໄດ້ໃຫ້ລາຍລະອຽດກ່ຽວກັບວ່າໂຮງງານນັ້ນຕັ້ງຢູ່ໃສພຽງແຕ່ມີເບີໂທຂອງນາຍໜ້າຕິດຢູ່ຢ່າງດຽວ. ເຈົ້າຈະແນະນຳໃຫ້ຍິງຄົນນີ້ແນວໃດ?

ໃຫ້ແຕ່ລະກຸ່ມສ້າງການສະແດງບົດບາດສົມມຸດຂອງຕົນເອງ 5 ນາທີ ແລະແລ້ວກໍ່ໃຫ້ສະແດງໃຫ້ກັນເບິ່ງ.

### ສະຫຼຸບບົດຮຽນ

- ຮູບແບບໃນການຕັດສິນໃຈສາມາດຊ່ວຍໃຫ້ທ່ານຕັດສິນໃຈວ່າຈະເຄື່ອນຍ້າຍແຮງງານ ຫຼື ບໍ?
- ບາດກ້າວທີ 2 ຂອງແບບຢ່າງໃນການຕັດສິນໃຈແມ່ນການຮຽນຮູ້ເພີ່ມເຕີມ.
- ເຈົ້າອາດຕ້ອງການຮຽນຮູ້ເພີ່ມເຕີມກ່ຽວກັບການດຳລົງຊີວິດຢູ່ປະເທດປາຍທາງ, ຈະໄປທີ່ນັ້ນໄດ້ແນວໃດ, ຈະກັບມາໄດ້ແນວໃດ, ມີວຽກງານແບບໃດແດ່ທີ່ຢູ່ທີ່ນັ້ນ ແລະ ມີເອກະສານອັນໃດແດ່ທີ່ຈະຕ້ອງໄດ້ກະກຽມເພື່ອໄປເຮັດວຽກທີ່ນັ້ນ.
- ບຸກຄົນດັ່ງຕໍ່ໄປນີ້ອາດຕອບຄຳຖາມກ່ຽວກັບການເຄື່ອນຍ້າຍແຮງງານໃຫ້ເຮົາໄດ້.
    - ຄົນຜູ້ທີ່ເຄີຍເຄື່ອນຍ້າຍແຮງງານມາກ່ອນ
    - ພະນັກງານທ້ອງຖິ່ນ
    - ນາຍໜ້າຈັດຫາງານ.
    - ພະນັກງານໂຄງການ

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ເຈົ້າຈະຕ້ອງໄດ້ນັດພົບກັນໃນສະໂມສອນເດັກເພື່ອທີ່ຈະນຳໃຊ້ຄຳຖາມຕ່າງໆ ແລະ ຫຼັງຈາກນັ້ນກໍ່ຕິດຕໍ່ບັນດາຜູ້ເຂົ້າຮ່ວມເພື່ອທີ່ຈະໃຫ້ພວກເຂົາຢືນຢັນເວລາ ແລະ ສະຖານທີ່

# 20 ເອກະສານອ້າງອີງ 20 ກ: ການຕັ້ງຄຳຖາມ

*ຄຳຖາມດັ່ງກ່າວແມ່ນອີງໃສ່ການເປັນກະບອກສຽງໃນການປ່ຽນແປງເຄື່ອງມືດັ່ງກ່າວ.*

ການແນະນຳຕ່າງໆ ຄວນປະຕິບັດໂດຍຫຼັກສູດການເຄື່ອນຍ້າຍແຮງງານທີ່ປອດໄພຂອງສະໂມສອນເດັກ ເມື່ອບັນດາຜູ້ເຂົ້າຮ່ວມກ່າວເຖິງຄົນຜູ້ທີ່ຮູ້ກ່ຽວກັບການເຄື່ອນຍ້າຍແຮງງານ (ອີງໃສ່ຂໍ້ມູນດັ່ງລຸ່ມນີ້).

## ການກະກຽມຕ່າງໆ

ຄວນເອົາໃຈໃສ່ໃນເວລາອັນເໝາະສົມໃນການເຂົ້າຫາຜູ້ຖືກເຄາະຮ້າຍ, ເບິ່ງວ່າທ້າວ ແລະ ນາງຈະເວົ້າກັນໃນກຸ່ມ. ຕົວຢ່າງວ່າ: ບໍ່ຄວນເຂົ້າຫາໃນເວລາທີ່ເຂົາກຳລັງເຮັດວຽກຢູ່ ແລະ ເຮັດໃຫ້ເຂົາມີບັນຫາກັບນາຍຂອງພວກເຂົາ. ບໍ່ຄວນເຂົ້າຫາຊາວນາຜູ້ທີ່ເຂົາອິດເມື່ອຍຈາກການເຮັດວຽກໜັກ.

## ຂໍ້ແນະນຳກ່ຽວກັບຈາບັນ

**ການປົກປ້ອງຜູ້ທີ່ຖືກເຄາະຮ້າຍ.**

- ບໍ່ຕ້ອງຖາມເຖິງອາດີດທີ່ຂົມຂື່ນຂອງເຂົາ.
- ບໍ່ໃຫ້ສຳພາດເດັກນ້ອຍ.

**ປົກປ້ອງຜູ້ທີ່ມາຮ່ວມຢູ່ໃນສະໂມສອນເດັກ.**

- ບໍ່ໃຫ້ນັດພົບກັບຜູ້ທີ່ຖືກກ່າວຫາ, ບາງເທື່ອເຂົາອາດບໍ່ພໍໃຈກັບຄຳຖາມດັ່ງກ່າວ(ຍົກຕົວຢ່າງ ບໍ່ຕ້ອງສຳພາດຜູ້ທີ່ພວກເຂົາອາດເປັນນາຍໜ້າ).
- ບໍ່ອະນຸຍາດໃຫ້ເດັກນ້ອຍຢູ່ກັບຜູ້ໃຫ່ຍໃນຫ້ອງໂດຍລຳພັງ.

**ຜູ້ເຂົ້າຮ່ວມທັງໝົດຕ້ອງມາຮ່ວມໂດຍສະໝັກໃຈ.**

- ຈົ່ງບອກໃຫ້ຄົນຜູ້ທີ່ເຈົ້າຈະໄປຢ້ຽມນັ້ນເພື່ອຖາມຄຳຖາມຕ່າງໆ,ວ່າເປັນຫັຍງເຈົ້າຈຶ່ງມາ, ໃຜແດ່ມາກັບເຈົ້າ ແລະ ຄຳຖາມຂອງເຈົ້າແມ່ນຫຍັງ.
- ເຊັ່ນດຽວກັນກັບຜູ້ເຂົ້າຮ່ວມຂອງສະໂມສອນເດັກ ບໍ່ມາຮ່ວມກໍ່ໄດ້ຖ້າພວກເຂົາບໍ່ຕ້ອງການຢາກຈະມາ.

**ການເຄົາລົບຜູ້ທີ່ຖືກກ່າວຫາ.**

- ຕ້ອງໃຫ້ຄວາມເຄົາລົບຕໍ່ກັບຜູ້ທີ່ຕອບຄຳຖາມຂອງເຈົ້າ.

**ຄວນຫລີກລ່ຽງຄວາມຄາດຫວັງທີ່ບໍ່ເປັນຈິງ.**

- ຜູ້ທີ່ຕອບຄຳຖາມຂອງເຈົ້າຄວນຮູ້ວ່າພວກເຂົາຈະບໍ່ໄດ້ຮັບເງິນ ຫຼື ຜົນປະໂຫຍດອື່ນໆໃນວຽກດັ່ງກ່າວ.

**ການເກັບຮັກສາຄວາມລັບ.**

- ເມື່ອເຈົ້າຂຽນຄຳຕອບກໍ່ບໍ່ຄວນໃຫ້ຂຽນຊື່ຂອງຜູ້ຕອບລົງໃສ່ ບໍ່ໃຫ້ໄປລົມກັບຄົນນອກກ່ຽວກັບຊື່ຂອງຜູ້ຕອບ.
- ຈົ່ງເຕືອນຜູ້ເຂົ້າຮ່ວມວ່າບໍ່ໃຫ້ໄປເລົ່າຕໍ່ ກ່ຽວກັບຄົນຜູ້ນັ້ນທີ່ໄດ້ເວົ້າອອກມາ.



## ການຕັ້ງຄຳຖາມທີ່ດີ

**ຕ້ອງຕັ້ງຄຳຖາມຢ່າງສຸພາບ.**

- ຈົ່ງຂອບໃຈນຳຜູ້ເຂົ້າຮ່ວມທີ່ມາ.

**ບໍ່ຕ້ອງຕັດສິນຄົນອື່ນ.**

- ຄວນຫຼີກລ່ຽງສຳນຽງທີ່ເປັນການຕັດສິນ ບໍ່ຄວນສິ່ງສຽງທີ່ເປັນການນາບຄູ່.

**ຈົ່ງທຳຕົວໃຫ້ເປັນຜູ້ຟັງທີ່ດີ.**

- ສະແດງຄວາມເມດຕາສົງສານຕໍ່ຜູ້ຖືກກ່າວຫາ ແລະ ສະແດງຄວາມສົນໃຈໃນແນວຄວາມຄິດຂອງພວກເຂົາ.
- ອະນຸຍາດໃຫ້ຜູ້ກ່າວຫາເວົ້າອອກມາທັງໝົດ.
- ຈົ່ງຄິດກ່ຽວກັບຄົນນັ້ນວ່າພວກເຂົາຕ້ອງການເວົ້າຫຍັງອອກມາ ແລະ ກໍ່ໃຫ້ຖາມຄຳຖາມດ້ວຍຄວາມກະຈ່າງແຈ້ງ.

**ຖາມຄຳຖາມຕໍ່ໄປເລີຍ.**

- ຫາກຜູ້ຖືກກ່າວຫາໄດ້ເວົ້າໃນສິ່ງທີ່ໜ້າສົນໃຈ ສິ່ງທີ່ເຈົ້າຍັງບໍ່ທັນໄດ້ເຂົ້າໃຈ ຫຼື ສິ່ງທີ່ເຈົ້າຕ້ອງການຢາກຮູ້ເພີ່ມຕື່ມ.

**ຈົ່ງຈົດບັນທຶກໄວ້ໃຫ້ດີ.**

- ຈົ່ງຂຽນໝົດທຸກຄຳເວົ້າຂອງຜູ້ທີ່ຖືກກ່າວຫາທີ່ພວກເຂົາໄດ້ເວົ້າອອກມາ. ກວດກາການຈົດບັນທຶກຂອງເຈົ້າກັບກຸ່ມເພື່ອກວດກາຄຳຕອບຢ່າງຈະແຈ້ງ.

**ຈົ່ງບໍລິຫານເວລາ.**

- ພະຍາຍາມໃຫ້ຖາມຄຳຖາມຂອງເຈົ້າໃຫ້ໝົດແຕ່ບໍ່ໃຫ້ລົມກັນເກີນກວ່າ 1 ຊົ່ວໂມງ.

# 21 ບົດທີ 21: ການຕັ້ງຄຳຖາມ

*ໃນບົດຮຽນຕອນນີ້ຈະຊ່ວຍໃຫ້ພວກເຮົາປະຕິບັດການກັບບາດກ້າວທີ 2: ສຳລັບການຮຽນຮູ້ເພີ່ມເຕີມ ກ່ຽວກັບແບບຢ່າງທີ່ນຳໃຊ້ເຂົ້າໃນການຕັດສິນໃຈ.*

**ຈຸດປະສົງ: ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມຈະຕ້ອງໄດ້ປະຕິບັດໃນການຊອກຫາຂໍ້ມູນຂ່າວສານຕ່າງໆ ແລະ ທັກສະໃນການສຳພາດເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການເຄື່ອນຍ້າຍແຮງງານ, ເພື່ອເຕືອນຕົນເອງໃນການຕັດສິນໃຈ.**

### ເວລາ:

75 ນາທີ

### ອຸປະກອນ

- ສຳເນົາຄຳຖາມຕ່າງໆໃຫ້ຜູ້ເຂົ້າຮ່ວມໝົດທຸກຄົນ ເຊິ່ງຄຳຖາມເຫຼົ່ານັ້ນແມ່ນແຕ່ລະກຸ່ມໄດ້ຂຽນໄວ້ໃນບົດຮຽນທີ່ຜ່ານມາແລ້ວ.
- ສຳເນົາ 21 ກ: ການຕັ້ງຄຳຖາມຕ່າງໆ. ໃຫ້ພໍກັບຜູ້ເຂົ້າຮ່ວມ

### ການກະກຽມ

ຄູຝຶກຄວນນັດພົບກັບບຸກຄົນໃດໜຶ່ງ ຜູ້ທີ່ພວກເຂົາຮູ້ກ່ຽວກັບການເຄື່ອນຍ້າຍແຮງງານ (ດັ່ງທີ່ກ່າວໄວ້ໃນບົດຮຽນທີ່ຜ່ານມາ). ບຸກຄົນດັ່ງກ່າວນີ້ສາມາດເວົ້າກ່ຽວກັບການເຄື່ອນຍ້າຍແຮງງານ ແຕ່ວ່າບໍ່ຄວນເວົ້າກ່ຽວກັບຄວາມສ່ຽງທີ່ເປັນອັນຕະລາຍໃນການເຄື່ອນຍ້າຍແຮງງານ.

ຖ້າຫາກຄົນຜູ້ນີ້ບໍ່ສາມາດມາຮ່ວມໃນສະໂມສອນເດັກຂອງພວກເຮົາ ກໍ່ໃຫ້ບັນດາຜູ້ເຂົ້າຮ່ວມໄປຫາເຂົາເອງ.

ຖ້າກອງປະຊຸມດັ່ງກ່າວບໍ່ເກີດຕາມທີ່ເຮົາເຄີຍຈັດເປັນປົກະຕິ, ກໍ່ໃຫ້ໂທຫາຫຼືໄປຢ້ຽມຢາມກຸ່ມສະມາຊິກຂອງສະໂມສອນເດັກໝົດທຸກຄົນເພື່ອລາຍງານໃຫ້ພວກເຂົາກ່ຽວກັບການນັດປະຊຸມໃນຄັ້ງຕໍ່ໄປ.

ກ່ອນມື້ປະຊຸມມື້ໜຶ່ງກໍ່ໃຫ້ໂທຫາບຸກຄົນທີ່ເຈົ້າຈະໄປພົບເພື່ອນັດກັບເຂົາວ່າເຈົ້າຈະໄປຫາເຂົາ.

ຈົ່ງຈຳໄວ້ວ່າຈົ່ງສຳເນົາຄຳຖາມຕ່າງໆໃຫ້ຜູ້ເຂົ້າຮ່ວມທັງໝົດເພື່ອນຳໄປພົບຄົນຜູ້ນັ້ນ.

### ການແນະນຳ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ. ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ໂດຍການນຳໃຊ້ເກມໃນລາຍການທີ່ມີຢູ່.

**ທວນຄືນບົດຮຽນ:**

ກ່ອນທີ່ຜູ້ເຂົ້າຮ່ວມຈະໄປພົບຜູ້ທີ່ຖືກສຳພາດກໍ່ໃຫ້ພວກເຂົາອ່ານຄຳຖາມພວກເຂົາຄືນອີກເທື່ອໜຶ່ງ ແລະ ອ່ານຄຳຖາມຈາກ ເອກະສານແຫຼ່ງຂໍ້ມູນ 21 ກ: ຄຳຖາມຕ່າງໆທົດສອບອ່ານຄຳຖາມໃຫ້ກຸ່ມຟັງດັ່ງໆ.



## ການຕັ້ງຄຳຖາມ

ບົດຮຽນທີ່ຜ່ານມາ ຜູ້ເຂົ້າຮ່ວມຄິດກ່ຽວກັບສະມາຊິກຢູ່ໃນຊຸມຊົນຜູ້ທີ່ມີຄວາມສາມາດຕອບຄຳຖາມກ່ຽວກັບການເຄື່ອນຍ້າຍແຮງງານ,ໃນບົດຮຽນດັ່ງກ່າວພວກເຂົາໄດ້ກະກຽມລາຍຊື່ຂອງບຸກຄົນເຫຼົ່ານັ້ນຜູ້ທີ່ພວກເຂົາຮູ້ກ່ຽວກັບການເຄື່ອນຍ້າຍແຮງງານ ແລະ ຍັງໄດ້ກະກຽມກ່ຽວກັບລາຍການຂອງຄຳຖາມຕ່າງໆ.

ຄູຝຶກຈະຕ້ອງໄດ້ຕິດຕໍ່ຫາຄົນຜູ້ທີ່ເຂົາຮູ້ກ່ຽວກັບການເຄື່ອນຍ້າຍແຮງງານ. ຖ້າພວກເຂົາໄດ້ມີການນັດເວລາ ແລະ ສະຖານທີ່ເພື່ອທີ່ຈະໄດ້ປຶກສາຫາລືແລ້ວ ແລະ ອະທິບາຍກ່ຽວກັບຈຸດປະສົງທີ່ຈະໄດ້ໄປພົບ ແລະ ຫຼັງຈາກນັ້ນກໍ່ຕິດຕໍ່ໃຫ້ຜູ້ເຂົ້າຮ່ວມເພື່ອຮັບປະກັນວ່າ: ຕາຕະລາງຂອງການປະຊຸມຖືກກຳນົດໄວ້ຢ່າງຄັກແນ່.

ຄູຝຶກຄວນພົບກັບບັນດາຜູ້ເຂົ້າຮ່ວມຢ່າງໜ້ອຍ 20 ນາທີ ກ່ອນທີ່ຈະໄປພົບຄົນຜູ້ທີ່ເຂົາຮູ້ກ່ຽວກັບການເຄື່ອນຍ້າຍແຮງງານ.

ຈົ່ງອ່ານເອກະສານແຫຼ່ງຂໍ້ມູນ 21 ກ: ການຖາມຄຳຖາມຢູ່ໃນກຸ່ມ. ເອົາສຳເນົາຂອງຄຳຖາມຕ່າງໆທີ່ເຂົາເຈົ້າໄດ້ຂຽນໃນອາທິດທີ່ຜ່ານມາໃຫ້ແຕ່ລະຄົນ.

ຜູ້ເຂົ້າຮ່ວມທັງໝົດຈະໄດ້ຖາມຄຳຖາມດ້ວຍຕົວຂອງພວກເຂົາເອງ ໂດຍອີງໃສ່ເອກະສານແນະນຳຈາກເອກະສານແຫຼ່ງຂໍ້ມູນ 21 ກ: ຄຳຖາມຕ່າງໆ

ໃນລະຫວ່າງການສຳພາດ ຢາກແນະນຳໃຫ້ຜູ້ເຂົ້າຮ່ວມຮູ້ໃນການຕັ້ງຄຳຖາມ. ເຖິງຢ່າງໃດກໍ່ຕາມຄູຝຶກຕ້ອງຮັກສາບຸກຄົນນັ້ນໃນເມື່ອທີ່ພວກເຂົາໂອ້ລົມນຳ, ຖ້າບັນດາຜູ້ເຂົ້າຮ່ວມຖາມຄຳຖາມທີ່ເຮັດໃຫ້ບຸກຄົນນັ້ນມີຄວາມຮູ້ສຶກບໍ່ສະບາຍໃຈ ຫຼື ໂສກເສົ້າ ຄູຝຶກກໍ່ຄວນຄ່ອຍແນະນຳໃຫ້ຜູ້ເຂົ້າຮ່ວມປ່ຽນຄຳຖາມໃໝ່.

ການສົນທະນາແມ່ນຕ້ອງຢູ່ໃນລະຫວ່າງ 30 ນາທີ ຫຼື 1 ຊົ່ວໂມງ. ການສົນທະນາບໍ່ໃຫ້ສືບຕໍ່ເນື່ອງເກີນ 1 ຊົ່ວໂມງ.

ມັນຈະມີປະໂຫຍດຫຼາຍສຳລັບຜູ້ທີ່ຍັງນ້ອຍໃນການຮຽນຮູ້ກັບຜູ້ທີ່ເຂົາມີປະສົບການໃນການເຄື່ອນຍ້າຍແຮງງານ. ດັ່ງນັ້ນ ຖ້າຍັງມີເວລາເຫຼືອຢູ່ກໍ່ໃຫ້ບັນດາກຸ່ມຜູ້ເຂົ້າຮ່ວມສຳພາດຫຼາຍກວ່າ 1 ຄົນໃນວິທີດຽວກັນນັ້ນ. ຈົ່ງຈຳໄວ້ວ່າຄວນຂອບໃຈຜູ້ທີ່ຕອບຄຳຖາມຂອງພວກເຮົາ ແລະ ທີ່ໄດ້ເສຍສະຫຼະເວລາມາໂອ້ລົມກັບພວກເຮົາໃນມື້ນີ້.

# 22 ບົດທີ 22: ການນຳໃຊ້ລາຍການເຄື່ອນຍ້າຍແຮງງານທີ່ປອດໄພ

**ຈຸດປະສົງ:** ເພື່ອໃຫ້ຜູ້ເຂົ້າຮ່ວມທັງໝົດມີຄວາມເຂົ້າໃຈວິທີການວາງເພື່ອໃຫ້ມີການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ສາມາດກຳນົດທາງເລືອກຕ່າງໆໃນການເຄື່ອນຍ້າຍແຮງງານ, ເພື່ອຮັກສາໃຫ້ພວກເຂົາມີຄວາມປອດໄພ.

**ເວລາ:**

75 ນາທີ

**ອຸປະກອນ**

- ❖ ປື້ມຄູ່ມືນ້ອຍຜູ້ນຳທາງທີ່ສະຫຼາດ.
- ❖ ເອກະສານອ້າງອີງ: 22 ກ: ລາຍການເຄື່ອນຍ້າຍແຮງງານທີ່ປອດໄພ

**ການແນະນຳ:**

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ, ຍືນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ໂດຍການນຳໃຊ້ເກມຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ມີໃຜແດ່ໄດ້ມີຄວາມຕື່ນເຕັ້ນກ່ຽວກັບການສຳພາດໃນຄັ້ງທີ່ຜ່ານມາ.

ພວກເຂົາໄດ້ໃຫ້ຂໍ້ມູນກ່ຽວກັບຊີວິດຂອງເຂົາເອງບໍ?

ມີໃຜແດ່ທີ່ໄດ້ຄິດເຖິງຄົນອື່ນໆທີ່ເຈົ້າໄດ້ຖາມຄຳຖາມກ່ຽວກັບການເຄື່ອນຍ້າຍແຮງງານ

## ລາຍການທີ່ໃຊ້ໃນການເຄື່ອນຍ້າຍແຮງງານທີ່ປອດໄພ

ລາຍການດັ່ງກ່າວ ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ຮູ້ຈັກວິທີການໃນການວາງແຜນການເຄື່ອນຍ້າຍແຮງງານທີ່ປອດໄພ.

ໃຫ້ຜູ້ເຂົ້າຮ່ວມເອົາປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ເປີດປື້ມໄປທີ່ໜ້າລາຍການເຄື່ອນຍ້າຍແຮງງານທີ່ປອດໄພແລ້ວໃຫ້ອາສາສະມັກຄົນໜຶ່ງອ່ານດັງໆ.

ອະທິບາຍຕື່ມອີກວ່າລາຍການເຄື່ອນຍ້າຍແຮງງານທີ່ປອດໄພ ຈະບໍ່ໄດ້ຕື່ມໃສ່ໃນບົດຮຽນຕອນນີ້ມັນໄດ້ຖືກອອກແບບມາເພື່ອຊ່ວຍພວກເຂົາເມື່ອພວກເຂົາຄິດຈະວາງແຜນການເຄື່ອນຍ້າຍແຮງງານ. ນີ້ກໍ່ໝາຍຄວາມວ່າຖ້າພວກເຂົາຈະຄິດ, ໃນອະນາຄົດພວກເຂົາຈະວາງແຜນເຄື່ອນຍ້າຍແຮງງານພວກເຂົາຄວນຕື່ມໃສ່ລາຍການດັ່ງກ່າວນີ້ກ່ອນ.

ຕໍ່ໄປນີ້ໃຫ້ຖາມບັນດາຜູ້ເຂົ້າຮ່ວມ:

- ມີຄຳຖາມອັນໃດບໍທີ່ເຈົ້າຍັງບໍ່ທັນເຂົ້າໃຈ?
- ບັນດາຄຳຖາມຕ່າງໆສາມາດຊ່ວຍເຈົ້າໃນການກະກຽມການເຄື່ອນຍ້າຍແຮງງານບໍ?
- ມີອັນໃດທີ່ເປັນອຸປະສັກໃນການນຳໃຊ້ລາຍການດັ່ງກ່າວນີ້?



- ພວກເຮົາສາມາດເອົາຊະນະກັບອຸປະສັກດັ່ງກ່າວນີ້ໄດ້ແນວໃດ?
- ເຈົ້າໄດ້ເອົາຂໍ້ມູນດັ່ງກ່າວນີ້ມາຈາກໃສໃນການຕື່ມໃສ່ລາຍການນີ້?
- ເຈົ້າສາມາດເອົາຂໍ້ມູນຈາກແຮງງານເຄື່ອນຍ້າຍຄົນກ່ອນໆບໍ່, ອຳນາດການປົກຄອງ, ບັນດາຄູອາຈານ ຫຼື ພະນັກງານໂຄງການຄົນໃດຄົນໜຶ່ງ.
- ເຈົ້າໄດ້ເອົາລາຍການນີ້ເລົ່າສູ່ຄອບຄົວຟັງຢູ່ບໍ?

## ຖ້າວ່າຂ້ອຍບໍ່ສາມາດຫາຂໍ້ມູນຈາກລາຍການດັ່ງກ່າວນີ້ ຂ້ອຍຄວນເຮັດແນວໃດ?

**ຖ້າເຈົ້າບໍ່ສາມາດຊອກຫາຂໍ້ມູນຈຳນວນໜຶ່ງ.**

ລາຍການດັ່ງກ່າວເປັນເຄື່ອງມືໃນການແນະນຳ ມີແຮງງານເຄື່ອນຍ້າຍຫຼາຍຄົນບໍ່ສາມາດຊອກຂໍ້ມູນທັງໝົດໄດ້ເພື່ອທີ່ຈະມາຕື່ມໃສ່ລາຍການດັ່ງກ່າວກ່ອນທີ່ພວກເຂົາຈະເດີນທາງໄປ ແຕ່ມີຫຼາຍຄຳຖາມຢູ່ໃນລາຍການດັ່ງກ່າວທີ່ຜູ້ເຄື່ອນຍ້າຍແຮງງານສາມາດຕອບໄດ້ແລະ ມັນຈະມີຄວາມປອດໄພກວ່າຖ້າພວກເຂົາຈະໄປ

**ຖ້າຫາກວ່າເຈົ້າບໍ່ສາມາດຊອກຫາຂໍ້ມູນໄດ້ໝົດ ຫຼື ຂໍ້ມູນທັງໝົດ**

ແຕ່ຖ້າຫາກວ່າເຈົ້າບໍ່ສາມາດຊອກຫາຂໍ້ມູນໄດ້ໝົດ ຫຼື ເກືອບໝົດທຸກອັນຕາມລາຍການດັ່ງກ່າວທີ່ກ່າວໄວ້ນັ້ນ ນີ້ແລະເປັນສັນຍານເຕືອນອັນໜຶ່ງທີ່ສາມາດເຮັດໃຫ້ທ່ານຕົກຢູ່ໃນຄວາມສ່ຽງຂອງການຖືກຄ້າມະນຸດ.

ການນຳໃຊ້ຄຳສິນທະນາຫຼາຍຢ່າງໃນແບບຢ່າງຂອງການຕັດສິນໃຈ, ຄວາມສ່ຽງຕ່າງໆຈະເປັນຜົນອັນຍິ່ງໃຫຍ່ເກີນກວ່າຜົນທີ່ຈະໄດ້ຮັບ.

ຖ້າເຈົ້າບໍ່ສາມາດຊອກຂໍ້ມູນທັງໝົດ ພວກເຂົາຄວນພິຈາລະນາທາງເລືອກອື່ນໆກ່ອນທີ່ຈະເຄື່ອນຍ້າຍແຮງງານ.

## ທາງເລືອກອື່ນໆເພື່ອການເຄື່ອນຍ້າຍແຮງງານ

ໃຫ້ບອກກັບຜູ້ເຂົ້າຮ່ວມເມື່ອພວກເຂົາຈະຕັດສິນໃຈກ່ຽວກັບວ່າຈະເຄື່ອນຍ້າຍແຮງງານຫຼືບໍ່? ບາງຄັ້ງມັນກໍ່ຍາກໃນການຄິດຫາທາງເລືອກຕ່າງໆ. ໃຫ້ບອກກັບແຕ່ລະກຸ່ມອີກວ່າມັນມີປະໂຫຍດຫຼາຍໃນການພິຈາລະນາທາງເລືອກເຫຼົ່ານັ້ນ (ອ່ານທາງເລືອກດັ່ງກ່າວດັງໆ ໃຫ້ກຸ່ມອື່ນຟັງ).

**ການທ່ວງເວລາກ່ອນການເຄື່ອນຍ້າຍແຮງງານ.**

ຈົ່ງຖາມຕົວເຈົ້າເອງວ່າ: ສະພາບແວດລ້ອມຄອບຄົວຂອງເຈົ້າໄດ້ຜັກດັນໃຫ້ເຈົ້າມີການເຄື່ອນຍ້າຍແຮງງານໂລດບໍ? ຖ້າບໍ່ເປັນເຊັ່ນນັ້ນ, ມັນເປັນສິ່ງທີ່ດີຫຼາຍທີ່ຄວນຈະທ່ວງເວລາກ່ອນທີ່ຈະມີການເຄື່ອນຍ້າຍແຮງງານ.

ຈົ່ງລໍຖ້າຈົນກະທັ້ງເຈົ້າມີອາຍຸເກີນ 16 ປີ ໃນຫຼາຍໆປະເທດມັນຜິດກົດໝາຍແຮງງານຖ້າວ່າເຈົ້າມີອາຍຸຕໍ່າກວ່າ 16 ປີ ຈະມາເຮັດວຽກເຕັມຊົ່ວໂມງ. ເຊັ່ນດຽວກັນຖ້າເຈົ້າລໍຖ້າຈົນເຈົ້າເຕີບໃຫຍ່ເຈົ້າກໍ່ຈະຮູ້ໂລກກ້ວາງຫຼາຍຂຶ້ນຕື່ມອີກ ແລະ ເປັນຄົນທີ່ສະຫຼາດຂຶ້ນ. ຖ້າເຈົ້າຫາກສາມາດລໍຖ້າຈົນກະທັ້ງອາຍຸຂອງເຈົ້າໄດ້ 18 ປີ ຍິ່ງເປັນການດີທີ່ສຸດສຳລັບເຈົ້າ.

(ບັນດາຄູຝຶກ ຄວນເຕືອນຜູ້ເຂົ້າຮ່ວມໃນເກນອາຍຸທີ່ອະນຸຍາດໃຫ້ເຄື່ອນຍ້າຍແຮງງານພາຍໃນປະເທດຂອງຕົນເອງ ແລະ ອາຍຸທີ່ອະນຸຍາດໃນການເຄື່ອນຍ້າຍແຮງງານໄປຕ່າງປະເທດແມ່ນ 18 ປີ ).

**ການໃຊ້ເວລາຮຽນຢູ່ໂຮງຮຽນເປັນເວລາດົນ.**

ຖ້າເຈົ້າຫາກໃຊ້ເວລາຮຽນຢູ່ໂຮງຮຽນເປັນເວລາດົນ ເຈົ້າກໍ່ຈະໄດ້ຮັບການສຶກສາຫຼາຍຂຶ້ນ.ເລື່ອງນີ້ກໍ່ຈະໃຫ້

ເຈົ້າສາມາດສະມັກເຮັດວຽກທີ່ດີໄດ້,ໂດຍສະເພາະຖ້າເຈົ້າຮຽນຮູ້ທັກສະຕ່າງໆເຊັ່ນວ່າ:ທັກສະໃນການນຳໃຊ້ຄອມພິວເຕີ້, ຮຽນຮູ້ພາສາຈີນ, ພາສາໄທຫຼື ພາສາອັງກິດຢູ່ທີ່ໂຮງຮຽນ, ສິ່ງເຫຼົ່ານີ້ສາມາດຊ່ວຍໃຫ້ເຈົ້າເຂົ້າໃຈເຖິງເອກະສານຕ່າງໆ ຫຼື ສັນຍາແຮງງານອີກດ້ວຍ.

**ຕ້ອງຮຽນຮູ້ກ່ຽວກັບທັກສະວິຊາຊີບຈຳນວນໜຶ່ງສາກ່ອນ.**

ກ່ອນອື່ນໝົດຊອກຫາໂຮງງານອຸດສາຫະກຳບ່ອນທີ່ເຂົາມີການຈ້າງງານຫຼາຍໆຄົນ ບ່ອນທີ່ເຈົ້າຄິດຢາກຈະໄປເຮັດ, ຖ້າມີໂຮງງານຕັດຫຍິບເຈົ້າກໍ່ຈະຕ້ອງໄດ້ຮຽນຫຍິບກ່ອນທີ່ເຈົ້າຈະໄປ, ຖ້າມີໂຮງງານປະກອບລົດຍົນເຈົ້າກໍ່ຕ້ອງໄດ້ຮຽນຫຼັກສູດເປັນຊ່າງແປງລົດສາກ່ອນ.

## ການຂຽນບັນທຶກປະຈຳວັນ

ບອກໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ແຕ້ມກ່ຽວກັບໄພອັນຕະລາຍທີ່ບັນດາຜູ້ເຄື່ອນຍ້າຍແຮງງານອາດຈະປະເຊີນຖ້າພວກເຂົາຫາກບໍ່ມີຂໍ້ມູນຢູ່ໃນລາຍການເຄື່ອນຍ້າຍແຮງງານ.

### ສະຫຼຸບບົດຮຽນ

- ເຈົ້າຄວນຂຽນຕື່ມໃສ່ລາຍການເຄື່ອນຍ້າຍແຮງງານກ່ອນທີ່ຈະເດີນທາງ.
- ຖ້າເຈົ້າບໍ່ສາມາດຊອກຫາຂໍ້ມູນໄດ້ໝົດຢູ່ໃນລາຍການດັ່ງກ່າວ ສິ່ງນີ້ ແລະ ເປັນສັນຍານເຕືອນໄພອັນໜຶ່ງທີ່ອາດເຮັດໃຫ້ເຈົ້າຕົກຢູ່ໃນຄວາມສ່ຽງຂອງການຖືກຄ້າມະນຸດໄດ້.
- ຖ້າເຈົ້າບໍ່ສາມາດພົບຂໍ້ມູນທັງໝົດໄດ້ ເຈົ້າກໍ່ຄວນພິຈາລະນາທາງເລືອກດັ່ງຕໍ່ໄປນີ້ເຊັ່ນ.
    - ການທ່ວງເວລາຂອງການເດີນທາງ
    - ການໃຊ້ເວລາເພື່ອຮຽນໜັງສືໃຫ້ຫຼາຍຂຶ້ນ.
    - ການຮຽນຮູ້ທັກສະວິຊາຊີບບາງສາຍໃດສາຍໜຶ່ງສາກ່ອນ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາຮ່ວມໃນມື້ນີ້, ພົບກັນໃນອາທິດໜ້າ,ທຸກໆທີ່ມາຮ່ວມແມ່ນໄດ້ຮັບດາວຄົນລະ 1 ດວງ.

ການເຄື່ອນຍ້າຍແຮງງານສາມາດເຮັດໃຫ້ຄົນເຮົາພົບກັບສິ່ງທີ່ດີ ແລະ ບໍ່ດີ. ມັນສາມາດເຮັດໃຫ້ຄົນໜຸ່ມນ້ອຍມີວຽກເຮັດງານທຳແລະສ້າງຊີວິດທີ່ດີກ່ວາ. ລາຍການເຄື່ອນຍ້າຍແຮງງານທີ່ປອດໄພສະບັບນີ້ ໄດ້ຖືກອອກແບບເພື່ອຊ່ວຍໃຫ້ຄົນເຮົາຮູ້ຜູ້ທີ່ເຄື່ອນຍ້າຍແຮງງານໄປຢ່າງມີຄວາມປອດໄພ, ດັ່ງນັ້ນ ພວກເຂົາສາມາດໄດ້ຮັບໂອກາດໂດຍປັດສະຈາກການຖືກຫລອກລວງ ຫຼື ການຂູດຮີດແຮງງານໄດ້.



# ບົດທີ 22 ກ: ລາຍການເຄື່ອນຍ້າຍແຮງງານທີ່ປອດໄພ

22

*ຈົ່ງຕອບຄຳຖາມເລົ່ານີ້ເມື່ອເຈົ້າເລີ່ມຕົ້ນສົນທະນາກ່ຽວກັບການເຄື່ອນຍ້າຍແຮງງານໄປຫາວຽກເຮັດຢູ່ນອກປະເທດຂອງເຈົ້າ. ຈົ່ງສົນທະນາຄຳຖາມເລົ່ານີ້ກັບຄອບຄົວຂອງເຈົ້າ.*

| **ຂໍ້ມູນກ່ຽວກັບປະເທດປາຍທາງຂອງເຈົ້າ** | **ຮູ້** | **ບໍ່ຮູ້** |
|---|---|---|
| ເຈົ້າຮູ້ບໍ່ເຈົ້າຈະໄປໃສ? ຖ້າຮູ້ຈົ່ງຂຽນຊື່ຂອງເມືອງໃສ່ຂ້າງລຸ່ມນີ້: ____________________ | | |
| ເຈົ້າຮູ້ຈັກກັບໃຜແດ່ຢູ່ທີ່ເມືອງບ່ອນທີ່ເຈົ້າຈະໄປນັ້ນ? | | |
| ເຈົ້າມີເບີໂທຕິດຕໍ່ຂອງຜູ້ທີ່ເຈົ້າຮູ້ຢູ່ໃນເມືອງນັ້ນບໍ? | | |
| ເຈົ້າສາມາດໂທຫາເຂົາເພື່ອວາງແຜນໃຫ້ເຂົາມາພົບເຈົ້າເມື່ອເຈົ້າໄປເຖິງໄດ້ບໍ?. | | |

| **ຂໍ້ມູນກ່ຽວກັບການເດີນທາງ.** | **ຮູ້** | **ບໍ່ຮູ້** |
|---|---|---|
| ເຈົ້າຮູ້ບໍ່ເຈົ້າຈະກັບບ້ານເຈົ້າໄດ້ແນວໃດເມື່ອເຈົ້າຢຸດເຮັດວຽກຢູ່ທີ່ນັ້ນ ? | | |
| ເຈົ້າຮູ້ບໍ່ວ່າ ຄ່າເດີນທາງກັບເທົ່າໃດ ຈົ່ງຂຽນຈຳນວນເງິນໃສ່ຂ້າງລຸ່ມນີ້____________________ | | |
| ຄ່າໃຊ້ຈ່າຍຢູ່ບ່ອນທີ່ເຈົ້າຈະໄປເຮັດວຽກນັ້ນ ມື້ໜຶ່ງຈະໝົດເທົ່າໃດຖ້າຍັງບໍ່ມີວຽກເຮັດ ເມື່ອເຮົາໄປຮອດ? ຈົ່ງຂຽນຈຳນວນເງິນດັ່ງກ່າວນັ້ນລົງ____________________ | | |
| ເຈົ້າມີເງິນພຽງພໍທີ່ຈະກັບບ້ານໄດ້ບໍແລະອາໃສຢູ່ທີ່ນັ້ນໄດ້ຈັກໄລຍະໜຶ່ງບໍ? | | |
| (ຈົ່ງຈຳໄວ້ວ່າມັນເປັນສິ່ງທີ່ອັນຕະລາຍທີ່ສຸດຖ້າເຈົ້າຢືມເງິນນຳນາຍໜ້າ ຫຼື ນາຍຈ້າງເພື່ອທີ່ຈະໃຊ້ໃນການເດີນທາງ, ຖ້າຫາກເຈົ້າຕົກເປັນລູກໜີ້ຂອງພວກເຂົາແລ້ວມັນຈະເປັນອັນຕະລາຍເມື່ອເຈົ້າໄປເຮັດວຽກ ໂດຍທີ່ເຈົ້າເປັນໜີ້ຜູ້ຈັດຫາງານ ຫຼື ນາຍຈ້າງ). | | |
| ເຈົ້າຈະເດີນທາງໄປກັບໝູ່ເພື່ອນຂອງເຈົ້າບໍ ? | | |

| **ຂໍ້ມູນກ່ຽວກັບວຽກງານ** | **ຮູ້** | **ບໍ່ຮູ້** |
|---|---|---|
| ເຈົ້າຮູ້ຈັກກັບໃຜແດ່ຄົນຜູ້ທີ່ເຂົາໄດ້ເຮັດວຽກກັບຜູ້ທີ່ຈັດຫາງານຄົນນີ້ມາກ່ອນບໍ? | | |
| ຜູ້ທີ່ເຂົາໄດ້ເຮັດວຽກຢູ່ທີ່ນັ້ນ ບາງຄັ້ງພວກເຂົາກໍ່ໄດ້ມາຢ້ຽມຢາມບ້ານຢູ່ບໍ ? | | |
| ບຸກຄົນຜູ້ທີ່ໄດ້ເຮັດວຽກຢູ່ທີ່ນັ້ນໄດ້ໂທຫາຄອບຄົວຢູ່ບໍ? | | |
| ວຽກງານດັ່ງກ່າວນີ້ຄ້າຍຄືກັນກັບວຽກທີ່ເຈົ້າໄດ້ຍິນມາບໍ? | | |
| ເງິນເດືອນກໍ່ໄດ້ເທົ່າກັນກັບຜູ້ເຄື່ອນຍ້າຍແຮງງານຄົນອື່ນໆທີ່ເຈົ້າໄດ້ຮູ້ຈັກຜ່ານມາຢູ່ບໍ່? (ມັນຟັງຄ້າຍຄືກັບວ່າ ເກີນຄວາມຈິງບໍ? ມັນອາດຈະຕົວະບໍ່?) | | |

ຄົນຜູ້ທີ່ຈະຫາວຽກໃຫ້ເຈົ້າເຮັດໄດ້ບອກຊື່ສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກນັ້ນບໍ? ຈົ່ງຂຽນຊື່ບໍລິສັດນັ້ນໃສ່ຂ້າງລຸ່ມນີ້ ຖ້າຫາກວ່າເຂົາບອກ____________________

ພວກເຂົາສາມາດບອກທີ່ຢູ່ ແລະ ເບີໂທລະສັບຂອງບໍລິສັດນັ້ນໃຫ້ກັບເຈົ້າບໍ? ຈົ່ງຂຽນຊື່ບໍລິສັດດັ່ງກ່າວໃສ່ຂ້າງລຸ່ມນີ້______________________________

______________________________________________

ເຈົ້າສາມາດເຂົ້າໃຊ້ອິນເຕີເນັດເພື່ອເບິ່ງເບິ່ງຊື່ບໍລິສັດນັ້ນທາງອິນເຕີເນັດກ່ອນ?

ເຈົ້າມີສັນຍາແຮງງານບໍ?

ຖ້າເຈົ້າບໍ່ມີສັນຍາແຮງງານ, ເຈົ້າກໍ່ສາມາດໂອ້ລົມກ່ຽວກັບເງື່ອນໄຂສໍາລັບວຽກງານຂອງເຈົ້າ?

ເຈົ້າສາມາດອ່ານແລະເຂົ້າໃຈເນື້ອໃນສັນຍາຕ່າງໆຢ່າງຖີ່ຖ້ວນແລ້ວບໍ?

ເຈົ້າຕົກລົງໃນເງື່ອນໄຂທີ່ສັນຍາໄດ້ລະບຸໄວ້ທຸກຂໍ້ແລ້ວບໍ?

**ເອກະສານຕ່າງໆ.** | ຮູ້ | ບໍ່ຮູ້

ຖ້າເຈົ້າມີຈຸດປະສົງຢາກເດີນທາງໄປປະເທດໃດໜຶ່ງ ເຈົ້າມີໜັງສືເດີນທາງ ແລະ ວີຊາໃຫ້ເຂົ້າປະເທດນັ້ນແລ້ວບໍ?

**ຄົນຜູ້ທີ່ເຂົາຈະຕິດຕໍ່ຫາ** | ຮູ້ | ບໍ່ຮູ້

ເຈົ້າໄດ້ຖືເບີໂທຕິດຕໍ່ຂອງຜູ້ປົກຄອງໄປກັບເຈົ້າບໍ ເພື່ອທີ່ເຈົ້າຈະສາມາດໂທຫາຄອບຄົວຂອງເຈົ້າໃນເມື່ອເຈົ້າຢູ່ໃນລະຫວ່າງທາງ ຫຼື ອື່ນໆ?

ເຈົ້າຮູ້ອົງການໃດໜຶ່ງ ຫຼື ຄົນໃດໜຶ່ງບໍ ເພື່ອເຈົ້າຈະໄດ້ຕິດຕໍ່ຫາຢູ່ໃນເມືອງອື່ນໆປະເທດອື່ນ. ຖ້າມີບາງສິ່ງບາງຢ່າງຫາກເກີດຜິດພາດຂຶ້ນ ແລະ ເຈົ້າຕ້ອງການຄວາມຊ່ວຍເຫຼືອເພື່ອຄວາມປອດໄພ?

ຈົ່ງຕື່ມແນວຄວາມຄິດຂອງບັນດາຜູ້ເຂົ້າຮ່ວມໃສ່ຫ້ອງນີ້ ຕົວຢ່າງສະເພາະຂອງປະເທດໃຜມັນ

**ຖ້າເຈົ້າຮູ້ຄໍາຕອບຫຼາຍເທົ່າໃດ ຍິ່ງເຮັດໃຫ້ແຜນການເດີນທາງຂອງເຈົ້າ ຍິ່ງປອດໄພຂຶ້ນຫຼາຍເທົ່ານັ້ນ.**



# ບົດທີ 23: ການຮັກສາຄວາມປອດໄພ ໃນລະຫວ່າງການເດີນທາງ

23

**ຈຸດປະສົງ:** **ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ກ່ຽວກັບຍຸດທະສາດໃນການຮັກສາຄວາມປອດໄພໃນລະຫ່ວາງທີ່ພວກເຂົາມີການເດີນທາງເພື່ອເຄື່ອນຍ້າຍແຮງງານ**

**ເວລາ:**

75 ນາທີ

**ອຸປະກອນ**

- ປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພຂອງຜູ້ເຂົ້າຮ່ວມ
- ອ້າງອີງເອກະສານ 23 ກ: ລາຍການເດີນທາງທີ່ປອດໄພ ແລະ 23 ຂ: ເອກະສານທີ່ສໍາຄັນ.
- ປ້າຍຫ້າມອັນຈາກ 23 ຄ: ປ້າຍຫ້າມຕ່າງໆສໍາລັບຜູ້ເຂົ້າຮ່ວມ.

## ການແນະນໍາ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ, ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ໂດຍການນໍາໃຊ້ເກມທີ່ມີຢູ່ໃນລາຍການ.

**ທວນຄືນບົດຮຽນ:**

ໃນບົດຮຽນ 2-3 ຕອນທີ່ຜ່ານມາພວກເຮົາໄດ້ເວົ້າແບບຢ່າງໃນການຕັດສິນໃຈ.

ມີໃຜແດ່ສາມາດບອກໄດ້ບໍວ່າໃນບາດກ້າວທີ 5 ຂອງແບບທີ່ໃຊ້ໃນການຕັດສິນໃຈແມ່ນຫຍັງ?.

ເຈົ້າໄດ້ນໍາເອົາບາດກ້າວເຫຼົ່ານັ້ນໄປນໍາໃຊ້ເຂົ້າໃນຊີວິດປະຈໍາວັນຂອງເຈົ້າບໍ?

## ການຮັກສາຄວາມປອດໄພໃນລະຫວ່າງການເດີນທາງ

ຖ້າຜູ້ເຂົ້າຮ່ວມໄດ້ປະຕິບັດຕາມໝົດທຸກບາດກ້າວດັ່ງກ່າວແລ້ວ ແລະ ໄດ້ຕັດສິນໃຈໃນການເຄື່ອນຍ້າຍ, ຕໍ່ໄປນີ້ພວກເຂົາຕ້ອງການຢາກຈະຮູ້ເພື່ອທີ່ຈະເດີນທາງໃຫ້ມີຄວາມປອດໄພນັ້ນແມ່ນເຮັດແນວໃດ.

ຈົ່ງບອກໃຫ້ຜູ້ເຂົ້າຮ່ວມຕື່ມອີກວ່າ ກ່ອນທີ່ພວກເຂົາຈະມີການເຄື່ອນຍ້າຍແຮງງານ,ພວກເຂົາຄວນຕື່ມໃສ່ລາຍການດັ່ງກ່າວນັ້ນໃຫ້ໝົດສາກ່ອນ: ການເຄື່ອນຍ້າຍແຮງງານທີ່ປອດໄພທີ່ພວກເຂົາໄດ້ໂອ້ລົມກັນໃນລະຫວ່າງບົດຮຽນ 2-3 ຕອນທີ່ຜ່ານມາ ແລະ ແລ້ວໃຫ້ພວກເຂົາເລືອກເອົາແລະທໍ່ເອົາເອກສະສານທີ່ສໍາຄັນຂອງພວກເຂົາໃຫ້ຜູ້ເຂົ້າຮ່ວມເບິ່ງປື້ມເອກະສານຄູ່ມື ແລະ ເປີດໄປທີ່ໜ້າລາຍການ: ເອກະສານທີ່ຈໍາເປັນ.

ອະທິບາຍຕື່ມອີກວ່າລາຍການເອກະສານທີ່ຈໍາເປັນພວກເຂົາຕ້ອງການຈະເຄື່ອນຍ້າຍແຮງງານ ຈົ່ງຖາມຜູ້ເຂົ້າຮ່ວມວ່າມີໃຜແດ່ຈື່ໄດ້ບໍ່ວ່າໜັງສືເດີນທາງແລະວີຊ້າແມ່ນຫຍັງ?.

ຈົ່ງເຕືອນຜູ້ເຂົ້າຮ່ວມວ່າໜັງສືເດີນທາງແມ່ນ ເອກະສານທີ່ອອກໃຫ້ໂດຍປະເທດຂອງເຂົາ ເຊິ່ງພວກເຂົາ

ຕ້ອງເອົາມາສະແດງໃຫ້ເບິ່ງໃນຕອນທີ່ພວກເຂົາຂ້າມຊາຍແດນ, ເມື່ອພວກເຂົາມີໜັງສືເດີນທາງຈາກປະເທດຂອງພວກເຂົາເອງພວກເຂົາກໍ່ສາມາດສະໝັກເອົາວີຊ້າເພື່ອເຂົ້າປະເທດນັ້ນໆ ແລະ ເຕືອນຜູ້ເຂົ້າຮ່ວມອີກວ່າການຮັກສາໜັງສືເດີນທາງໃຫ້ປອດໄພນັ້ນແມ່ນສຳຄັນທີ່ສຸດໃນລະຫວ່າງການເດີນທາງ ແລະ ການເຄື່ອນຍ້າຍແຮງງານ. ຫ້າມບໍ່ໃຫ້ເອົາເອກສານເຫຼົ່ານັ້ນໃຫ້ຜູ້ອື່ນຮັກສາໄວ້ເດັດຂາດ. ບອກຜູ້ເຂົ້າຮ່ວມຮູ້ວ່າວີຊ້າແມ່ນກາຈ້ຳ ຫຼື ສະຕິກເກີ້ອັນໜຶ່ງທີ່ຢູ່ໃນໜັງສືເດີນທາງຈາກປະເທດຂອງເຂົາເອງ, ທີ່ອະນຸຍາດໃຫ້ເຂົ້າປະເທດນັ້ນ. ອະທິບາຍໃຫ້ພວກເຂົາຕື່ມອີກວ່າປະເທດທີ່ພວກເຂົາຕ້ອງການຢາກຈະໄປນັ້ນບາງຄັ້ງພວກເຂົາອາດຈະບໍ່ອອກວີຊ້າໃຫ້.

ມີວີຊ້າຫຼາຍຊະນິດທີ່ແຕກຕ່າງກັນ: ວີຊ້າເພື່ອເຮັດວຽກພວກເຂົາສາມາດໄປເຮັດວຽກຢູ່ປະເທດນັ້ນໄດ້, ວີຊ້າທ່ອງທ່ຽວໝາຍຄວາມວ່າພວກເຂົາສາມາດໄປທ່ອງທ່ຽວແຕ່ບໍ່ສາມາດໄປເຮັດວຽກໄດ້.

ໝາຍເຫດ: ຖ້າວ່າເຈົ້າບໍ່ມີເອກະສານທີ່ຄົບຕາມລາຍການນັ້ນ, ຖ້າເຈົ້າມີເອກະສານຫຼາຍເທົ່າໃດຍິ່ງເຮັດໃຫ້ເຈົ້າມີຄວາມປອດໄພຫຼາຍເທົ່ານັ້ນ.

ພວກເຂົາຕ້ອງມີຄວາມລະມັດລະວັງເພື່ອຮັບປະກັນວ່າເອກະສານຕ່າງໆຂອງພວກເຂົາໃນເວລາເດີນທາງມີຄວາມປອດໄພ. ຈົ່ງອ່ານຂໍ້ຄວນລະມັດລະວັງ 2 ຢ່າງທີ່ພວກເຂົາສາມາດປະຕິບັດ:

1.ກ່ອນອື່ນໝົດແມ່ນໃຫ້ສຳເນົາໜັງສືເດີນທາງ 2 ສະບັບ, ວີຊ້າ, ສັນຍາແຮງງານ, ບັດປະຈຳຕົວ, (ຖ້າຫາກວ່າເຈົ້າມີເອກະສານເຫຼົ່ານີ້).

ເຈົ້າຄວນປະສຳເນົາເອກະສານໄວ້ນຳຄອບຄົວ, ໄວ້ນຳເພື່ອນຢູ່ທີ່ເຮືອນຂອງເຈົ້າ,ແລະຮັກສາສຳເນົາສະບັບໜຶ່ງໄວ້ກັບເຈົ້າບໍ່ໃຫ້ຮັກສາສຳເນົາທີ່ເຈົ້າເອົາໄປນຳໄວ້ບ່ອນກັນກັບເອກະສານຕົ້ນສະບັບ.

ຖ້າຫາກວ່າເອກະສານຂອງເຈົ້າເສຍຫຼືຖືກລັກໃນເວລາເດີນທາງ ສຳເນົາສະບັບໜຶ່ງທີ່ເຈົ້າມີກໍ່ຈະສາມາດໃຊ້ແທນກັນໄດ້.

ຖ້າຄອບຄົວຂອງເຈົ້າຕິດຕໍ່ຫາເຈົ້າບໍ່ໄດ້ ແລະ ເຂົາກໍ່ກັງວົນກ່ຽວກັບເຈົ້າ ສຳເນົາເອກະສານທີ່ເຈົ້າປະໄວ້ໃນເບື້ອງຕົ້ນນັ້ນກໍ່ຊ່ວຍໃຫ້ພວກເຂົາໃນການໄປແຈ້ງເຈົ້າໜ້າທີ່ໃນການຫາຍໂຕຂອງເຈົ້າເພື່ອທີ່ຈະຊອກຫາເຈົ້າໄດ້.

2.ຂໍ້ຄວນລະວັງໂຕທີ 2 ແມ່ນຊອກຫາສະຖານທີ່ດີໆໃນການເຊື່ອງເອກະສານໄວ້ໃນເສື້ອຜ້າຂອງເຈົ້າ (ບໍ່ຄວນເຊື່ອງໃສ່ຖົງໃນຂະນະທີ່ເຈົ້າເດີນທາງ. ບັນດາຜູ້ແປກໜ້າກໍ່ບໍ່ສາມາດແນມເຫັນບ່ອນທີ່ເຈົ້າເຊື່ອງເອກະສານນັ້ນ.

ຖາມຜູ້ເຂົ້າຮ່ວມເບິ່ງ ແລະ ເປີດໄປທີ່ໜ້າ: ການເດີນທາງທີ່ມີຄວາມປອດໄພ. ໃຫ້ຜູ້ເຂົ້າຮ່ວມອ່ານລາຍການນັ້ນດັງໆ ແລະ ຕັ້ງຄຳຖາມກັບລາວ.

- ເຈົ້າຄິດວ່າຂໍ້ຄວນລະວັງດັ່ງກ່າວສາມາດເດີນທາງດ້ວຍຄວາມປອດໄພບໍ?
- ອັນໃດທີ່ເປັນອຸປະສັກໃນການນຳໃຊ້ຂໍ້ຄວນລະວັງດັ່ງກ່າວ?
- ເຈົ້າສາມາດເອົາຊະນະກັບອຸປະສັກເຫຼົ່ານັ້ນໄດ້ແນວໃດ?

## ການສະແດງເລື່ອງວິທີເວົ້າວ່າ ຢຸດ

ເອົາປ້າຍບອກຢຸດສີແດງອອກມາ ເລື່ອງດັ່ງກ່າວນີ້ຈະໄດ້ເວົ້າກ່ຽວກັບແຮງງານເຄື່ອນຍ້າຍຄົນໜຶ່ງທຸກໆຄັ້ງເມື່ອແຮງງານເຄື່ອນຍ້າຍເຮັດໃນສິ່ງໃດສິ່ງໜຶ່ງທີ່ເປັນອັນຕະລາຍ, ກຸ່ມກໍ່ໃຫ້ຍົກປ້າຍຢຸດຂຶ້ນມາແລ້ວກໍ່ເວົ້າວ່າ **ຢຸດ.** ບັນດາຜູ້ເຂົ້າຮ່ວມກໍ່ໃຫ້ອະທິບາຍວ່າຄວາມອັນຕະລາຍນັ້ນແມ່ນຫຍັງ ແລະ ແຮງງານເຄື່ອນຍ້າຍ



ຄວນຈະເຮັດແນວໃດ?.ຈົ່ງອ່ານເລື່ອງນີ້ໃຫ້ດັງໆ:

"ນ. ເອັດເປັນຍິງໜຸ່ມຄົນໜຶ່ງຜູ້ທີ່ບໍ່ໄດ້ຮຽນໜັງສືເລີຍ ແລະ ລາວໄດ້ຕັດສິນໃຈເຄື່ອນຍ້າຍແຮງງານ. (**ຢຸດ**... ລາວຄວນຮຽນໜັງສືເພີ່ມເຕີມຖ້າເປັນໄປໄດ້ ). ລາວຄວນພິຈາລະນາເບິ່ງສະຖານທີ່ ບ່ອນທີ່ລາວຈະເດີນທາງໄປເຮັດວຽກສາກ່ອນ."

ລາວໄດ້ພົບກັບຜູ້ຊາຍຄົນໜຶ່ງຜູ້ທີ່ໄດ້ບອກກັບ ນ. ເອັດ ວ່າຊາຍຄົນນັ້ນສາມາດຊອກວຽກເຮັດງານທຳທີ່ມີເງິນເດືອນ 200 ໂດລາ/ເດືອນ. ນ ເອັດກໍ່ໄດ້ລົມກັບຄອບຄົວຂອງລາວໃນການຕັດສິນໃຈ ແລະ ໃນທີ່ສຸດລາວກໍ່ໄດ້ຕັດສິນໃຈຢືມເງິນຈາກຜູ້ທີ່ໃຫ້ກູ້ຢືມເງິນໃນທ້ອງຖິ່ນ ພ້ອມທັງເອົານາຂອງຄອບຄົວຂອງລາວໄປຈຳນຳ.(**ຢຸດ**...ເຈົ້າບໍ່ຄວນຄິດຢາກຈະເປັນໜີ້ສິນເພື່ອທີ່ຈະເຄື່ອນຍ້າຍແຮງງານໄປເຮັດວຽກ ແລະ ຄອບຄົວຂອງເຈົ້າເຫັນດີກັບແຜນຂອງເຈົ້າແລ້ວບໍ?).

ນ. ເອັດໄດ້ເອົາເງິນໃຫ້ຊາຍຜູ້ນັ້ນ 200ໂດລາ ແລະ ໄດ້ເຊັນສັນຍາເປັນພາສາທີ່ລາວອ່ານບໍ່ໄດ້ເລີຍ. (**ຢຸດ**... ບໍ່ຄວນເຊັນສັນຍາໂດຍທີ່ທ່ານອ່ານບໍ່ໄດ້ເລີຍ).

ນ. ເອັດ ມີບັດປະຈຳຕົວອັນໜຶ່ງ. ນາຍໜ້າໄດ້ເອົາບັດປະຈຳຕົວຂອງລາວ ແລະ ບອກກັບ ນ ເອັດວ່າລາວຈະຮັກສາບັດນີ້ໄວ້ໃຫ້ກັບນາຍຈ້າງຂອງ ນ ເອັດ (**ຢຸດ**... ເຈົ້າບໍ່ຄວນເອົາບັດປະຈຳຕົວຂອງເຈົ້າໃຫ້ກັບຄົນອື່ນ).

ລາວກໍ່ບໍ່ໄດ້ປະສຳເນົາສະບັບໃດໜຶ່ງ ແລະ ເອກະສານຕ່າງໆຂອງລາວໄວ້ນຳຄອບຄົວເລີຍ (**ຢຸດ**...ເຈົ້າຄວນປະເອກະສານຕ່າງໆ ແລະ ສຳເນົາໄວ້ນຳຄອບຄົວ.

ນ. ເອັດມີເພື່ອນຫຼາຍຄົນຜູ້ທີ່ເຄີຍເຄື່ອນຍ້າຍແຮງງານຈາກບ້ານຂອງລາວເອງແຕ່ວ່ານາຍໜ້າໄດ້ບອກກັບ ນ. ເອັດວ່າພວກເຂົາໄດ້ໄປທຳງານຢູ່ແຫ່ງໃດແຫ່ງໜຶ່ງຂອງປະເທດໄທແລ້ວ ເຊິ່ງລາວບໍ່ເຄີຍໄດ້ຍິນມາກ່ອນ.

(**ຢຸດ**...ເຈົ້າຄວນຮູ້ສະຖານທີ່ບ່ອນທີ່ເຈົ້າຈະເດີນທາງໄປເຮັດວຽກ. ຊື່ນາຍຈ້າງຂອງເຈົ້າ, ເຈົ້າຄວນຮູ້ກ່ອນທີ່ຈະໄປ).

ນ. ເອັດມາຈາກຄອບຄົວທີ່ທຸກຍາກ. ເມື່ອລາວໄດ້ອອກຈາກບ້ານຂອງລາວ ລາວເກືອບຈະບໍ່ມີເງິນຕິດຕົວໃນກະເປົາເລີຍ (**ຢຸດ**...ເຈົ້າຄວນມີເງິນພຽງພໍຈຳນວນໜຶ່ງ ເພື່ອທີ່ຈະຊື້ກິນໃນເວລາທີ່ເຈົ້າກຳລັງຊອກຫາວຽກງານແລະຄວນໃຫ້ມີເງິນພຽງພໍທີ່ຈະຊື້ປີ້ລົດກັບບ້ານໃນເມື່ອຫາວຽກງານບໍ່ໄດ້).

ລາວບໍ່ໄດ້ຖືນ້ຳເບີໂທລະສັບແລະກໍ່ບໍ່ຮູ້ນ້ຳເບີຂອງໃຜຢູ່ທີ່ບ້ານຂອງລາວເລີຍ. (**ຢຸດ**...ເຈົ້າຄວນຖືເອົາເບີໂທລະສັບຫຼືຢ່າງໜ້ອຍເຈົ້າຕ້ອງຮູ້ເບີຄົນໃດຄົນໜຶ່ງຢູ່ໃນບ້ານຂອງເຈົ້າກ່ອນທີ່ຈະເດີນທາງໄປທຳງານ).

ໃນເບື້ອງຕົ້ນ ນ. ເອັດ ໄດ້ຄາດວ່າລາວຈະໄປທຳງານຢູ່ປະເທດອື່ນໆທີ່ຖືກກົດໝາຍແຕ່ວ່ານາຍໜ້າພັດມາບອກກັບລາວວ່າ ພວກເຂົາຕ້ອງເດີນທາງໃນເວລາກາງຄືນເພາະວ່າພວກເຂົາຈະໄດ້ຂ້າມຊາຍແດນໄປປະເທດໄທໂດຍບໍ່ຖືກຕ້ອງຕາມກົດໝາຍ. (**ຢຸດ**...ເຈົ້າຄວນເດີນທາງໄປທຳງານຢ່າງຖືກຕ້ອງຕາມກົດໝາຍຖ້າເປັນໄປໄດ້).

ພາຍຫຼັງທີ່ພວກເຂົາຂ້າມຊາຍແດນແລ້ວ ນ. ເອັດ ກໍ່ໄດ້ໄປຂຶ້ນລົດສ່ວນບຸກຄົນຄັນໜຶ່ງ (**ຢຸດ**... ເຈົ້າບໍ່ຄວນໄປຂຶ້ນລົດສ່ວນບຸກຄົນໃດໜຶ່ງ).

## ຫຼິ້ນເກມປິດສະໜາ

ຫຼິ້ນເກມປິດສະໜາທວນຄວາມຊົງຈຳຈາກກິດຈະກຳອົບອຸ່ນຮ່າງກາຍ ທີ່ພວກເຮົາໄດ້ຫຼິ້ນໃນຕອນຕົ້ນຂອງເອກະສານສະບັບນີ້.

## ການສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 8 -12 ຄົນ. ແຕ່ລະກຸ່ມຕ້ອງກະກຽມການສະແດງບົດບາດສົມມຸດ.

ມີແຮງງານເຄື່ອນຍ້າຍຄົນໜຶ່ງກຳລັງຂີ່ລົດເມຢູ່ ແລະ ມີຜູ້ທີ່ເດີນທາງມານຳຜູ້ໜຶ່ງພະຍາຍາມແນະນຳສະເໜີວຽກໃຫ້ແຮງງານເຄື່ອນຍ້າຍຄົນນັ້ນ ແຮງງານເຄື່ອນຍ້າຍຄົນນັ້ນໄດ້ນຳໃຊ້ການສື່ສານທີ່ສຸພາບໃນການປະຕິເສດຄຳສະເໜີດັ່ງກ່າວ ແລະ ແລ້ວຜູ້ຂັບລົດເມຊັກຊວນແຮງງານເຄື່ອນຍ້າຍຄົນນັ້ນໄປຂຶ້ນລົດເມສ່ວນຕົວຢູ່ທີ່ປ້າຍຈອດລົດໃນຕໍ່ໜ້ານີ້. ແຮງງານເຄື່ອນຍ້າຍຄົນນີ້ຄວນເຮັດແນວໃດ.

### ສະຫຼຸບບົດຮຽນ:

- ຈົ່ງຕື່ມໃສ່ລາຍການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ກວດກາເອກະສານທີ່ຈຳເປັນກ່ອນການເດີນທາງ.
- ປະສຳເນົາເອກະສານທີ່ຈຳເປັນໄວ້ນຳຄົນຜູ້ທີ່ເຈົ້າເຊື່ອໝັ້ນ,ຖືສຳເນົາເອກະສານສະບັບໜຶ່ງອີກໄວ້ຕ່າງຫາກ. ຈົ່ງເຊື່ອງເອກະສານຕົ້ນສະບັບໄວ້ບ່ອນທີ່ຜູ້ອື່ນບໍ່ສາມາດເຫັນ ຖືປື້ມຄູ່ມືການເດີນທາງທີ່ປອດໄພໄປນຳ.
- ສຳຫຼວດທາງເລືອກຕ່າງໆເພື່ອປະກອບເອກະສານເພາະວ່າມັນຈະມີຄວາມປອດໄພກວ່າ.
- ຄວນເດີນທາງພ້ອມກັບຖືເງິນໃຫ້ພຽງພໍທີ່ຈະດຳລົງຊີວິດຢູ່ບ່ອນທີ່ເຈົ້າຈະຊອກຫາວຽກ ແລະ ກໍ່ໃຫ້ພຽງພໍທີ່ຈະຊື້ປີ້ລົດກັບບ້ານ.
- ບໍ່ຕ້ອງເອົາເອກະສານໃຫ້ກັບຄົນອື່ນຖືໄວ້.
- ຈົ່ງລະແວງຄົນແປກໜ້າໄວ້ກ່ອນ "ຫຼື ເພື່ອນທີ່ບໍ່ແມ່ນເພື່ອນແທ້ ພວກເຂົາອາດແມ່ນຜູ້ຄ້າມະນຸດ".

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາຮ່ວມໃນມື້ນີ້. ພວກເຮົາຈະນັດປະຊຸມກັນໃນເທື່ອໜ້າ. ທຸກໆຄົນທີ່ມາຮ່ວມໃນມື້ນີ້ກໍ່ໄດ້ຮັບດາວຄົນລະ 1 ດວງ.

ບອກໃຫ້ຜູ້ເຂົ້າຮ່ວມກັບເມືອຖາມຄອບຄົວຂອງພວກເຂົາກ່ຽວກັບການເດີນທາງທີ່ປອດໄພ.

ບັນດາຄູຝຶກສາມາດບອກໃຫ້ຜູ້ເຂົ້າຮ່ວມຂຽນຄຳຖາມໃສ່ເຈ້ຍແຜ່ນໃຫຍ່ ເພື່ອເຕືອນຄວາມຊົງຈຳຂອງພວກເຂົາແລ້ວສາມາດຖືເມືອເຮືອນກໍ່ໄດ້.



# ເອກະສານ 23 ກ: ລາຍການ ການເດີນທາງທີ່ປອດໄພ

23

### ຈົ່ງກວດກາເບິ່ງລາຍການຂ້າງລຸ່ມນີ້ວ່າ ຂໍ້ໃດທີ່ທ່ານຕື່ມໄດ້ສຳເລັດໝົດ ✓

| | |
|---|---|
| ລາຍການເພື່ອການເດີນທາງທີ່ປອດໄພ | |
| ຈົ່ງສຳຫຼວດເບິ່ງທາງເລືອກຕ່າງໆເພື່ອປະກອບເອກະສານເດີນທາງ | |
| ຈົ່ງຕື່ມໃສ່ລາຍການດັ່ງກ່າວນີ້: ການເດີນທາງທີ່ປອດໄພ ແລະ ເອກະສານທີ່ສຳຄັນກ່ອນທີ່ຈະເດີນທາງ. | |
| ຈົ່ງທ່ອງໃຫ້ຂຶ້ນໃຈກ່ຽວກັບເບີໂທຕິດຕໍ່ສຸກເສີນ ກ່ອນທີ່ເຈົ້າຈະເດີນທາງ (ຈາກເອກະສານ 24 ຄ: ເບີໂທຕິດຕໍ່ສຸກເສີນຈາກປະເທດຂອງເຈົ້າເອງ ແລະ ເບີໂທຕິດຕໍ່ສຸກເສີນຂອງປະເທດທີ່ເຈົ້າຈະໄປ). | |
| ຈົ່ງປະສຳເນົາເອກະສານສະບັບໜຶ່ງໄວ້ນຳຄົນໃດຄົນໜຶ່ງທີ່ເຈົ້າເຊື່ອໝັ້ນໃນຄອບຄົວ (ເມື່ອເຈົ້າມີບັນຫາ ຫຼື ເອກະສານຂອງເຈົ້າທີ່ຖືໄປນຳເສຍ ເຂົາກໍ່ຈະໄດ້ມາຊ່ວຍເຈົ້າ). | |
| ຖືສຳເນົາສະບັບໜຶ່ງແຍກຕ່າງຫາກຈາກເອກະສານຕົ້ນສະບັບ. | |
| ຈົ່ງເດີນທາງພ້ອມກັບການຖືເງິນໃຫ້ພຽງພໍທີ່ຈະໃຊ້ຈ່າຍໃນໄລຍະເວລາທີ່ຊອກຫາວຽກເຮັດງານທຳບໍ່ໄດ້ ແລະ ໃຫ້ພຽງພໍທີ່ຈະກັບບ້ານ. | |
| ຮັກສາປື້ມເອກະສານການເດີນທາງທີ່ປອດໄພ ແລະ ເອກະສານຕ່າງໆຂອງເຈົ້າ ແລະ ເງິນຂອງເຈົ້າເຊື່ອງໄວ້ໃນບ່ອນທີປອດໄພ. | |

### ຈົ່ງຈຳໄວ້ວ່າ:

- ຄວນເດີນທາງໄປກັບກຸ່ມຜູ້ເຄື່ອນຍ້າຍແຮງງານຄືກັນກັບເຈົ້າ (ມັນເປັນການຍາກທີ່ຈະຫລອກລວງຄົນຢູ່ໃນກຸ່ມ ແລະ ການໄປເປັນກຸ່ມໝາຍຄວາມວ່າເຈົ້າມີເພື່ອນທີ່ຈະສາມາດຊ່ວຍກັນໄດ້).
- ຈົ່ງລະແວງຄົນແປກໜ້າຢູ່ສະເໝີ (ບາງເທື່ອພວກເຂົາອາດເປັນຜູ້ຄ້າມະນຸດ).
- ຖ້າມີຄົນໃດຄົນໜຶ່ງມາບັງຄັບເພື່ອທີ່ຈະເອົາເອກະສານຂອງເຈົ້າໄວ້ເຈົ້າຕ້ອງຮ້ອງຫາຄວາມຊ່ວຍເຫຼືອນຳຜູ້ທີ່ເດີນທາງມານຳກັນ ຫຼື ພະນັກງານອື່ນໆມາຊ່ວຍ.
- ບໍ່ຕ້ອງໄປນຳຄົນແປກໜ້າຢູ່ທີ່ສະຖານີລົດໄຟ ຫຼື ສະຖານີລົດເມ.

ພະຍາຍາມຫລີກລ່ຽງບໍ່ໃຫ້ໄປຂຶ້ນລົດສ່ວນຕົວ ຫຼື ລົດຕູ້ຂອງຄົນອື່ນ.

# 23 ເອກະສານ 23 ຂ: ລາຍການເອກະສານທີ່ຈຳເປັນຕ່າງໆ

ນີ້ແມ່ນລາຍການຂອງນ້ຳເບີໂທລະສັບ ແລະ ເອກະສານຕ່າງໆທີ່ເຈົ້າຄວນຈະຖືໄວ້ກັບເຈົ້າຢູ່ຕະຫຼອດເວລາ ເມື່ອເວລາເຈົ້າເດີນທາງ.

**ຈົ່ງສຳເນົາເອກະສານຂອງເຈົ້າໄວ້ 2 ສະບັບ.** ເອົາຊຸດໜຶ່ງປະໄວ້ນຳຄອບຄົວແລະອີກຊຸດໜຶ່ງຖືໄວ້ກັບເຈົ້າ. ຈົ່ງປະສຳເນົາເອກະສານສະບັບໜຶ່ງໄວ້ກັບເຈົ້າໂດຍແຍກອອກຈາກເອກະສານຕົ້ນສະບັບ, ດັ່ງນັ້ນຖ້າວ່າເອກະສານຕົ້ນສະບັບຫາກເສຍຫາຍ ຫຼື ຖືກລັກ, ອີກສະບັບໜຶ່ງທີ່ສຳເນົາກໍ່ນຳເອົາມາແຈ້ງຕໍ່ເຈົ້າໜ້າທີ່ໄດ້.

**ຈົ່ງຂຽນເບີໂທລະສັບ ແລະ ທີ່ຢູ່ລົງໃສ່ຂ້າງລຸ່ມນີ້ຖ້າມີ:**

ເບີໂທລະສັບຄອບຄົວຂອງເຈົ້າ________________________________________

ເບີໂທລະສັບຂອງຄົນຜູ້ທີ່ເຂົາໄດ້ເຮັດວຽກແລ້ວ.______________________________

ເບີໂທລະສັບຂອງຄົນຜູ້ທີ່ຢູ່ໃນປະເທດປາຍທາງຜູ້ທີ່ເຈົ້າຮູ້.________________________

ເບີໂທລະສັບຂອງໜ່ວຍງານໃຫ້ຄວາມຊ່ວຍເຫຼືອ/ໂຄງການຢູ່ໃນສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກ -ໃນກໍລະນີທີ່ເຈົ້າຕ້ອງການຄວາມຊ່ວຍເຫຼືອ.________________________________

________________________________________________________________

ເບີໂທຕິດຕໍ່ຂອງເຈົ້າໜ້າທີ່ຕຳຫຼວດ.___________________________________

ຊື່ ແລະ ທີ່ຢູ່ຂອງສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກ.__________________________

ຊື່ ແລະ ທີ່ຢູ່ຂອງສະຖານທູດຂອງປະເທດທີ່ເຈົ້າຈະໄປເຮັດວຽກ.______________________

ຊື່ ແລະ ທີ່ຢູ່ຂອງໂຄງການເຊັ່ນ: ອົງການສຸພະນິມິດໃນປະເທດທີ່ເຈົ້າຈະໄປເຮັດວຽກ.________

________________________________________________________________



| ລາຍການ: ເຈົ້າມີສິ່ງດັ່ງກ່າວນີ້ບໍ່? | ຮູ້ | ບໍ່ຮູ້ |
|---|---|---|
| ໜັງສືເດີນທາງ (ພັດສະປໍ) ຖ້າທ່ານຈະເດີນທາງໄປຕ່າງປະເທດ. | | |
| ສຳເນົາພັດສະປໍ (ພຽງແຕ່ເອົາສຳເນົາພັດສະປໍໃຫ້ກັບຄົນອື່ນເທົ່ານັ້ນເຈົ້າຄວນຖືປັດສະປໍດ້ວຍຕົວເຈົ້າເອງຕະຫຼອດເວລາ). | | |
| ຈົ່ງຂໍວີຊ້າເຂົ້າປະເທດປາຍທາງ (ຖ້າເຈົ້າມີຈຸດປະສົງຈະເດີນທາງໄປຕ່າງປະເທດ). | | |
| ຈົ່ງສຳເນົາເອກະສານຂໍວີຊ້າ. | | |
| ຈົ່ງສຳເນົາສັນຍາແຮງງານຂອງເຈົ້າ. | | |
| ຖືໂທລະສັບອັນໜຶ່ງ (ເຈົ້າສາມາດເອົາຊິມກາດຈາກປະເທດປາຍທາງຂອງເຈົ້າທີ່ໃຊ້ໄດ້). | | |
| ຈົ່ງຖືເງິນໃຫ້ພຽງພໍສຳລັບການຈ່າຍປີ້ລົດກັບບ້ານເມື່ອເວລາມີບັນຫາ. | | |

ຫ້ອງນີ້ແມ່ນຂຽນຄຳເຫັນຂອງຜູ້ເຂົ້າຮ່ວມໃສ່.

**ເຈົ້າມີຂໍ້ມູນຫຼາຍເທົ່າໃດຍິ່ງເຮັດໃຫ້ເຈົ້າມີຄວາມປອດໄພຫຼາຍເທົ່ານັ້ນ.**

# ເອກະສານ 23 ຄ: ປ້າຍຫ້າມຕ່າງໆ






# ບົດທີ 24: ເມື່ອເວລາທີ່ເຈົ້າໄປເຖິງຈຸດໝາຍປາຍທາງ

24

**ຈຸດປະສົງ:** ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມໄດ້ຮຽນຮູ້ຍຸດທະສາດໃນການຮັກສາຕົນເອງໃຫ້ມີຄວາມປອດໄພໃນຕອນທີ່ເຈົ້າໄປເຖິງປະເທດປາຍທາງ

**ເວລາ:**

75 ນາທີ

**ອຸປະກອນ**

- ❖ ລຳເນົາ 24 ຂ: ເມື່ອເວລາເຈົ້າມາຮອດ
- ❖ ລຳເນົາ 24 ຂ: ພາບກາຕູນການເຄື່ອນຍ້າຍແຮງງານສຳເນົາໃຫ້ພຽງພໍເຄິ່ງໜຶ່ງຂອງຜູ້ເຂົ້າຮ່ວມ. (ຜູ້ເຂົ້າຮ່ວມຈະໄດ້ນຳໃຊ້ພາບກະຕູນດັ່ງກ່າວນີ້ເປັນຄູ່).
- ❖ ເອກະສານ 24 ຄ: ວິທີໂທຫາຄອບຄົວ
- ❖ ປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພຂອງຜູ້ເຂົ້າຮ່ວມ.

## ການແນະນຳ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ, ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ໂດຍການນຳໃຊ້ເກມຈາກລາຍການຕ່າງໆທີ່ມີຢູ່.

**ທວນຄືນບົດຮຽນ:**

ມີໃຜສາມາດຈື່ໄດ້ບໍ່ວ່າບາງຍຸດທະສາດທີ່ສາມາດເຮັດໃຫ້ເຮົາມີຄວາມປອດໄພໃນໄລຍະເດີນທາງນັ້ນແມ່ນຫຍັງ?.

ພໍ່ແມ່ຂອງພວກເຈົ້າໄດ້ແນະນຳກ່ຽວກັບການເດີນທາງທີ່ປອດໄພແນວໃດ?

ເຈົ້າຄິດວ່າຍຸດທະສາດດັ່ງກ່າວນີ້ກໍ່ເໝາະສົມກັບຄວາມຈິງຢູ່ບໍ? ເປັນຫຍັງຈຶ່ງບໍ່ເໝາະສົມ?

## ການຮັກສາຄວາມປອດໄພເມື່ອເຈົ້າມາຮອດ

ຢາຍປື້ມຄູ່ມືການເດີນທາງທີ່ປອດໄພໃຫ້ຜູ້ເຂົ້າຮ່ວມແລ້ວໃຫ້ຜູ້ເຂົ້າຮ່ວມເປີດໄປທີ່ໜ້າບ່ອນທີ່ມີຫົວຂໍ້ "ຄວາມປອດໄພເມື່ອເຈົ້າໄປຮອດຈຸດໝາຍປາຍທາງ"ທີ່ຢູ່ໃນປື້ມຄູ່ມືສະບັບນີ້. ໃຫ້ຜູ້ເຂົ້າຮ່ວມຈົ່ງອ່ານຜ່ານລາຍການສິ່ງທີ່ເຮັດໃຫ້ຕົນເອງມີຄວາມປອດໄພ.

ຕໍ່ໄປນີ້ໃຫ້ຜູ້ເຂົ້າຮ່ວມເປີດໄປໜ້າທີ່ມີຫົວຂໍ້ວ່າ"ວິທີການນຳໃຊ້ໂທລະສັບໂທເມື່ອບ້ານ" (ສິ່ງດັ່ງກ່າວລວມຢູ່ໃນເອກະສານ 24 ຄ ຂ້າງລຸ່ມນີ້ :

ຈົ່ງຖາມບັນດາກຸ່ມ:

- ຄຳສະເໜີດັ່ງກ່າວນີ້ມັນເຮັດໃຫ້ເຈົ້າມີຄວາມເຂົ້າໃຈບໍ?
- ເຈົ້າໄດ້ນຳໃຊ້ຂໍ້ມູນເບີໂທນັ້ນບໍ? ເປັນຫຍັງຈຶ່ງນຳໃຊ້?ແລະເປັນຫຍັງຈຶ່ງບໍ່ໄດ້ໃຊ້?
- ເຈົ້າສາມາດຄິດເຖິງວິທີທາງໃດໜຶ່ງບໍ່ທີ່ເຮັດໃຫ້ຜູ້ເຂົ້າຮ່ວມຢູ່ໃນຄວາມປອດໄພເມື່ອພວກເຂົາເດີນທາງ

ໄປຮອດສະຖານທີ່ບ່ອນທີ່ພວກເຂົາຈະເຮັດວຽກ ? ເຈົ້າສາມາດລົມເລື່ອງນີ້ໃຫ້ກັບກຸ່ມຟັງໄດ້ບໍ່ ?.

### ພາບກະຕູນທີ່ບົ່ງບອກແຕ່ລະໄລຍະການເດີນທາງ

ຢາຍເອກະສານແຫຼ່ງຂໍ້ມູນ 24 ຂ: ພາບກະຕູນທີ່ນຳໃຊ້ໃນການມາຮອດຈຸດໝາຍປາຍທາງ, ຮູບພາບດັ່ງກ່າວຍັງໄດ້ບອກເຖິງເລື່ອງຂອງ ຍິງໜຸ່ມຄົນໜຶ່ງໃນການເດີນທາງເຂົ້າໄປເຮັດວຽກ. ໃຫ້ຜູ້ເຂົ້າຮ່ວມແບ່ງອອກເປັນ 2 – 3 ກຸ່ມ ແລະ ໃຫ້ອ່ານໃນເລື່ອງດັ່ງກ່າວ ແລະ ອ່ານຂໍ້ຄວາມໃນວົງມົນທີ່ຂີດອ້ອມໄວ້ ແລະ ຈົ່ງຂຽນຕົວຢ່າງບາງອັນທີ່ລາວສາມາດໄປຮອດແຕ່ລະສະຖານທີ່ເພື່ອເພີ້ມຄວາມປອດໄພໃຫ້ກັບລາວ ຍົກຕົວຢ່າງໃນພາບທຳອິດທີ່ລາວເວົ້າວ່າຕື່ມຂໍ້ມູນຮຽບຮ້ອຍແລ້ວ.

### ເກມປິດສະໜາ

ຈົ່ງຫຼິ້ນເກມໝາກບານເພື່ອເຕືອນຄວາມຊົງຈຳຈາກກິດຈະກຳອົບອຸ່ນຮ່າງກາຍ ຈາກເບື້ອງຕົ້ນຂອງຄູ່ມືສະບັບນີ້.

### ການຂຽນປະຈຳວັນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ແຕ້ມໃສ່ປຶ້ມບັນທຶກປະຈຳວັນຂອງພວກເຂົາກໍ່ໄດ້.

#### ສະຫຼຸບບົດຮຽນ

- ຈົ່ງໂທຫາຄອບຄົວຂອງພວກເຈົ້າເປັນປະຈຳ ແລະ ບອກໃຫ້ພວກເຂົາຮູ້ຈັກກ່ຽວກັບລາຍລະອຽດຂອງການດຳລົງຊີວິດຂອງເຈົ້າຢູ່ທີ່ນັ້ນ.
- ຈົ່ງໄປເດີນສຳຫຼວດເບິ່ງສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກ ແລະ ຕັດສິນໃຈວ່າສະຖານທີ່ດັ່ງກ່າວມັນເໝາະທີ່ຈະໄປເຮັດວຽກຫຼືບໍ່.
- ຈົ່ງສ້າງເພື່ອນຜູ້ທີ່ຢູ່ໃນສະຖານະການດຽວກັນກັບເຈົ້າແຕ່ຈົ່ງຈຳໄວ້ວ່າມີຫຼາຍຄົນທີ່ຖືກຂາຍໂດຍຄົນຜູ້ທີ່ເຂົາຮູ້ຈັກເປັນສ່ວນໃຫຍ່.
- ຈົ່ງສຶກສາສະຖານທີ່,ສະຖານີຕຳຫຼວດ, ສະຖານີລົດເມ, ອົງການຊ່ວຍເຫຼືອທ້ອງຖິ່ນ ຫຼື ສູນທີ່ໃຫ້ຄຳປຶກສາແຮງງານເຄື່ອນຍ້າຍ.
- ຫ້າມບໍ່ໃຫ້ສົ່ງເງິນໃສ່ຊອງກັບບ້ານເພາະວ່າມັນຈະຖືກລັກໄດ້ງ່າຍ.

### ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກໆຄົນທີ່ມາຮ່ວມໃນມື້ນີ້, ພວກເຮົາຈະນັດປະຊຸມກັນໃໝ່ໃນເທື່ອໜ້າ, ທຸກໆຄົນແມ່ນໄດ້ຮັບດາວຕື່ມຄົນລະ 1 ດວງ.

ໃຫ້ສະມາຊິກໃນກຸ່ມຖາມພໍ່ແມ່ຂອງພວກເຂົາ, ຖາມຜູ້ປົກຄອງຂອງພວກເຂົາ ແລະ ເພື່ອນຂອງພວກເຂົາໃນຊຸມຊົນວ່າ:

- ເຈົ້າມີຂໍ້ສະເໜີຫຍັງທີ່ຈະແນະນຳກ່ຽວກັບວິທີຮັກສາຕົວເຈົ້າໃຫ້ມີຄວາມປອດໄພໃນລະຫວ່າງການເດີນທາງບໍ?
- ມີໃຜຮູ້ຄົນໃດຄົນໜຶ່ງບໍຜູ້ທີ່ເຂົາເຄື່ອນຍ້າຍແຮງງານມາກ່ອນ?
- ພວກເຂົາເຫຼົ່ານັ້ນໄດ້ຕິດຕໍ່ມາຫາບ້ານຂອງພວກເຂົາຢູ່ບໍ່?

ບັນດາຄູຝຶກຕ້ອງບອກໃຫ້ຜູ້ເຂົ້າຮ່ວມຂຽນຂໍ້ຄວາມໃສ່ເຈ້ຍແຜ່ນໃຫຍ່ ແລ້ວໃຫ້ຖືກັບເຮືອນເພື່ອເຕືອນຄວາມຊົງຈຳຂອງພວກເຂົາ.

ຈົ່ງອະທິບາຍຕື່ມອີກວ່າອາທິດໜ້າພວກເຮົາຈະໄດ້ໂອ້ລົມກ່ຽວກັບຫົວຂໍ້ທີ່ຕ່າງຈາກນີ້ຄື: ເຈົ້າຈະເຮັດແນວໃດໃນເມື່ອວ່າເຈົ້າຖືກຫລອກແລ້ວ.



# ເອກະສານ 24 ກ: ຈົ່ງຮັກສາຄວາມປອດໄພເມື່ອເວລາທີ່ເຈົ້າໄປເຖິງຈຸດ

24

| **ສິ່ງທີ່ເຈົ້າຄວນຈະເຮັດໃນເມື່ອເຈົ້າໄປຮອດຈຸດໝາຍປາຍທາງ.** | ✓ **ຈົ່ງກວດເບິ່ງເມື່ອເຈົ້າໄດ້ເຮັດສຳເລັດແລ້ວ** |
|---|---|
| ເມື່ອໃດທີ່ທ່ານໄປເຖິງຈຸດໝາຍປາຍທາງແລ້ວ, ຈົ່ງໃຫ້ຖາມຊື່ເມືອງ ແລະ ພີ່ນ້ອງທີ່ເຈົ້າຢູ່ນຳ. ຮຽນຮູ້ໃນການອະທິບາຍໃຫ້ກັບຄົນວ່າເຈົ້າອາໄສຢູ່ໃສ? (ການອະທິບາຍດັ່ງກ່າວນີ້ຈະໄດ້ບົ່ງບອກວ່າເຈົ້າຢູ່ໃສໃນເມື່ອເຈົ້າເກີດບັນຫາ). | |
| ໂທຫາຄອບຄົວຂອງເຈົ້າໃຫ້ໄວທີ່ສຸດໃນເມື່ອເຈົ້າໄປຮອດ (ວິທີການໂທຫາຄອບຄົວແມ່ນໄດ້ອະທິບາຍໃນເອກະສານຄູ່ມືນີ້ແລ້ວ). ຈົ່ງບອກກັບຄອບຄົວຂອງເຈົ້າວ່າເຈົ້າພັກຢູ່ໃສ ຖ້າເປັນໄປໄດ້ກໍ່ໃຫ້ເອົາເບີໂທຂອງໝູ່ບ່ອນທີ່ຄອບຄົວຈະສາມາດໂທຫາເຈົ້າໄດ້. | |
| ຈົ່ງໂທຫາພໍ່ແມ່ຂອງເຈົ້າເປັນປະຈຳ. ມັນເປັນສິ່ງທີ່ດີຖ້າຫາກເຈົ້າມີແຜນໂທຫາຄອບຄົວອາທິດລະຄັ້ງໃນວັນດຽວ ແລະ ເວລາດຽວ.ນີ້ໝາຍຄວາມວ່າ:ຖ້າວ່າເຈົ້າຫຼົງ ຫຼື ເຈົ້າບໍ່ໄດ້ໂທຫາພວກເຂົາກໍ່ຈະຮູ້ວ່າເຈົ້າຕົກຢູ່ໃນຄວາມອັນຕະລາຍ. ຈົ່ງບອກກັບພວກເຂົາຖ້າເຈົ້າມີບັນຫາຫຍັງ.<br><br>ຈົ່ງໂອ້ລົມບັນຫາດັ່ງກ່າວກັບພໍ່ແມ່ຂອງເຈົ້າ. | |
| ຈົ່ງໄປເດີນສຳຫຼວດສະຖານທີ່ບ່ອນທີ່ເຈົ້າຈະໄປເຮັດວຽກສະຖານທີ່ດັ່ງກ່າວຈະເໝາະກັບເຈົ້າ ຫຼື ບໍ່. | |
| ຈົ່ງຕິດຕໍ່ຫາແຮງງານເຄື່ອນຍ້າຍຜູ້ທີ່ເດີນທາງມາກັບເຈົ້າເປັນປະຈຳ, ຈົ່ງເຮັດຄືໝູ່ຜູ້ທີ່ຢູ່ໃນສະຖານະການດຽວກັນກັບເຈົ້າ. ຈົ່ງຈຳໄວ້ວ່າມີຫຼາຍຄົນທີ່ຖືກຫລອກໂດຍຄົນທີ່ພວກເຂົາຮູ້ຈັກ. | |
| ຈົ່ງເດີນສຳຫຼວດເພື່ອນບ້ານຂອງເຈົ້າ ແລະ ສຶກສາວ່າ: ສະຖານີຕຳຫຼວດ, ສະຖານີລົດເມຢູ່ໃສ. | |
| ຈົ່ງຖາມຫາສູນຊຸມຊົນ ຫຼື ອົງການບໍລິການແຮງງານເຄື່ອນຍ້າຍ, ສະຖານທີ່ນັດພົບແຮງງານເຄື່ອນຍ້າຍ. ຈົ່ງເດີນສຳຫຼວດສະຖານທີ່ດັ່ງກ່າວ. | |
| ຖ້າຫາກວ່າເຈົ້າຕັດສິນໃຈຢາກຈະສົ່ງເງິນກັບບ້ານ. ຈົ່ງປຶກສາກັບເພື່ອນໃນທາງທີ່ປອດໄພໃນການສົ່ງເງິນກັບບ້ານ. ຫ້າມສົ່ງເງິນກັບບ້ານໂດຍໃສ່ຊອງຈົດໝາຍເພາະວ່າມັນອາດຖືກລັກໄດ້ງ່າຍ. | |

# 24 ເອກະສານ 24 ຂ: ພາບກະຕູນທີ່ສະແດງເຖິງການເຄື່ອນຍ້າຍແຮງງານແຕ່ລະໄລຍະ

ຈົ່ງນຳໃຊ້ຮູບພາບກາຕູນອັນໜຶ່ງເຊິ່ງວ່າ ນ. ເອັດ ໄດ້ໄປໃນແຕ່ລະໄລຍະ ໃນແຕ່ລະໄລຍະມີຄຳຖາມທີ່ໄດ້ຂຽນຢູ່ໃນຂ້າງລຸ່ມພາບກາຕູນນັ້ນ ແລະ ລັກສະນະຂອງ ນ. ເອັດ ແມ່ນໄດ້ມີວົງມົນທີ່ຂີດອ້ອມໄວ້ໂດຍປະສະຈາກຄຳເວົ້າຕ່າງໆ, ວົງມົນດັ່ງກ່າວກໍ່ໃຫ້ໃຫຍ່ພຽງພໍເພື່ອທີ່ຈະໃຫ້ຜູ້ເຂົ້າຮ່ວມຂຽນຄຳເຫັນໃສ່ໄດ້. ໃນກ້ອງຮູບພາບດັ່ງກ່າວກໍ່ໃຫ້ຂຽນຂໍ້ຄວາມໃສ່ກ່ອນຈະມີການເລີ່ມກິດຈະກຳ:



***ພາບທີ 1:*** **ນ. ເອັດ ກຳລັງເດີນທາງ.**

ຢູ່ໃນກ້ອງພາບດັ່ງກ່າວ ນ. ເອັດ ເຮັດແນວໃດເພື່ອໃຫ້ລາວມີຄວາມປອດໄພໃນຄະນະທີ່ລາວຂີ່ລົດເມ?

ຍົກຕົວຢ່າງ ຂໍ້ຄວາມທີ່ຂຽນໃສ່ວົງທີ່ໄດ້ຂີດອ້ອມໄວ້ "ຂ້ອຍຮັກສາເອກະສານຢູ່ໃນບ່ອນທີ່ປອດໄພແລ້ວ, ຂ້ອຍຈະບໍ່ເວົ້າກັບຄົນແປກໜ້າ".



***ພາບທີ 2:*** **ນ. ເອັດ ກຳລັງຢູ່ໃນສະຖານທີ່ບ່ອນຈອດລົດເມ. ມີຜູ້ຍິງຄົນໜຶ່ງໄດ້ເຂົ້າມາຫາເອັດ.ນ.ເອັດກໍ່ເມີນເສີຍຕໍ່ກັບຍິງຄົນນັ້ນແລະກໍ່ໄດ້ຂຶ້ນລົດເມຄັນໜຶ່ງໄປພົບເພື່ອນຂອງລາວ.**

ຢູ່ໃນກ້ອງພາບດັ່ງກ່າວ ນ. ເອັດ ຄວນເຮັດແນວໃດເພື່ອຮັກສາຕົວລາວເອງໃຫ້ມີຄວາມປອດໄພຢູ່ໃນບ່ອນຈອດລົດເມ?

ຕົວຢ່າງຂໍ້ຄວາມທີ່ຢູ່ໃນວົງມົນທີ່ຂີດອ້ອມໄວ້"ບໍ່ ຂອບໃຈ ຂ້ອຍມີແຜນທີ່ຈະໄປພົບເພື່ອນຂອງຂ້ອຍແລ້ວ"



***ຮູບພາບທີ 3:*** **ນ.ເອັດ ມາຮອດທີ່ໄຮງງານແລະລາວກໍ່ໄດ້ເບິ່ງຜ່ານໆຄົນຢູ່ທີ່ນັ້ນກຳລັງເຮັດວຽກຢູ່.**

ໃນກ້ອງຮູບພາບ: ນ.ເອັດ ຄວນເຮັດແນວໃດເພື່ອຮັກສາໃຫ້ລາວມີຄວາມປອດໄພໃນວຽກງານໃໝ.

ຂໍ້ຄວາມທີ່ຢູ່ໃນວົງມົນທີ່ຂີດອ້ອມໄວ້"ກ່ອນຂ້ອຍຈະເລີ່ມຕົ້ນເຮັດວຽກຂ້ອຍຕ້ອງການກວດເບິ່ງກ່ອນບ່ອນທີ່ຂ້ອຍຈະໄປເຮັດວຽກ. ຂ້ອຍຈະລະມັດລະວັງໃນການເຊັນສັນຍາແຮງງານເພື່ອຮັບປະກັນວ່າຂ້ອຍໄດ້ຮັບເງິນເດືອນແຕ່ລະເດືອນ,ດັ່ງນັ້ນບໍ່ມີໃຜສາມາດເອົາປຽບຂ້ອຍໄດ"




***ຮູບພາບທີ 4:*** ນ.ເອັດ ໄດ້ຍ່າງສຳຫຼວດເບິ່ງບ້ານໃກ້ຄຽງ,ລາວໄດ້ສັງເກດເບິ່ງສະຖານີຕຳຫຼວດ.

ຢູ່ກ້ອງພາບດັ່ງກ່າວ ນ. ເອັດ ຄວນເຮັດແນວໃດເພື່ອເຮັດໃຫ້ລາວມີຄວາມປອດໄພທີ່ຢູ່ກັບເພື່ອນບ້ານໃໝ່ຂອງລາວ?

ຕົວຢ່າງຂອງຂໍ້ຄວາມທີ່ຢູ່ໃນວົງມົນທີ່ຂີດອ້ອມໄວ້ "ຂ້ອຍໄດ້ຮູ້ສະຖານທີ່ທີ່ສຳຄັນຢູ່ໃນບໍລິເວນທີ່ຂ້ອຍຢູ່ແລະຂ້ອຍກໍ່ຮູ້ເບີໂທຕິດຕໍ່ສຸກເສີນຢູ່ໃນສະຖານທີ່ນັ້ນ"




***ຮູບພາບທີ 5:*** ນ. ເອັດ ຢູ່ທີ່ສູນຊຸມຊົນແຮງງານເຄື່ອນຍ້າຍແຫ່ງໜຶ່ງ,ລາວກຳລັງຮູ້ຈັກກັບເພື່ອນໃໝ່.

ຢູ່ກ້ອງຮູບພາບ ນ.ເອັດ ຈະສ້າງເພື່ອນແນວໃດ?.

ຕົວຢ່າງຂອງຂໍ້ຄວາມທີ່ຢູ່ໃນວົງມົນທີ່ຂີດອ້ອມໄວ້ "ຂ້ອຍຈະເປີດໂອກາດ ແລະແລກປ່ຽນເລື່ອງຂອງຂ້ອຍກັບຄົນທີ່ຂ້ອຍເຊື່ອໝັ້ນ, ດັ່ງນັ້ນພວກເຂົາສາມາດຊ່ວຍຂ້ອຍໃນການແກ້ໄຂບັນຫາ"



***ຮູບພາບທີ 6:*** **ນ. ເອັດ ກຳລັງໂທຫາຄອບຄົວຂອງລາວເພື່ອບອກກັບພໍ່ແມ່ວ່າລາວຢູ່ໃສ.**

ຢູ່ກ້ອງຮູບພາບ: ນ.ເອັດ ໄດ້ປົກປ້ອງຕົວຂອງລາວເອງໄດ້ແນວໃດ?

ຕົວຢ່າງຂອງຂໍ້ຄວາມທີ່ຢູ່ໃນວົງມົນທີ່ຂີດອ້ອມໄວ້:"ຂ້ອຍຈະເຮັດໃຫ້ຄອບຄົວຂອງຂ້ອຍຮູ້ວ່າຂ້ອຍຢູ່ໃສ ແລະຂ້ອຍຈະມີຄວາມປອດໄພທີ່ຂ້ອຍໄດ້ຕິດຕໍ່ຫາຄອບຄົວເປັນປະຈຳ"





1. ນາງ ເອສ ໃຫ້ມີຄວາມປອດໄພ ໃນຂະນະຂີ່ລົດເມ?1.




2. ນາງ ເອສ ເຮັດແນວໃດເພື່ອຮັກສາມີຄວາມປອດໄພໃນຄິວລົດເມ?





3. ນາງ ເອສ ເຮັດແນວໃດໃຫ້ມີຄວາມປອດໄພ ໃນຂະນະເລີ່ມວຽກໃໝ່?




4. ນາງ ເອສ ໃຫ້ມີຄວາມປອດໄພ ໃນຂະນະທີ່ຢູ່ກັບເພື່ອນບ້ານໃໝ່?






5. ນາງ ເອສ ເຮັດແນວໃດໃນການສ້າງເພື່ອນ?



6.. ນາງ ເອສ ໄດ້ປົກປ້ອງຕົວຂອງລາວແນວໃດ?



# ເອກະສານ 24 ຄ: ວິທີການໂທລະສັບຫາຄອບຄົວ

24

ຖ້າຫາກເຈົ້າມີໂທລະສັບກໍ່ຄວນຖືໄປນຳເຈົ້າໃນເມື່ອເຈົ້າເດີນທາງໄປເຮັດວຽກ, ເຖິງຢ່າງໃດກໍ່ຕາມເບີໂທຂອງເຈົ້າກໍ່ບໍ່ສາມາດໃຊ້ໄດ້ໃນຕ່າງປະເທດແຕ່ເຈົ້າສາມາດຊື້ເອົາເບີໂທມາໃສ່ເມື່ອເຈົ້າເດີນທາງໄປປະເທດປາຍທາງ.

ຖ້າເຈົ້າບໍ່ມີໂທລະສັບຂອງເຈົ້າເອງ, ມີຫຼາຍປະເທດປາຍທາງເຊັ່ນວ່າ: ປະເທດໄທ, ປະເທດມາເລເຊຍ ກໍ່ມີຮ້ານບໍລິການອິນເຕີເນັດບ່ອນທີ່ເຈົ້າຈະຈ່າຍເງິນໃຫ້ເຂົາເພື່ອໂທຫາຄອບຄົວ.

## ເພື່ອໂທຫາປະເທດຂອງເຈົ້າ ເຈົ້າຄວນປະຕິບັດດັ່ງນີ້:

ໃຫ້ກົດ: **001**

ແລະແລ້ວ: **ລະຫັດປະເທດ.**

ແລະແລ້ວ: **ເບີໂທລະສັບປະເທດຂອງເຈົ້າ, ຈົ່ງຂ້າມເລກ 0 ໂຕທຳອິດ**

**001 + ລະຫັດປະເທດ + ( ບໍ່ໃຫ້ຂຽນ 0 ) + ເບີໂທ.**

ນີ້ແມ່ນລະຫັດຂອງແຕ່ລະປະເທດ:

| | | | |
|---|---|---|---|
| **ປະເທດກຳປູເຈຍ:** | 855 | **ປະເທດຈີນ:** | 86 |
| **ປະເທດລາວ:** | 856 | **ປະເທດຫວຽດນາມ:** | 84 |
| **ປະເທດໄທ:** | 66 | **ປະເທດພະມ້າ:** | 95 |

(ພະນັກງານອົງການສຸພະນິມິດ, ຈົ່ງຮັກສາລະຫັດປະເທດເຫຼົ່ານີ້ໄວ້ ແຕ່ໃຫ້ໝາຍລະຫັດປະເທດຂອງຕົນໄວ້ໃຫ້ຈະແຈ້ງ)

ຕົວຢ່າງ: ຖ້າເບີໂທຂອງເຈົ້າແມ່ນຢູ່ປະເທດກຳປູເຈຍແມ່ນ 012 820544 ຖ້າເຈົ້າຢູ່ປະເທດໄທ ແລະ ຢາກໂທເມືອເຮືອນແມ່ນ

**ໃຫ້ກົດ: 001 855 12 820 544**

ຕົວຢ່າງ: ຖ້າເບີໂທຂອງເຈົ້າຢູ່ຫວຽດນາມ ແມ່ນ 018 442211, ແລະ ເຈົ້າຕ້ອງການທີ່ຈະໂທຫາປະເທດຫວຽດນາມ ຈາກປະເທດໄທ

**ໃຫ້ເຈົ້ານແຈ້ງ: 001 84 18 442211**

# 25 ບົດທີ 25: ເຈົ້າຈະເຮັດແນວໃດໃນເມື່ອເຈົ້າຖືກຄ້າມະນຸດ?

**ຈຸດປະສົງ:** **ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ກ່ຽວກັບການໃຫ້ການຊ່ວຍເຫຼືອບັນດາແຮງງານເຄື່ອນຍ້າຍ ແລະ ຈະໄດ້ພິຈາລະນາເຖິງທາງເລືອກຕ່າງໆຂອງແຮງງານເຄື່ອນຍ້າຍຜູ້ທີ່ເຂົາໄດ້ຖືກຄ້າມະນຸດ.**

**ເວລາ:**

75 ນາທີ

**ອຸປະກອນ**

- ❖ ສຳເນົາ 25 ກ: ສະຖານະການທີ່ຫຍຸ້ງຍາກ(ຜູ້ເຂົ້າຮ່ວມຈະໄດ້ໃຊ້ 4 ຫຼື 5 ຄົນ)
- ❖ ເອກະສານ 25 ຂ: ຖ້າເຈົ້າຖືກຄ້າມະນຸດ ແລະ 25 ຄ: ເບີໂທຕິດຕໍ່
- ❖ ປື້ມຜູ້ນຳທາງທີ່ສະຫຼາດໃຫ້ບັນດາຜູ້ເຂົ້າຮ່ວມ.

## ການແນະນຳ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ຜູ້ເຂົ້າຮ່ວມ, ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ .

**ອົບອຸ່ນຮ່າງກາຍ:**

ຄູຝຶກຕ້ອງໄດ້ນຳໃຊ້ເກມຕາມລາຍການທີ່ມີຢູ່.

**ທວນຄືນບົດຮຽນ:**

ມີໃຜແດ່ໄດ້ຮັບຄຳແນະນຳຈາກພໍ່ແມ່ຂອງພວກເຈົ້າ ວິທີການຮັກສາຕົນເອງໃຫ້ມີຄວາມປອດໄພໃນລະຫວ່າງການເດີນທາງ? ຄຳແນະນຳດັ່ງກ່າວແມ່ນແນວໃດ?

ມີໃຜແດ່ທີ່ຮູ້ຈັກກັບຜູ້ທີ່ເຂົາໄດ້ຕິດຕໍ່ຫາຄອບຄົວຂອງເຂົາພາຍຫຼັງທີ່ພວກເຂົາໄດ້ເດີນທາງໄປທຳງານທີ່ຕ່າງປະເທດ?

## ການຄວບຄຸມຂອງຜູ້ຄ້າມະນຸດ

ໃນບົດຮຽນຕອນນີ້ຈະເວົ້າກ່ຽວກັບ ພວກເຮົາຄວນເຮັດແນວໃດໃນເມື່ອພວກເຮົາຮູ້ວ່າມີຄົນຖືກຄ້າມະນຸດ ນີ້ກໍ່ເປັນເລື່ອງທີ່ຍາກທີ່ຈະກ່າວເຖິງເພາະວ່າບໍ່ມີຄຳຕອບທີ່ງ່າຍດາຍ. ເຊິ່ງຜູ້ຄ້າມະນຸດກໍ່ພະຍາຍາມຢ່າງໜັກເພື່ອຮັບປະກັນເຮັດໃຫ້ຄົນເຮົາບໍ່ສາມາດລັກໜີໄດ້ ຫຼື ບໍ່ໃຫ້ຄົນງານນັ້ນຕິດຕໍ່ຫາຄອບຄົວເພື່ອໃຫ້ມາຊ່ວຍ. ໃຫ້ແຕ່ລະກຸ່ມຄິດຫາວິທີທາງທີ່ຜູ້ຄ້າມະນຸດຄຸມຕົວຜູ້ທີ່ຖືກເຄາະຮ້າຍຢູ່ ສິ່ງດັ່ງກ່າວອາດເປັນ:

- ການຄູ່ເຂັນ
- ຄວາມຮຸນແຮງທາງດ້ານຮ່າງກາຍ
- ການຂົ່ມຄູ່ຄອບຄົວຜູ້ທີ່ຖືກເຄາະຮ້າຍ.
- ການກັກຂັງຜູ້ທີ່ຖືກເຄາະຮ້າຍໃຫ້ໂດດດ່ຽວ.
- ການໃຫ້ຄຳໝັ້ນສັນຍາກັບຜູ້ຖືກເຄາະຮ້າຍວ່າຈະເອົາເງິນໃຫ້ຖ້າພວກເຂົາຫາກເຮັດວຽກດີ.



- ການເອົາຢາເສບຕິດໃຫ້ຜູ້ຖືກເຄາະຮ້າຍກິນ.
- ຄູ່ເຂັນຜູ້ໄດ້ຮັບເຄາະຮ້າຍ ແລະ ຈະລາຍງານໃຫ້ເຈົ້າໜ້າທີ່ຕຳຫຼວດ ເພາະວ່າເຈົ້າບໍ່ມີເອກະສານເຂົ້າເມືອງທີ່ຖືກຕ້ອງຕາມກົດໝາຍ.
- ກັກຂັງຜູ້ຖືກເຄາະຮ້າຍໃນສະຖານທີ່ເຮັດວຽກ ຫຼື ໃນໂຮງງານ.

## ສະຖານະການທີ່ຫຍຸ້ງຍາກ

ຈົ່ງບອກກັບຜູ້ເຂົ້າຮ່ວມວ່າມັນເປັນສິ່ງທີ່ຫຍຸ້ງຍາກ ແລະ ອັນຕະລາຍຫຼາຍທີ່ຈະລັກໜີຈາກຜູ້ຄ້າມະນຸດ.

ໃຫ້ຜູ້ເຂົ້າຮ່ວມແບ່ງອອກເປັນກຸ່ມກຸ່ມລະ 4 -5 ຄົນ ແລະ ແຕ່ລະກຸ່ມໃຫ້ມີສຳເນົາເອກະສານແຫຼ່ງຂໍ້ມູນ 25 ກ: ສະຖານະການທີ່ຫຍຸ້ງຍາກ. ໃຫ້ຜູ້ເຂົ້າຮ່ວມເລືອກສະຖານະການທີ່ຫຍຸ້ງຍາກດັ່ງກ່າວ ແລະ ພິຈາລະນາວ່າພວກເຂົາຄິດແນວໃດກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ພວກເຂົາຄວນເຮັດແນວໃດໃນເມື່ອຕົກຢູ່ໃນກໍລະນີແບບນີ້.

## ການສະໜັບສະໜູນການໃຫ້ບໍລິການ

ໃຫ້ບັນດາຜູ້ເຂົ້າຮ່ວມເອົາປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພອອກມາ. ຈົ່ງເບິ່ງທີ່ລາຍການຂອງເບີໂທຕິດຕໍ່ສຸກເສີນຕ່າງໆ. ອະທິບາຍຕື່ມອີກວ່ານັບຕັ້ງແຕ່ແຮງງານເຄື່ອນຍ້າຍຊອກຫາວຽກເຮັດງານທຳໃນແຕ່ລະປະເທດກໍ່ມີເບີໂທຕິດຕໍ່ສຸກເສີນທີ່ສາມາດໃຫ້ການຊ່ວຍເຫຼືອໃນປະເທດນັ້ນໆ.

ທຸກຄົນຄວນທ່ອງ ແລະ ຈື່ຈຳເບີໂທຕິດຕໍ່ສຸກເສີນເຫຼົ່ານັ້ນ,ເບີໂທປະເທດທີ່ພວກເຂົາເຮັດວຽກຢູ່, ເບີໂທຕິດຕໍ່ຫາຄອບຄົວ ຫຼື ເບີໂທຂອງເພື່ອນຂອງພວກເຂົາ. ສິ່ງນີ້ກໍ່ໝາຍຄວາມວ່າຖ້າພວກເຂົາຫາກເຮັດເບີດັ່ງກ່າວເສຍ ພວກເຂົາກໍ່ຈະຈຳໄດ້ແລະຕໍ່ໄປນີ້ໃຫ້ຊ່ວຍຜູ້ເຂົ້າຮ່ວມໃນການທ່ອງເບີໂທຕິດຕໍ່ສຸກເສີນເລົ່ານັ້ນ. ໃຫ້ຄູຝຶກອ່ານເບີໂທຕິດຕໍ່ສຸກເສີນດັ່ງກ່າວໃນທຳນອງສຽງເພງ ແລະ ໃຫ້ຜູ້ເຂົ້າຮ່ວມເວົ້າຕາມຫຼືຮ້ອງຕາມໝາຍເລກນັ້ນຕາມຫຼັງພ້ອມໆກັນ ແລະ ກໍ່ສາມາດຮ້ອງເປັນທຳນອງສຽງເພງແບບງ່າຍໆຍົກຕົວຢ່າງ.

ຄູຝຶກ : “1-1-9-1- ເຈົ້າໂທຫາຕຳຫຼວດມາຊ່ວຍ” .

ຜູ້ເຂົ້າຮ່ວມ “1-1-9-1 ເຈົ້າໂທຫາຕຳຫຼວດມາຊ່ວຍ”.

ຈົ່ງເວົ້າຄືນໝາຍເລກດັ່ງກ່າວນີ້ຫຼາຍໆຄັ້ງຈົນກະທັ້ງຜູ້ເຂົ້າຮ່ວມທັງໝົດຈື່ຈຳໄດ້ ແລະ ແລ້ວກໍ່ໃຫ້ທ່ອງນ້ຳເບີໂທຕິດຕໍ່ສຸກເສີນທີ່ປະເທດປາຍທາງ ຫຼື ນ້ຳເບີຕິດຕໍ່ສຸກເສີນຂອງບັນດາປະເທດທີ່ໃກ້ກັບປະເທດຂອງເຈົ້າ.

ອະທິບາຍໃຫ້ຜູ້ເຂົ້າຮ່ວມຕື່ມວ່າ ມັນມີປະໂຫຍດຫຼາຍໃນການຮຽນຮູ້ເຖິງກົດໝາຍແຮງງານໃນປະເທດຂອງເຈົ້າກ່ອນທີ່ຈະມີການເດີນທາງ ດັ່ງນັ້ນພວກເຂົາຈະເຂົ້າໃຈສິດທິຕ່າງໆ ຜົນໄດ້ຮັບຂອງຄົນງານຕ່າງດ້າວ.

## ເຈົ້າຈະເຮັດແນວໃດໃນເມື່ອເຈົ້າຫາກຖືກຄ້າມະນຸດ

ຕັ້ງຄຳຖາມ: ເຈົ້າຄວນເຮັດແນວໃດຖ້າຫາກວ່າເຈົ້າຖືກຄ້າມະນຸດ ເປີດໄປໃນໃບທີ່ມີຄຳວ່າ “ ເຈົ້າຈະເຮັດແນວໃດໃນເມື່ອເຈົ້າຖືກຄ້າມະນຸດ” ຖ້າວ່າມັນມີຢູ່ໃນປື້ມຄູ່ມືການເຂົ້າເມືອງທີ່ປອດໄພໃຫ້ຜູ້ເຂົ້າຮ່ວມອ່ານດັ່ງໆ”.

ໃນເອກະສານໜ້ານີ້ໄດ້ສະເໜີການໃຫ້ຄຳແນະນຳ ແຕ່ວ່າການປະຕິບັດດັ່ງກ່າວອາດບໍ່ພຽງພໍທີ່ຈະຊ່ວຍເຫຼືອຜູ້ທີ່ຖືກຄ້າມະນຸດ. ບັນດາຜູ້ຄ້າມະນຸດພວກເຂົາເປັນອາດສະຍາກຳທີ່ອັນຕະລາຍຫຼາຍ. ທາງທີ່ດີກໍ່ຮັກສາໃຫ້ຕົນເອງເພື່ອທີ່ຈະບໍ່ໃຫ້ຖືກຄ້າມະນຸດຕັ້ງແຕ່ຕອນທຳອິດ.

ຖ້າຫາກວ່າຜູ້ໃດເຄີຍພົບເຫັນຄົນໃດຄົນໜຶ່ງ, ຜູ້ທີ່ລອດຕາຍອອກຈາກການຄ້າມະນຸດຫຼືລອດອອກຈາກການ

ກິດຂີ່ຂູດຮີດແຮງງານ. ຖ້າພວກເຂົາຫາກເຄີຍຮູ້ວ່າມີຜູ້ທີ່ເຄີຍລອດຈາກການຄ້າມະນຸດ. ເຂົາລອດອອກມາໄດ້ແນວໃດ.?

## ການສະແດງບົດບາດສົມມຸດ

ໃຫ້ຜູ້ເຂົ້າຮ່ວມແບ່ງອອກເປັນກຸ່ມ ກຸ່ມລະ 8-12 ຄົນ ແລະ ໃຫ້ແຕ່ລະກຸ່ມເລືອກເອົາຫົວຂໍ້ສະຖານະການທີ່ຫຍຸ້ງຍາກແຕກຕ່າງກັນ ແລະ ເພື່ອກະກຽມການສະແດງບົດບາດສົມມຸດກ່ຽວກັບສະຖານະການທີ່ຫຍຸ້ງຍາກ.

ບອກໃຫ້ແຕ່ລະກຸ່ມກຽມການສະແດງບົດບາດສົມມຸດປະມານ 5 ນາທີ ຫຼັງຈາກນັ້ນກໍ່ເອົາມາສະແດງໃຫ້ກັນເບິ່ງ.

### ສະຫຼຸບບົດຮຽນ

- ການຮຽນຮູ້ກ່ຽວກັບເບີໂທຕິດຕໍ່ສຸກເສີນຢູ່ໃນປະເທດຂອງເຈົ້າທີ່ຢູ່ໃນປະເທດປາຍທາງ.
- ຖ້າວ່າພວກເຈົ້າຫາກຖືກຄ້າມະນຸດພວກເຈົ້າຄວນ:
  - ຈົ່ງພະຍາຍາມຈຳແນກສະຖານທີ່ບ່ອນທີ່ເຈົ້າຢູ່ ໂດຍການເບິ່ງຊື່ຂອງສະຖານທີ່ດັ່ງກ່າວ, ທາງດ່ວນ, ເບີໂທຕ່າງໆ, ຊື່ເມືອງຕ່າງໆ, ບັນດາຕຶກອາຄານທີ່ມີຈຸດເດັ່ນໆ. ນີ້ເປັນວິທີການທີ່ເຈົ້າຈະໃຊ້ໂທລະສັບໂທຫາເພື່ອພວກເຂົາຈະໂທຫາເຈົ້າໄດ້ ແລະ ເພື່ອທີ່ເຂົາຈະຊອກຫາເຈົ້າ.
  - ພະຍາຍາມຈື່ຊື່ຂອງໂຮງງານ, ຮ້ານອາຫານ ຫຼື ຮ້ານຂາຍບໍລິການ ບ່ອນທີ່ເຈົ້າຢູ່ນັ້ນ.
  - ຈົ່ງວາງແຜນການທີ່ຈະລົງມືເຮັດ.
  - ບໍ່ຕ້ອງເຮັດວຽກຖ້ານາຍໜ້າຫາກເວົ້າວ່າເຂົາຈະບໍ່ຈ່າຍເງິນເດືອນໃຫ້ເຈົ້າເປັນປີ.
  - ໂທຫາເບີໂທຕິດຕໍ່ສຸກເສີນທີ່ຢູ່ໃນປື້ມນ້ອຍຂອງເຈົ້າ.
- ຄວາມຈິງກໍ່ຄືວ່າ ມັນກໍ່ເປັນການຍາກທີ່ຈະລັກໜີອອກຈາກການປົກຄອງຂອງຜູ້ຄ້າມະນຸດ. ສິ່ງສຳຄັນທີ່ສຸດກໍ່ຄວນໃຫ້ລະວັງ ພະຍາຍາມຫຼີກລ້ຽງບໍ່ໃຫ້ຖືກຂາຍໃນຕອນທຳອິດ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຊຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈທຸກຄົນທີ່ມາຮ່ວມໃນຄັ້ງນີ້. ພວກເຮົາຈະນັດປະຊຸມກັນໃໝ່ໃນຄັ້ງຕໍ່ໄປ, ທຸກຄົນທີ່ເຂົ້າມາຮ່ວມໃນມື້ນີ້ແມ່ນຈະໄດ້ຮັບດາວຄົນລະ 1 ດວງ.

ໃຫ້ແຕ່ລະກຸ່ມທ່ອງເບີໂທຕິດຕໍ່ສຸກເສີນຂອງປະເທດປາຍທາງໃຫ້ໄດ້.

ບັນດາຄູຝຶກຕ້ອງບອກໃຫ້ຜູ້ເຂົ້າຮ່ວມຊຽນໃສ່ເຈ້ຍໃບໃຫຍ່ເພື່ອເຕືອນຄວາມຊົງຈຳຂອງພວກເຂົາ



# ເອກະສານ 25 ກ: ສະຖານະການທີ່ຫຍຸ້ງຍາກ



1. ທ. ເອັດ ໄດ້ເຮັດວຽກຢູ່ທີ່ເຮືອຫາປາແຫ່ງໜຶ່ງ ໃນບໍ່ຊ້ານີ້ເຮືອກໍ່ຈະໄດ້ອອກຈາກຝັ່ງແລ້ວ, ທ. ເອັດ ກໍ່ຮູ້ສຶກຕົວຂຶ້ນມາໂລດວ່າ ລາວໄດ້ຕັດສິນໃຈຜິດພາດອັນຍິ່ງໃຫຍ່ແລ້ວ. ຜູ້ຂັບເຮືອໄດ້ໃຫ້ພວກເຂົາ ເຮັດວຽກ 20 ຊົ່ວໂມງຕໍ່ມື້ ແລະ ຕີພວກເຂົາໃນເມື່ອລາວມີອາການໂມໂຫ ແລະ ເມື່ອລູກເຮືອຄົນໜຶ່ງເກີດຄວາມເຈັບປ່ວຍຂຶ້ນມາ ຜູ້ຂັບເຮືອຄົນນັ້ນກໍ່ໄດ້ໂຍນລາວລົງທະເລເລີຍ.ເຮືອຫາປາດັ່ງກ່າວໄດ້ໃຊ້ເວລາອອກຫາປາຢູ່ໃນທະເລເປັນເວລາ 2 ເດືອນ, ທ. ເອັດ ກໍ່ບໍ່ໄດ້ຮັບເງິນເດືອນຈັກກີບເລີຍ. ຫຼັງຈາກນັ້ນລາວໄດ້ຫລັກໜີໃນຕອນກາງຄືນ ແລະ ລາວກໍ່ໄດ້ລອຍນ້ຳເຂົ້າຝັ່ງ. ລາວບໍ່ມີເງິນຕິດຕົວຈັກກີບເລີຍ.

ທ. ເອັດ ຄວນເຮັດແນວໃດ ໃນເມື່ອເກີດເຫດການແບບນີ້?



ທ. ເອັມ ມີອາຍຸ 9 ປີ ລາວໄດ້ຖືກໄພໄໝ້ຕັ້ງແຕ່ລາວຍັງນ້ອຍ ແລະ ໜ້າຕາຂອງລາວເຕັມໄປດ້ວຍແປ້ວ ແລະ ຄອບຄົວຂອງລາວໄດ້ສົ່ງລາວໄປຂໍທານຢູ່ທີ່ເມືອງທ່ອງທ່ຽວແຫ່ງໜຶ່ງ.ລາວໄດ້ຖືກຄຸມຕົວໂດຍຊາຍຄົນໜຶ່ງຜູ້ທີ່ພາລາວໄປຂໍທານຢູ່ຕາມຖະໜົນຫົນທາງໃນຕອນເຊົ້າ ແລະ ໄປຮັບເອົາລາວໃນເວລາກາງຄືນແລະລາວກໍ່ໄດ້ບັງຄັບເອົາເງິນທັງໝົດທີ່ ທ. ເອັມ ຂໍມາໄດ້ ຊາຍຄົນນັ້ນກໍ່ໄດ້ຕີ ທ. ເອັມ ແລະ ບໍ່ໄດ້ເອົາເງິນໃຫ້ລາວຈັກກີບເລີຍ.

2. ທ. ເອັມ ຄວນເຮັດແນວໃດ ໃນເມື່ອເກີດເຫດການແບບນີ້?





3.ນ. ແອວ ໄດ້ເຮັດວຽກຢູ່ທີ່ໂຮງງານຜະລິດເກີບຢູ່ໃນເມືອງແຫ່ງໜຶ່ງ. ລາວໄດ້ຈ່າຍເງິນໃຫ້ເຈົ້າໜີ້ຜູ້ທີ່ຫາວຽກໃຫ້ລາວ. ນ. ແອວ ໄດ້ເຮັດວຽກຢູ່ທີ່ນັ້ນເປັນເວລາ 3 ເດືອນ ແລະ ກໍ່ນອນຢູ່ທີ່ໂຮງງານນັ້ນເລີຍ ແຕ່ວ່າເຈົ້າຂອງໂຮງງານຍັງບໍ່ທັນໄດ້ຈ່າຍເງິນເດືອນໃຫ້ລາວຈັກເທື່ອ ເຈົ້າຂອງໂຮງງານໄດ້ສັງເກດ ນ. ແອວ ແລະ ມັກມາຈັບຕາເບິ່ງ ນ. ແອວ ຢູ່ເລື້ອຍໆ ແລະ ບອກກັບ ນ. ແອວ ວ່າເຈົ້າເປັນຄົນງາມຫຼາຍ. ນ. ແອວ ບໍ່ມັກເລີຍທີ່ເຈົ້າຂອງໂຮງງານມາຈັບລາວຈັ່ງຊັ້ນ ແລະ ນ. ແອວ ກໍ່ພະຍາຍາມຫລີກລ່ຽງການຢູ່ກັບເຈົ້າຂອງໂຮງງານໂດຍລໍາພັງ. ນ .ແອວ ຄວນເຮັດແນວໃດ ໃນເມື່ອເກີດເຫດການແບບນີ້?

# 25 ເອກະສານ 25 ຂ: ເຈົ້າຈະເຮັດແນວໃດ ຖ້າເຈົ້າເປັນຜູ້ທີ່ຖືກຄ້າມະນຸດ

• ຖ້າວ່າເຈົ້າໄດ້ຖືກເຄື່ອນຍ້າຍຈາກບ່ອນນີ້ໄປຫາບ່ອນອື່ນໂດຍການປົກຄອງຂອງຜູ້ຄ້າມະນຸດ ຈົ່ງຈັບຕາເບິ່ງປ້າຍໂຄສະນາ ຫຼື ເຄື່ອງໝາຍຕ່າງໆ ພະຍາຍາມນຶກວາດພາບວ່າເຈົ້າກຳລັງຢູ່ບ່ອນໃດ.ຈົ່ງເບິ່ງສະຖານີລົດໄຟຕ່າງໆ, ໝາຍເລກທາງດ່ວນຕ່າງໆ, ຊື່ເມືອງ ຫຼື ອາຄານທີ່ສັງເກດເຫັນໄດ້ງ່າຍ. ຈົ່ງຈົດຈຳທຸກລາຍລະອຽດເພາະວ່າວິທີນີ້ກໍ່ໝາຍຄວາມວ່າເຈົ້າກໍ່ສາມາດຊອກວິທີທາງ ເພື່ອໂທລະສັບຫາຜູ້ທີ່ຈະມາຊ່ວຍເຫຼືອວ່າເຈົ້ານັ້ນກຳລັງຢູ່ໃສ.

•ຖ້າເຈົ້າຖືກບັງຄັບໃຫ້ເຮັດວຽກທີ່ຂັດກັບຄວາມບໍ່ປະສົງຂອງເຈົ້າເຊັ່ນ:ການເຮັດວຽກຢູ່ໃນຮ້ານຂາຍບໍລິການຫຼື ເຮັດວຽກຢູ່ໂຮງງານ ກໍ່ໃຫ້ພະຍາຍາມຈຳຊື່ສະຖານທີ່ບ່ອນທີ່ເຈົ້າຢູ່ນັ້ນ. ຖ້າເຈົ້າຄິດວ່າມັນຈະມີຄວາມປອດໄພກໍ່ໃຫ້ເຈົ້າໄປໂອ້ລົມກັບຄົນທີ່ຢູ່ໃກ້ຄຽງ ແລະ ຖາມເຖິງສະຖານທີ່ນັ້ນວ່າ ບ່ອນທີ່ເຈົ້າຢູ່ແມ່ນສະຖານທີ່ໃດ.

• ຈົ່ງຈົດຈຳຮູບຮ່າງໜ້າຕາຂອງຜູ້ຄ້າມະນຸດຄົນນັ້ນ.

• ຖ້າເຈົ້າມີໂອກາດໃຫ້ເຈົ້າໂທລະສັບເພື່ອຂໍຄວາມຊ່ວຍເຫຼືອ, ພ້ອມທັງສາມາດອະທິບາຍວ່າສະຖານທີ່ບ່ອນເຈົ້າຢູ່ນັ້ນແມ່ນສະຖານທີ່ໃດ ແລະ ຢູ່ໃສ.

• ຖ້າເຈົ້າຄິດວ່າເຈົ້າຖືກຄ້າມະນຸດແລ້ວ ກໍ່ຄວນໃຫ້ວາງແຜນຢ່າງລະອຽດກ່ອນທີ່ຈະທຳສິ່ງໃດສິ່ງໜຶ່ງ ແລະ ບໍ່ສະແດງອາການໃຫ້ຜູ້ຄ້າມະນຸດຮູ້ວ່າເຈົ້ານັ້ນໄດ້ຖືກຂາຍ, ທຳທ່າເຮັດວຽກຄືບໍ່ຮູ້ຈັກຫັຍງ ແລະ ສັງເກດຫາທາງເພື່ອລັກໜີ.

• ຖ້າເຈົ້າຖືກຂາຍບໍລິການທາງເພດ, ພະຍາຍາມຊັກຊວນໃຫ້ຜູ້ມາໃຊ້ບໍລິການຜູ້ນັ້ນໃສ່ຖົງຢາງອານາໄມ.

• ຈົ່ງໂທຫາເບີໂທຕິດຕໍ່ສຸກເສີນທີ່ຢູ່ໃນປຶ້ມຄູ່ມືສະບັບນີ້.

• ຖ້າເຈົ້າຖືກຄ້າມະນຸດ ແລະ ເຈົ້າກໍ່ບໍ່ໄດ້ຮັບເງິນເດືອນຫຍັງ ແລະ ນາຍຈ້າງຊໍ້າພັດມາບອກກັບເຈົ້າວ່າເຈົ້າຈະຕ້ອງໄດ້ເຮັດວຽກຢູ່ທີ່ນີ້ໃນໄລຍະ 1 ຫຼື 2 ປີ ຈຶ່ງຈະໄດ້ເງິນເປັນກ້ອນໃນຕອນທ້າຍ, ຈົ່ງຢ່າໄດ້ເຊື່ອຄຳເວົ້າດັ່ງກ່າວນີ້ເປັນເດັດຂາດ ເພາະວ່າບັນດາຜູ້ຄ້າມະນຸດທັງຫຼາຍພວກເຂົາກໍ່ໄດ້ມີວິທີການດຽວກັນໃນການຫລອກລວງແຮງງານເຄື່ອນຍ້າຍມາກ່ອນ ແລະ ບັນດາແຮງງານເຄື່ອນຍ້າຍທັງຫຼາຍກໍ່ບໍ່ໄດ້ຮັບເງິນໃນເຫດການທີ່ຜ່ານມາ.



# ເອກະສານ 25 ຄ: ເບີໂທລະສັບສຸກເສີນ 25

## ປະເທດກຳປູເຈຍ

| | |
|---|---|
| ນະຄອນຫຼວງພະນົມເປັນ | **017 276 222** |
| ແຂວງ ບັດຕຳບອງ | **017 256 222** |
| ແຂວງ ບັງເຕີຍ | **017 260 222** |
| ແຂວງ ຊຽມລຽບ | **017 258 222** |
| ກຳປົງທຸມ | **017 254 222** |
| ກຳປົງຈະນັງ | **017 254 222** |

## ປະເທດຫວຽດນາມ

ເບີໂທທີ່ໃຫ້ການຊ່ວຍເຫຼືອ: ສອງໝາຍເລກຂອງໜ່ວຍງານຕໍ່ໄປນີ້ເຊິ່ງບັນດາຜູ້ເຄື່ອນຍ້າຍແຮງງານ ສາມາດເຂົ້າມານຳໃຊ້ໃນກໍລະນີສຸກເສີນເພື່ອຂໍຄວາມຊ່ວຍເຫຼືອ.

ໜ່ວຍງານຕ້ານການຄ້າມະນຸດແມ່ນ:

**1 800 1567**

ສູນແຮງງານເຄື່ອນຍ້າຍ:

**(844) 3936 6633**

ໜ່ວຍງານສືບສວນຄະດີອາຍາ:

**0694 4037**

## ປະເທດມຽນມາ

ເບີໂທສຸກເສີນ ຂອງໜ່ວຍງານຕ້ານການຄ້າມະນຸດຂອງປະເທດ

**95-67-412 555** ແລະ **95-949-555777**
**95-67-412 666** ແລະ **95-949-555888**
**95-949-555666** ແລະ **95-949-555999**

UNIAP, UNICEF, IOM, Save the children, World Vision ແລະ AFXB

## ປະເທດຈີນ

| | |
|---|---|
| ເບີໂທສຸກເສີນໄວໜຸ່ມ | **12355** |
| ເບີໂທສຸກເສີນແມ່ຍິງ | **12338** |
| ເບີໂທຂອງສິດທິຜູ້ອອກແຮງງານ | **12333** |
| ເບີໂທຂອງຫ້ອງການປົກຄອງແຂວງ | **12345** |
| ເບີໂທຂອງເຈົ້າໜ້າທີ່ຕຳຫຼວດ | **110** |

ເບີໂທສຸກເສີນຂອງກະຊວງແຮງງານ ແລະ ສະຫັວດດີການສັງຄົມ

## ປະເທດລາວ

ຕຳຫຼວດຕ້ານການຄ້າມະນຸດ:

**(+856 21 970 543)**

ສະຫະພັນແມ່ຍິງ: **(+856 21 771 302)**

ສາຍດ່ວນ: **136**

## ປະເທດໄທ

ບັນດາແຮງງານເຄື່ອນຍ້າຍສາມາດໂທຫາເບີ 1300 ເພື່ອຂໍຄວາມຊ່ວຍເຫຼືອຈາກປະເທດໄທໃນບາງແຂວງ ເບີໂທຕິດຕໍ່ສຸກເສີນກໍ່ມີລ່າມແປພາສາຂອງບາງປະເທດເພື່ອນບ້ານ.

**1191** ແມ່ນສາຍໂທຫາເຈົ້າໜ້າທີ່ ຫຼື ຕຳຫຼວດທີ່ຢູ່ໜ່ວຍງານການສະກັດກັ້ນການຄ້າມະນຸດ.

**1417** ນ້ຳເບີຕິດຕໍ່ສຸກເສີນຂອງໄວໜຸ່ມເພື່ອຂໍຄຳແນະນຳ

# 26 ບົດທີ 26: ການທົບທວນຄືນເສັ້ນທາງທີ່ນຳພາໄປສູ່ຄວາມປອດໄພ

**ຈຸດປະສົງ:** ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມຈະໄດ້ສາທິດ ທີ່ພວກເຂົາໄດ້ຮຽນໃນການແຕ້ມຮູບ ແລະ ການອາດພາບຍຸດທະສາດຕ່າງໆທີ່ສຳຄັນສຳລັບການເຄື່ອນຍ້າຍແຮງງານທີ່ປອດໄພ.

**ເວລາ:**

75 ນາທີ

**ອຸປະກອນ**

- ກະດາດເຈ້ຍຍາວໆແຜ່ນໜຶ່ງ ເຈົ້າອາດຈະເອົາມາຕິດກັນ 2-3 ແຜ່ນຕາມປົກກະຕິ ດັ່ງນັ້ນພວກເຂົາຈຶ່ງຈະຂີດເສັ້ນຍາວໆໄດ້
- ບິກສີຕ່າງໆ.
- ປື້ມນ້ອຍຜູ້ນຳທາງທີ່ສະຫຼາດ

## ການແນະນຳ:

**ຍິນດີຕ້ອນຮັບ:**

ໂດຍການເອີ້ນຊື່ ແລະ ຍື່ນເຈ້ຍໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ .

**ອົບອຸ່ນຮ່າງກາຍ:**

ອົບອຸ່ນຮ່າງດ້ວຍການນຳໃຊ້ເກມໃນລາຍການທີ່ມີຢູ່ .

**ທວນຄືນບົດຮຽນ:**

ໂດຍການຖາມຄຳຖາມບົດຮຽນທີ່ຜ່ານມາ.

ເບີໂທຕິດຕໍ່ສຸກເສີນໃນປະເທດຂອງເຈົ້າ ແລະ ປະເທດປາຍທາງມີເບີໃດແດ່? (ຖ້າບັນດາຜູ້ເຂົ້າຮ່ວມຍັງສັບສົນຢູ່ ກໍ່ໃຫ້ເວົ້າຄືນໃໝ່ ເຊິ່ງວ່າສະມາຊິກໃນກຸ່ມກໍ່ຕ້ອງເວົ້າຕາມຫຼັງກັນ)

## ການທົບທວນບົດຮຽນ

ຄູ່ມືການນຳໃຊ້ໃນການເຄື່ອນຍ້າຍແຮງງານທີ່ປອດໄພ ໄດ້ກວມເອົາຂໍ້ມູນຫຼາຍຢ່າງ. ບົດຮຽນຂ້າງລຸ່ມນີ້ແມ່ນໄດ້ສັງລວມເອົາຫົວຂໍ້ຕ່າງໆທີ່ພວກເຮົາໄດ້ຮຽນຜ່ານມາ. ຈົ່ງອ່ານລາຍການດັ່ງລຸ່ມນີ້ໃຫ້ຜູ້ອື່ນຟັງດັງໆ.

ເມື່ອສຸດຂໍ້ໃດກໍ່ໃຫ້ຢຸດສາກ່ອນ ແລະ ໃຫ້ຖາມຄົນໃດຄົນໜຶ່ງວ່າພວກເຂົາມີຄວາມສາມາດຈື່ໄດ້ບໍ່ວ່າບົດຮຽນດັ່ງກ່າວເວົ້າກ່ຽວກັບຫຍັງ ແລະ ມີກິດຈະກຳອັນໃດແດ່ທີ່ພວກເຂົາໄດ້ປະຕິບັດຜ່ານມາ.

- ນິຍາມຄຳວ່າ: ການຄ້າມະນຸດແມ່ນຫຍັງ.
- ນິຍາມຂອງການຄ້າເດັກນ້ອຍແມ່ນແນວໃດ.
- ຄວາມແຕກຕ່າງລະຫວ່າງການຄ້າມະນຸດ ແລະ ການລັກລອບເຂົ້າເມືອງທີ່ຜິດກົດໝາຍແມ່ນແນວໃດ.
- ການຄ້າມະນຸດເພື່ອຈຸດປະສົງຂອງການຂາຍບໍລິການທາງເພດ, ການຄ້າເດັກເພື່ອຜົນປະໂຫຍດທາງເພດ ແລະ ການຄ້າມະນຸດທີ່ຢູ່ໃນຊ່ອງໂສເພນີແມ່ນແນວໃດ.
- ການຄ້າມະນຸດເພື່ອຂູດຮີດແຮງງານ.



- ການຄ້າມະນຸດເພື່ອຂູດຮີດແຮງງານເດັກ.
- ການຄ້າມະນຸດສາມາດເກີດຂຶ້ນໄດ້ທຸກບ່ອນ.
- ບັນດາເລ້ກົນຕ່າງໆທີ່ຜູ້ຄ້າມະນຸດມັກນຳໃຊ້.
- ການຕິດຕໍ່ເຊິ່ງກັນ ແລະ ກັນລະຫ່ວາງການຄ້າມະນຸດ ແລະ ການໃຊ້ຢາເສບຕິດ.
- ການຕິດຕໍ່ພົວພັນກັນລະຫ່ວາງການຄ້າມະນຸດ ແລະ ບົດບາດຍິງຊາຍ.
- ວິທີການສື່ສານແບບສຸພາບ ແລະ ເປັນຜູ້ຟັງທີ່ດີເພື່ອປ້ອງກັນຕົວເຈົ້າເອງແມ່ນແນວໃດ.
- ວິທີການກະກຽມເພື່ອການເຄື່ອນຍ້າຍແຮງງານທີ່ປອດໄພແມ່ນເຮັດແນວໃດ (ລາຍການ ແລະ ແບບຢ່າງທີ່ໃຊ້ໃນການຕັດສິນໃຈ).
- ການຮັກສາຕົນເອງໃຫ້ມີຄວາມປອດໄພໃນລະຫວ່າງການເດີນທາງ.
- ການຮັກສາຄວາມປອດໄພຫຼັງຈາກທີ່ທ່ານໄປຮອດປະເທດປາຍທາງ.
- ເຈົ້າຄວນເຮັດແນວໃດໃນເມື່ອເຈົ້າຖືກຄ້າມະນຸດ.

## ການອາດພາບເສັ້ນທາງກ້າວໄປສູ່ການເຄື່ອນຍ້າຍແຮງງານທີ່ປອດໄພ

ໃຫ້ບັນດາຜູ້ເຂົ້າຮ່ວມເອົາປື້ມຄູ່ມືການເຄື່ອນຍ້າຍແຮງງານທີ່ປອດໄພອອກມາ.

ມື້ນີ້ພວກເຮົາຈະວາດພາບບາງສິ່ງບາງຢ່າງ ທີ່ພວກເຮົາໄດ້ຮຽນຮູ້ໃນການແຕ້ມຮູບດັ່ງກ່າວສາມາດປະກອບພາບໃສ່ ແລະ ຄຳເວົ້າທີ່ອະທິບາຍເຖິງຮູບພາບດັ່ງກ່າວ.

ການວາດພາບຈະໄດ້ປະກອບຢູ່ 3 ຕອນດ້ວຍກັນ:

1. ການກະກຽມກ່ອນການເຄື່ອນຍ້າຍແຮງງານ.
2. ໃນລະຫ່ວາງການເດີນທາງ.
3. ໃນເວລາໄປຮອດປະເທດປາຍທາງ.

ໃຫ້ບັນດາຜູ້ເຂົ້າຮ່ວມຄິດຄືນຫຼັງຕາມລາຍການທີ່ພວກເຮົາໄດ້ອ່ານໃນເມື່ອກ່ອນ ແລະ ໃຫ້ຜູ້ເຂົ້າຮ່ວມປະກອບໃສ່ຫົວຂໍ້ອັນໃດທີ່ນອນຢູ່ໃນຮູບພາບຂອງພວກເຂົາໃນເວລາກະກຽມກ່ອນການເຄື່ອນຍ້າຍແຮງງານ?

ຄຳຕອບດັ່ງກ່າວອາດຈະປະກອບມີ:

- ການຮຽນຮູ້ກ່ຽວກັບການຄ້າມະນຸດແມ່ນຫຍັງ.
- ເລ້ກົນຕ່າງໆຂອງຜູ້ຄ້າມະນຸດ.
- ຮູບແບບທີ່ໃຊ້ໃນການຕັດສິນໃຈ.
- ລາຍການຕ່າງໆທີ່ໃຊ້ກ່ອນການເຄື່ອນຍ້າຍແຮງງານ.
- ການຄ້າມະນຸດສາມາດເກີດຂຶ້ນໄດ້ທຸກບ່ອນ.
- ຄວາມແຕກຕ່າງລະຫ່ວາງເພື່ອນແທ້ ແລະ ຜູ້ຄ້າມະນຸດ.

ຈົ່ງບອກໃຫ້ບັນດາຜູ້ເຂົ້າຮ່ວມແຕ່ລະຄົນເອົາຫົວຂໍ້ອັນໃດອັນໜຶ່ງປະກອບໃສ່ຮູບພາບຂອງພວກເຂົາ ໃນເວລາທີ່ກຳລັງເດີນທາງຢູ່ ?.

ຄຳຕອບດັ່ງກ່າວອາດປະກອບດ້ວຍ:

- ບັນດາເລ້ກົນຕ່າງໆຂອງຜູ້ຄ້າມະນຸດ.
- ຄວາມແຕກຕ່າງລະຫ່ວາງເພື່ອນແທ້ ແລະ ຜູ້ຄ້າມະນຸດ.
- ການຮັກສາຕົນເອງໃຫ້ມີຄວາມປອດໄພໃນລະຫວ່າງການເດີນທາງ.

- ການນຳໃຊ້ການສື່ສານທີ່ສຸພາບ ແລະ ການເປັນຜູ້ຟັງທີ່ດີ.

ຈົ່ງບອກໃຫ້ຜູ້ເຂົ້າຮ່ວມຮູ້ຕື່ມອີກວ່າເຈົ້າຈະເອົາຫົວຂໍ້ອັນໃດມາປະກອບໃສ່ຮູບພາບຂອງເຂົາໃນຄະນະທີ່ເຈົ້າໄປຮອດປະເທດປາຍທາງ?

ຄຳຕອບດັ່ງກ່າວອາດປະກອບມີ:

- ວິທີການຮັກສາຕົນເອງໃຫ້ປອດໄພພາຍຫຼັງທີ່ເຈົ້າໄປຮອດປະເທດປາຍທາງ.
- ການນຳໃຊ້ການສື່ສານທີ່ສຸພາບ ແລະ ການເປັນນັກຟັງທີ່ດີ.
- ເຈົ້າຈະເຮັດແນວໃດໃນເມື່ອເຈົ້າຖືກຄ້າມະນຸດ.
- ການຈົດຈຳເບີໂທຕິດຕໍ່ສຸກເສີນ.
- ການຄ້າມະນຸດ ແລະ ຢາເສບຕິດຕ່າງໆ.
- ຄວາມແຕກຕ່າງລະຫວ່າງເພື່ອນແທ້ ແລະ ຜູ້ຄ້າມະນຸດ.

ຈົ່ງຢາຍ ບິກ ກັບ ເຈ້ຍ ແລະ ອະທິບາຍໃຫ້ຜູ້ເຂົ້າຮ່ວມວ່າພວກເຂົາມີເວລາ 30 ນາທີໃນການແຕ້ມຮູບແລ້ວກໍ່ໃຫ້ພວກເຂົາເອົາພາບທີ່ແຕ້ມແລ້ວມາສົນທະນາກັນ.

ຈົ່ງບອກກັບຜູ້ເຂົ້າຮ່ວມຮູ້ຕື່ມອີກວ່າ ບໍ່ເປັນຫຍັງດອກຖ້າພວກເຂົາແຕ້ມຮູບບໍ່ງາມສິ່ງສຳຄັນແມ່ນພວກເຂົາຕ້ອງສະແດງແນວຄວາມຄິດ ແລະ ເລົ່າເລື່ອງຢ່າງໜ້າຈັບໃຈ.

ໃຫ້ຜູ້ເຂົ້າຮ່ວມແຕ້ມຮູບ ແລະ ຍ່າງເລາະໄປເບິ່ງກຸ່ມອື່ນທີ່ເຂົາກຳລັງແຕ້ມຮູບ, ໃຫ້ກຳລັງໃຈພວກເຂົາໃນການແຕ້ມ. ຈົ່ງແນະນຳເພີ່ມເຕີມກ່ຽວກັບຫົວຂໍ້ຕ່າງໆທີ່ພວກເຂົາໄດ້ແຕ້ມໃສ່ຮູບພາບ. ພວກເຂົາສາມາດເບິ່ງແນວຄວາມຄິດຈາກປຶ້ມຄູ່ມືສະບັບນີ້ພ້ອມທັງວາດພາບໄປນຳ.

ພາຍຫຼັງ 30 ນາທີຜ່ານໄປໃຫ້ຜູ້ເຂົ້າຮ່ວມເອົາພາບດັ່ງກ່າວມາລົມສູ່ກັນຟັງ,ຖ້າມີເວລາຍັງເຫຼືອກໍ່ໃຫ້ຖາມຜູ້ເຂົ້າຮ່ວມໂດຍຄຳຖາມດັ່ງຕໍ່ໄປນີ້.

- ເຈົ້າຄິດບໍ່ວ່າການຮຽນຮູ້ຫຼັກສູດການເຄື່ອນຍ້າຍແຮງງານທີ່ປອດໄພ ຂອງສະໂມສອນເດັກໄດ້ປ່ຽນແນວຄວາມຄິດຂອງເຈົ້າ, ຖ້າມັນໄດ້ປ່ຽນແປງມັນມີການປ່ຽນແປງແນວຄວາມຄິດຂອງເຈົ້າແນວໃດ ?
- ເຈົ້າຄິດບໍວ່າຫຼັກສູດການເຄື່ອຍ້າຍແຮງງານທີ່ປອດໄພຂອງສະໂມສອນເດັກໄດ້ປ່ຽນແປງວິທີການປະຕິບັດຂອງເຈົ້າ ຫຼື ເຈົ້າຈະເອົາໄປປະຕິບັດໃນອານາຄົດ,ຖ້າມັນປ່ຽນແປງມັນປ່ຽນແປງແນວໃດ ?.
- ອັນໃດເປັນສິ່ງສຳຄັນທີ່ສຸດທີ່ເຈົ້າໄດ້ຮຽນມາໃນປຶ້ມຄູ່ມືສະບັບນີ້.

ບົດຮຽນດັ່ງກ່າວນີ້ຈະບໍ່ມີຂໍ້ສະຫຼຸບເພາະວ່າມັນເປັນຕອນທີ່ນຳໃຊ້ໃນການທວນຄືນ. ຍ່ອມມີການຂຽນບັນທຶກປະຈຳວັນ ແລະ ບໍ່ມີການສະແດງບົດບາດສົມມຸດເພາະວ່າມີເວລາຈຳກັດ.

## ປິດບົດຮຽນ

ໃຫ້ຜູ້ເຂົ້າຮ່ວມຂຽນ ຫຼື ຖາມ ຫຼື ສ່ອງແສງກັບ ສິ່ງທີ່ຍັງບໍ່ຈະແຈ້ງ ແລ້ວໃຫ້ບັນດາຄູຝຶກຕອບໃນສິ່ງທີ່ຍັງບໍ່ທັນເຂົ້າໃຈ.

ຂອບໃຈນຳຜູ້ເຂົ້າຮ່ວມໝົດທຸກຄົນ ພົບກັນໃໝ່ໃນມື້ໜ້າ ທຸກຄົນທີ່ມາເຂົ້າຮ່ວມໃນມື້ນີ້ ແມ່ນຈະໄດ້ຮັບດາວຄົນລະ 1 ດວງ

ຈົ່ງອະທິບາຍໃຫ້ຜູ້ເຂົ້າຮ່ວມຮູ້ຕື່ມອີກວ່າ ໃນອາທິດໜ້າພວກເຮົາຈະມາເລີ່ມຕົ້ນຮຽນກ່ຽວກັບການສົນທະນາເຖິງການປະຕິບັດການຕ່າງໆ ທີ່ພວກເຮົາສາມາດແບ່ງປັນຄວາມຮູ້ບົດຮຽນທີ່ພວກເຮົາໄດ້ຮຽນມາ.



# ບັນທຶກ

ຈົ່ງນຳໃຊ້ໜ້າດັ່ງກ່າວໃນການຈົດບັນທຶກເພື່ອຄວາມຊົງຈຳເມື່ອເວລາກັບຄືນຊຸມຊົນ

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................